# ໝວດວິຊາສະເພາະ

## ວິຊາ: ວິທີສອນພາສາລາວ-ວັນນະຄະດີສຳລັບເດັກກ່ອນໄວຮຽນ

## ລະບົບ 12+4 ສາຍຄູອະນຸບານ ປີ 3



ປີ 2022

# ໝວດວິຊາສະເພາະ

## ວິຊາ: ວິທີສອນພາສາລາວ-ວັນນະຄະດີສຳລັບເດັກກ່ອນໄວຮຽນ

## ລະບົບ 12+4 ປີ 3

ສາຍ ສ້າງຄູອະນຸບານ

ລະບົບ 12+4 ປີທີ 3 ພາກຮຽນ 2

ຮຽບຮຽງໂດຍ:

ນາງ ຄຳບານ ພິມມະຈັກ

ກວດແກ້ໂດຍ:

ອຈ ນາງ ມະນີວອນ ແກ້ວດາລາວົງ

ປທ ນາງ ທອານໃຈ ບົວກາສີ

ນາງ ຄຳມະລີ ແສງໂສພາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະ
ສະພາວິທະຍາສາດ

ເລກທີ.....93.....ສພ.ວສ
ລົງວັນທີ....19 APR 2022........

## ເອກະສານຮັບຮອງ
## ອະນຸມັດຜ່ານການຮັບຮອງການຮຽບຮຽງປຶ້ມສາຍອະນຸບານ ແລະ ປະຖົມ

- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວກິດຈະກຳສະພາວິທະຍາສາດຂອງວິທະຍາໄລຄູສາລະວັນປະຈຳສົກປີ 2022-2023

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການ ເຫັນວ່າ ບົດຮຽບຮຽງປຶ້ມມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນໂຮງຮຽນວິທະຍາໄລຄູສາລະວັນ.

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| 1. ທ່ານ ປອ ສຸພັນ ເທບວົງສາ | [signature] |
| 2. ທ່ານ ອຈ ປທ ແສນຮັກ ບຸນມີ | [signature] |
| 3. ທ່ານ ອຈ ນາງ ລິດສະໄໝ ສິດທິຈັກ | [signature] |

ທີ່, ສາລະວັນ, ວັນທີ 19 APR 2022
ປະທານສະພາວິທະຍາສາດ

[signature]

ອຈ. ປ. ສົມປອງ ແສນທະວີສຸກ
Sompong SENTHAVISOUK

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະ
ຫ້ອງການອະນຸບານ-ປະຖົມ

ເລກທີ..367...ຫກ.ອປ
ລົງວັນທີ.....10 APR 2022.....

## ເອກະສານຮັບຮອງການກວດແກ້ການຮຽບຮຽງປຶ້ມ ວິຊາ ວິທີສອນພາສາລາວ-ວັນນະຄະດີ ສຳລັບເດັກກ່ອນໄວຮຽນ

| ລ/ດ | ຊື່ຫົວຂໍ້ | ຫ້ອງການ | ຜູ້ຮຽບຮຽງປຶ້ມ | ຊື່ຜູ້ກວດແກ້ |
|---|---|---|---|---|
| 1 | ວິທີສອນພາສາລາວ-ວັນນະຄະດີສຳລັບເດັກກ່ອນໄວຮຽນ | ອະນຸບານ-ປະຖົມ | ນາງ ຄຳບານ ພິມມະຈັກ | ອຈ ນາງ ມະນີວອນ ແກ້ວດາລາວົງ<br>ນາງ ຄຳມະລີ ແສງໄສພາ<br>ປທ ນາງທອານໃຈ ບົວການີ |

| ຄະນະກຳມະການກວດແກ້ບົດ | ລາຍເຊັນ |
|---|---|
| 1. ອຈ ນາງ ມະນີວອນ ແກ້ວດາລາວົງ | (ລາຍເຊັນ) |
| 2. ນາງ ຄຳມະລີ ແສງໄສພາ | (ລາຍເຊັນ) |
| 3. ປທ ນາງ ທອານໃຈ ບົວການີ | (ລາຍເຊັນ) |

ທີ່, ສາລະວັນ, ວັນທີ ..........................
ຫົວໜ້າຫ້ອງການສາຍ

ລິດສະໄໝ ສິດທິສັກ

# ຄຳນຳ

ເພື່ອເປັນການປັບປຸງຄຸນນະພາບ ແລະ ປະສິດທິພາບຂອງການສ້າງຄູ ແລະ ພັດທະນາອາຊີບຄູໃຫ້ມີປະສິດທິພາບສູງຂຶ້ນເທື່ອລະກ້າວນັ້ນທາງຄູ-ອາຈານສອນຈຶ່ງໄດ້ພ້ອມກັນຮຽບຮຽງແບບຮຽນເຫຼັ້ມນີ້ຂຶ້ນມາ ເພື່ອຮັບໃຊ້ຢູ່ໃນສະຖາບັນສ້າງຄູ ໂດຍໄດ້ພັດທະນາ ແລະ ຮຽບຮຽງຕາມທິດທາງການສ້າງຄູແບບໃໝ່ ທີ່ເນັ້ນການປູກອຸດົມການ, ຄຸນນະທຳ ແລະ ຈິດວິນຍານຂອງຄວາມເປັນຄູໃຫ້ແກ່ນັກສຶກສາຄູ ເຮັດໃຫ້ເຂົາເຈົ້າມີທັກສະວິຊາຊີບຄູທີ່ໜັກແໜ້ນ, ເຂົ້າໃຈພັດທະນາການຂອງເດັກ, ມີຄວາມຮູ້ທົ່ວໄປ ແລະ ມີຄວາມຮູ້ວິຊາສະເພາະທີ່ແທດເໝາະກັບຊັ້ນທີ່ຕົນເອງສອນ.

ປື້ມແບບຮຽນເຫຼັ້ມນີ້ໄດ້ພັດທະນາຂຶ້ນດ້ວຍການປະກອບສ່ວນຈາກຫຼາຍພາກສ່ວນຄື: ຄະນະອຳນວຍການວິທະຍາໄລຄູສາລະວັນ, ຄູ - ອາຈານທີ່ສອນໃນສາຍຄູອະນຸບານ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອແນ່ໃສ່ເຮັດໃຫ້ນັກຮຽນຄູມີຄວາສະດວກໃນການຄົ້ນຄວ້າບົດຮຽນ, ເພື່ອເຮັດໃຫ້ນັກສຶກສາເກີດມີຄວາມຮູ້, ມີຄວາມເຂົ້າໃຈໃນການແຕ່ງບົດສອນຢ່າງເລິກ.ຮູ້ຈັກໝູນໃຊ້ວິທີສິດສອນແບບຫຼາຍຮູບຫຼາຍສີ, ມີຄວາມສຳນານໃນການສອນ, ມີນໍ້າໃຈຮັກອາຊີບແພງເດັກ,ມີຄວາມຮັບຜິດຊອບໃນການພັດທະນາອາຊີບຄູຂອງຕົນ.

ຫວັງຢ່າງຍິ່ງວ່າ ຄູ - ອາຈານ,ນັກສຶກສາ, ຄູ - ອາຈານ ແລະ ພາກສ່ວນອື່ນໆຫາກຍັງພົບເຫັນບັນຫາໃດໜຶ່ງທີ່ບໍ່ເໝາະສົມບໍ່ສອດຄ່ອງ ແລະ ບໍ່ທັນສະພາບຫຼັກສູດໃນປະຈຸບັນ,ກະລຸນາປະກອບຄຳຄິດຄຳເຫັນຂອງຕົນເພື່ອຊ່ວຍປັບປຸງເຮັດໃຫ້ເອກະສານປະກອບການສອນເຫຼັ້ມນີ້ສົມບູນ ແລະ ມີປະສິດທິພາບ.

# ສາລະບານ

ໜ້າ


**ບົດທີ 1 ການສອນພາສາລາວ-ວັນນະຄະດີໃຫ້ແກ່ເດັກກ່ອນໄວຮຽນ**

1. ຄວາມໝາຍແລະຄວາມສຳຄັນຂອງການສອນພາສາລາວ-ວັນນະຄະດີໃຫ້ເດັກກ່ອນໄວຮຽນ..................1
2. ຈຸດປະສົງຂອງການສອນພາສາລາວ-ວັນນະຄະດີໃຫ້ເດັກກ່ອນໄວຮຽນ........................................2
3. ທິດສະດີທີ່ກ່ຽວຂ້ອງກັບການສອນພາສາລາວ-ວັນນະຄະດີໃຫ້ເດັກກ່ອນໄວຮຽນ..............................2
4. ບົດບາດຂອງຄູ ແລະ ຜູ້ປົກຄອງໃນການສົ່ງເສີມພັດທະນາການທາງພາສາລາວ-ວັນນະຄະດີໃຫ້ແກ່ເດັກກ່ອນ ໄວຮຽນ..........................................................................................................................3
5. ການປະເມີນພັດທະນາການທາງພາສາລາວ-ວັນນະຄະດີໃຫ້ແກ່ເດັກກ່ອນໄວຮຽນ............................4

**ບົດທີ 2 ການສອນສັງເກດສິນທະນາສຳລັບເດັກກ່ອນໄວຮຽນ**

1. ຄວາມໝາຍແລະຄວາມສຳຄັນຂອງການສອນສັງເກດສິນທະນາເດັກກ່ອນໄວຮຽນ............................6
2. ຈຸດປະສົງຂອງການສອນສັງເກດສິນທະນາ.........................................................................6
3. ເນື້ອໃນການສອນສັງເກດສິນທະນາ..................................................................................7
4. ຂັ້ນຕອນການສອນສັງເກດສິນທະນາ.................................................................................8
5. ວິທີສອນສັງເກດສິນທະນາໃຫ້ແກ່ເດັກກ່ອນໄວຮຽນ.............................................................11
6. ວິທີການປະເມີນການສອນສັງເກດສິນທະນາ.......................................................................20
   - 6.1 ຮ່າງປະເມີນຜົນ ຕາມແຜນຈັດປະສົບການ.....................................................................20
7. ສັງເກດການສອນ ສັງເກດສິນທະນາໃນໂຮງຮຽນລ້ຽງເດັກອະນຸບານ..........................................20
   - 7.1 ລົງສັງເກດການສອນ...............................................................................................20
   - 7.2 ບັນທຶກ, ສະຫຼຸບ, ລາຍງານ.........................................................................................21
8. ວິທີການແຕ່ງບົດສອນ.....................................................................................................21
   - 8.1 ຮ່າງບົດສອນ.........................................................................................................23
   - 8.2 ອົງປະກອບ ແລະ ຂັ້ນຕອນການແຕ່ງບົດສອນ...................................................................27
   - 8.3 ແຕ່ງບົດສອນຕາມແຜນຈັດປະສົບການ.........................................................................30
9. ແຕ່ງບົດສອນຕົວຈິງ........................................................................................................30
   - 9.1 ແຕ່ງບົດສອນຊັ້ນລ້ຽງເດັກ.........................................................................................30
   - 9.2 ແຕ່ງບົດສອນຊັ້ນອະນຸບານ 1 ......................................................................................31
   - 9.3 ແຕ່ງບົດສອນຊັ້ນອະນຸບານ 2 ......................................................................................41
   - 9.4 ແຕ່ງບົດສອນຊັ້ນອະນຸບານ 3 ......................................................................................46
10. ການຜະລິດສື່ການສອນ.....................................................................................................51
11. ເຝິກສອນຕົວຈິງໃນຫ້ອງຮຽນ ແລະ ຖອດຖອນບົດຮຽນ...........................................................53
12. ເຝິກສອນຕົວຈິງກັບເດັກໃນໂຮງຮຽນລ້ຽງເດັກອະນຸບານ ແລະ ຖອດຖອນບົດຮຽນ.......................54

**ບົດທີ 3 ການສອນຄຳຄ່ອງສຳລັບເດັກກ່ອນໄວຮຽນ**

1. ຄວາມໝາຍ ແລະ ຄວາມສຳຄັນຂອງການສອນຄຳຄ່ອງສຳລັບເດັກກ່ອນໄວຮຽນ..........................55
2. ຈຸດປະສົງຂອງການສອນຄຳຄ່ອງ.......................................................................................55
3. ເນື້ອໃນຂອງການສອນຄຳຄ່ອງ........................................................................................55
4. ຂັ້ນຕອນຂອງການສອນຄຳຄ່ອງ.......................................................................................56
5. ວິທີສອນຄຳຄ່ອງໃຫ້ເດັກກ່ອນໄວຮຽນ..............................................................................57
6. ວິທີການປະເມີນການສອນຄຳຄ່ອງ...................................................................................58
   6.1 ຮ່າງປະເມີນຕາມແຜນຈັດປະສົບການ..........................................................................59
7. ສັງເກດການສອນຄຳຄ່ອງໃນໂຮງຮຽນລ້ຽງເດັກ-ອະນຸບານ....................................................61
   7.1 ລົງສັງເກດການສອນ...................................................................................................61
   7.2 ບັນທຶກ, ສະຫຼຸບ, ຖອດຖອນບົດຮຽນ..............................................................................62
8. ວິທີການແຕ່ງບົດສອນ.....................................................................................................64
   8.1 ຮ່າງບົດສອນ...............................................................................................................64
   8.2 ອົງປະກອບ ແລະ ຂັ້ນຕອນຂອງການແຕ່ງບົດສອນ...........................................................64
   8.3 ແຕ່ງບົດສອນຕາມແຜນຈັດປະສົບການ.........................................................................65
9. ແຕ່ງບົດສອນຕົວຈິງ.........................................................................................................65
   9.1 ແຕ່ງບົດສອນຊັ້ນລ້ຽງເດັກ...........................................................................................66
   9.2 ແຕ່ງບົດສອນຂັ້ນອະນຸບານ 1 .....................................................................................66
   9.3 ແຕ່ງບົດສອນຂັ້ນອະນຸບານ 2 .....................................................................................67
   9.4 ແຕ່ງບົດສອນຂັ້ນອະນຸບານ 3 .....................................................................................69
10. ການຜະລິດສື່ການສອນ..................................................................................................75
11. ເຝິກສອນຕົວຈິງໃນຫ້ອງຮຽນ ແລະ ຖອດຖອນບົດຮຽນ.......................................................75
12. ເຝິກສອນຕົວຈິງກັບເດັກໃນໂຮງຮຽນລ້ຽງເດັກ-ອະນຸບານ ແລະ ປະເມີນ, ຖອດຖອນບົດຮຽນ.........75

**ບົດທີ 4 ການສອນເລົ່ານິທານສຳລັບເດັກກ່ອນໄວຮຽນ**

1. ຄວາມໝາຍ ແລະ ຄວາມສຳຄັນຂອງການສອນເລົ່ານິທານສຳລັບເດັກກ່ອນໄວຮຽນ........................76
2. ຈຸດປະສົງຂອງການສອນເລົ່ານິທານ..................................................................................78
3. ເນື້ອໃນຂອງການສອນເລົ່ານິທານ.....................................................................................78
4. ຂັ້ນຕອນຂອງການສອນເລົ່ານິທານ...................................................................................79
5. ວິທີສອນເລົ່ານິທານໃຫ້ເດັກກ່ອນໄວຮຽນ..........................................................................80
6. ເທັກນິກການເລົ່ານິທານ ແລະ ການປະເມີນຜົນ.................................................................88
7. ສັງເກດການສອນເລົ່ານິທານໃນໂຮງຮຽນລ້ຽງເດັກ-ອະນຸບານ..............................................89
   7.1 ລົງສັງເກດການສອນ...................................................................................................89
   7.2 ບັນທຶກ, ສະຫຼຸບ, ຖອດຖອນບົດຮຽນ..............................................................................90

8. ວິທີການແຕ່ງບົດສອນ.......................................................................................90
8.1 ຮ່າງບົດສອນ......................................................................................................90
8.2 ອົງປະກອບ ແລະ ຂັ້ນຕອນຂອງການແຕ່ງບົດສອນ........................................................91
8.3 ແຕ່ງບົດສອນຕາມແຜນຈັດປະສົບການ.....................................................................94
9. ແຕ່ງບົດສອນຕົວຈິງ...........................................................................................99
9.1 ແຕ່ງບົດສອນຊັ້ນລ້ຽງເດັກ......................................................................................99
9.2 ແຕ່ງບົດສອນຂັ້ນອະນຸບານ 1 .................................................................................99
9.3 ແຕ່ງບົດສອນຂັ້ນອະນຸບານ 2 .................................................................................99
9.4 ແຕ່ງບົດສອນຂັ້ນອະນຸບານ 3 .................................................................................99
10. ການຜະລິດສື່ການສອນ.....................................................................................99
11. ເຝິກສອນຕົວຈິງໃນຫ້ອງຮຽນ ແລະ ຖອດຖອນບົດຮຽນ................................................100
12. ເຝິກສອນຕົວຈິງກັບເດັກໃນໂຮງຮຽນລ້ຽງເດັກ-ອະນຸບານ ແລະ ປະເມີນ, ຖອດຖອນບົດຮຽນ.......100
**ບົດທີ 5 ການສອນລະຄອນສຳລັບເດັກກ່ອນໄວຮຽນ**
1. ຄວາມໝາຍ ແລະ ຄວາມສຳຄັນຂອງການສອນລະຄອນສຳລັບເດັກກ່ອນໄວຮຽນ........................101
2. ຈຸດປະສົງຂອງການສອນລະຄອນ..........................................................................101
3. ເນື້ອໃນຂອງການສອນລະຄອນ.............................................................................102
4. ຂັ້ນຕອນຂອງການສອນລະຄອນ...........................................................................102
5. ວິທີສອນລະຄອນໃຫ້ເດັກກ່ອນໄວຮຽນ...................................................................102
6. ເທັກນິກການສອນລະຄອນ ແລະ ການປະເມີນຜົນ.......................................................104
7. ສັງເກດການສອນລະຄອນໃນໂຮງຮຽນລ້ຽງເດັກ-ອະນຸບານ...............................................105
7.1 ລົງສັງເກດການສອນ...........................................................................................105
7.2 ບັນທຶກ, ສະຫຼຸບ, ລາຍງານ...................................................................................106
8. ວິທີການແຕ່ງບົດສອນ.......................................................................................106
8.1 ຮ່າງບົດສອນ......................................................................................................107
8.2 ອົງປະກອບ ແລະ ຂັ້ນຕອນຂອງການແຕ່ງບົດສອນ........................................................103
8.3 ແຕ່ງບົດສອນຕາມແຜນຈັດປະສົບການ.....................................................................105
9. ແຕ່ງບົດສອນຕົວຈິງ...........................................................................................110
9.1 ແຕ່ງບົດສອນຊັ້ນລ້ຽງເດັກ......................................................................................110
9.2 ແຕ່ງບົດສອນຂັ້ນອະນຸບານ 1 .................................................................................110
9.3 ແຕ່ງບົດສອນຂັ້ນອະນຸບານ 2 .................................................................................110
9.4 ແຕ່ງບົດສອນຂັ້ນອະນຸບານ 3 .................................................................................110
10. ການຜະລິດສື່ປະກອບການສະແດງລະຄອນ..............................................................110
11. ເຝິກຊ້ອມລະຄອນຕົວຈິງ...................................................................................110

12. ເຝິກສອນຕົວຈິງກັບເດັກໃນໂຮງຮຽນລ້ຽງເດັກ-ອະນຸບານ ແລະ ປະເມີນ, ຖອດຖອນບົດຮຽນ........112
13. ເຝິກສອນຕົວຈິງໃນຫ້ອງໂຮງຮຽນລ້ຽງເດັກ-ອະນຸບານ ແລະ ປະເມີນ, ຖອນຖອນບົດຮຽນ...........112
14. ເຝິກສອນຕົວຈິງໃນໂຮງຮຽນລ້ຽງເດັກ-ອະນຸບານ ແລະ ປະເມີນ, ຖອດຖອນບົດຮຽນ.................112
**ບົດທີ 6 ການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວນັບແຕ່ອາຍຸ 3-6 ປີ**
1. ຄວາມໝາຍຄວາມສຳຄັນຂອງການສອນພາສາລາວໃຫ້ແກ່ເດັກທີ່ເວົ້າພາສາລາວນັບແຕ່ອາຍຸ 3-6 ປີ....113
2. ຄວາມຫຍຸ້ງຍາກໃນການຮຽນພາສາລາວຂອງເດັກທີ່ບໍ່ດວົ້າພາສາລາວ.......................................114
3. ຮູບແບບ ແລະ ຈຸດປະສົງຂອງການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວ.........................115
4. ວິທີການປະເມີນການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວ........................................115
5. ວິທີການແຕ່ງບົດສອນ............................................................................................116
5.1 ຮ່າງບົດສອນ....................................................................................................116
5.2 ອົງປະກອບ ແລະ ຂັ້ນຕອນຂອງການແຕ່ງບົດສອນ....................................................117
5.3 ແຕ່ງບົດສອນຕາມແຜນຈັດປະສົບການ..................................................................120
6. ສັງເກດການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວນັບແຕ່ອາຍຸ 3-6 ປີ............................127
6.1 ລົງສັງເກດການສອນ..........................................................................................127
6.2 ບັນທຶກ, ສະຫຼຸບ, ລາຍງານ...................................................................................128
7. ແຕ່ງບົດສອນຕົວຈິງ..............................................................................................122
7.1 ແຕ່ງບົດສອນຂັ້ນອະນຸບານ 1 ..............................................................................122
7.2 ແຕ່ງບົດສອນຂັ້ນອະນຸບານ 2 ..............................................................................122
7.3 ແຕ່ງບົດສອນຂັ້ນອະນຸບານ 3 ..............................................................................122
7.4 ເຝິກສອນຕົວຈິງໃນຫ້ອງຮຽນ ແລະ ຖອດຖອນບົດຮຽນ..............................................122

# ບົດທີ 1
# ການສອນພາສາລາວ - ວັນນະຄະດີໃຫ້ແກ່ເດັກກ່ອນໄວຮຽນ

ເວລາ 6 ຊົ່ວໂມງ

| ຈຸດປະສົງໃຫ້ນັກຮຽນຄູສາມາດ: |
|---|
| - ອະທິບາຍຄວາມໝາຍ, ຄວາມສຳຄັນຂອງການສອນພາສາລາວ - ວັນນະຄະດີໃຫ້ເດັກກ່ອນໄວຮຽນໄດ້ |

## 1. ຄວາມໝາຍ ແລະ ຄວາມສຳຄັນຂອງການສອນພາສາລາວ - ວັນນະຄະດີໃຫ້ເດັກກ່ອນໄວຮຽນ

### 1.1. ຄວາມໝາຍຂອງການສອນພາສາລາວ-ວັນນະຄະດີ

ຄວາມໝາຍຂອງພາສາລາວ-ວັນນະຄະດີກໍ່ແມ່ນພາຫະນະສະເພາະຂອງມັນຄື: ພາຫະນະຂອງຂະແໜງດົນຕີ ແມ່ນສຽງ,ສຳນຽງ, ຈັງຫວະ ແລະທຳນອງ...ພາຫະນະຂອງການລະບາຍສີ ແມ່ນລວດລາຍ ແລະ ສີສັນ, ພາຫະນະຂອງວັນນະຄະດີແມ່ນພາສາເປັນເຄື່ອງມືທີ່ສຳລັບກໍ່ສ້າງບົດປະພັນວັນນະຄະດີ ສະນັ້ນຈຶ່ງເວົ້າໄດ້ວ່າ ພາສາແມ່ນພາຫະນະສຳຄັນຕົ້ນຕໍຂອງວັນນະຄະດີທີ່ໃຊ້ເພື່ອສະແດງຮູບພາບ, ລວດລາຍ, ສຽງ, ສຳນຽງ. ຈັງຫວະ, ທຳນອງ ແລະ ຄວາມຮູ້ສຶກຂອງຄົນທີ່ເຮັດໃຫ້ຕົວເດັກເກີດມີຄວາມສະເທືອນໃຈຄວາມສຳຄັນໃນການສອນພາສາລາວໃຫ້ເດັກຊົນເຜົ່າພາສາ-ຕົວອັກສອນລາວ ເປັນພາສາ ແລະ ອັກສອນທີ່ໃຊ້ທາງການ ແລະ ກໍ່ແມ່ນພາສາປະຈຳຊາດລາວ ສະນັ້ນການຮຽນ-ການສອນພາສາລາວຈຶ່ງມີຄວາມສຳຄັນ ແລະ ຈຳເປັນທີ່ສຸດຢູ່ໃນຊັ້ນອະນຸບານສຶກສາ ແລະ ຊັ້ນປະຖົມສຶກສາ , ອີກດ້ານໜຶ່ງກໍ່ເພາະວ່າປະເທດລາວມີຈຸດພິເສດທາງດ້ານພົນລະເມືອງ, ມີຫຼາຍເຜົ່າຊົນທີ່ມີການດຳລົງຊີວິດ, ພາສາປາກເວົ້າແຕກຕ່າງກັນໂດຍສະເພາະແມ່ນເຂດຮ່າງໄກສອກຫຼີກ ດັ່ງນັ້ນເພື່ອເຮັດໃຫ້ການຮຽນ-ການສອນ ພາສາລາວ ເຊິ່ງເປັນພາສາທີ່ສອງສຳລັບຄູ ທີ່ຈະໄປສອນນັກຮຽນຊົນເຜົ່າໃຫ້ໄດ້ຮັບຜົນຕາມລະດັບຄາດໝາຍຂອງຫຼັກສູດນັ້ນ ຈຶ່ງຈຳເປັນທີນັກຮຽນຄູຈະຕ້ອງມີພື້ນຖານມັນໄດ້ເກີດຂຶ້ນ ແລະ ຂະຫຍາຍຕົວບົນພື້ນຖານເສດຖະກິດຂອງສັງຄົມໃດໜຶ່ງ, ມັນໃຊ້ພາສາຄຳເວົ້າ, ຕົວໜັງສື ເພື່ອເປັນພາຫະນະຕົ້ນຕໍໃນການພັນລະນາ ສ້າງຕັ້ງຮູບພາບສັນຍາລັກ ແລະ ຕົວຢ່າງເພື່ອສ່ອງແສງເຖິງທາດແທ້ອັນເດັ່ນຊັດທາງສັງຄົມ ພ້ອມກັນນັ້ນມັນກໍ່ສົ່ງຜົນສະທ້ອນອັນໃຫຍ່ຫຼວງໃຫ້ແກ່ແນວຄິດ, ຄວາມຮູ້ສຶກຂອງສັງຄົມ ແລະ ເສດຖະກິດ, ວັນນະຄະດີ ພຽງແຕ່ແມ່ນປະກົດການໜຶ່ງຂອງສັງຄົມເທົ່ານັ້ນມັນບໍ່ມີຄວາມສາມາດຈະພັນລະນາ (ສ່ອງແສງ) ຮູບພາບທີ່ນັບເປັນໝື່ນໆ ໃນປະກົດການສັງຄົມໃດສັງຄົມໜຶ່ງ ຫຼື ປະກົດການທາງທຳມະຊາດນັ້ນໄດ້ຢ່າງຄົບຖ້ວນພຽງພໍຢູ່ໃນສັງຄົມ ນາຍທຶນ ແລະ ສະໄໝສັງຄົມນິຍົມ, ພື້ນຖານເສດຖະກິດຂອງເສດຖະກິດຂອງສັງຄົມແມ່ນເງື່ອນໄຂຕົ້ນຕໍທີ່ຈຳເປັນຂອງການມີຊີວິດຂອງຄົນ ແລະ ສັງຄົມມັນກໍແມ່ນເງື່ອນໄຂອັນຕົ້ນຕໍທີ່ເຮັດໃຫ້ສິລະປະວັນນະຄະດີ ມັນໄດ້ເກີດຂຶ້ນ ແລະ ຂະຫຍາຍຕົວບົນພື້ນຖານເສດຖະກິດຂອງສັງຄົມໃດໜຶ່ງ, ມັນໃຊ້ພາສາຄຳເວົ້າ, ຕົວໜັງສື ເພື່ອເປັນພາຫະນະຕົ້ນຕໍໃນການພັນລະນາ ສ້າງຕັ້ງຮູບພາບສັນຍາລັກ ແລະ ຕົວຢ່າງເພື່ອສ່ອງແສງເຖິງທາດແທ້ອັນເດັ່ນຊັດທາງສັງຄົມ ພ້ອມກັນນັ້ນມັນກໍ່ສົ່ງຜົນສະທ້ອນອັນໃຫຍ່ຫຼວງໃຫ້ແກ່ແນວຄິດ, ຄວາມຮູ້ສຶກຂອງສັງຄົມ ແລະ ເສດຖະກິດ, ວັນນະຄະດີ ພຽງແຕ່ແມ່ນປະກົດການໜຶ່ງຂອງສັງຄົມເທົ່ານັ້ນມັນບໍ່ມີຄວາມສາມາດຈະພັນລະນາ (ສ່ອງແສງ) ຮູບພາບທີ່ນັບເປັນໝື່ນໆ ໃນປະກົດການສັງຄົມໃດສັງຄົມໜຶ່ງ ຫຼື ປະກົດການທາງທຳມະຊາດນັ້ນໄດ້ຢ່າງຄົບຖ້ວນພຽງພໍຢູ່ໃນສັງຄົມ ນາຍທຶນ ແລະ ສະໄໝສັງຄົມນິຍົມ, ພື້ນຖານເສດຖະກິດຂອງເສດຖະກິດຂອງສັງຄົມແມ່ນເງື່ອນໄຂຕົ້ນຕໍທີ່ຈຳເປັນຂອງການມີຊີວິດຂອງຄົນ ແລະ ສັງຄົມມັນກໍແມ່ນເງື່ອນໄຂອັນຕົ້ນຕໍທີ່ເຮັດໃຫ້ສິລະປະວັນນະຄະດີ

### 1.2. ຄວາມສຳຄັນຂອງການສອນພາສາລາວ-ວັນນະຄະດີ

ເດັກຢູ່ໃນອາຍຸ 0-6 ປີ ເປັນໄວທີ່ໄຮ້ດຽງສາ, ສັບພາສາບໍ່ທັນອຸດົມສົມບູນ ການເວົ້າບໍ່ທັນຄ່ອງແຄ້ວ, ຄວາມຮັບຮູ້ກ່ຽວກັບສະພາບແວດລ້ອມອ້ອມຂ້າງບໍ່ທັນກ້ວາງຂວາງ

ດັ່ງນັ້ນ ຈຶ່ງຈໍາເປັນຕ້ອງນໍາໃຊ້ວັນນະຄະດີເຂົ້າໃນການສຶກສາເດັກດ້ວຍຫຼາຍຮູບການພ້ອມທັງສ້າງເງື່ອນໄຂໃຫ້ເດັກໄດ້ຮຽນຮູ້ພາສາທີ່ງ່າຍ ແລະ ເໝາະກັບໄວອາຍຸຂອງເຂົາເຈົ້າໃຫ້ນັບມື້ນັບອຸດົມສົມບູນໂດຍຜ່ານການຫຼິ້ນ, ຮູບພາບວັດຖຸ, ສັດ, ຄົນ ທີ່ໄດ້ຈັບບາຍໄດ້ເຫັນຕາມທໍາມະຊາດ ແລະ ໃນຄອບຄົວ

ພາສາລາວ-ວັນນະຄະດີເດັກທີ່ໝູນໃຊ້ໃນການສຶກສາອົບຮົມ ແລະ ພັດທະນາການທາງດ້ານພາສາໃຫ້ແກ່ເດັກຕ້ອງໄດ້ຄັດເລືອກສິ່ງທີ່ເໝາະສົມກັບໄວອາຍຸຂອງເດັກລວມມີ ນິທານ ( ເລົ່າເລື່ອງ ) ກາບກອນ ( ຄໍາຄ່ອງ) ຄໍາທວາຍ, ການສົນທະນາ, ການຫຼິ້ນບົດບາດສົມມຸດ, ການສະແດງລະຄອນ ແລະ ອື່ນໆ ທັງໝົດນີ້ແມ່ນວິທີເຝິກແອບໃຫ້ເດັກໄດ້ຮຽນເວົ້າຢ່າງຄ່ອງແຄ້ວ, ຜັນສຽງໃຫ້ຖືກຕາມຫຼັກໄວຍາກອນ, ສະຫຼະພະຍັນຊະນະ ( ຕົວຢ່າງ: ການເລົ່າຄໍາຄ່ອງ) ໃຫ້ເດັກມີການຟັງຢ່າງຖືກຕ້ອງ, ຟັງໝູ່ເລົ່າເລື່ອງ, ຄູເລົ່ານິທານອື່ນໆ ( ຟັງນິທານ ຫຼື ຜູ້ອື່ນເລົ່າ) ນອກນັ້ນຍັງໄດ້ຟັງເອື້ອຍ, ອ້າຍ,ພໍ່ແມ່ ແລະ ຜູ້ອື່ນໆອ້ອມຂ້າງ ແລະ ພັດທະນາການອ່ານໄປພ້ອມໆກັນເ ອ່ານຄໍາຄ່ອງ, ອ່ານນິທານ( ເລື່ອງ) ແລະ ອ່ານບັດຄໍາ ພ້ອມກັນຂຽນໜັງສືໂດຍແຕ້ມຕາມຮອຍ ຫຼື ຕາມຄອງຈໍ້າພະຍັນຊະນະ ແລະ ສະຫຼະ

## 2. ຈຸດປະສົງຂອງການສອນພາສາລາວ - ວັນນະຄະດີໃຫ້ແກ່ເດັກກ່ອນໄວຮຽນ

- ເຝິກແອບໃຫ້ເດັກຮຽນເວົ້າຢ່າງຄ້ອງແຄ້ວ, ຜັນສຽງໃຫ້ຖືກຕາມຫຼັກໄວຍາກອນ ຫຼື ສະຫຼະ ແລະ ພະຍັນຊະນະ ( ຕົວຢ່າງ: ເລົ່າຄໍາຄ່ອງ )
- ຊ່ວຍໃຫ້ເດັກມີການຟັງຢ່າງຖືກຕ້ອງ ( ຟັງນິທານ ຫຼື ຜູ້ອື່ນເວົ້າ )
- ຊ່ວຍໃຫ້ເດັກມີການພັດທະນາການອ່ານໄປພ້ອມໆກັນເຊັ່ນ: ອ່ານຮູບພາບ, ອ່ານນິທານ ແລະ ອ່ານບັດ
- ເຝິກໃຫ້ເດັກຂຽນໜັງສືໂດມແຕ້ມຕາມຮອຍຈໍ້າ
- ຊ່ວຍໃຫ້ເດັກມີຄວາມຮູ້ສັບພາສາ ແລະ ຮັກພາສາແມ່
- ຊ່ວຍໃຫ້ເດັກຮູ້ຄວາມໝາຍຂອງຄໍາເວົ້າພ້ອມກັບຮຽກຊື່: ວັດຖຸສິ່ງຂອງ, ຄົນ ແລະສັດຢ່າງຖືກຕ້ອງ

## 3. ທິດສະດີທີ່ກ່ຽວຂ້ອງກັບການສອນພາສາລາວ - ວັນນະຄະດີໃຫ້ແກ່ເດັກກ່ອນໄວຮຽນ

### 3.1. ທິດສະດີການຮຽນຮູ້ຂອງທ່ານສະກິນເນີ Skinner ( 1904 – 1990)

ທິດສະດີໃນການຮຽນຮູ້ ໂດຍຜ່ານພຶດຕິກໍາແມ່ນມີຜົນປະໂຫຍດຫຼາຍທີ່ນໍາໃຊ້ເຂົ້າໃນການຈັດການຮຽນ - ການສອນໃນຫ້ອງຮຽນເພື່ອເຮັດໃຫ້ຜູ້ຮຽນເກີດມີຄວາມຮູ້, ຄວາມເຂົ້າໃຈ ແລະ ຄວາມສາມາດນໍາໄປໃຊ້ໃນຊີວິດປະຈໍາວັນເພາະຄົນເຮົາເກີດມາບໍ່ມີຄວາມຮູ້ດ ຄວາມເຂົ້າໃຈຕໍ່ວັດຖຸສິ່ງຂອງໃດໆທັງໝົດເມື່ອຄົນເຮົາໄດ້ຮັບການສໍາຜັດກັບທໍາມະຊາດ ແລະ ສິ່ງແວດລ້ອມອ້ອມຂ້າງໂດຍຜ່ານຂະບວນການສໍາຜັດອິນຊີທັງ 5 ທີ່ສິ່ງຜົນສະທ້ອນທີ່ມີຈຸດປະສົງ, ມີລະດັບຄາດໝາຍໂດຍຜ່ານການຮຽນຮູ້ຈາກທາງດ້ານພຶດຕິກໍາຈຶ່ງເກີດມີການຮຽນຮູ້ຕົວຢ່າງ: ສາວຄູອະນຸບານເອົາເຄື່ອງຫຼິ້ນມາໃຫ້ເດັກເບິ່ງຢູ່ຕໍ່ໜ້າເດັກ, ເດັກອາຍຸປະມານ 4-5 ເດືອນທີ່ບໍ່ທັນຮູ້ຍ່າງ ແລະ ເວົ້າສັບພາສາບໍ່ທັນໄດ້ຊັດເຈນໃນເມື່ອເຫັນເຄື່ອງຫຼິ້ນດັ່ງກ່າວເດັກຈະສະແດງພຶດຕິກໍາອອກມາເຊັ່ນ: ຄານໄປຫາເຄື່ອງຫຼິ້ນ, ສົ່ງສຽງອອກມາອໍ່ໆແອງດ້ວຍຄວາມດີໃຈສິ່ງເລົ່ານີ້ເອີ້ນວ່າ: ການເສີມແຮງ, ການກະຕຸ້ນ, ການສະແດງອອກການເສີມແຮງນີ້ແມ່ນຂັ້ນຕອນກະຕຸ້ນເພື່ອເຮັດໃຫ້ຜູ້ຮຽນມີຄວາມຢາກເຊິ່ງທ່ານໄດ້ກໍານົດ 2 ເງື່ອນໄຂຄື:

1. ການກະຕຸ້ນແບບດັ້ງເດີມຄື: ທ່ານໄດ້ໃຊ້ການທົດລອງກ່ຽວກັບການໃຫ້ອາຫານສັດຄື ( ໝາ) ການກະຕຸ້ນອາຫານເພື່ອຕອບສະໜອງນໍ້າລາຍໄຫລ, ການກະຕຸ້ນແບບມີເງື່ອນໄຂ ( ກະດິ່ງ)

2. ການກະຕຸ້ນແບບມີເງື່ອນໄຂ: ແມ່ນການກະຕຸ້ນ ການຕອບສະໜອງລາງວັນ ຫຼື ການເສີມແຮງທີ່ເຮັດໃຫ້ການຕອບສະໜອງທີ່ເປັນໄປໄດ້ຫຼາຍກວ່ານີ້ ແມ່ນທິດສະດີການຮຽນຮູ້ຂອງທ່ານສະກິນເນີ Skinner ( 1904-1990) ຈາກທິດສະດີການຮຽນຮູ້ຂອງທ່ານສະກິນເນີ Skinner ມາປຽບທຽບໃສ່ການສິດສອນໃນໂຮງຮຽນລ້ຽງເດັກອະນຸບານເຫັນວ່າ: ໄດ້ນໍາໃຊ້ການຮຽນຮູ້ໂດຍຜ່ານພຶດຕິກໍາເຂົ້າໃນການຈັດການຮຽນ-ການສອນແມ່ນຈະມີຫຼາຍທີ່ສຸດ ຕົວຢ່າງ: ສາວຄູສອນກິດຈະກໍາວົງມົນພາສາລາວທໍາອິດສາວຄູອ່ານບັດຄໍາປະກອບຮູບພາບ ໃຫ້ເດັກຟັງກ່ອນ

2-3 ເທື່ອຫຼັງຈາກນັ້ນສາວຄູໄດ້ໃຫ້ເດັກອອກມາອ່ານບັດຄຳປະກອບຮູບພາບເທື່ອລະຄົນ ຖ້າວ່າເດັກຄົນໃດອ່ານໄດ້ ສາວຄູຍ້ອງຍໍຊົມເຊີຍດ້ວຍການຕົບມືແມ່ນກະຕຸ້ນແບບດັ້ງເດີມ, ການກະຕຸ້ນລັກສະນະນີ້ສາວຄູໄດ້ນຳໃຊ້ຕະຫຼອດໂດຍສະເພາະ ແມ່ນເດັກໄວອະນຸບານເພາະວ່າເດັກໄວນີ້ແມ່ນມັກຍ້ອງຕົວຢ່າງ: ພໍ່ແມ່ ຫຼື ສາວຄູຈະໃຊ້ວຽກງານໃດໜຶ່ງຕ້ອງໄດ້ໃຊ້ການຍ້ອງຍໍກ່ອນ ເດັກຈິ່ງຄ່ອຍໄປເອົາມາໃຫ້ ຖ້າບໍ່ມີການກະຕຸ້ນດ້ວຍການໃຫ້ກຳລັງໃຈເດັກກໍ່ບໍ່ມີຄວາມຢາກນີ້ແມ່ນຕົວຢ່າງໜຶ່ງເພື່ອໃຊ້ການກະຕຸ້ນໃຫ້ເດັກຢາກເຮັດ, ຢາກກະທຳຕົວຈິງ, ການສິດສອນໃນໂຮງຮຽນລ້ຽງເດັກອະນຸບານ ແມ່ນໃຊ້ການກະຕຸ້ນເປັນສ່ວນໃຫຍ່ແຕ່ໃຊ້ຫຼາຍກວ່າໝູ່ແມ່ນການກະຕຸ້ນເງື່ອນໄຂແບບດັ້ງເດີມເພື່ອເຮັດໃຫ້ການປະຕິບັດກິດຈະກຳເກີດມີການຮຽນຮູ້ຢ່າງຖືກຕ້ອງ, ໂດຍຜ່ານພຶດຕິກຳດ້ວຍການກຳນົດ 2 ເງື່ອນໄຂຄື: ການກະຕຸ້ນແບບດັ້ງເດີມ ແລະ ການກະຕຸ້ນແບບມີເງື່ອນໄຂ.

**3.2. ທິດສະດີການຮຽນຮູ້ຂອງທ່ານ ເລັບວີໂກສກີ Lev Vygothky (1896 – 1934 )**

ທິດສະດີຂອງທ່ານເປັນທິດສະດີໃນການຮຽນຮູ້ຢ່າງໜຶ່ງທີ່ເປັນປະໂຫຍດໃຫ້ແກ່ຜູ້ທີ່ຮຽນເກີດມີການຮຽນຮູ້ໂດຍຜ່ານໂຄງສ້າງຂອງການຮັບຮູ້, ການປັບໂຄງສ້າງພາຍໃນການຮັບເອົາສິ່ງໃໝ່, ການປັບດ້ວຍຄວາມຮູ້ເດີມ ແລະ ຄວາມຮູ້ໃໝ່ການຮຽນຮູ້ຂອງເດັກປະກອບມີ 3 ຢ່າງຕົ້ນຕໍຄື: ການຄົ້ນຄິດ, ການໃຊ້ພາສາ ແລະ ຂະບວນການໃຫ້ເຫດຜົນ, ການປະຕິສຳພັນໃນທາງສັງຄົມແມ່ນການຮຽນຮູ້ເຊິ່ງນຳໃຊ້ພາສາເຄື່ອງມື, ອຸປະກອນທີ່ເປັນພາຫະນະສື່ສານລະຫວ່າງຄົນກັບຄົນຢູ່ໃນສັງຄົມເພາະພາສາແມ່ນພາຫະນະສື່ສານລະຫວ່າງຄົນກັບຄົນດັ່ງທິດສະດີການຮຽນຮູ້ຂອງທ່ານທ່ານ ເລັບວີໂກສກີ Lev Vygothky (1896 – 1934 ) ໄດ້ເວົ້າວ່າ: ຜົນການຮຽນຮູ້ປ່ຽນແປງຈາກຄວາມເປັນໄປໄດ້ໃນການເຂົ້າຮ່ວມການເຝິກປະຕິບັດຕົວຈິງສະນັ້ນ, ຈິ່ງເວົ້າໄດ້ວ່າການຮຽນໄດ້ດີທີ່ສຸດນັ້ນຈະຕ້ອງມີການສົນທະນາປະຕິສຳພັນທາງສັງຄົມໂດຍໃຊ້ພາສາດັ່ງທີ່ທິດສະດີການຮຽນຮູ້ຂອງ ທ່ານທ່ານ ເລັບວີໂກສກີ Lev Vygothky (1896 – 1934 ) ທີ່ໄດ້ເວົ້າວ່າວັດທະນະທຳ (ພາສາ) ເປັນສິ່ງທີ່ເຮັດໃຫ້ເດັກນັ້ນຄິດຢ່າງມີຄວາມໝາຍ ແລະ ຮູ້ວິທີຈະຄົ້ນຄິດຢູ່ໃນການພັດທະນາຂະບວນການຮັບຮູ້ແມ່ນຜົນຂອງຂະບວນການໂຕ້ຕອບດ້ວຍເຫດຜົນ, ບ່ອນທີ່ເດັກຮຽນຮູ້ຜ່ານປະສົບການຢູ່ໃນການແກ້ໄຂບັນຫາກັບຄົນອື່ນດັ່ງທ່ານທ່ານ ເລັບວີໂກສກີ Lev Vygothky (1896 – 1934 ) ທີ່ໄດ້ເວົ້າວ່າ: ການຮຽນຮູ້ໂດຍຜ່ານປະຕິສຳພັນທາງສັງຄົມຄວາມຮູ້ຖືກພັດທະນາການຕາມກິດຈະກຳ ຫຼື ການເຝິກຝົນທີ່ແຕກຕ່າງກັນຢ່າງເໝາະສົມໂດຍຜ່ານການສະແດງອອກທາງພາສາ.

**4. ບົດບາດຂອງຄູ ແລະ ຜູ້ປົກຄອງໃນການສົ່ງເສີມພັດທະນາການທາງພາສາລາວ - ວັນນະຄະດີໃຫ້ແກ່ເດັກກ່ອນໄວຮຽນ**

- **ທິດສະດີການຮຽນຮູ້ຂອງທ່ານຣຸດໂຊ Ruisso ( 1712 – 1718)**

ເຊື່ອວ່າຫົວໃຈຂອງການສຶກສາເດັກແມ່ນຊີວິດໃນຄອບຄົວ, ພໍ່ແມ່ມີບົດບາດສຳຄັນໃນການລ້ຽງດູລູກ, ຣຸດໂຊ ໄດ້ເນັ້ນເຖິງວິທີລ້ຽງດູເດັກໃຫ້ຖືກວິທີໂດຍຄຳນຶງເຖິງທຳມະຊາດຂອງເດັກ ເຂົາມີຄວາມເຫັນວ່າ ການບີບບັງຄັບ ຫຼື ຫ້າມປາມເດັກໂດຍເດັດຂາດຈະເປັນການທຳລາຍທຳມະຊາດຂອງເດັກ, ຈາກເນື້ອໃນທິດສະດີຂອງທ່ານ ມາປຽບທຽບໃສ່ສະພາບຕົວຈິງຢູ່ໃນຊຸມຊົນເຫັນວ່າບົດບາດຂອງຄອບຄົວຕໍ່ການລ້ຽງດູ ແລະ ສຶກສາອົບຮົມເດັກແມ່ນຍັງບໍ່ທັນພຽງພໍ ພໍ່ແມ່ສ່ວນຫຼວງຫຼາຍແມ່ນຄິດວ່າການສຶກສາອົບຮົມເດັກແມ່ນໜ້າທີ່ຂອງຄູໃນໂຮງຮຽນແຕ່ໃນຕົວຈິງແລ້ວການສຶກສາອົບຮົມເດັກແມ່ນໜ້າທີ່ຂອງໝົດທຸກຄົນໃນສັງຄົມເພາະເດັກໄວນີ້ຈະຮຽນເອົາສິ່ງທີ່ໄດ້ເຫັນ, ໄດ້ຍິນຈາກສະພາບແວດລ້ອມອ້ອມຂ້າງເຮົາຈະສັງເກດເຫັນວ່າເດັກຈະໄດ້ສັບໃໝ່ ແລະ ພຶດຕິກຳໃໝ່ໆມາໂດຍທີ່ຄູບໍ່ໄດ້ສອນໃຫ້ເຊັ່ນ: ການໃຊ້ສັບທີ່ບໍ່ສຸພາບແນ່ນອນວ່າຄອບຄົວ ແລະ ຄູຢູ່ໃນໂຮງຮຽນບໍ່ໄດ້ສອນໃຫ້ຮູ້, ແຕ່ສິ່ງດັ່ງກ່າວເດັກອາດຈະໄດ້ເຫັນ ແລະ ໄດ້ສຳຜັດມາຈາກຜູ້ອື່ນທີ່ຢູ່ອ້ອມຕົວຂອງເດັກນັ້ນເອງ, ສະນັ້ນ, ຄອບຄົວ, ໂຮງຮຽນ ແລະ ສັງຄົມຈະຕ້ອງໃຫ້ການສຶກສາອົບຮົມແກ່ເດັກດ້ວຍການສ້າງກິດຈະກຳຕ່າງໆໃຫ້ເດັກໄດ້ຮຽນຮູ້ໂດຍໃຊ້ການກະຕຸ້ນ, ການໃຫ້ກຳລັງໃຈເດັກດ້ວຍການຍ້ອງຍໍຊົມເຊີຍດັ່ງທິດສະດີການຂອງໝົດທຸກຄົນໃນສັງຄົມເພາະເດັກໄວນີ້ຈະຮຽນເອົາສິ່ງທີ່ໄດ້ເຫັນ, ໄດ້ຍິນຈາກສະພາບແວດລ້ອມອອ້ມຂ້າງ ເຮົາຈະສັງເກດເຫັນໄດ້ວ່າເດັກຈະໄດ້ສັບໃໝ່ ແລະ ພຶດຕິກຳໃໝ່ໆໂດຍທີ່ຄູບໍ່ໄດ້ສອນໃຫ້ເຊັ່ນ: ການໃຊ້ສັບທີ່ບໍ່ສຸພາບແນ່ນອນວ່າຄອບຄົວ ແລະ ຄູຢູ່ໃນໂຮງຮຽນບໍ່ໄດ້

ສອນໃຫ້ຮູ້, ແຕ່ສິ່ງດັ່ງກ່າວເດັກອາດຈະໄດ້ເຫັນ ແລະ ໄດ້ສຳຜັດມາຈາກຜູ້ອື່ນທີ່ຢູ່ອ້ອມຕົວເດັກນັ້ນເອງ ສະນັ້ນ ຄອບຄົວ, ໂຮງຮຽນ ແລະ ສັງຄົມຈະຕ້ອງໄດ້ສຶກສາອົບຮົມແກ່ເດັກດ້ວຍການສ້າງກິດຈະກຳຕ່າງໆໃຫ້ເດັກໄດ້ຮຽນຮູ້ດ້ວຍການກະຕຸ້ນ, ການໃຫ້ກຳລັງໃຈດ້ວຍການຍ້ອງຍໍຊົມເຊີຍດັ່ງທິດສະດີການຮຽນຮູ້ຂອງທ່ານ ສະກິນເນີ Skinner ( 1904 – 1990) ການເສີມແຮງ ນີ້ແມ່ນຂັ້ນຕອນການກະຕຸ້ນເພື່ອເຮັດໃຫ້ຜູ້ຮຽນມີຄວາມຢາກຮູ້ທ່ານໄດ້ກຳນົດ 2 ເງື່ອນໄຂຄື: ການກະຕຸ້ນແບບດັ່ງເດີມ ແລະ ການກະຕຸ້ນແບບມີເງື່ອນໄຂ, ທິດສະດີການຮຽນຮູ້ຂອງທ່ານມີປະໂຫຍດເພື່ອການສຶກສາອົບຮົມເດັກກ່ອນໄວຮຽນດັ່ງນັ້ນ, ຜູ້ເປັນພໍ່ແມ່ຕ້ອງຄຳນຶງເຖິງຄວາມສຳຄັນໃນການສຶກສາອົບຮົມລູກເພາະວ່າຄອບຄົວແມ່ນຫົວໜ່ວຍພື້ນຖານຂອງສັງຄົມແມ່ນໂຮງຮຽນຫຼັງທຳອິດຂອງເດັກ ແລະ ຄູສອນຜູ້ທຳອິດຂອງເດັກກໍ່ຄືພໍ່ແມ່ຂອງເຂົານັ້ນເອງໝາຍຄວາມວ່າ: ຄອບຄົວຮັບຜິດຊອບລ້ຽງດູ ແລະ ສຶກສາອົບຮົມເດັກນັບແຕ່ມື້ທີ່ເດັກລືມຕາເບິ່ງໂລກ ສະນັ້ນຄອບຄົວຈຶ່ງມີບົດບາດສຳຄັນຕົ້ນຕໍ ຕໍ່ການພັດທະນາການຮອບດ້ານຂອງເດັກຄື: ດ້ານຮ່າງກາຍ, ດ້ານອາລົມ - ຈິດໃຈ, ດ້ານສັງຄົມ, ດ້ານພາສາ ແລະ ສະຕິປັນຍາ

## 5. ການປະເມີນພັດທະນາການທາງພາສາລາວ - ອັນນະຄະດີໃຫ້ແກ່ເດັກກ່ອນໄວຮຽນ

ການປະເມີນໝາຍເຖິງຂະບວນການຊອກຫາປະລິມານ ແລະຄຸນນະພາບ ໂດຍໃຊ້ເຄື່ອງມືຢ່າງໃດໜຶ່ງ, ຜົນຂອງການປະເມີນແມ່ນເປັນຕົວເລກ, ສັນຍາລັກ ຫຼື ຂໍ້ມູນ ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າການປະເມີນພັດທະນາການພາສາເດັກກ່ອນໄວຮຽນແມ່ນຊ່ວຍໃຫ້ຄູ ຮູ້ຈັກຄວາມສາມາດໃນການນຳໃຊ້ພາສາຂອງເດັກໃນຊີວິດປະຈຳວັນເຊັ່ນ: ການຟັງ , ການເວົ້າ, ການອ່ານ, ການຂຽນ ແລະ ຮູ້ບັນຫາຕ່າງໆທີ່ຄວນຈະປັບປຸງແກ້ໄຂບັນຫາພັດທະນາການທາງພາສາຂອງເດັກດັ່ງນັ້ນ, ການປະເມີນຜົນພັດທະນາການທາງພາສາເດັກກ່ອນໄວຮຽນມີຄວາມຈຳເປັນຢ່າງຍິ່ງ ເພາະເປັນເຄື່ອງມືທີ່ຊ່ວຍໃຫ້ເດັກໄດ້ຮຽນ, ໄດ້ຮູ້ວ່າການຮຽນການ-ການສອນນັ້ນມີປະສິດທິພາບ ຫຼື ບໍ່, ປະສົບຜົນສຳເລັດຕາມຄວາມມຸ່ງໝາຍທີ່ວາງໄວ້ຫຼາຍໜ້ອຍພຽງໃດ, ຄູສອນໄດ້ຮູ້ຈັກສັນນິຖານຜົນໄດ້ຮັບຂອງເດັກ ແລະ ຮູ້ເຖິງຂໍ້ດີ, ຂໍ້ເສຍໃນການສອນພາສາລາວໃຫ້ແກ່ເດັກຂອງຕົນເອງ ຈະຊ່ວຍໃຫ້ຄູສາມາດແກ້ໄຂບັນຫາໃຫ້ຖືກຈຸດ ຫຼື ສາມາດນຳໄປປັບປຸງການຮຽນ-ການສອນໃຫ້ດີຂຶ້ນກວ່າເກົ່າ.

ແວຕາຂຽດຊື່ນ ( 2540: 12 ) ກ່າວວ່າການປະເມີນພັດທະນາການ ແລະ ການຮຽນຮູ້ຂອງເດັກ, ການປະເມີນເດັກອະນຸບານຕ້ອງໄດ້ສັງເກດເປັນສ່ວນໃຫຍ່ຜູ້ສອນຈະຕ້ອງສັງເກດ ແລະ ປະເມີນທັງການສອນຂອງຕົນເອງ ແລະ ພັດທະນາການຮຽນຮູ້ຂອງເດັກວ່າໄດ້ບັນລຸຕາມຈຸດປະສົງ ແລະ ເປົ້າໝາຍທີ່ວາງໄວ້ ຫຼື ບໍ່, ຜົນທີ່ໄດ້ຈາກການສັງເກດພັດທະນາການຈາກຂໍ້ມູນ ເຊິ່ງບັນລະຍາຍຈາກການລວບລວມຜົນງານ, ການສະແດງອອກຢູ່ໃນສະພາບທີ່ເປັນຈິງ, ຂໍ້ມູນຈາກຄອບຄົວຂອງເດັກ, ຕະຫຼອດຮອດເດັກປະເມີນຕົນເອງ ຫຼື ຜົນງານສາມາດບອກໄດ້ວ່າເດັກເກີດການຮຽນຮູ້ ແລະ ມີຄວາມກ້າວໜ້າພຽງໃດ, ຂໍ້ມູນຈາກການປະເມີນພັດທະນາການຈະຊ່ວຍຜູ້ສອນໃນການວາງແຜນຈັດກິດຈະກຳ, ຊີ້ໃຫ້ເຫັນຄວາມຕ້ອງການພິເສດຂອງເດັກແຕ່ລະຄົນໃຊ້ເປັນຂໍ້ມູນໃນການສື່ສານກັບພໍ່ແມ່ຜູ້ປົກຄອງ ແລ້ວນຳມາແກ້ໄຂປັບປຸງ ແລະ ພັດທະນາໂດຍສະເພາະຢ່າງຍິ່ງໃນແນວທາງການເຮັດວິໄຈໃນຫ້ອງຮຽນ.

### 5.1. ປະໂຫຍດຂອງການວັດ ແລະ ປະເມີນຜົນ

- **ປະໂຫຍດສຳລັບຄູ**

- ຊ່ວຍໃຫ້ຮູ້ພຶດຕິກຳເບື້ອງຕົ້ນຂອງເດັກ
- ເພື່ອຊ່ວຍໃນການຈັດການຮຽນ-ການສອນໃຫ້ເໝາະກັບເດັກ
- ຊ່ວຍໃຫ້ຄູຮູ້ໄດ້ວ່າການສອນບັນລຸຈຸດປະສົງທີ່ຕັ້ງໄວ້ຫຼາຍໜ້ອຍພຽງໃດ
- ຊ່ວຍໃຫ້ຮູ້ລະດັບຄວາມສຳເລັດໃນໄລຍະຕ່າງໆຂອງເດັກ
- ໃຊ້ເປັນຂໍ້ມູນປະກອບການຕັດສິນວ່າຜູ້ຮຽນມີຄວາມຮູ້, ຄວາມສາມາດພຽງພໍທີ່ຈະເລື່ອນຂັ້ນສູງຂຶ້ນ ຫຼື ບໍ່

- **ປະໂຫຍດສຳລັບເດັກ**

- ຊ່ວຍໃຫ້ຮູ້ຈຸດປະສົງຂອງຄູເຊິ່ງເປັນການກະຕຸ້ນໃຫ້ຕັ້ງໃຈຮໍ່າຮຽນຫຼາຍຍິ່ງຂຶ້ນ
- ຊ່ວຍເພີ່ມແຮງຈູງໃຈ ແລະ ເກື້ອກູນໃຫ້ເດັກໄດ້ຮຽນຮູ້ເພີ່ມຂຶ້ນ

- ສົ່ງເສີມ ແລະ ປູກຝັງໃຫ້ເປັນຜູ້ມີນິໄສຮັກການຮຽນດີຍິ່ງຂຶ້ນ
- ຊ່ວຍໃຫ້ຮູ້ວ່າເກ່ງ ຫຼື ອ່ອນໃນເນື້ອໃນກິດຈະກໍາໃດໜຶ່ງ

**ວຽກບ້ານ:**

ນັກສຶກສາຄູແຕ່ລະຄົນສ້າງແບບຟອມປະເມີນພັດທະນາການທາງພາສາໃຫ້ແກ່ເດັກ

**ຄໍາຖາມ:**

1. ຄວາມໝາຍຂອງການສອນພາສາລາວໃຫ້ເດັກກ່ອນໄວຮຽນມີຄືແນວໃດ?
2. ຄວາມສໍາຄັນຂອງການສອນພາສາລາວໃຫ້ແກ່ເດັກກ່ອນໄວຮຽນມີຄືແນວໃດ?
3. ບົດບາດ ແລະ ຜູ້ປົກຄອງໃນການສົ່ງເສີມພັດທະນາການທາງພາສາໃຫ້ແກ່ເດັກກ່ອນໄວຮຽນມີຄືແນວໃດ?
4. ຄູຄວນຈັດກິດຈະກໍາສົ່ງເສີມພັດທະນາການທາງພາສາເດັກດ້ວຍວິທີໃດແດ່?

# ບົດທີ 2
# ການສອນສັງເກດສົນທະນາສຳລັບເດັກກ່ອນຮຽນ

**ເວລາ 18 ຊົ່ວໂມງ**

| |
|---|
| **ຈຸດປະສົງໃຫ້ນັກຮຽນຄູສາມາດ:**<br>- **ອະທິບາຍຄວາມສຳຄັນຂອງການສອນສັງເກດ-ສົນທະນາ, ຈຸດປະສົງ, ເນື້ອໃນ, ຂັ້ນຕອນ, ວິທີສອນ ແລະ ວິທີການປະເມີນການສອນສັງເກດ-ສົນທະນາ** |

## 1. ຄວາມໝາຍ ແລະ ຄວາມສຳຄັນຂອງການສອນສັງເກດສົນທະນາເດັກກ່ອນໄວຮຽນ

### 1.1. ຄວາມໝາຍຂອງການສັງເກດສົນທະນາ

ການສັງເກດສົນທະນາແມ່ນການສັງເກດສົນທະນາດ້ວຍພາບການເຄື່ອນໄຫວສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດໃນສັງຄົມ ແລະ ທຳມະຊາດໂດຍນຳໃຊ້ຮູບພາບ ແລະ ຂອງຈິງຮ່ວມກັນລະຫວ່າງສາວຄູ ແລະເດັກເພື່ອນຳໄປສູ່ຄວາມຮູ້, ຄວາມເຂົ້າໃຈສິ່ງທີ່ໄດ້ສັງເກດ ແລະ ສົນທະນາຮ່ວມກັນດັ່ງກ່າວ

### 1.2. ຄວາມສຳຄັນຂອງການສັງເກດສົນທະນາເດັກກ່ອນໄວຮຽນ

ການຈັດກິດຈະກຳການສັງເກດ ແລະ ແອບເວົ້າໃຫ້ແກ່ເດັກກ່ອນໄວຮຽນແມ່ນກິດຈະກຳໜຶ່ງ ທີ່ມີຄວາມສຳຄັນຕົ້ນຕໍເພື່ອຊ່ວຍໃຫ້ເດັກໄດ້ຮັບການພັດທະນາດ້ານພາສາຂອງຊາດອັນອຸດົມສົມບູນ, ແລະ ສ້າງໃຫ້ເດັກເກີດມີຄວາມສະຫງວນມັກ ໃນການຮຽນຮູ້ກ່ຽວກັບ ວິທະຍາສາດທຳມະຊາດ ແລະ ວິທະຍາສາດທາງດ້ານສັງຄົມ

ຕົວຢ່າງ: ໃນສັງຄົມມີການພົວພັນລະຫວ່າງຄົນກັບຄົນ, ລະຫວ່າງຜູ້ນີ້ກັບຜູ້ນັ້ນ, ຄົນເຮົາມີເວລາຢາກຮ້າຍ, ມີເວລາຄຽດແຕ່ມີເວລາດີເບີກບານມ່ວນຊື່ນຕ່າງໆ ໃນທຳມະຊາດມີປະກົດການ, ແດດ,ລົມ, ຕອນສວຍ, ຕອນແລງ, ຕອນຄ່ຳ, ຈາກຄວາມຮັບຮູ້ດັ່ງກ່າວ ພວກຫຼານກໍ່ຈະເກີດແນວຄິດອັນຖືກຕ້ອງຄື: ແນວຄິດຮັກບ້ານເກີດເມືອງນອນ, ຮັກສັດສາວາສິ່ງ ຫຼື ພຶດພັນຕ່າງໆລວມທັງທັງພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ, ຮັກຄູ ແລະ ໝູ່ເພື່ອນດ້ວຍກັນ, ຈາກເຫດຜົນດັ່ງກ່າວສາມາດເວົ້າໄດ້ວ່າ: ການສອນສັງເກດ ແລະ ແອບເວົ້າ ເປັນກິດຈະກຳສອນຢ່າງໜຶ່ງທີ່ມີຄວາມສຳຄັນເຊິ່ງຂາດບໍ່ໄດ້ສຳລັບຄູສອນໃນໂຮງຮຽນລ້ຽງເດັກ - ອະນຸບານເພື່ອໃຫ້ເດັກໄດ້ຮັບການພັດທະນາດ້ານພາສາຢ່າງຄ່ອງແຄ້ວ.

## 2. ຈຸດປະສົງຂອງການສອນສັງເກດ-ສົນທະນາ

1. ສົ່ງເສີມໃຫ້ເດັກໄດ້ຮັບການພັດທະນາທາງດ້ານພາສາ.
2. ສົ່ງເສີມໃຫ້ເດັກມີມາລະຍາດໃນການຟັງ, ການເວົ້າ ແລະ ການອ່ານ.
3. ເພື່ອໃຫ້ເດັກສາມາດສັງເກດ ແລະ ຮ່ວມສະແດງຄວາມຄິດເຫັນຢ່າງມີເຫດຜົນໃນການກ້າສະແດງອອກ.
4. ເພື່ອສ້າງໃຫ້ເດັກມີສະມາທິ ແກ່ຍາວຄວາມສົນໃຈເຂົ້າໃນການຮ່ວມກິດຈະກຳ.
5. ສົ່ງເສີມໃຫ້ມີຄຸນນະທຳ, ຈະລິຍາທຳ ແລະ ລັກສະນະນິໄສທີ່ດີ.
6. ສົ່ງເສີມຄວາມຢາກຮູ້ຢາກເຫັນໃນສິ່ງແວດລ້ອມອ້ອມຂ້າງຕົວເຮົາ.
7. ເພື່ອໃຫ້ເດັກມີສ່ວນຮ່ວມໃນການປະຕິບັດການທົດລອງ ແລະ ເກີດການຮຽນຮູ້ດ້ວຍຕົວເອງ.
8. ສົ່ງເສີມໃຫ້ເດັກໄດ້ຮັບການພັດທະນາທາງດ້ານສະຕິປັນຍາ

## 3. ເນື້ອໃນຂອງການສອນສັງເກດ-ສົນທະນາ

ເນື້ອໃນການສອນກິດຈະກໍາສັງເກດ ແລະ ແອບເວົ້າທີ່ນໍາມາສົນທະນາກັບເດັກໄດ້ແບ່ງອອກເປັນ 3 ພາກສ່ວນດັ່ງລຸ່ມນີ້:

1. ຮຽນພາສາ
2. ສັງເກດ ແລະ ແອບເວົ້າກ່ຽວກັບການດໍາລົງຊີວິດຢູ່ໃນສັງຄົມ
3. ສັງເກດ ແລະ ແອບເວົ້າກ່ຽວກັບທໍາມະຊາດ

ຕົວຢ່າງ:

- ການສັງເກດສົນທະນາກ່ຽວກັບການເຄື່ອນໄຫວຂອງຄົນເຊັ່ນ: ຮູບພາບກ່ຽວກັບການເຄື່ອນໄຫວກິດຈະກໍາຕ່າງໆຂອງເດັກ ( ການຫຼິ້ນ, ການຮຽນ, ການກິນ, ການນອນ ແລະ ອື່ນໆ)
- ການສັງເກດສົນທະນາກ່ຽວກັບການເຄື່ອນໄຫວຂອງສັດຕ່າງໆເຊັ່ນ: ຮູບພາບກ່ຽວກັບການເຄື່ອນໄຫວ, ຮູບຮ່າງລັກສະນະຕ່າງໆຂອງສັດ ( ວົງຈອນຊີວິດການຂະຫຍາຍຕົວ ແລະ ທີ່ຢູ່ອາໄສ ແລະ ອື່ນໆ)
- ສິ່ງທີ່ມີຊີວິດ: ຄູນໍາພາເດັກສົນທະນາກ່ຽວກັບຕົ້ນໄມ້, ໃບຫຍ້າ, ດອກໄມ້, ໝາກໄມ້ດ ພືດພັນຊະນິດຕ່າງໆ
- ສິ່ງທີ່ບໍ່ມີຊີວິດ: ຄູນໍາພາເດັກສົນທະນາກ່ຽວກັບທໍາມະຊາດ, ພູຜາປ່າໄມ້, ດິນຟ້າອາກາດ ແລະ ເຄື່ອງໃຊ້ຕ່າງໆຕາມເນື້ອໃນໜ່ວຍການສອນ

➢ **ລະດັບຄາດໝາຍໃນການສອນພາສາ**

- ຮຽນຜົນສຽງ: ຕ້ອງເອົາໃຈໃສ່ຄໍາເວົ້າ, ສຽງເວົ້າ, ຜົນສຽງຕາມພະຍັນຊະນະທີ່ຍາກໃຫ້ຖືກ, ລ, ດ, ຝ, ຟ, ບ, ວ
- ຮຽນສັບ: ໃຫ້ພວກຫຼານແອບເວົ້າສິ່ງທີ່ພວກຫຼານເຄີຍໃຊ້ ແລະ ເຫັນການດໍາລົງຊີວິດປະຈໍາວັນຄື: ຊື່ຂອງວັດຖຸສິ່ງຂອງ, ຮູບພາບ ແລະ ສັດຕ່າງໆ
- ຮູ້ຟັງ ແລະ ຕອບປະໂຫຍກສັ້ນໆ ແລະ ງ່າຍດາຍ
- ຮູ້ເລົ່າຄືນເລື່ອງທີ່ເລົ່າໄດ້ເຫັນ( ສໍາລັບການເລົ່າເລື່ອງຄືນເລື່ອງທີ່ໄດ້ເຫັນນີ້ບໍ່ໄດ້ ຕ້ອງຈັດແບ່ງອອກສອນຕ່າງຫາກພິເສດ ພວກເຮົາພຽງແຕ່ສັບຊ້ອນເຂົ້າໃນບົດສອນຕົວຈິງໃນແຕ່ລະບົດເທົ່ານັ້ນ)

➢ ລະດັບຄາດໝາຍໃນການສັງສັງເກດ ແລະ ແອບເວົ້າທີ່ກ່ຽວພັນກັບການດໍາລົງຊີວິດຢູ່ໃນສັງຄົມທົ່ວໄປມີ:

- ການພົວພັນລະຫວ່າງຄົນກັບຄົນຄື: ການເອີ້ນຊື່ ( ພໍ່, ແມ່, ເອື້ອຍ, ອ້າຍ, ນ້ອງ, ຄູ...) ເຄື່ອງຂອງຮັບໃຊ້ໃນການດໍາລົງຊີວິດປະຈໍາວັນເວົ້າທົ່ວໄປມີ: ເຮືອນຢູ່, ທາງ, ລົດຂົນສົ່ງ ແລະ ອື່ນໆ
- ການເຄື່ອນໄຫວ ແລະ ວິຊາການໆເພີ່ມພູນຜະລິດຜົນ, ຊີວິດການເປັນຢູ່, ການເຮັດດິນຈີ່, ການຕໍ່າແຜນ, ການຕົ້ມນໍ້າອ້ອຍ ແລະ ອື່ນໆ
- ການຈັດຕັ້ງຢູ່ໃນສັງຄົມ: ໂຮງໝໍ, ໂຮງຮຽນ, ທະຫານ, ຕໍາຫຼວດປ້ອງກັນຄວາມສະຫງົບ ແລະ ອື່ນໆ
- ການສັງເກດແອບເວົ້າກ່ຽວກັບທໍາມະຊາດມີ: ຮູບຮ່າງຂອງຄົນ,
- ຮູບຮ່າງຂອງສັດ: ສັດທີ່ລ້ຽງຢູ່ເຮືອນ, ສັດປ່າ ແລະ ສັດນໍ້າ
- ຜັກຊະນິດຕ່າງໆ: ຕົ້ນໄມ້, ດອກໄມ້ ແລະ ໝາກໄມ້

ຢູ່ໃນໂຄງການສອນຕ້ອງມີ 2 ບັນຫາ ສັງເກດ ແລະ ແອບເວົ້າ, ໃນບັນຫານີ້ໃຫ້ຖືເປັນບັນຫາທີ່ສໍາຄັນຄຽງຄູ່ກັນໄປ, ຖ້າຂາດບັນຫາໃດ ບັນຫາໜຶ່ງກໍ່ຈະເປັນຜົນສະທ້ອນອັນດີເຖິງການສົ່ງຄວາມຮູ້ໃຫ້ພວກຫຼານ ພ້ອມກັນນັ້ນໃນເວລາສອນກໍ່ຕ້ອງແຕ່ງບົດສອນໃຫ້ລະອຽດ ແລະ ວາງລະດັບຄາດໝາຍໃຫ້ຈະແຈ້ງ ແລະ ກໍ່ຕ້ອງເອົາໃຈໃສ່ເຖິງບັນຫາສັງເກດ ແລະ ແອບເວົ້າໃຫ້ໄປປຄຽງຄູ່ກັນສະເໝີ

ຍ້ອນພວກຫຼານອະນຸບານມີຄວາມຈື່ໄວແຕ່ພັດລືມໄວ ສະນັ້ນ ຢາກໃຫ້ຄວາມຮູ້ຝັງເລິກຢູ່ມັນສະໝອງຂອງພວກຫຼານນັ້ນໄດ້, ນອກຈາກໂມງຮຽນຢູ່ໃນຫ້ອງແລ້ວ ຍັງຕ້ອງສົມທົບກັບສິດສອນໄປພ້ອມກັບໂມງການເຄື່ອນໄຫວຂອງວຽກງານອື່ນໆ, ອັນນີ້ກໍ່ເພື່ອເຮັດໃຫ້ພວກຫຼານກຳບົດຮຽນໄດ້ແໜ້ນຕື່ມ

## 4. ຂັ້ນຕອນຂອງການສອນສັງເກດ-ສົນທະນາ

ເພື່ອໃຫ້ການຈັດກິດຈະກຳການຮຽນ-ການສອນໄດ້ຢ່າງເໝາະສົມ ແລະ ສອດຄ່ອງຕາມໄວອາຍຸຂອງເດັກໃນຊັ້ນອະນຸບານການຈັດກິດຈະກຳນັ້ນ ຄວນໃຊ້ເວລາປະມານ 15- 35 ນາທີ ຖ້າດົນເກີນໄປ ຫຼື ກິດຈະກຳບໍ່ເປັນໜ້າສົນໃຈເດັກຈະເບື່ອ ເຮັດໃຫ້ບໍ່ຢາກຮຽນນຳຄູການຈັດການຮຽນ-ການສອນຄູຄວນມີວິທີຈັດດັ່ງນີ້:

1) ສັງເກດ ແລະ ສົນທະນາ.
2) ເວົ້າເປັນຄຳ ຫຼື ຄຳສັບຕາມວັດຖຸຈິງ, ຮູບພາບ.
3) ອ່ານພະຍັນຊະນະລາວ ກ-ຮ.
4) ຮ້ອງເພງ.
5) ເລົ່າຄຳຄ່ອງ.
6) ຮຽນເປັນກຸ່ມໃຫ່ຍ ແລະ ກຸ່ມນ້ອຍ.
7) ຮຽນຮູ້ພື້ນຖານຄະນິດສາດ.
8) ການສາທິດ ແລະ ການທົດລອງ.
9) ເຝິກປະຕິບັດ.
10) ຟັງການເລົ່າເລື່ອງ.

### 1.1 ສຳລັບອະນຸບານ 1

#### 1) ຂັ້ນນຳເຂົ້າສູ່ບົດຮຽນ

ເປັນການກຽມເດັກໃຫ້ພ້ອມ ແລະ ກະຕຸ້ນໃຫ້ເດັກສົນໃຈ ທີ່ຈະຮ່ວມກິດຈະກຳຕໍ່ໄປກິດຈະກຳທີ່ໃຊ້ອາດຈະເປັນການຮ້ອງເພງ, ເລົ່າຄຳຄ່ອງ, ສົນທະນາ ແລະ ເບິ່ງຮູບພາບເຊິ່ງຈະໃຊ້ໄລຍະເວລາສັ້ນ.

#### 2) ຂັ້ນຕອນສອນ

ການຈັດກິດຈະກຳຕ້ອງການໃຫ້ເດັກໄດ້ຮັບຄວາມຮູ້ ແລະ ປະສົບການດ້ວຍກິດຈະກຳຫຼາຍຮູບແບບເຊັ່ນ:

- ການສົນທະນາຖາມ-ຕອບ, ອະທິບາຍເປັນການໂອ້ລົມ ລະຫວ່າງຄູກັບເດັກ ຫຼື ເດັກກັບເດັກ ເຊິ່ງສື່ທີ່ໃຊ້ອາດຈະເປັນວັດຖຸຈິງ ແລະ ຮູບພາບ.
- ການເລົ່າບດເລື່ອງຄູຈະເລົ່າເລື່ອງທີ່ກ່ຽວກັບເລື່ອງລາວທີ່ຄູຕ້ອງການໃຫ້ເດັກເຂົ້າໃຈຫຼື ປະຕິບັດຕາມສ່ວນຫຼາຍຈະເປັນການປູກຝັງ ຫຼື ການສອນທີ່ເປັນເລື່ອງນາມມະທຳ ວິທີການນີ້ຈະຊ່ວຍໃຫ້ເດັກເຂົ້າໃຈໄດ້ດີຂຶ້ນເພາະເດັກໃນໄວນີ້ຈະມັກຟັງບົດເລື່ອງ ແລະ ຮຽນແບບຕົວລະຄອນໃນບົດດເລື່ອງ ໃນການເລົ່າເລື່ອງຄູອາດໃຊ້ຮູບພາບ, ຫຸ່ນ ຫຼື ສ່ວນຕ່າງໆຂອງຮ່າງກາຍປະກອບ.
- ການສາທິດປະຕິບັດການທົດລອງເປັນການສອນທີ່ເຮັດໃຫ້ເດັກໄດ້ຮັບປະສົບການທາງກົງເພາະໄດ້ທົດລອງປະຕິບັດດ້ວຍຕົນເອງໄດ້ສັງເກດເຫັນການປ່ຽນແປງໃນສິ່ງທີ່ຕົນເອງໄດ້ທົດລອງເປັນການເຝິກທັກສະການສັງເກດ, ການແກ້ບັນຫາ ແລະ ສົ່ງເສີມໃຫ້ເດັກມີຄວາມຍາກຮູ້ຍາກເຫັນ ແລະ ຄົ້ນພົບຄວາມຮູ້ດ້ວຍຕົນເອງ.

- ການຈັດທັດສະນະສຶກສາເປັນການສອນທີ່ໃຫ້ເດັກໄດ້ຮັບປະສົບການໂດຍກົງອີຮູບແບບໜຶ່ງອາດຈະເປັນການພາເດັກໄປຮຽນນອກຫ້ອງຮຽນຮອບບໍລິເວນໂຮງຮຽນນອກໂຮງຮຽນ ແຕ່ຄູຈະຕ້ອງເບິ່ງແຍງເອົາໃຈໃສ່ໃນເລື່ອງຄວາມປອດໄພ.

- ການສອນເພງ ແມ່ນສິ່ງເສີມໃຫ້ເດັກມີຄວາມເບີກບານມ່ວນຊື່ນຊ່ວຍພັດທະນາທາງດ້ານພາສາໃນການຈື່ຈຳ, ຄົ້ນຄິດພ້ອມທັງເຄື່ອນໄຫວຕາມຈັງຫວະເພງ ແລະ ຊ່ວຍໃຫ້ເດັກເຂົ້າໃຈເນື້ອໃນການຮຽນຮູ້ດີຂຶ້ນ.

- ການສອນຄຳຄ່ອງແມ່ນເພື່ອພັດທະນາທາງດ້ານພາສາ, ເດັກຈະມ່ວນຊື່ນກັບການຟັງ, ເວົ້າຄຳຄ່ອງ.

- ການປະກອບອາຫານໃນບາງໜ່ວຍທີ່ສອນກ່ຽວກັບຜັກ, ໝາກໄມ້, ຊີ້ນຕ່າງໆ ຄູອາດຈະໃຫ້ເດັກມີສ່ວນຮ່ວມໃນການປະກອບອາຫານ ຈະເຮັດໃຫ້ເດັກໄດ້ຮັບປະສົບການຈາກການສັງເກດ ການປ່ຽນແປງຂອງອາຫານດິບ, ສຸກ, ຮັບຮູ້ລົດຊາດ ແລະ ກິ່ນຂອງອາຫານ, ຮຽນຮູ້ດ້ວຍການໃຊ້ປະສາດສຳຜັດຕ່າງໆ ແລະ ຮຽນຮູ້ດ້ວຍການເຮັດວຽກກັບຄົນອື່ນ. ໃນຂະນະທີ່ເດັກເຮັດກິດຈະກຳ ຫຼື ຫຼັງຈາກເຮັດກິດຈະກຳສຳເລັດແລ້ວ ຄູຄວນໃຊ້ຄຳຖາມປາຍເປີດໃນລັກສະນະຕ່າງໆທີ່ຊວນໃຫ້ເດັກຄິດບໍ່ຄວນໃຊ້ຄຳຖາມປາຍປິດ ແມ່ນ, ບໍ່ແມ່ນ ຫຼື ມີຄຳຕອບໃຫ້ເດັກເລືອກ, ຄູຄວນໃຫ້ເວລາເດັກໄດ້ຄິດໃນການຕອບ.

**3) ຂັ້ນຕອນສະຫຼຸບບົດຮຽນ**

ເປັນການສະຫຼຸບສິ່ງຕ່າງໆທີ່ຮຽນມາໃຫ້ເດັກໄດ້ເຂົ້າໃຈດີຂຶ້ນເຊິ່ງຄູອາດຈະໃຊ້ຄຳຖາມ, ເພງ, ຄຳຄ່ອງ, ເກມໃນການສະຫຼຸບບົດຮຽນ.

- ການວັດ ແລະ ປະເມີນ

ເປັນການຕິດຕາມຜົນການຮຽນຮູ້ຂອງເດັກກ່ຽວກັບສິ່ງທີ່ຮຽນມາຈາກການຈັດກິດຈະກຳຕ່າງໆເຊັ່ນ: ກິດຈະກຳສອນເພງ, ຄຳຄ່ອງ, ບົດເລື່ອງ, ສັງເກດສົນທະນາ, ເກມ, ເວົ້າເປັນຄຳສັບ ອ່ານອອກສຽງພະຍັນຊະນະເຊິ່ງຈະໄດ້ໃຊ້ວິທີສັງເກດດັ່ງນີ້:

1) ການຕອບຄຳຖາມ, ສົນທະນາຖາມ-ຕອບ ແລະ ສະແດງຂໍ້ຄິດເຫັນ.
2) ການຟັງ, ການເວົ້າ, ການອ່ານ.
3) ຄວາມສົນໃຈໃນການເຂົ້າຮ່ວມກິດຈະກຳ.

**1.2 ສຳລັບອະນຸບານ 2**

**1) ຂັ້ນນຳເຂົ້າສູ່ບົດຮຽນ**

ແມ່ນຂັ້ນຕອນຄວາມສົນໃຈຂອງເດັກເຂົ້າສູ່ການຮຽນ ເພື່ອໃຫ້ເດັກມີຄວາມພ້ອມຢາກຮຽນຮູ້ໃນການນຳເຂົ້າສູ່ບົດຮຽນໂດຍຮ້ອງເພງ, ເລົ່າຄຳຄ່ອງ, ສົນທະນາ, ເບິ່ງຮູບພາບ ແລະ ຫຼິ້ນເກມ ເຊິ່ງຈະໃຊ້ໄລຍະເວລາສັ້ນໆ 2-3 ນາທີ ຄູຄວນນຳໃຊ້ໃຫ້ແທດເໝາະກັບສຳອາຍຸຂອງເດັກ ແລະ ກ່ຽວຂ້ອ ງກັບກິດຈະກຳທີ່ນຳມາຮຽນ.

**2) ຂັ້ນດຳເນີນການສອນ**

ແມ່ນຂັ້ນຕອນສິ່ງຄວາມຮູ້ທາງດ້ານເນື້ອໃນທີ່ຄູນຳເອົາບັນດາຫົວຂໍ້ເນື້ອໃນຈາກແຜນການຈັດປະສົບການມາຈັດກິດຈະກຳ ໂດຍນຳໃຊ້ວິທີການສັງເກດຮູບພາບ, ຕົວອັກສອນ, ຕົວເລກ, ເຄື່ອງຈິງ ຫຼື ນຳໃຊ້ເພງ, ຄຳຄ່ອງ, ນິທານ ແລະ ອື່ນໆ. ເພື່ອໃຫ້ເດັກໄດ້ຄົ້ນຄິດ ແລະ ມີສ່ວນຮ່ວມກັບຄູໃນເວລາປະຕິບັດກິດຈະກຳ.

### 3) ຂັ້ນຕອນສະຫຼຸບບົດຮຽນ

ແມ່ນການສະຫຼຸບສິ່ງຕ່າງໆທີ່ໄດ້ຮຽນຜ່ານມາ ໂດຍການເອົາເນື້ອໃນຕົ້ນຕໍຂອງສິ່ງທີ່ຮຽນມາເວົ້າໂດຍຫຍໍ້ ເຊິ່ງຄູອາດຈະໃຊ້ຄຳຖາມ, ເພງ, ຄຳຄ່ອງ ແລະ ເກມໃນການສະຫຼຸບບົດຮຽນ.

➢ **ສິ່ງທີ່ຄວນເອົາໃຈໃສ່.**

ການຈັດກິດຈະກຳການຮຽນ-ການສອນກິດຈະກຳວົງມົນ ຄູຄວນຈັດການສອນແບບບູລະນາການໂດຍໃຫ້ເດັກຮຽນຮູ້ດ້ວຍຕົນເອງຕາມວິທີການສອນດັ່ງນີ້:

- ນຳໃຊ້ຮູບພາບ, ເຄື່ອງຕົວຈິງ ແລະ ເຄື່ອງຈຳລອງເພື່ອໃຫ້ເດັກສັງເກດ.
- ສົນທະນາ, ຖາມ-ຕອບ, ອະທິບາຍລະຫວ່າງຄູກັບເດັກ ຫຼື ເດັກກັບເດັກ.
- ທັດສະນະສຶກສານອກຫ້ອງຮຽນ: ບໍລິເວນເດີ່ນໂຮງຮຽນ, ນອກຫ້ອງຮຽນ: ສະຖານສຳຄັນເຊັ່ນ: ວັດ, ສວນສາທາລະນະ...
- ການສາທິດ ຫຼື ການທົດລອງເດັກໄດ້ສັງເກດ, ສຳຜັດ, ບອກສິ່ງຕ່າງໆທີ່ເກີດຂຶ້ນດ້ວຍຕົນເອງ.

### 1.3 ສຳລັບອະນຸບານ 3

ການຈັດກິດຈະກຳວົງມົນໃນຊັ້ນອະນຸບານ 3 ໃຊ້ເວລາປະມານ 30-35 ນາທີ ເຊິ່ງປະກອບດ້ວຍການສອນພາສາລາວ, ຄະນິດສາດ ແລະ ວິທະຍາສາດ. ຄູຄວນຈັດກິດຈະກຳການຮຽນ-ການສອນເດັກໃນຮູບແບບບູລະນາການໂດຍຈັດການສອນຜ່ານບົດເພງ, ຄຳຄ່ອງ, ນິທານ, ການສັງເກດຮູບພາບ ແລະ ບັດຄຳ. ເພື່ອໃຫ້ເດັກນ້ອຍໄດ້ຮັບຄວາມຮູ້, ຄວາມສາມາດນຳໄປໃຊ້ໃນຊີວິດປະຈຳວັນ, ຄູຕ້ອງຄຳນຶງເຖິງລະດັບຄວາມຮູ້ຄວາມສາມາດຂອງເດັກນ້ອຍ. ໃນກໍລະນີເດັກນ້ອຍມີຄວາມຕ້ອງການພິເສດຄູຄວນພິຈາລະນາການນຳໃຊ້ກິດຈະກຳໃຫ້ເໝາະສົມ. ຕົວຢ່າງ ເດັກນ້ອຍທີ່ສາຍຕາສັ້ນຄວນໃຫ້ເດັກນ້ອຍຄົນອື່ນຊ່ວຍເຫຼືອ ຫຼື ວ່າໃຫ້ເດັກນ້ອຍຄົນນັ້ນມານັ່ງໃກ້ໆ, ອຸປະກອນທີ່ນຳມາໃຊ້ຄວນໃຫ້ໃຫຍ່, ຊັດເຈນ ແລະ ໃຫ້ເດັກໄດ້ສຳພັດຕົວຈິງ. ການສອນກິດຈະກຳວົງມົນມີຂັ້ນຕອນປະຕິບັດດັ່ງນີ້:

### 1) ຂັ້ນຕອນທີ 1 ການກະກຽມ

- ກະກຽມບົດສອນ ຫຼື ແຜນປະສົບການໃຫ້ແທດເໝາະກັບຫົວຂໍ້ ແລະ ກິດຈະກຳທີ່ຈະສອນ.
- ກະກຽມສະຖານທີ່ທີ່ຈະປະຕິບັດເຊັ່ນ: ຫ້ອງຮຽນ ຫຼື ສະຖານທີ່ຫ້ອງຮຽນ.
- ກະກຽມອຸປະກອນໃຫ້ພຽງພໍກັບຈຳນວນເດັກທີ່ມີໃນຫ້ອງຮຽນ.

### 2) ຂັ້ນຕອນທີ່ 2 ດຳເນີນການສອນ

- ອະທິບາຍ, ແນະນຳ ແລະ ສາທິດວິທີປະຕິບັດກິດຈະກຳໃຫ້ເດັກເຂົ້າໃຈກ່ອນຈິ່ງໃຫ້ເດັກລົງມືປະຕິບັດ.
- ນຳໃຊ້ເຄື່ອງຕົວຈິງ, ເຄື່ອງຈຳລອງ ຫຼື ຮູບພາບເພື່ອໃຫ້ເດັກນ້ອຍສັງເກດ.
- ໃຫ້ເດັກນ້ອຍໄດ້ສາທິດ ຫຼື ທົດລອງດ້ວຍຕົນເອງ ເພື່ອໃຫ້ເດັກນ້ອຍໄດ້ສັງເກດເຫັນການປ່ຽນແປງໃນສິ່ງທີ່ຕົນໄດ້ປະຕິບັດ.
- ບາງຄັ້ງອາດຈະພາເດັກນ້ອຍໄປຮຽນນອກຫ້ອງຮອບບໍລິເວນໂຮງຮຽນ ຫຼື ທັດສະນະສຶກສານອກສະຖານທີ ແຕ່ຄູຕ້ອງເບິ່ງແຍງເອົາໃຈໃສ່ຄວາມປອດໄພເປັນສິ່ງສຳຄັນ.

- ສົນທະນາ, ຖາມ-ຕອບ ແລະ ອະທິບາຍລະຫວ່າງຄູກັບເດັກນ້ອຍ ຫຼື ເດັກນ້ອຍກັບເດັກນ້ອຍກ່ຽວກັບເນື້ອໃນຂອງບົດຮຽນທີ່ໄດ້ຮຽນ.

3) **ຂັ້ນຕອນທີ 3 ການສະຫຼຸບບົດສອນ**

- ເມື່ອສຳເລັດການຮຽນທຸກເທື່ອຄູຄວນສະຫຼຸບເນື້ອໃນບົດຮຽນໃຫ້ເດັກຟັງ.
- ຍ້ອງຍໍຊົມເຊີຍເດັກທີ່ປະຕິບັດກິດຈະກຳໄດ້ດີ ແລະ ແນະນຳເດັກທີ່ເຮັດບໍ່ທັນໄດ້ດີ.
- ສຶກສາອົບຮົມເດັກທຸກໆຄັ້ງຫຼັງຈາກປະຕິບັດກິດຈະກຳສຳເລັດແລ້ວ.

➢ **ສິ່ງທີ່ຄວນເອົາໃຈໃສ່**

1) ໃນການຮຽນແຕ່ລະຄັ້ງຄູຕ້ອງສັງເກດພຶດຕິກຳການຮຽນຂອງເດັກນ້ອຍທຸກຄົນ, ບັນທຶກ ແລະ ແນະນຳຫາທາງແກ້ໄຂເພື່ອໃຫ້ເດັກນ້ອຍຮຽນໄດ້ຢ່າງຖືກຕ້ອງ ແລະ ມ່ວນຊື່ນ.

2) ໃນເວລາເຮັດການທົດລອງແຕ່ລະຄັ້ງ ຄູຕ້ອງຢູ່ກັບເດັກນ້ອຍຕະຫຼອດເວລາບໍ່ຄວນປ່ອຍໃຫ້ເດັກນ້ອຍປະຕິບັດການທົດລອງຕາມລຳພັງເນັ້ນເລື່ອງການຮຽນຮ່ວມກັນ ແລະ ຄວາມປອດໄພເປັນສິ່ງສຳຄັນ.

3) ໃນເວລາປະຕິບັດກິດຈະກຳຄູຄວນໃຫ້ຄວາມຊ່ວຍເຫຼືອ, ໃກ້ຊິດແນະນຳ ແລະ ໃຫ້ຄວາມອົບອຸ່ນກັບເດັກນ້ອຍທີ່ມີບັນຫາທາງດ້ານສຸຂະພາບພິເສດຕ່າງໆດ້ວຍຄວາມເອົາໃຈໃສ່.

4) ການໄປທັດສະນະສຶກສານອກສະຖານທີ່ຄວນເປັນບ່ອນທີ່ປອດໄພທີ່ສຸດ.

## 5. ວິທີການສອນສັງເກດສົນທະນາໃຫ້ແກ່ເດັກກ່ອນໄວຮຽນ

ເປັນເຕັກນິກການສອນທີ່ດຶງດູດຄວາມສົນໃຈຂອງເດັກ ແລະ ເຮັດໃຫ້ການຈັດການຮຽນ-ການສອນມີບັນຍາກາດທີ່ດີລະຫວ່າງເດັກ ແລະ ຄູ. ສະນັ້ນ ສື່ ແລະ ອຸປະກອນຕ່າງໆໃນການສອນສັງເກດ ແລະ ສົນທະນາປະກອບມີຮູບພາບ, ບັດຮູບ, ບັດເລກສິ່ງຂອງເຄື່ອງໃຊ້, ວັດຖຸຕົວຈິງທີ່ກ່ຽວຂ້ອງກັບເນື້ອໃນປະສົບການຮຽນຮູ້. ດັ່ງນັ້ນ, ການສອນສັງເກດ ແລະ ສົນທະນາມີລາຍລະອຽດດັ່ງນີ້:

**ກ.1 ເວົ້າເປັນຄຳຕາມຮູບພາບ**

1) ເບິ່ງ ແລະ ສັງເກດຮູບພາບ

2) ຕັ້ງຄຳຖາມກ່ຽວກັບຮູບພາບທີ່ເບິ່ງ: ນີ້ແມ່ນຮູບຫຍັງ?

3) ບອກຊື່ຮູບພາບ, ເວົ້າ

4) ເຝິກບອກຊື່ຮູບພາບດັ່ງກ່າວ

5) ເວົ້າຄືນ ຊື່ຮູບພາບໃຫ້ຈະແຈ້ງ ແລະ ຖືກຕ້ອງ

**ກ.2 ສັງເກດ ແລະ ສົນທະນາດ້ວຍການນຳໃຊ້ວັດຖຸຕົວຈິງ**

1) ສັງເກດວັດຖຸ ແລະ ສິ່ງຂອງຕົວຈິງ

2) ສາຜັດກັບວັດຖຸຕົວຈິງ, ບອກຊື່, ສີ, ລັກສະນະ, ຮູບຮ່າງ, ລົດຊາດ ແລະ ກິ່ນ

3) ຖາມ, ຕອບກ່ຽວກັບວັດຖຸຕົວຈິງທີ່ໄດ້ສາຜັດ ( ຕົວຢ່າງ ໝາກກ້ຽງ: ນີ້ແມ່ນໝາກຫຍັງ? ສີຫຍັງ? ແນວໜ່ວຍແນວໃດ? ລົດຊາດສົ້ມຫຼືຫວານ? ) ໃຫ້ເດັກຕອບ

4) ໃຫ້ເດັກເວົ້າຄືນສິ່ງທີ່ເຂົາໄດ້ສາຜັດ

### ກ.3 ສັງເກດ ແລະ ສົນທະນາດ້ວຍການນຳໃຊ້ບັດເລກ

1) ເບິ່ງແລະ ສັງເກດຮູບພາບຕົວເລກ

2) ບອກຊື່ຕົວເລກ ແລະ ສາຜັດກັບຕົວເລກ

3) ເວົ້າຄືນຊື່ຕົວເລກໃຫ້ຈະແຈ້ງ ແລະ ຖືກຕ້ອງ.

### ກ.4 ອ່ານອອກສຽງພະຍັນຊະນະລາວ

1) ສັງເກດພະຍັນຊະນະ

2) ອ່ານອອກສຽງພະຍັນຊະນະໃຫ້ຊັດເຈນ

3) ເວົ້າຊື່ພະຍັນຊະນະ, ສະຫຼະ ແລະ ອອກສຽງ

4) ຖາມ-ຕອບ, ພະຍັນຊະນະທີ່ເຫັນແມ່ນຕົວຫຍັງ? ອ່ານອອກສຽງແນວໃດ

5) ເວົ້າຄືນພະຍັນຊະນະໃຫ້ຖືກຕ້ອງ

### ກ.5 ສັງເກດ ແລະ ສົນທະນາກ່ຽວກັບການເວົ້າເປັນຄຳຕາມຮູບພາບ

1) ສັງເກດຮູບພາບ ແລະ ບັດຄຳ

2) ເວົ້າສື່ຮູບພາບ ແລະ ເວົ້າເປັນຄຳ

3) ຖາມ-ຕອບ: ນີ້ແມ່ນຮູບຫຍັງ? ເວົ້າເປັນຄຳວ່າແນວໃດ?

4) ເວົ້າຄືນຮູບພາບ

5) ເວົ້າເປັນຄຳໃຫ້ຖືກຕ້ອງ

➢ ຂໍ້ແນະນຳໃນການສອນສັງເກດ ແລະ ສົນທະນາ ຄູຄວນໃຊ້ເຕັກນິກການສອນ ໂດຍເອົາເດັກເປັນໃຈກາງ ການສອນແບບນີ້ ເດັກຈະມີບົດບາດໃນການຮຽນຮູ້ ໂດຍມີໂອກາດເຂົ້າຮ່ວມກິດຈະກຳການຮຽນຮູ້ຫຼາຍເທົ່າທີ່ຈະຫຼາຍໄດ້. ເຊິ່ງກິດຈະກຳທີ່ເດັກເຂົ້າຮ່ວມເປັນການທີ່ເດັກໄດ້ຮຽນຮູ້ ແລ້ວສະແດງອອກເປັນພຶດຕິກຳທີ່ຄູໄດ້ກຳນົດໃນຈຸດປະສົງ ສະນັ້ນ, ການນຳໃຊ້ເຕັນນິກການສອນ ໂດຍເອົາເດັກເປັນໃຈກາງຈະເຮັດໃຫ້ເດັກໄດ້ຮັບການສົ່ງເສີມເສີມພັດທະນາທັງ 4 ດ້ານ.

- ຂອບເຂດການສອນສັງເກດ ແລະ ສົນທະນາກ່ຽວກັບການເວົ້າເປັນຄຳຕາມຮູບພາບ, ອ່ານອອກສຽງພະຍັນຊະນະຕາມຮູບພາບໃນໜ່ວຍການສອນ 1-8 ປະກອບມີລາຍລະອຽດດັ່ງນີ້

1) ໜ່ວຍການສອນຕົນຕົວຂອງເຮົາ

| ຫົວຂໍ້ສັງເກດ ແລະ ສົນທະນາ | ຫົວຂໍ່ເວົ້າເປັນຄຳຕາມຮູບພາບ ແລະ ອ່ານອອກສຽງພະຍັນຊະນະ |
| --- | --- |
| - ຊື່, ເພດຂອງຕົນເອງ ແລະ ສ່ວນຕ່າງໆຂອງຮ່າງກາຍ<br>- ໜ້າທີ່ຂອງຫູ, ຕາ, ດັງ, ປາກ, ແຂ້ວ, ຕີນ, ມື<br>- ການກິນອາຫານ, ເຄື່ອງດື່ມທີ່ມີປະໂຫຍດ<br>- ການລ້າງມືຕາມ 7 ຂັ້ນຕອນ<br>- ສັງເກດຮູບພາບເດັກນ້ອຍນອນ, ສົນທະນາກ່ຽວກັບການນອນ ແລະ ການພັກຜ່ອນ<br>- ການຂັບຖ່າຍ | - ເວົ້າເປັນຄຳຕາມຮູບພາບ: ຫົວ, ມື, ຂາ<br>- ເວົ້າເປັນຄຳຕາມຮູບພາບ: ຜົມ, ຫູ, ປາກ<br>- ເວົ້າເປັນຄຳຕາມຮູບພາບ: ຕາ, ດັງ, ບ່າ<br>- ເວົ້າເປັນຄຳຕາມຮູບພາບ: ແອວ, ກະໂພກ, ຕີນ<br>- ອ່ານອອກສຽງພະຍັນຊະນະ: ດ, ຕ, ບ |

| | |
|---|---|
| - ເຝິກປະຕິບັດການເຂົ້າຫ້ອງນໍ້າຖືກເວລາທີ່ກຳນົດ<br>- ຮູບຮ່າງລັກສະນະຂອງແຕ່ລະຄົນ, ການອະນາໄມຜົມ, ຫູ<br>- ສາທິດການຮັກສາຄວາມສະອາດຕາ, ດັງ ແລະ ເຝິກຕົວຈິງ<br>- ເຝິກປະຕິບັດຕົວຈິງການຖູແຂ້ວ<br>- ຮັກສາຄວາມສາອາດ, ປ້ອງກັນ ປາກ ແລະ ແຂ້ວ<br>- ການຮັກສາຄວາມສາມອາດ, ປ້ອງກັນຕີນ ມື, ການນຸ່ງເຄື່ອງ.<br>- ເຝິກການນຸ່ງເຄື່ອງ<br>- ການແຕ່ງຕົວ<br>- ສາທິດການທາແປ້ງ, ການກິນ, ການດື່ມ<br>- ເຝິກປະຕິບັດຕົວຈິງ<br>- ເຝິກປະຕິບັດການຈັບບ່ວງ, ການຈັບຈອກ ແລະ ວາງຖ້ວຍ<br>- ການມ້ຽນເຄື່ອງນອນ ແລະ ເຄື່ອງໃຊ້<br>- ເຝິກປະຕິບັດຕົວຈິງ. | |

2) ໜ່ວຍການສອນຄອບຄົວຂອງຂ້ອຍ

| ຫົວຂໍ້ສັງເກດ ແລະ ສົນທະນາ | ຫົວຂໍ້ເວົ້າເປັນຄຳຕາມຮູບພາບ ແລະ ອ່ານອອກສຽງພະຍັນຊະນະ |
|---|---|
| - ສະມາຊິກໃນຄອບຄົວຂອງຕົນເອງ, ອາຊີບຂອງບຸກຄົນໃນຄອບຄົວ<br>- ໜ້າທີ່ຮັບຜິດຊອບຂອງບຸກຄົນໃນຄອບຄົວ<br>- ສົນທະນາເນື້ອຝໃນຂອງບົດເລື່ອງ ແລະ ການຊ່ວຍເຫຼືອກັນໃນຄອບຄົວ<br>- ສັງເກດຮູບພາບ ແລະ ສົນທະນາກ່ຽວກັບຄວາມອົບອຸ່ນໃນຄອບຄົວ<br>- ຊື່ຫ້ອງຕ່າງໆໃນເຮືອນ<br>- ຊື່ເຄື່ອງໃຊ້ໃນຫ້ອງນອນ, ຫ້ອງຮັບແຂກ, ຫ້ອງນໍ້າ, ຫ້ອງຄົວ ແລະ ການບົວລະບັດຮັກສາ<br>- ການປະຕິບັດລະບຽບຢູ່ໃນເຮືອນຄົວ<br>- ເຝິກປະຕິບັດດ້ວຍການນົບພໍ່ ແມ່<br>- ການສະແດງຄວາມນັບຖືຕໍ່ສະມາຊິກໃນຄອບຄົວ<br>- ເຝິກປະຕິບັດຕົວຈິງການຖາມສະບາຍດີ, ຂອບໃຈ, ນົບໄຫວ້ ແລະ ການຍ່າງກາຍຜູ້ໃຫ່ຍ<br>- ການປະຕິບັດໜ້າທີຂອງຕົນເອງຢູ່ໃນຂອບຄົວ<br>- ເຝິກປະຕິບັດຕົວຈິງການມ້ຽນເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ໃຫ້ຖືກບ່ອນ | - ເວົ້າເປັນຄຳຕາມຮູບພາບ: ພໍ່, ແມ່, ເອື້ອຍ<br>- ເວົ້າເປັນຄຳຕາມຮູບພາບ: ອ້າຍ, ນ້ອງ<br>- ເວົ້າເປັນຄຳຕາມຮູບພາບ: ໝອນ<br>- ເວົ້າເປັນຄຳຕາມຮູບພາບ: ສະບູ, ໂອ<br>- ເວົ້າເປັນຄຳຕາມຮູບພາບ: ຖ້ວຍ, ບ່ວງ<br>- ເວົ້າເປັນຄຳຕາມຮູບພາບ: ມຸ້ງ ແລະ ຜ້າຫົ່ມ<br>- ອ່ານອອກສຽງພະຍັນຊະນະ: ອ<br>- ອ່ານອອກສຽງພະຍັນຊະນະ: ມ<br>- ອ່ານອອກສຽງພະຍັນຊະນະ: ນ |

| |
|---|
| - ບອກການຮັກສາເຄື່ອງຫຼິ້ນ, ເຄື່ອງໃຊ້ໃນເຮືອນຄົວ<br>- ມາລະຍາດໃນການເວົ້າ, ຟັງ ແລະ ເບິ່ງໂທລະພາບ<br>- ການເຝິກຕົວຈິງເວົ້າ, ຟັງ ເບິ່ງ<br>- ມາລະຍາດໃນການກິນ, ການດື່ມ, ການນັ່ງ, ການຍ່າງ<br>- ມາລະຍາດໃນການນົບຜູ້ໃຫຍ່<br>- ເຝິກປະຕິບັດຕົວຈິງການນົບ ແລະ ການໄຫວ້ພະ<br>- ມາລະຍາດໃນການໄປ-ມາ<br>- ເຝິກປະຕິບັດຕົວຈິງການຂໍອະນຸຍາດໃນການໄປມາ | |

3) ໜ່ວຍການສອນໂຮງຮຽນຂອງຂ້ອຍ

| ຫົວຂໍ້ສັງເກດ ແລະ ສົນທະນາ | ຫົວຂໍ້ເວົ້າເປັນຄຳຕາມຮູບພາບ ແລະ ອ່ານອອກສຽງພະຍັນຊະນະ |
|---|---|
| - ຊື່ຄູປະຈຳຫ້ອງ, ຫ້ອງຂ້າງຄຽງ, ແມ່ລ້ຽງ<br>- ໜ້າທີ່ຄູປະຈຳຫ້ອງ, ຫ້ອງຂ້າງຄຽງ, ແມ່ລ້ຽງ<br>- ຊື່ ແລະ ໜ້າທີ່ຮັບຜິດຊອບຜູ້ອຳນວຍການໂຮງຮຽນ<br>- ການປະຕິບັດຕົນຕໍ່ບຸກຄົນທີ່ສຳຄັນໃນໂຮງຮຽນ<br>- ການເຮັດກິດຈະກຳຮ່ວມກັບຜູ້ອື່ນ<br>- ຊື່ໝູ່ເພື່ອນໃນຫ້ອງຮຽນ, ຊື່ໂຮງຮຽນ, ຊື່ຫ້ອງຮຽນ<br>- ສັນຍາລັກຕ່າງໆໃນໂຮງຮຽນ<br>- ຊື່ເຄື່ອງຫຼິ້ນໃນເດີ່ນ<br>- ການຮັກສາເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ໃນຫ້ອງຮຽນ<br>- ການຮັກສາຄວາມສະອາດໃນໂຮງຮຽນ<br>- ເຝິກປະຕິບັດການເກັບຂີ້ເຫຍື້ອໃນບໍລິເວນໂຮງຮຽນໃສ່ກະຕ່າ<br>- ສັງເກດຝາຫ້ອງຮຽນ, ພື້ນຫ້ອງຮຽນ ແລະ ສົນທະນາກ່ຽວກັບຄວາມສະອາດໃນຫ້ອງຮຽນ<br>- ການຮັກສາຫ້ອງນ້ຳໃຫ້ສະອາດ<br>- ໂຕະ, ຕັ່ງໃຫ້ສະອາດ<br>- ການປະຕິບັດຕົນໃນການມາໂຮງຮຽນ<br>- ການປະຕິບັດຕົນໃນເວລາຮຽນ<br>- ການປະຕິບັດຕົນໃນເວລາກິນອາຫານ ແລະ ໃນເວລານອນ<br>- ສັງເກດ, ສຳຜັດເຄື່ອງຫຼິ້ນ<br>- ບອກການປະຕິບັດຕົນໃນການຫຼິ້ນ | - ອ່ານອອກສຽງພະຍັນຊະນະ ຄ.<br>- ເວົ້າເປັນຄຳຕາມຮູບພາບ: ຄູ<br>- ເວົ້າເປັນຄຳຕາມຮູບພາບ: ໂຕະ, ຕັ່ງ, ປຶ້ມ<br>- ອ່ານອອກສຽງພະຍັນຊະນະ ກ<br>- ເວົ້າເປັນຄຳຕາມຮູບພາບ: ຫ້ອງນ້ຳ, ຫ້ອງຮຽນ, ກະດານ<br>- ເວົ້າເປັນຄຳຕາມຮູບພາບ: ພະລູດ, ໂອນຊາ ແລະ ກະຕ່າ<br>- ອ່ານອອກສຽງພະຍັນຊະນະ ຝ<br>- ການເວົ້າເປັນຄຳຕາມຮູບພາບ: ຝາ<br>- ການເວົ້າເປັນຄຳຕາມຮູບພາບ: ນັກຮຽນ |

4) ໜ່ວຍການສອນບ້ານຂອງຂ້ອຍ

| ຫົວຂໍ້ສັງເກດ ແລະ ສົນທະນາ | ຫົວຂໍ້ເວົ້າເປັນຄຳຕາມຮູບພາບ ແລະ ອ່ານອອກສຽງພະຍັນຊະນະ |
|---|---|
| - ຊື່ບ້ານຂອງຕົນເອງ<br>- ບຸກຄົນພາຍໃນບ້ານ<br>- ຊື່ສະຖານທີ່ສຳຄັນພາຍໃນບ້ານ<br>- ຟັງເລົ່າເລື່ອງ ລຸງປະທານບ້ານ ແລະ ສົນທະນາການປະຕິບັດຕົນຕໍ່ບຸກຄົນພາຍໃນບ້ານ<br>- ການຮັກສາຄວາມສະອາດພາຍໃນບ້ານ<br>- ໜ້າທີ່ຂອງນາຍຄູ, ທ່ານໝໍ, ຊາວນາ, ຊາວສວນ, ພໍ່ຄ້າ, ແມ່ຄ້າ, ທະຫານ ແລະ ຕຳຫຼວດ.<br>- ການນຸ່ງຖືຂອງແມ່ຍິງ ແລະ ຜູ້ຊາຍ<br>- ຊື່ເຄື່ອງດົນຕີພື້ນເມືອງ<br>- ສິລະປະວັນນະຄະດີທ້ອງຖິ່ນ<br>- ຊື່ແບບຫຼິ້ນພື້ນເມືອງ ແລະ ຊື່ເຄື່ອງຫັດຖະກຳ<br>- ສັງເກດອາຫານຕົວຈິງ ແລະ ສົນທະນາຊື່ຂອງອາຫານທີ່ມີໃນທ້ອງຖິ່ນ<br>- ສົນທະນາກ່ຽວກັບວັນຄູ, ວັນຊາດ, ວັນແມ່ຍິງສາກົນ<br>- ຟັງເລົ່າເລື່ອງ ນາງປານີຜູ້ໜ້າຮັກ ແລະ ສົນທະນາການສະເຫຼີມສະຫຼອງບຸນປີໃໝ່ລາວ<br>- ການສະເຫຼີມສະຫຼອງວັນເດັກ | - ອ່ານອອກສຽງພະຍັນຊະນະ ວ, ຊ.<br>- ເວົ້າເປັນຄຳຕາມຮູບພາບ: ວັດ, ສຸກສາລາ<br>- ເວົ້າເປັນຄຳຕາມຮູບພາບ: ຊາວນາ, ທະຫານ, ຕຳຫຼວດ<br>- ເວົ້າເປັນຄຳຕາມຮູບພາບ: ແຄນ, ກອງ<br>- ເວົ້າເປັນຄຳ: ແກງ<br>- ເວົ້າເປັນຄຳຕາມຮູບພາບ: ທຸງຊາດ<br>- ອ່ານອອກສຽງພະຍັນຊະນະ ທ. ຊ, ວ<br>- ເວົ້າເປັນຄຳຕາມຮູບພາບ: ຜ້າບ່ຽງ<br>- ເວົ້າເປັນຄຳຕາມຮູບພາບ: ຕົບເຂົ້າ<br>- ເວົ້າເປັນຄຳຕາມຮູບພາບ: ແມ່ຄ້າ |

5) ໜ່ວຍການສອນທຳມະຊາດອ້ອມຕົວເຮົາ

| ຫົວຂໍ້ສັງເກດ ແລະ ສົນທະນາ | ຫົວຂໍ້ເວົ້າເປັນຄຳຕາມຮູບພາບ ແລະ ອ່ານອອກສຽງພະຍັນຊະນະ |
|---|---|
| - ສິ່ງທີ່ມີຊີວິດ<br>- ການຈະເລີນເຕີບໃຫ່ຍຂອງຄົນຕາມອາຍຸ<br>- ສັດ, ຜັກ, ແມງໄມ້<br>- ສິ່ງທີ່ບໍ່ມີຊີວິດ, ນໍ້າ, ຊາຍ, ດິນ, ຫີນ<br>- ສະພາບອາກາດໃນປະເທດລາວ<br>- ການປະຕິບັດຕົນໃນເວລາຝົນຕົກ, ໃນຍາມຮ້ອນ, ແລະ ໃນຍາມໜາວ<br>- ປະໂຫຍດຂອງຝົນ ແລະ ຜົນສະທ້ອນຂອງຜົນ<br>- ປະໂຫຍດຂອງແສງແດດ ແລະ ຜົນສະທ້ອນຂອງແສງແດດ | - ເວົ້າເປັນຄຳຕາມຮູບພາບ: ຄົນ, ໝູ, ຍຸງ, ປາ, ຜັກ, ເດືອນ, ດາວ, ຕາເວັນ<br>- ເວົ້າເປັນຄຳຕາມຮູບພາບ: ຫີນ, ຊາຍ<br>- ອ່ານອອກສຽງພະຍັນຊະນະ ປ, ຍ, ຫ<br>- ເວົ້າຊື່ວັນໃນ 1 ອາທິດ<br>- ເວົ້າເປັນຄຳຕາມຮູບພາບ: ປາ, ຍຸງ, ແມງມຸມ |

| | |
|---|---|
| - ກາງເວັນ ແລະ ກາງຄືນ<br>- ກິດຈະວັດປະຈຳວັນ | |

6) ໜ່ວຍການສອນສິ່ງແວດລ້ອມອ້ອມຕົວເຮົາ

| ຫົວຂໍ້ສັງເກດ ແລະ ສົນທະນາ | ຫົວຂໍ້ເວົ້າເປັນຄຳຕາມຮູບພາບ ແລະ ອ່ານອອກສຽງພະຍັນຊະນະ |
|---|---|
| - ສິ່ງແວດລ້ອມທາງທຳມະຊາດ<br>- ພືດ, ສັດ, ນໍ້າ, ອາກາດ, ດິນ, ຫີນ, ນໍ້າ<br>- ການບົວລະບັດຮັກສາພືດ, ສັດ, ນໍ້າ, ອາກາດ, ດິນ, ຫີນ, ຊາຍ<br>- ສິ່ງແວດລ້ອມທີ່ຄົນເຮົາສ້າງຂຶ້ນ<br>- ປະໂຫຍດຂອງວັດ, ສວນສາທາລະນະ, ຕະຫຼາດ, ຖະໜົນ ແລະ ໂຮງໝໍ<br>- ການປົກປັກຮັກສາວັດ, ສວນສາທາລະນະ, ຕະຫຼາດ, ຖະໜົນ, ໂຮງໝໍ | - ເວົ້າເປັນຄຳຕາມຮູບພາບ: ງົວ, ຂຽດ<br>- ອ່ານອອກສຽງພະຍັນຊະນະ ຂ, ງ, ຈ, ຖ<br>- ເວົ້າເປັນຄຳຕາມຮູບພາບ: ໄກ່, ໝູ, ຊ້າງ<br>- ເວົ້າເປັນຄຳຕາມຮູບພາບ: ໄຫ, ຕະຫຼາດ, ດອກໄມ້<br>- ເວົ້າເປັນຄຳຕາມຮູບພາບ: ຈົວ, ຖະໜົນ<br>- ເວົ້າເປັນຄຳຕາມຮູບພາບ: ເສືອ, ກົບ |

7) ໜ່ວຍການສອນຄົມມະນາຄົມ ແລະ ການສື່ສານ

| ຫົວຂໍ້ສັງເກດ ແລະ ສົນທະນາ | ຫົວຂໍ້ເວົ້າເປັນຄຳຕາມຮູບພາບ ແລະ ອ່ານອອກສຽງພະຍັນຊະນະ |
|---|---|
| - ປະເພດຂອງການເດີນທາງ<br>- ການເດີນທາງງບົກ, ທາງນໍ້າ, ທາງອາກາດ ແລະ ພາຫະນະທີ່ໃຊ້ໃນການເດີນທາງບົກ, ນໍ້າ, ອາກາດ<br>- ໄພອຳນາດ ແລະ ຍ່າງຂ້າມຖະທີ່ປອດໄພ<br>- ການປະຕິບັດຕົນໃນການເດີນທາງບົກ( ເວລາຂີ່ລົດໃຫ່ຍ ແລະ ລົດຈັກ<br>- ທາງນໍ້າ ( ເວລາຂີ່ເຮືອ )<br>- ທາງອາກາດ( ເວລາຂີ່ເຮືອບິນ )<br>- ການປະຕິບັດຕົນຕາມໄພອຳນາດ<br>- ການສົນທະນາລະຫວ່າງ 2 ຄົນລົມກັນ<br>- ການສື່ສານດ້ວຍການເບິ່ງ ແລະ ຟັງ<br>- ການເບິ່ງໂທລະພາບ ແລະ ຟັງວິທະຍຸ<br>- ການອ່ານປຶ້ມ<br>- ເຝິກປະຕິບັດການເປີດປຶ້ມນິທານ, ໜັງສືພິມ<br>- ອ່ານຮູບພາບຕາມລຳດັບ | - ອ່ານອອກສຽງພະຍັນຊະນະ ຣ.<br>- ເວົ້າເປັນຄຳຕາມຮູບພາບ: ເຮືອ<br>- ເວົ້າເປັນຄຳຕາມຮູບພາບວົງມົນ: ສີແດງ, ສີເຫຼືອງ, ສີຂຽວ<br>- ອ່ານອອກສຽງພະຍັນຊະນະ ລ, ຟ<br>- ເວົ້າເປັນຄຳຕາມຮູບພາບ: ລົດ, ໄພອຳນາດ, ຢຸດ<br>- ເວົ້າເປັນຄຳຕາມຮູບພາບ: ປຶ້ມນິທານ, ໜັງສືພິມ<br>- ເວົ້າເປັນຄຳຕາມຮູບພາບ: ໂທລະສັບ, ໂທລະພາບ, ວິທະຍຸ |

| |
|---|---|
| - ການເວົ້າ, ການຟັງໂທລະສັບ<br>- ສື່ສານດ້ວຍການຂຽນ ແລະ ການແຕ້ມຮູບ<br>- ມາລະຍາດໃນການສົນທະນາກັບຜູ້ອື່ນ<br>- ການໃຊ້ໂທລະສັບ<br>- ການຂີດຂຽນ ແລະ ແຕ້ມ<br>- ບອກການປະຕິບັດຕົນໃນການຫຼິ້ນ | |

8) ໜ່ວຍການສອນສິ່ງຕ່າງໆອ້ອມຕົວເຮົາ

| ຫົວຂໍ້ສັງເກດ ແລະ ສົນທະນາ | ຫົວຂໍ້ເວົ້າເປັນຄໍາຕາມຮູບພາບ ແລະ ອ່ານອອກສຽງພະຍັນຊະນະ |
|---|---|
| - ເຄື່ອງໃຊ້ໃນຫ້ອງຮຽນ<br>- ຮູບຮ່າງຂອງເຄື່ອງໃຊ້ໃນຫ້ອງຮຽນ<br>- ເຄື່ອງຫຼິ້ນ, ເຄື່ອງນຸ່ງ, ອາຫານ, ເຄື່ອງດື່ມ<br>- ລັກສະນະຂອງເນື້ອຜ້າ<br>- ສຽງຂອງສິ່ງຕ່າງໆ<br>- ກິ່ນ, ລົດຊາດຂອງອາຫານ ແລະ ເຄື່ອງດື່ມ<br>- ປະໂຫຍດ ແລະ ສິ່ງທີ່ຄວນລະວັງເຄື່ອງໃຊ້ໃນຫ້ອງຮຽນ, ເຄື່ອງນຸ່ງ, ເຄື່ອງຫຼິ້ນ<br>- ປະໂຫຍດ ແລະ ສິ່ງທີ່ຄວນລະວັງຂອງອາຫານ, ເຄື່ອງດື່ມ<br>- ການບົວລະບັດ ແລະ ຮັກສາເຄື່ອງໃຊ້ໃນຫ້ອງຮຽນ, ເຄື່ອງນຸ່ງ<br>- ການເກັບມ້ຽນ, ບົວລະບັດຮັກສາເຄື່ອງຫຼິ້ນ<br>- ຮັກສາອາຫານ ແລະ ເຄື່ອງດື່ມ | - ເວົ້າເປັນຄໍາຕາມຮູບພາບ: ຕຸກກະຕາ, ໝາກບານ, ໄມ້ບ໊ອກ<br>- ເວົ້າເປັນຄໍາຕາມຮູບພາບ: ນ້ຳດື່ມ, ຊີ້ນ, ໄຂ່<br>- ອ່ານອອກສຽງພະຍັນຊະນະ ກ<br>- ເວົ້າເປັນຄໍາ: ເຜັດ<br>- ເວົ້າເປັນຄໍາຕາມຮູບພາບ: ສິ້ນ, ພັບເຄື່ອງ , ຣາຄາ<br>- ອ່ານອອກສຽງພະຍັນຊະນະ ຜ, ສ, ພ, ຣ<br>- ເວົ້າເປັນຄໍາຕາມຮູບພາບ: ເຂົ້າ, ເຂົ້າໜົມ |

**ການສອນພາສາລາວ ສໍາລັບອະນຸບານ 2**

**ຂ. 1 ການເວົ້າ**

1) ເວົ້າເປັນຄາຕາມຮູບພາບ

- ຕິດຮູບພາບ ຫຼື ຍົກບັດຄາ
- ເວົ້າເທື່ອລະຄາ
- ເວົ້າຄາສັບຕາມຮູບພາບ

2) ການເວົ້າອອກສຽງພະຍັນຊະນະຕົ້ນຕາມຄາສັບ

- ຕິດຄາສັບ ຫຼື ຍົກຄາສັບ
- ເວົ້າຄໍາສັບຕາມຮູບພາບ
- ເວົ້າອອກສຽງພະຍັນຊະນະຕົ້ນຕາມຄາສັບ

3) ການເວົ້າຄາທີ່ອອກສຽງພະຍັນຊະນະຕົວ ດ

- ຕິດ ຫຼື ຍົກບັດພະຍັນຊະນະ ແລະ ຄາ
- ເວົ້າເທື່ອລະຄາ
- ເວົ້າຄາຮວມກັນ

4) ການເວົ້າເປັນປະໂຫຍກສັ້ນ

- ເວົ້າເທື່ອລະຄາ
- ເວົ້າຮ່ວມກັນເປັນປະໂຫຍກສັ້ນ

**ຂ.2 ການສັງເກດ**

1) ການສັງເກດຮູບຮ່າງລັກສະນະຕົວພະຍັນຊະນະຄ້າຍຄືກັນມີຮູບພາບ ແລະ ບໍ່ມີຮູບພາບ

- ຕິດ ຫຼື ຍົກ ບັດພະຍັນຊະນະທີ່ຄ້າຍຄືກັນມີຮູບພາບ ແລະ ບໍ່ມີຮູບພາບ
- ສັງເກດຮູບຮ່າງລັກສະນະຕົວພະຍັນຊະນະຄ້າຍຄືກັນມີຮູບພາບ ແລະ ບໍ່ມີຮູບພາບ
- ບອກຈຸດທີ່ຄ້າຍຄືກັນຂອງພະຍັນຊະນະ

2) ການສັງເກດພະຍັນຊະນະທີ່ມີລັກຊະນະຕ່າງກັນມີຮູບພາບ ແລະ ບໍ່ມີຮູບພາບ

- ຕິດ ຫຼື ຍົກບັດພະຍັນຊະນະທີ່ມີລັກລັກນະຕ່າງກັນມີຮູບພາບ ແລະ ບໍ່ມີຮູບພາບ
- ສັງເກດຮູບຮ່າງລັກສະນະຕົວພະຍັນຊະນະທີ່ມີລັກສະນະແຕກຕ່າງກັນ
- ບອກຈຸດທີ່ຕ່າງກັນຂອງພະຍັນຊະນະ

**ຂ.3 ການອ່ານ**

1) ການອ່ານອອກສຽງພະຍັນຊະນະປະກອບຮູບພາບ ກ-ຮ ຕາມລໍາດັບໃນແຜນຕົວອັກສອນ

- ຕິດບັດພະຍັນຊະນະປະກອບຮູບພາບ ກ-ຮ ໃນແຜນຕົວອັກສອນ
- ອ່ານອອກສຽງພະຍັນຊະນະປະກອບຮູບພາບ ກ-ຮ ຕາມລໍາດັບໃນແຜນຕົວອັກສອນ
- ບອກຕົວພະຍັນຊະນະ ກ-ຮ
- ອ່ານອອກສຽງພະຍັນຊະນະບາງຕົວ
- ບອກພະຍັນຊະນະບາງຕົວ

2) ການອ່ານອອກສຽງພະຍັນຊະນະສຽງຕໍ່າ, ສຽງກາງ, ສຽງສູງ

- ການອ່ານອອກສຽງພະຍັນຊະນະຕໍ່າ
  - ອ່ານອອກສຽງພະຍັນຊະນະສຽງຕໍ່າເທື່ອລະຕົວຕາມລໍາດັບ: ຄ, ງ, ຊ, ຍ, ກ, ນ, ພ, ຟ, ມ, ຣ, ຫ, ລ, ວ, ຮ
  - ອ່ານອອກສຽງພະຍັນຊະນະສຽງຕໍ່າບາງຕົວ
  - ບອກຕົວພະຍັນຊະນະສຽງຕໍ່າຕາ ລໍາດັບ
  - ບອກຕົວພະຍັນຊະນະສຽງຕໍ່າບາງຕົວ

  ຕົວຢ່າງ: ບອກພະຍັນຊະນະສຽງຕໍ່ບາງຕົວ: ຄ, ຊ, ມ ໄດ້ຢ່າງຖືກຕ້ອງ
- ການອ່ານອອກສຽງ
- ພະຍັນຊະນະສຽງກາງ ( ກ, ຈ, ດ, ຕ, ບ, ປ, ຢ, ອ )
- ການອ່ານອອກສຽງພະຍັນຊະນະສຽງສູງ ( ຂ, ສ, ຖ, ຜ, ຝ, ຫ )

3)ການອ່ານອອກສຽງຄຳທີ່ມີພະຍັນຊະນະປະສົມກັບສະຫຼະ xາ

- ຕິດ ຫຼື ຍົກບັດພະຍັນຊະນະ ປ ແລະ ສະຫຼະ xາ
- ອ່ານສະຫຼະ
- ອ່ານພະຍັນຊະນະ ແລະ ສະຫຼະປະສົມກັນ

4) ການອ່ານອອກສຽງເປັນຄາ ແລະ ປະສົມກັບສະຫຼະ xາ ທີ່ບໍ່ມີວັນນະຍຸດ ແລະ ມີວັນນະຍຸດ x່, x້

- ຕິດ ຫຼື ຍົກບັດຄຳທີ່ປະສົມສະຫຼະ xາ ທີ່ມີວັນນະຍຸດ ແລະ ບໍ່ມີວັນນະຍຸດ
- ອ່ານອອກສຽງຄາທີ່ບໍ່ມີວັນນະຍຸດ
- ອ່ານອອກສຽງຄາທີ່ມີວັນນະຍຸດ
- ອ່ານອອກສຽງຄາຮ່ວມກັນທີ່ມີວັນນະຍຸດ ແລະ ບໍ່ມີວັນນະຍຸດ

ຕົວຢ່າງ: ປາ, ປ່າ, ປ້າ

5) ອ່ານອອກສຽງເປັນຄຳທີ່ປະສົມສະຫຼະ xິ ປະກອບຮູບພາບ ແລະ ບໍ່ມີຮູບພາບ

- ຕິດ ຫຼື ຍົກບັດຄາທີ່ປະສົມສະຫຼະ xິ ທີ່ມີຮູບພາບ ແລະ ບໍ່ມີຮູບພາບ
- ອ່ານອອກສຽງພະຍັນຊະນະ
- ອ່ານອອກສຽງສະຫຼະ
- ອ່ານອອກສຽງຄາທີ່ປະສົມກັບສະຫຼະ xິ ທີ່ມີຮູບພາບ ແລະ ບໍ່ມີຮູບພາບ

ຕົວຢ່າງ: ຄຳປະສົມສະຫຼະ xິ ທີ່ມີຮູບພາບ   ຄຳປະສົມສະຫຼະ xິ ທີ່ບໍ່ມີຮູບພາບ

6) ອ່ານພະຍັນຊະນະປະສົມກັບສະຫຼະ xິ ທີ່ມີວັນນະຍຸດ x່, x້

- ຕິດ ຫຼື ຍົກບັດພະຍັນຊະນະທີ່ປະສົມສະຫຼະ xິ ທີ່ມີຮູບພາບ ແລະ ບໍ່ມີຮູບພາບ
- ອ່ານອອກສຽງຄຳທີ່ບໍ່ມີວັນນະຍຸດ
- ອ່ານອອກສຽງຄາທີ່ມີວັນນະຍຸດ x່
- ອ່ານອອກສຽງຄາມີວັນນະຍຸດ x້
- ອ່ານອອກສຽງຄາຕາມລາດັບເປັນສຽງດົນຕີ

ຕົວຢ່າງ: ກິ ກິ່ ກິ້

7) ອ່ານພະຍັນຊະນະປະສົມກັບສະຫຼະ xິ ເປັນຄາ

- ຕິດ ຫຼື ຍົກບັດພະຍັນຊະນະທີ່ປະສົມສະຫຼະ xິ ເປັນຄາ
- ອ່ານພະຍັນຊະນະ
- ອ່ານສະຫຼະ
- ອ່ານຄາ

ຕົວຢ່າງ: ດ xິ ດິ

8) ການອ່ານອອກສຽງເປັນຄາທີ່ປະສົມກັບສະຫຼະ xິ ປະກອບຮູບພາບ ແລະ ບໍ່ມີຮູບພາບ

- ຕິດ ຫຼື ຍົກບັດຄາທີ່ປະສົມສະຫຼະ xິ ທີ່ມີຮູບພາບ ແລະ ບໍ່ມີຮູບພາບ
- ອ່ານອອກສຽງພະຍັນຊະນະ
- ອ່ານອອກສຽງສະຫຼະ

- ອ່ານອອກສຽງຄຳທີ່ປະສົມກັບສະຫຼະ ີ ທີ່ມີຮູບພາບ ແລະ ບໍ່ມີຮູບພາບ

ຕົວຢ່າງ: ຄຳປະສົມສະຫຼະ ີ ທີ່ມີຮູບພາບ ຄຳປະສົມສະຫຼະ ີ ທີ່ບໍ່ມີຮູບພາບ

9) ການອ່ານອອກສຽງສະຫຼະ ີ ເປັນສຽງດົນຕີຕາມ ວັນນະຍຸດ ່, ້

- ຕິດ ຫຼື ຍົກບັດພະຍັນຊະນະທີ່ປະສົມສະຫຼະ ີ ທີ່ມີຮູບພາບ ແລະ ບໍ່ມີຮູບພາບ
- ອ່ານອອກສຽງຄຳ ບໍ່ມີວັນນະຍຸດ
- ອ່ານອອກສຽງຄຳມີ ວັນນະຍຸດ ່
- ອ່ານອອກສຽງຄຳມີ ວັນນະຍຸດ ້
- ອ່ານອອກສຽງຄຳຕາມລຳດັບເປັນສຽງດົນຕີ

## 6. ວິທີການປະເມີນການສອນສັງເກດ-ສົນທະນາ

### 6.1 ປະເມີນຜົນຕາມແຜນຈັດປະສົບການ

| ເນື້ອໃນສັງເກດ | ຜູ້ສັງເກດບັນທຶກ | ປັບປຸງ |
|---|---|---|
| 1. ມີບົດສອນ ແລະ ອຸປະກອນຄົບຖ້ວນ<br>- ສອນໜ່ວຍໃດ?, ກິດຈະກຳຫຍັງ | | |
| 2. ການເຕົ້າໂຮມນັກຮຽນເພື່ອເຂົ້າຮຽນ | | |
| 3. ການນຳເຂົ້າສູ່ບົດຮຽນ | | |
| 4. ການດຳເນີນການສອນໃຊ້ຫຼາຍຮູບແບບ<br>- ການນຳໃຊ້ຄຳຖາມໃຫ້ເດັກໄດ້ຄົ້ນຄິດ<br>- ການນຳໃຊ້ອຸປະກອນປະກອບການສັງສອນຢ່າງເໝາະສົມ<br>- ການແກ້ໄຂສະຖານະການເວລາກຳລັງສອນ<br>- ການໃຫ້ກຳລັງໃຈເດັກ...<br>- ການໃຊ້ຄຳເວົ້າ ແລະ ກິລິຍາທ່າທາງທີ່ສະແດງອອກຕໍ່ເດັກຢ່າງນິ້ມນວນອ່ອນຫວານ | | |
| 5. ການສະຫຼຸບບົດຮຽນດ້ວຍຫຼາຍຮູບແບບເຊັ່ນ: ສະຫຼຸບດ້ວຍເພງ, ຄຳຄ່ອງ | | |
| 6. ການສຶກສາແນວຄິດເດັກກ່ຽວກັບເລື່ອງທີ່ຮຽນ | | |

## 7. ລົງສັງເກດການສອນສັງເກດສົນທະນາໃນໂຮງຮຽນລ້ຽງເດັກ-ອະນຸບານ

### 7.1 ລົງສັງເກດການສອນ

- ➢ ກິດຈະກຳ: ການລົງສັງເກດຕົວຈິງໃນໂຮງຮຽນລ້ຽງເດັກອະນຸບານວິທີສອນສັງເກດສົນທະນາ ( ພາສາລາວ)
- ➢ ອະປະກອນ: ປຶ້ມຂຽນ, ບິກ, ແບບຟອມການລົງສັງເກດ
- ➢ ວິທີດຳເນີນກິດຈະກຳ:

- ແບ່ງນັກຮຽນຄູອອກເປັນກຸ່ມ ເພື່ອເຂົ້າສັງເກດການສອນໃນແຕ່ລະຫ້ອງ
- ແນະນຳນັກຮຽນຄູຈົດ, ບັນທຶກ ແລະ ສອບຖາມຂໍ້ສົນໃຈຕ່າງໆ ນຳຄູສອນອະນຸບານເພື່ອຄວາມເຂົ້າໃຈ
- ຫຼັງຈາກສຳເລັດການສອນແລ້ວໃຫ້ນັກຮຽນທຸກຄົນກັບຄືນຫ້ອງຮຽນ

- ແຕ່ລະກຸ່ມຄົ້ນຄວ້າສົນທະນາເຖິງບົດຮຽນທີ່ໄດ້ຮັບຈາກການລົງໄປສັງເກດ
- ຕາງໜ້າແຕ່ລະກຸ່ມນຳສະເໜີຜົນການຄົ້ນຄ້ວາຂອງກຸ່ມ
- ແຕ່ລະກຸ່ມປະກອບຄຳຄິດຄຳເຫັນຕື່ມ
- ສະຫຼຸບແລະແນະນຳເພີ່ມເຕີມອີກ.

**7.2 ບັນທຶກ, ສະຫຼຸບ ແລະ ລາຍງານ**

- **ສະຫຼຸບ**

ແມ່ນການຫຍໍ້ເອົາສະເພາະໃຈຄວາມທີ່ສຳຄັນຂອງເລື່ອງທີ່ເປັນປະເດັນເຊັ່ນ: ສະຫຼຸບເລື່ອງທີ່ເຮົາໄດ້ເຫັນໄດ້ສັງເກດ, ໄດ້ປະສົບພົບພໍ້ດ້ວຍຕົນເອງ, ໄດ້ປະຕິບັດ ແລ້ວມາລາຍງານໃຫ້ພາກສວນທີ່ກ່ຽວຂ້ອງຮັບຊາບ.

- **ການບັນທຶກ**

ບັນທຶກໝາຍເຖິງ ຂໍ້ຄວາມທີ່ຈົດໄວ້ເພື່ອຊ່ວຍຄວາມຊົງຈຳ ຫຼື ເພື່ອເປັນຫຼັກຖານຂໍ້ຄວາມທີ່ນຳມາຈົດຫຍໍ້ໆໄວ້ເພື່ອໃຫ້ຮູ້ເລື່ອງເດີມ

**ຄວາມສຳຄັນຂອງການບັນທຶກ**

ການບັນທຶກໃນເລື່ອງຕ່າງໆ ມີຄວາມສຳຄັນດັ່ງນີ້:

1. ເປັນຫຼັກຖານໃນການດຳເນີນງານທີ່ປະຕິບັດງານຢູ່ ຫຼື ເປັນຫຼັກຖານໃນງານທີ່ກຳລັງດຳເນີນການສຳເລັດຮຽບຮ້ອຍແລ້ວ.
2. ເປັນເຄື່ອງມືຊີ້ສະຖານະພາບໃນການເຮັດວຽກໃຫ້ຮູ້ເຖິງຜົນງານທີ່ປະຕິບັດມາແລ້ວວ່າເປັນແນວໃດ
3. ເປັນແນວທາງໃນການປະຕິບັດງານໃນອະນາຄົດ ເມື່ອໄດ້ມີການຈົດບັນທຶກໄວ້ຢ່າງຖືກຕ້ອງ ສາມາດນຳມາປຽບທຽບຂໍ້ດີ ແລະ ຂໍ້ເສຍຂອງງານເດີມ ແລະ ນຳເອົາສວນທີ່ບໍ່ດີມາປັບປຸງແກ້ໄຂໃຫ້ໄດ້ດີຍິ່ງຂຶ້ນ.
4. ເປັນຫຼັກຖານໃນການກວດສອບຄວາມຖືກຕ້ອງຂອງການປະຕິບັດວຽກໄດ້
5. ເປັນຂໍ້ມູນສຳລັບອ້າງອີງໃນການຂຽນທາງວິຊາການ.

- **ລາຍງານຜົນການສັງເກດ**

ການລາຍງານໝາຍເຖິງ ການນຳສະເໜີຂໍ້ມູນຈາກການສັງເກດ, ສຶກສາ, ຄົ້ນຄ້ວາ, ທົດລອງ ເຊິ່ງໄດ້ຮັບການມອບໝາຍໃຫ້ປະຕິບັດງານຕໍ່ຜູ້ທີ່ກ່ຽວຂ້ອງຢ່າງມີລະບົບ.

## 8. ວິທີການແຕ່ງບົດສອນ

### 1. ຄວາມໝາຍ ແລະ ຄວາມສຳຄັນຂອງການແຕ່ງບົດສອນ

**ຄວາມໝາຍ ແລະ ຄວາມສຳຄັນຂອງການແຕ່ງບົດສອນ:** ການແຕ່ງບົດສອນ ໝາຍເຖິງສິ່ງທີ່ຄູໄດ້ຄົ້ນຄິດ, ໄດ້ວາງແຜນໄວ້ກ່ອນການດຳເນີນການສອນບົດໃດໜຶ່ງ. ບົດສອນແມ່ນເອກະສານທີ່ຈຳເປັນ ແລະ ຂາດບໍ່ໄດ້ສຳລັບຄູຜູ້ໜຶ່ງບໍ່ວ່າຄູຜູ້ນັ້ນຈະສອນໃນຊັ້ນໃດ, ສຳລັບຄູອະນຸບານແລ້ວກໍ່ຍິ່ງຈຳເປັນຕ້ອງໄດ້ແຕ່ງບົດສອນຂອງຕົນໃຫ້ລະອຽດ, ເພາະເດັກມີຄວາມສົນໃຈ, ໃສ່ໃຈສັ້ນ, ຄວາມເຂົ້າໃຈທາງດ້ານພາສາຍັງຈຳກັດ, ສະນັ້ນຄູຈຳເປັນຕ້ອງຊອກຫາຮູ້ຫຼາຍວິທີ, ຊອກຫາອຸປະກອນທີ່ເປັນໜ້າຈັບໃຈ, ພ້ອມທັງບັນດາຄຳເວົ້າຕ່າງໆກໍ່ຕ້ອງມີການເລືອກເຟັ້ນໄວ້ລ່ວງໜ້າເພື່ອໃຫ້ເດັກຮັບເອົາຄວາມຮູ້ໄດ້ງ່າຍ ແລະ ນຳໄປໃຊ້ໃນຊີວິດປະຈຳວັນໄດ້. ຄູຜູ້ທີ່ສອນໄດ້ດີ, ຈັບອົກຈັບໃຈຍ່ອມມີການແຕ່ງບົດສອນໄວ້ກ່ອນລ່ວງໜ້າສະເໝີ.

ບົດສອນທີ່ຄູໄວ້ສອນປະຈຳວັນມີຂໍ້ກຳນົດໃນຈຸດປະສົງ, ເນື້ອໃນຕົ້ນຕໍ, ສື່ການຮຽນ-ການສອນ, ກິດຈະກຳການຮຽນ-ການສອນ ແລະ ການວັດປະເມີນຜົນ ເຊິ່ງໃນແຕ່ລະວັນມີກິດຈະກຳການຫຼິ້ນ ແລະຮຽນ 6 ກິດຈະກຳ: ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ຫຼິ້ນຕາມມຸມ, ຫຼິ້ນກາງແຈ້ງ ແລະເກມການສຶກສາ. ສິ່ງດັ່ງກ່າວໄດ້ກຳນົດໄວ້ໃນປຶ້ມແຜນຈັດປະສົບການ ຂອງແຕ່ລະໜ່ວຍການສອນກຳນົດໄວ້ເປັນອັນລວມ, ຄູສອນແຕ່ລະໂຮງຮຽນຈຳເປັນຕ້ອງໄດ້ແຕ່ງບົດສອນໃຫ້ມີຄວາມແທດເໝາະກັບສະພາບຕົວຈິງ ແລະ ຈຸດພິເສດຂອງເດັກທີ່ຕົນສອນ ເປັນຕົ້ນແມ່ນການຈັດຫາ ຫຼື ກະກຽມສື່ການຮຽນ-ການສອນ ແລະ ການຕິດຕາມຊ່ວຍເຫຼືອເດັກຕາມຈຸດປະສົງທີ່ກຳນົດໄວ້, ນອກນັ້ນບົດສອນຍັງເປັນເອກະສານທາງການທີ່ຢັ້ງຢືນຜົນງານການສອນ.

**2. ປະໂຫຍດຂອງການແຕ່ງບົດສອນ.**

ການແຕ່ງບົດສອນມີປະໂຫຍດສຳລັບຜູ້ສອນ ແລະ ຜູ້ຮຽນດັ່ງນີ້:

ກ. ຕໍ່ຜູ້ສອນ

- ສ້າງຄວາມໝັ້ນໃຈໃຫ້ຕົນເອງໃນເວລາຂຶ້ນຫ້ອງ, ບໍ່ເກີເຂີນ, ສາມາດແກ້ໄຂໃນສະຖານະການທີ່ເກີດຂຶ້ນໃນເວລາສອນໄດ້.
- ເຮັດໃຫ້ການສອນຂອງຄູເປັນລະບົບບໍ່ສັບໜ້າສັບຫຼັງ ຫຼື ຂາດວັກຂາດຕອນ
- ເຮັດໃຫ້ຄູກຳໄດ້ຈຸດບົກຜ່ອງຂອງຕົນເອງທີ່ຄວນປັບປຸງໃນການສອນແຕ່ລະເທື່ອ, ຄູຈະຮູ້ວ່າການທີ່ເດັກບໍ່ສົນໃຈເນື້ອໃນຂອງບົດຮຽນມັນບໍ່ໄດ້ຂຶ້ນກັບຕົວຂອງເດັກສະເໝີໄປ, ບາງຄັ້ງມັນກໍ່ຂຶ້ນກັບຕົວຂອງຄູເອງທີ່ບໍ່ມີພົກໄຫວໃນການສິ່ງຄວາມຮູ້.
- ຊ່ວຍໃຫ້ຄູສອນໄດ້ທ່ວງທັນ, ຖືກຕ້ອງຕາມຫຼັກສູດທີ່ກະຊວງສຶກສາວາງອອກຢ່າງມີຫົວຄິດປະດິດສ້າງ.
- ເຮັດໃຫ້ຫ້ອງຮຽນມີບັນຍາກາດ, ເດັກຢູ່ໃນລະບຽບໂດຍທີ່ຄູບໍ່ຕ້ອງບັງຄັບ.
- ໃນກໍລະນີຜູ້ສອນຕິດຂັດກໍ່ໃຫ້ຜູ້ອື່ນສອນປ່ຽນແທນໄດ້.
- ເພື່ອໃຫ້ຄູປະເມີນຜົນການຮຽນຂອງເດັກໄດ້ຖືກຕ້ອງຕາມຈຸດປະສົງ.
- ໃຊ້ເປັນຫຼັກຖານອ້າງອີງໃນການປະຕິບັດໜ້າທີ່ຂອງຄູ.
- ໃຊ້ເປັນຜົນງານທາງດ້ານວິຊາການ ສະແດງຄວາມຊຳນິຊຳນານຂອງຄູຜູ້ສອນເອງ.

ຂ. ຕໍ່ຜູ້ຮຽນ

- ຊ່ວຍໃຫ້ເດັກໄດ້ຮ່ວມກິດຈະກຳຢ່າງຫ້າວຫັນດ້ວຍຄວາມເບີກບານມ່ວນຊື່ນ ບໍ່ຮູ້ສຶກເບື່ອໜ່າຍ ແລະ ບໍ່ຮູ້ອິດເມື່ອຍໃນເວລາຮຽນ.
- ຊ່ວຍໃຫ້ເດັກໄດ້ມີໂອກາດໄດ້ພັດທະນາການຄົ້ນຄິດ ແລະ ມີຄວາມຄິດສ້າງສັນ, ບໍ່ແມ່ນແຕ່ເປັນຜູ້ຮັບແຕ່ຢ່າງດຽວ.

**3. ຫຼັກການແຕ່ງບົດສອນ.**

ການແຕ່ງບົດສອນຄວນປະຕິບັດຕາມຫຼັກການແຕ່ງບົດສອນ, ນຳໃຊ້ຫົວຂໍ້ໃນແຜນການສອນປະຈຳອາທິດ ແລະ ແຜນການສອນໃນປຶ້ມແຜນຈັດປະສົບການເພື່ອແຕ່ງເປັນບົດສອນຂອງຕົນເອງ. ສະນັ້ນ ບົດສອນຂອງຄູແຕ່ລະຄົນຈະມີຄວາມແຕກຕ່າງກັນແຕ່ຕ້ອງປະຕິບັດຕາມຫຼັກການລວມດັ່ງນີ້:

1) ສຶກສາເວລາທີ່ໃຊ້ສອນ, ຈຸດປະສົງ, ເນື້ອໃນ, ສື່ການຮຽນ-ການສອນ, ກິດຈະກຳການຮຽນ-ການສອນ ແລະ ວັດປະເມີນຜົນນຳໄປແຕ່ງ ຫຼື ສ້າງເປັນບົດສອນຂອງຕົນເອງ ໂດຍອີງໃສ່ແຜນຈັດປະສົບການກິດຈະກຳການຫຼິ້ນການແຈ້ງໃນແຕ່ລະວັນ.
2) ຄົ້ນຄິດຫາວິທີການສິດສອນ: ວິທີສອນມີຫຼາຍວິທີຄູຕ້ອງຄັດເລືອກໃຫ້ສອດຄ່ອງກັບຫຼັກສູດ ແລະ ເດັກທີ່ຕົນສອນ, ນຳໃຊ້ຫຼັກການໃຫ້ຜູ້ຮຽນເປັນຜູ້ປະຕິບັດ, ເປັນຜູ້ຄົ້ນພົບຄຳຕອບດ້ວຍຕົນເອງ, ຝຶກທັກສະ ເປັນກຸ່ມ ແລະ ເປັນລາວບຸກຄົນເພື່ອໃຫ້ເດັກເປັນຜູ້ເຮັດເປັນ, ຄິດເປັນ, ແກ້ບັນຫາເປັນ ແລະ ມີຊ່ອງທາງໃນການເຮັດວຽກຢ່າງມີປະສິດທິພາບ.
3) ກະກຽມສື່ການຮຽນ-ການສອນ: ການຫຼິ້ນບົດບາດສົມມຸດ, ມຸມອ່ານ, ມຸມເກມການສຶກສາ, ມຸມສິລະປະສ້າງສັນ, ມຸມວິທະຍາສາດ ແລະ ທຳມະຊາດ, ມຸມເຄື່ອງຫຼິ້ນສຳຜັດເພື່ອໃຫ້ເດັກເຂົ້າໃຈເນື້ອໃນບົດທີ່ນຳມາຮຽນຄູຕ້ອງເບິ່ງຄວາມເໝາະສົມ ແລະ ສອດຄ່ອງທາງດ້ານສື່ ຫຼື ອຸປະກອນການຮຽນ-ການສອນ ກັບເນື້ອໃນບົດສອນຂອງແຕ່ລະວັນ.

ກະກຽມຫົວຂໍ້ບັນທຶກຜົນການຕິດຕາມ: ການບັນທຶກຜົນການຕິດຕາມເປັນສິ່ງຈຳເປັນ ທີ່ຄູຕ້ອງສ້າງຮ່າງສຳລັບບັນທຶກທຸກຄັ້ງທີ່ສອນໂດຍນຳເອົາຫົວຂໍ້ທີ່ກຳນົດໄວ້ໃນຕາຕະລາງວິເຄາະກິດຈະກຳການຫຼິ້ນກາງແຈ້ງແຕ່ໜ່ວຍ 1-8 ແຕ່ໃນຕົວຈິງຄູສາມາດປັບຫົວຂໍ້ໃຫ້ແທດເໝາະກັບເດັກທີ່ຕົນສອນ.

### 8.1 ໂຄງຮ່າງຂອງການແຕ່ງບົດສອນ

**1) ໂຄງຮ່າງ ແລະ ຕົວຢ່າງການສ້າງແຜນການສອນແບບຮຽງຄວາມ:**

ບົດສອນແບບຮຽງຄວາມແມ່ນບົດສອນທີ່ຂຽນເປັນຂໍ້ຄວາມປະກອບມີ ຈຸດປະສົງ, ເນື້ອໃນຕົ້ນຕໍ, ສື່ການຮຽນ-ການສອນ, ກິດຈະກຳການຮຽນ-ການສອນ, ການວັດ ແລະ ປະເມີນຜົນ ດັ່ງລຸ່ມນີ້:

**1) ໂຄ່ງຮ່າງແຜນການສອນຮູບແບບຮຽງຄວາມ**

ໜ່ວຍ:...........................................................

ອາທິດທີ່:.......................................................

ຊື່ກິດຈະກຳ:.....................................................ເວລາ..................ນາທີ

ຫົວຂໍ້:.............................................................

**I. ຈຸດປະສົງ:**

1. ..............................................................
2. ..............................................................
3. ..............................................................

**II. ເນື້ອໃນຕົ້ນຕໍ:**

1. ................................................................
2. ................................................................
3. .................................................................

**III. ສື່ການຮຽນ-ການສອນ:**

1. .................................................................

2. ..................................................................

3. ...................................................................

### IV. ກິດຈະກຳການຮຽນ-ການສອນ:

1. .......................................................................
2. ........................................................................
3. .......................................................................

### V. ການວັດ ແລະ ປະເມີນ:

1. ........................................................................
2. .........................................................................
3. ..........................................................................

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ ທີ່................ວັນທີ...........ເດືອນ.......ປີ..........
................................................ ລາຍເຊັນຜູ້ແຕ່ງບົດສອນ

### 2) ໂຄ່ງຮ່າງແຜນການສອນຮູບແບບຕາຕະລາງ

ໜ່ວຍ...................................ອາທິດທີ................ມື້ທີ່..................

ຊື່ກິດຈະກຳ:...............................................ເວລາ................ນາທີ

ຫົວຂໍ້:.........................................................................................

| ຈຸດປະສົງ | ເນື້ອໃນຕົ້ນຕໍ | ກິດຈະກຳການຮຽນ-ການສອນ | ສື່ການຮຽນ-ການສອນ | ການວັດ ແລະ ປະເມີນຜົນ |
|---|---|---|---|---|
| ເພື່ອໃຫ້ເດັກສາມາດ:<br>................<br>.................<br>................. | ..................<br>..................<br>..................<br>..................<br>.................. | 1. ຂັ້ນນຳເຂົ້າສູ່ບົດຮຽນ<br>....................................<br>....................................<br>....................................<br>2. ຂັ້ນດຳເນີນການສອນ<br>...................................<br>...................................<br>...................................<br>....................................<br>....................................<br>3. ຂັ້ນສະຫຼຸບບົດຮຽນ<br>...................................<br>....................................<br>....................................<br>– ສຶກສາອົບຮົມເດັກ | ..........................<br>..........................<br>.......................... | ....................<br>...................<br>.................... |

| | | | | |
|---|---|---|---|---|
| | | ...................................<br>...................................<br>.................................. | | |

ທີ່..................................................

ວັນທີ່..................ເດືອນ................ປີ................

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ                    ລາຍເຊັນຜູ້ແຕ່ງບົດສອນ

### 3) ໂຄ່ງຮ່າງແຜນການສອນຮູບແບບເຄິ່ງຕາຕະລາງ

ບົດທີ...........................    ຊັ້ນຮຽນ.................    ຫ້ອງ................

ຫົວຂໍ້..........................................................................................

1. ຈຸດປະສົງ..............................................................................
2. ເນື້ອໃນ...................................................................................
3. ສື່ການຮຽນ-ການສອນ
   - ອຸປະກອນ: ຂອງຈິງ...................................................
   - ສິ່ງທີ່ຜະລິດ..............................................................
4. ກິດຈະກຳການຮຽນ-ການສອນ

| ກິດຈະກຳຂອງຄູ | ກິດຈະກຳຂອງນັກຮຽນ |
|---|---|
| 1. ຂັ້ນນຳ ( ຄູເຮັດຫຍັງ? )<br>- ການຈັດຕັ້ງຫ້ອງ<br>- ອົບອຸ່ນຮ່າງກາຍ | ນັກຮຽນເຮັດຫຍັງ?.......................................<br>................................................................. |
| 2. ຂັ້ນດຳເນີນການສອນ<br>- ສົນທະນາ<br>- ອະທິບາຍ<br>- ທົດລອງ<br>- ປະຕິບັດຕົວຈິງ | ນັກຮຽນເຮັດຫຍັງ?.........................<br>...........................................................<br>...........................................................<br>............................................................. |
| 3. ສະຫຼູບ<br>- ທວນຄືນສິ່ງທີ່ຮຽນມາ<br>....................................................<br>....................................................<br>- ສຶກສາອົບຮົມ<br>...................................................<br>.................................................... | ນັກຮຽນເຮັດຫຍັງ?.......................................<br>.............................................................<br>.............................................................<br>.............................................................. |

ທີ່.................................................

ວັນທີ່..................ເດືອນ................ປີ................

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ ລາຍເຊັນຜູ້ແຕ່ງບົດສອນ

**ເຝິກແຕ່ງບົດສອນ ແລະ ຜະລິດອຸປະກອນ**

- ກິດຈະກຳ: ເຝິກແຕ່ງບົດສອນ ແລະ ຜະລິດອຸປະກອນ
- ອຸປະກອນ: ປຶ້ມຮຽນ, ບິກ, ເຈ້ຍແຂງ, ສໍສີ, ເຈັ້ຍຂາວ, ອຸປະກອນທີ່ມີໃນທ້ອງຖິ່ນ
- ວິທີດຳເນີນກິດຈະກຳ:

- ຄູສົນທະນາ ແລະ ລະດົມຄວາມຄິດຂອງນັກຮຽນຄູເຖິງຂັ້ນຕອນການສັງເກດສົນທະນາກິດຈະກຳໃນວົງມົນຂອງໂຮງຮຽນລ້ຽງເດັກອະນຸບານ
- ຄູກັບນັກຮຽນຄູຮ່ວມກັນແຕ່ງບົດສອນແແບບຢ່າງກິດຈະກຳວົງມົນສັງເກດສົນທະນາໃສ່ເຈ້ຍແຜນໃຫຍ່
- ແບ່ງນັກຮຽນອອກເປັນສີ່ກຸ່ມເພື່ອແຕ່ງບົດສອນດັ່ງນີ້:

  ກຸ່ມທີ 1: ແຕ່ງບົດສອນຊັ້ນລ້ຽງເດັກ

  ກຸ່ມທີ 2: ແຕ່ງບົດສອນຊັ້ນອະນຸບານ 1

  ກຸ່ມທີ 3: ແຕ່ງບົດສອນຊັ້ນອະນຸບານ 2

  ກຸ່ມທີ 3: ແຕ່ງບົດສອນຊັ້ນອະນຸບານ 3
- ຫົວໜ້າກຸ່ມແບ່ງໜ່ວຍການສອນໃຫ້ແຕ່ລະກຸ່ມເປັນບຸກຄົນຮັບຜິດຊອບ
- ຄູແນະນຳ ແລະ ນຳພານັກຮຽນຄູຜະລິດອຸປະກອນປະກອບການສອນສັງເກດສົນທະນາ
- ໃຫ້ນັກຮຽນຄູເຝິກແຕ່ງບົດສອນເປັນລາຍບຸກຄົນຕາມໜ່ວຍການສອນທີ່ໄດ້ຮັບມອບໝາຍພ້ອມທັງຜະລິດອຸປະກອນປະກອບບົດສອນ.

8.1. ຮ່າງບົດສອນ

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ - ການສອນ | ເວລາ | ອຸປະກອນ | ປະເມີນ |
|---|---|---|---|---|---|
| | | 1. ຂັ້ນນຳເຂົ້າສູ່ບົດຮຽນ<br>- ທວນຄືນບົດຮຽນເກົ່າ<br>- ລ້ຽວເຂົ້າບົດຮຽນໃໝ່<br>2. ຂັ້ນສອນ<br>3. ຂັ້ນສະຫຼຸບ<br>- ວັດຜົນ/ປະເມີນ<br>- ສຶກສາອົບຮົມ/ມອບວຽກບ້ານ | | | |

### 8.2. ອົງປະກອບ ແລະ ຂັ້ນຕອນການແຕ່ງບົດສອນ

**ອົງປະກອບຂອງບົດສອນ**

- ຈຸດປະສົງ
- ເນື້ອໃນ
- ກິດຈະກຳການຮຽນ - ການສອນ
- ເວລາກິດຈະກຳ
- ອຸປະກອນ
- ປະເມີນ

**ຂັ້ນຕອນການແຕ່ງບົດສອນ**

**1.4 ສຳລັບອະນຸບານ 1**

**4) ຂັ້ນນຳເຂົ້າສູ່ບົດຮຽນ**

ເປັນການກຽມເດັກໃຫ້ພ້ອມ ແລະ ກະຕຸ້ນໃຫ້ເດັກສົນໃຈ ທີ່ຈະຮ່ວມກິດຈະກຳຕໍ່ໄປກິດຈະກຳທີ່ໃຊ້ອາດຈະເປັນການຮ້ອງເພງ, ເລົ່າຄຳຄ່ອງ, ສົນທະນາ ແລະ ເບິ່ງຮູບພາບເຊິ່ງຈະໃຊ້ໄລຍະເວລາສັ້ນ.

**5) ຂັ້ນຕອນສອນ**

ການຈັດກິດຈະກຳຕ້ອງການໃຫ້ເດັກໄດ້ຮັບຄວາມຮູ້ ແລະ ປະສົບການດ້ວຍກິດຈະກຳຫຼາຍຮູບແບບເຊັ່ນ:

- ການສົນທະນາຖາມ-ຕອບ, ອະທິບາຍເປັນການໂອ້ລົມ ລະຫວ່າງຄູກັບເດັກ ຫຼື ເດັກກັບເດັກ ເຊິ່ງສື່ທີ່ໃຊ້ອາດຈະເປັນວັດຖຸຈິງ ແລະ ຮູບພາບ.
- ການເລົ່ານິທານເລື່ອງຄູຈະເລົ່າເລື່ອງທີ່ກ່ຽວກັບເລື່ອງລາວທີ່ຄູຕ້ອງການໃຫ້ເດັກເຂົ້າໃຈຫຼື ປະຕິບັດຕາມສ່ວນຫຼາຍຈະເປັນການປູກຝັງ ຫຼື ການສອນທີ່ເປັນເລື່ອງນາມມະທຳ ວິທີການນີ້ຈະຊ່ວຍໃຫ້ເດັກເຂົ້າໃຈໄດ້ດີຂຶ້ນເພາະເດັກໃນໄວນີ້ຈະມັກຟັງນິທານເລື່ອງ ແລະ ຮຽນແບບຕົວລະຄອນໃນນິທານເລື່ອງ ໃນການເລົ່າເລື່ອງຄູອາດໃຊ້ຮູບພາບ, ຫຸ່ນ ຫຼື ສ່ວນຕ່າງໆຂອງຮ່າງກາຍປະກອບ.
- ການສາທິດປະຕິບັດການທົດລອງເປັນການສອນທີ່ເຮັດໃຫ້ເດັກໄດ້ຮັບປະສົບການທາງກົງເພາະໄດ້ທົດລອງປະຕິບັດດ້ວຍຕົນເອງໄດ້ສັງເກດເຫັນການປ່ຽນແປງໃນສິ່ງທີ່ຕົນເອງໄດ້ທົດລອງເປັນການເຝິກທັກສະການສັງເກດ, ການແກ້ບັນຫາ ແລະ ສົ່ງເສີມໃຫ້ເດັກມີຄວາມຢາກຮູ້ຢາກເຫັນ ແລະ ຄົ້ນພົບຄວາມຮູ້ດ້ວຍຕົນເອງ.
- ການຈັດທັກສະນະສຶກສາເປັນການສອນທີ່ໃຫ້ເດັກໄດ້ຮັບປະສົບການໂດຍກົງອີຮູບແບບໜຶ່ງອາດຈະເປັນການພາເດັກໄປຮຽນນອກຫ້ອງຮຽນຮອບບໍລິເວນໂຮງຮຽນນອກໂຮງຮຽນ ແຕ່ຄູຈະຕ້ອງເບິ່ງແຍງເອົາໃຈໃສ່ໃນເລື່ອງຄວາມປອດໄພ.
- ການສອນເພງ ແມ່ນສົ່ງເສີມໃຫ້ເດັກມີຄວາມເບີກບານມ່ວນຊື່ນຊ່ວຍພັດທະນາທາງດ້ານພາສາໃນການຈື່ຈຳ, ຄົ້ນຄິດພ້ອມທັງເຄື່ອນໄຫວຕາມຈັງຫວະເພງ ແລະ ຊ່ວຍໃຫ້ເດັກເຂົ້າໃຈເນື້ອໃນການຮຽນຮູ້ດີຂຶ້ນ.
- ການສອນຄຳຄ່ອງແມ່ນເພື່ອພັດທະນາທາງດ້ານພາສາ, ເດັກຈະມ່ວນຊື່ນກັບການຟັງ, ເວົ້າຄຳຄ່ອງ.
- ການປະກອບອາຫານໃນບາງໜ່ວຍທີ່ສອນກ່ຽວກັບຜັກ, ໝາກໄມ້, ຊີ້ນຕ່າງໆ ຄູອາດຈະໃຫ້ເດັກມີສ່ວນຮ່ວມໃນການປະກອບອາຫານ ຈະເຮັດໃຫ້ເດັກໄດ້ຮັບປະສົບການຈາກການສັງເກດ ການປ່ຽນແປງຂອງອາຫານດິບ, ສຸກ, ຮັບຮູ້ລົດຊາດ ແລະ ກິ່ນຂອງອາຫານ, ຮຽນຮູ້ດ້ວຍການໃຊ້ປະສາດສຳຜັດຕ່າງໆ ແລະ ຮຽນຮູ້ດວ້ຍການເຮັດວຽກກັບຄົນອື່ນ. ໃນຄະນະທີ່ເດັກເຮັດກິດຈະກຳ ຫຼື ຫຼັງຈາກເຮັດກິດຈະກຳສຳເລັດແລ້ວ ຄູຄວນໃຊ້ຄຳຖາມປາຍ

ເປີດໃນລັກສະນະຕ່າງໆທີ່ຊອນໃຫ້ເດັກຄິດບໍ່ຄວນໃຊ້ຄຳຖາມປາຍປິດ ແມ່ນ, ບໍ່ແມ່ນ ຫຼື ມີຄຳຕອບໃຫ້ເດັກເລືອກ, ຄູຄວນໃຫ້ເວລາເດັກໄດ້ຄິດໃນການຕອບ.

**6) ຂັ້ນຕອນສະຫຼຸບບົດຮຽນ**

ເປັນການສະຫຼຸບສິ່ງຕ່າງໆທີ່ຮຽນມາໃຫ້ເດັກໄດ້ເຂົ້າໃຈດີຂຶ້ນເຊິ່ງຄູອາດຈະໃຊ້ຄຳຖາມ, ເພງ, ຄຳຄ່ອງ, ເກມໃນການສະຫຼຸບບົດຮຽນ.

- ການວັດ ແລະ ປະເມີນ

ເປັນການຕິດຕາມຜົນການຮຽນຮູ້ຂອງເດັກກ່ຽວກັບສິ່ງທີ່ຮຽນມາຈາກການຈັດກິດຈະກຳຕ່າງໆເຊັ່ນ: ກິດຈະກຳສອນເພງ, ຄໍ່ຄ່ອງ, ບົດເລື່ອງ, ສັງເກດສົນທະນາ, ເກມ, ເວົ້າເປັນຄຳສັບ ອ່ານອອກສຽງພະຍັນຊະນະເຊິ່ງຈະໄດ້ໃຊ້ວິທີສັງເກດດັ່ງນີ້:

4) ການຕອບຄຳຖາມ, ສົນທະນາຖາມ-ຕອບ ແລະ ສະແດງຂໍ້ຄິດເຫັນ.
5) ການຟັງ, ການເວົ້າ, ການອ່ານ.
6) ຄວາມສົນໃຈໃນການເຂົ້າຮ່ວມກິດຈະກຳ.

**1.5 ສຳລັບອະນຸບານ 2**

**4) ຂັ້ນນຳເຂົ້າສູ່ບົດຮຽນ**

ແມ່ນຂັ້ນຕອນຄວາມສົນໃຈຂອງເດັກເຂົ້າສູ່ການຮຽນ ເພື່ອໃຫ້ເດັກມີຄວາມພ້ອມຢາກຮຽນຮູ້ໃນການນຳເຂົ້າສູ່ບົດຮຽນໂດຍຮ້ອງເພງ, ເລົ່າຄຳຄ່ອງ, ສົນທະນາ, ເບິ່ງຮູບພາບ ແລະ ຫຼິ້ນເກມ ເຊິ່ງຈະໃຊ້ໄລຍະເວລາສັ້ນໆ 2-3 ນາທີ ຄູຄວນນຳໃຊ້ໃຫ້ແທດເໝາະກັບສຳອາຍຸຂອງເດັກ ແລະ ກ່ຽວຂ້ອ ງກັບກິດຈະກຳທີ່ນຳມາຮຽນ.

**5) ຂັ້ນດຳເນີນການສອນ**

ແມ່ນຂັ້ນຕອນສິ່ງຄວາມຮູ້ທາງດ້ານເນື້ອໃນທີ່ຄູນຳເອົາບັນດາຫົວຂໍ້ເນື້ອໃນຈາກແຜນການຈັດປະສົບການມາຈັດກິດຈະກຳ ໂດຍນຳໃຊ້ວິທີການສັງເກດຮູບພາບ, ຕົວອັກສອນ, ຕົວເລກ, ເຄື່ອງຈິງ ຫຼື ນຳໃຊ້ເພງ, ຄຳຄ່ອງ, ນິທານ ແລະ ອື່ນໆ. ເພື່ອໃຫ້ເດັກໄດ້ຄົ້ນຄິດ ແລະ ມີສ່ວນຮ່ວມກັບຄູໃນເວລາປະຕິບັດກິດຈະກຳ.

**6) ຂັ້ນຕອນສະຫຼຸບບົດຮຽນ**

ແມ່ນການສະຫຼຸບສິ່ງຕ່າງໆທີ່ໄດ້ຮຽນຜ່ານມາ ໂດຍການເອົາເນື້ອໃນຕົ້ນຕໍຂອງສິ່ງທີ່ຮຽນມາເວົ້າໂດຍຫຍໍ້ເຊິ່ງຄູອາດຈະໃຊ້ຄຳຖາມ, ເພງ, ຄຳຄ່ອງ ແລະ ເກມໃນການສະຫຼຸບບົດຮຽນ.

➢ **ສິ່ງທີ່ຄວນເອົາໃຈໃສ່.**

ການຈັດກິດຈະກຳການຮຽນ-ການສອນກິດຈະກຳວົງມົນ ຄູຄວນຈັດການສອນແບບບູລະນາການໂດຍໃຫ້ເດັກຮຽນຮູ້ດ້ວຍຕົນເອງຕາມວິທີການສອນດັ່ງນີ້:

- ນຳໃຊ້ຮູບພາບ, ເຄື່ອງຕົວຈິງ ແລະ ເຄື່ອງຈຳລອງເພື່ອໃຫ້ເດັກສັງເກດ.
- ສົນທະນາ, ຖາມ-ຕອບ, ອະທິບາຍລະຫວ່າງຄູກັບເດັກ ຫຼື ເດັກກັບເດັກ.
- ທັດສະນະສຶກສານອກຫ້ອງຮຽນ: ບໍລິເວນເດີ່ນໂຮງຮຽນ, ນອກຫ້ອງຮຽນ: ສະຖານສຳຄັນເຊັ່ນ: ວັດ, ສວນສາທາລະນະ...
- ການສາທິດ ຫຼື ການທົດລອງເດັກໄດ້ສັງເກດ, ສຳຜັດ, ບອກສິ່ງຕ່າງໆທີ່ເກີດຂຶ້ນດ້ວຍຕົນເອງ.

### 1.6 ສຳລັບອະນຸບານ 3

ການຈັດກິດຈະກຳວິງມິນໃນຊັ້ນອະນຸບານ 3 ໃຊ້ເວລາປະມານ 30-35 ນາທີ ເຊິ່ງປະກອບດ້ວຍການສອນພາສາລາວ, ຄະນິດສາດ ແລະ ວິທະຍາສາດ. ຄູຄວນຈັດກິດຈະກຳການຮຽນ-ການສອນເດັກໃນຮູບແບບບູລະນາການໂດຍຈັດການສອນຜ່ານບົດເພງ, ຄຳຄ່ອງ, ນິທານ, ການສັງເກດຮູບພາບ ແລະ ບັດຄຳ. ເພື່ອໃຫ້ເດັກນ້ອຍໄດ້ຮັບຄວາມຮູ້, ຄວາມສາມາດນຳໄປໃຊ້ໃນຊີວິດປະຈຳວັນ, ຄູຕ້ອງຄຳນຶງເຖິງລະດັບຄວາມຮູ້ຄວາມສາມາດຂອງເດັກນ້ອຍ. ໃນກໍລະນີເດັກນ້ອຍມີຄວາມຕ້ອງການພິເສດຄູຄວນພິຈາລະນາການນຳໃຊ້ກິດຈະກຳໃຫ້ເໝາະສົມ. ຕົວຢ່າງ ເດັກນ້ອຍທີ່ສາຍຕາສັ້ນຄວນໃຫ້ເດັກນ້ອຍຄົນອື່ນຊ່ວຍເຫຼືອ ຫຼື ວ່າໃຫ້ເດັກນ້ອຍຄົນນັ້ນມານັ່ງໃກ້ໆ, ອຸປະກອນທີ່ນຳມາໃຊ້ຄວນໃຫ້ໃຫ່ຍ, ຊັດເຈນ ແລະ ໃຫ້ເດັກໄດ້ສຳພັດຕົວຈິງ. ການສອນກິດຈະກຳວິງມິນມີຂັ້ນຕອນປະຕິບັດດັ່ງນີ້:

4) **ຂັ້ນຕອນທີ 1 ການກະກຽມ**

- ກະກຽມບົດສອນ ຫຼື ແຜນປະສົບການໃຫ້ແທດເໝາະກັບຫົວຂໍ້ ແລະ ກິດຈະກຳທີ່ຈະສອນ.
- ກະກຽມສະຖານທີ່ທີ່ຈະປະຕິບັດເຊັ່ນ: ຫ້ອງຮຽນ ຫຼື ສະຖານທີ່ຫ້ອງຮຽນ.
- ກະກຽມອຸປະກອນໃຫ້ພຽງພໍກັບຈຳນວນເດັກທີ່ມີໃນຫ້ອງຮຽນ.

5) **ຂັ້ນຕອນທີ່ 2 ດຳເນີນການສອນ**

- ອະທິບາຍ, ແນະນຳ ແລະ ສາທິດວິທີປະຕິບັດກິດຈະກຳໃຫ້ເດັກເຂົ້າໃຈກ່ອນຈຶ່ງໃຫ້ເດັກລົງມືປະຕິບັດ.
- ນຳໃຊ້ເຄື່ອງຕົວຈິງ, ເຄື່ອງຈຳລອງ ຫຼື ຮູບພາບເພື່ອໃຫ້ເດັກນ້ອຍສັງເກດ.
- ໃຫ້ເດັກນ້ອຍໄດ້ສາທິດ ຫຼື ທົດລອງດ້ວຍຕົນເອງ ເພື່ອໃຫ້ເດັກນ້ອຍໄດ້ສັງເກດເຫັນການປ່ຽນແປງໃນສິ່ງທີ່ຕົນໄດ້ປະຕິບັດ.
- ບາງຄັ້ງອາດຈະພາເດັກນ້ອຍໄປຮຽນນອກຫ້ອງຮອບບໍລິເວນໂຮງຮຽນ ຫຼື ທັດສະນະສຶກສານອກສະຖານທີ ແຕ່ຄູຕ້ອງເບິ່ງແຍງເອົາໃຈໃສ່ຄວາມປອດໄພເປັນສິ່ງສຳຄັນ.
- ສົນທະນາ, ຖາມ-ຕອບ ແລະ ອະທິບາຍລະຫວ່າງຄູກັບເດັກນ້ອຍ ຫຼື ເດັກນ້ອຍກັບເດັກນ້ອຍກ່ຽວກັບເນື້ອໃນຂອງບົດຮຽນທີ່ໄດ້ຮຽນ.

6) **ຂັ້ນຕອນທີ 3 ການສະຫຼຸບບົດສອນ**

- ເມື່ອສຳເລັດການຮຽນທຸກເທື່ອຄູຄວນສະຫຼຸບເນື້ອໃນບົດຮຽນໃຫ້ເດັກຟັງ.
- ຍ້ອງຍໍຊົມເຊີຍເດັກທີ່ປະຕິບັດກິດຈະກຳໄດ້ດີ ແລະ ແນະນຳເດັກທີ່ເຮັດບໍ່ທັນໄດ້ດີ.
- ສຶກສາອົບຮົມເດັກທຸກໆຄັ້ງຫຼັງຈາກປະຕິບັດກິດຈະກຳສຳເລັດແລ້ວ.

➢ **ສິ່ງທີ່ຄວນເອົາໃຈໃສ່**

6) ໃນການຮຽນແຕ່ລະຄັ້ງຄູຕ້ອງສັງເກດພຶດຕິກຳການຮຽນຂອງເດັກນ້ອຍທຸກຄົນ, ບັນທຶກ ແລະ ແນະນຳຫາທາງແກ້ໄຂເພື່ອໃຫ້ເດັກນ້ອຍຮຽນໄດ້ຢ່າງຖືກຕ້ອງ ແລະ ມ່ວນຊື່ນ.

7) ໃນເວລາເຮັດການທົດລອງແຕ່ລະຄັ້ງ ຄູຕ້ອງຢູ່ກັບເດັກນ້ອຍຕະຫຼອດເວລາບໍ່ຄວນປ່ອຍໃຫ້ເດັກນ້ອຍປະຕິບັດການທົດລອງຕາມລຳພັງເນັ້ນເລື່ອງການຮຽນຮ່ວມກັນ ແລະ ຄວາມປອດໄພເປັນສິ່ງສຳຄັນ.

8) ໃນເວລາປະຕິບັດກິດຈະກຳຄູຄວນໃຫ້ຄວາມຊ່ວຍເຫຼືອ, ໃກ້ຊິດແນະນຳ ແລະ ໃຫ້ຄວາມອົບອຸ່ນກັບເດັກນ້ອຍທີ່ມີບັນຫາທາງດ້ານສຸຂະພາບພິເສດຕ່າງໆດ້ວຍຄວາມເອົາໃຈໃສ່.

9) ການໄປທັດສະນະສຶກສານອກສະຖານທີ່ຄວນເປັນບ່ອນທີ່ປອດໄພທີ່ສຸດ.

### 8.3 ແຕ່ງບົດສອນຕາມແຜນຈັດປະສົບການ

**ແຕ່ງບົດສອນຕົວຈິງ**

ການແຕ່ງບົດສອນແມ່ນໝາຍເຖິງການທີ່ຄູໄດ້ວາງແຜນການສອນກ່ອນການດຳເນີນການສອນກິດຈະກຳໃດໜຶ່ງເຊິ່ງປະກອບດ້ວຍກຳນົດຈຸດປະສົງ, ການຈັດວາງເນື້ອໃນ, ຮູບແບບ ແລະ ວິທີການຈັດກິດຈະກຳການຮຽນ-ການສອນ ແລະ ການກະກຽມສື່ການສອນປະກອບເຂົ້າໃນການສອນກິດຈະກຳດັ່ງກ່າວຢ່າງລະອຽດ, ການແຕ່ງບົດສອນແຕ່ລະຄັ້ງຄູອະນຸບານຕ້ອງໄດ້ສຶກສາປຶ້ມແບບຈັດປະສົບການໃນໂຮງຮຽນລ້ຽງເດັກ-ອະນຸບານໃນແຕ່ລະສົກອາຍຸຂອງເດັກເປັນຫຼັກໃນການສ້າງແຜນການສອນປະສົມປະສານກັບແນວຄວາມຄິດໃນການອອກແບບການສອນ, ແບບບູລະນາການຂອງລາຄູ ແລະ ສະຫຼຸບລວມແລ້ວ ການແຕ່ງບົດສອນ ແມ່ນການກະກຽມຄວາມພ້ອມລ່ວງໜ້າຂອງຄູເພື່ອໃຫ້ການຮຽນ-ການສອນລະຫວ່າງຄູ ແລະ ເດັກໃຫ້ບັນລຸຕາມຈຸດປະສົງທີ່ວາງໄວ້ ເຊິ່ງລາຍລະອຽດຂອງບົດສອນຕົວຢ່າງໃນແຕ່ລະສົກອາຍຸຂອງເດັກມີດັ່ງລຸ່ມນີ້:

## 9. ແຕ່ງບົດສອນຕົວຈິງ

### 9.1 ແຕ່ງບົດສອນຊັ້ນລ້ຽງເດັກ

ບົດສອນຕົວຢ່າງ: ຂັ້ນລ້ຽງເດັກ

ໜ່ວຍ: ຍຸງ

ກິດຈະກຳວົງມົນ

ຫົວຂໍ້: ການສັງເກດ-ແອບເວົ້າ ເວລາ: 7 ນາທີ

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| ຝຶກໃຫ້ເດັກສາມາດເວົ້າຊື່ຂອງຍຸງຢ່າງໜ້ອຍ 2 ຊື່ນຳສາວຄູໄດ້ | ການເວົ້າຊື່ຂອງຍຸງ ເຊັ່ນ: ຍຸງລາຍ, ຍຸງກົ້ນຊີ້ | 1. ຂັ້ນນຳ<br>- ຄູພາເດັກສົມມຸດເຮັດຍຸງບິນ<br>2. ຂັ້ນດຳເນີນການສອນ<br>- ຄູພາເດັກເວົ້າຊື່ຂອງຍຸງໄປເທື່ອລະຊື່<br>- ຄູພາເດັກເວົ້າ 2-3 ເທື່ອ<br>- ຄູພາເດັກຜ່ອນຄາຍຄວາມອິດເມື່ອຍດ້ວຍພາເດັກຮ້ອງເພງຍຸງ<br>3. ຂັ້ນສະຫຼຸບ<br>- ຄູຮ້ອງເພງໃຫ້ເດັກຟັງ 1 ເທື່ອ<br>- ຄູພາເດັກອະນຸຍາດພັກຜ່ອນ | ກອງກະແຊັກ | ສັງເກດການເວົ້າຊື່ຍຸງຂອງເດັ່ແຕ່ລະຄົນ |

## ໙.2 ແຕ່ງບົດສອນຊັ້ນອະນຸບານ 1

# ບົດສອນ

- ໜ່ວຍ: ສິ່ງຕ່າງໆອ້ອມຕົວເຮົາ - ອາທິດທີ: 1 ມື້ທີ: 1
- ກິດຈະກຳ: ວົງມົນ - ຂັ້ນອະນຸບານ: 1
- ຫົວຂໍ້: ເຄື່ອງໃຊ້ໃນຫ້ອງຮຽນ - ເວລາ 15 – 20 ນາທີ

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ເວລາ | ອຸປະກອນ | ປະເມີນ |
|---|---|---|---|---|---|
| ເພື່ອໃຫ້ເດັກສາມາດບອກຊື່ເຄື່ອງໃຊ້ໃນຫ້ອງຮຽນໄດ້ | ເຄື່ອງໃຊ້ໃນຫ້ອງຮຽນໂຕະ, ຕັ່ງຕູ້ເກັບຜົນງານ, ຕູ້ມ້ຽນເຄື່ອງຫຼິ້ນ ຫຼືກະຕ່າ, ພັດລົມ, ແອ | 1. **ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຄູຈັດເດັກນັ່ງເປັນລະບຽບ<br>- ຄູ ແລະ ນັກຮຽນເຄົາລົບເຊິ່ງກັນ ແລະ ກັນ<br>.-ກວດກາຈຳນວນພົນ: ເຕັມ .........ຄົນ, ມາ.....ຄົນ, ຂາດ........ຄົນ<br>- ພາເດັກສ້າງບັນຍາກາດຮ້ອງເພງມ໊ຽນເຄື່ອງຫຼິ້ນ ປະກອບທ່າທາງ 1-2 ເທື່ອ<br>• ທວນຄືນບົດຮຽນເກົ່າ: ກ່ອນຈະກິນເຂົ້າເຮົາຕ້ອງເຮັດແນວໃດແດ່?<br>ເດັກຕອບ ( ລ້າງມືໃຫ້ສະອາດກ່ອນຈິ່ງຄ່ອຍກິນເຂົ້າ)<br>2. **ຂັ້ນດຳເນີນການສອນ**<br>ຄູສະເໜີບົດຮຽນທີ່ຈະພາເດັກ<br>ຮຽນມື້ນີ້ສາວຄູຈະພາພວກຫຼານຮຽນກ່ຽວກັບ" ເຄື່ອງຫຼິ້ນໃນຫ້ອງຮຽນ "<br>ຄູໃຫ້ເດັກສັງເກດເຄື່ອງໃຊ້ໃນຫ້ອງຮຽນ: ໂຕະ, ຕັ່ງ, ຕູ້ເກັບຜົນງານ, ຕູ້ມ້ຽນເຄື່ອງຫຼິ້ນ ຫຼືກະຕ່າ, ພັດລົມ, ແອ<br>- ຄູສົນທະນາກັບເດັກກ່ຽວກັບເຄື່ອງໃຊ້ໃນຫ້ອງຮຽນວ່າມີຫຍັງແດ່?ໂຕະ, ຕັ່ງ | 5 ນາທີ<br><br>10 ນາທີ | ບົດເພງ ມ້ຽນເຄື່ອງຫຼິ້ນ<br><br>ໂຕະ, ຕັ່ງຕູ້ເກັບຜົນງານ, ຕູ້ມ້ຽນເຄື່ອງຫຼິ້ນ ຫຼືກະຕ່າ, ພັດລົມ, ແອ<br>ເມ | ສັງເກດການບອກຊື່ເຄື່ອງຫຼິ້ນໃນຫ້ອງຮຽນ<br><br>ສັງເກດການບອກຕຳແໜ່ງລຸ່ມ, ເທິງ, ນອກ, |

| | | | | | |
|---|---|---|---|---|---|
| ເພື່ອໃຫ້ເດັກສາມາດບອກຕຳແໜ່ງ, ລຸ່ມ, ເທິງ, ນອກ, ໃນ | ຕຳແໜ່ງ: ລຸ່ມ, ເທິງ | , ຕູ້ເກັບຜົນງານ, ຕູ້ມຸ້ງຮຽນ ເຄື່ອງຫຼິ້ນ ຫຼື ກະຕ່າ, ພັດລົມ , ແອ<br>ຄູໃຫ້ເດັກອອກມາບອກຊື່ເຄື່ອງໃຊ້ໃນຫ້ອງຮຽນເທື່ອລະຄົນ<br>ຄູຊົມເຊີຍເດັກ<br>ຄູໃຫ້ເດັກສັງເກດປຶ້ມ ແລະ ຖົງ ແລະ ບອກຕຳແໜ່ງ, ປຶ້ມຢູ່ເທິງໂຕະ, ຢູ່ລຸ່ມໂຕະ, ປຶ້ມຢູ່ໃນຖົງ ແລະ ນອກຖົງ<br>ຄູໃຫ້ເດັກ ບອກຕຳແໜ່ງ, ປຶ້ມຢູ່ເທິງໂຕະ, ຢູ່ລຸ່ມໂຕະ, ປຶ້ມຢູ່ໃນຖົງ ແລະ ນອກຖົງ ພ້ອມກັນໝົດຫ້ອງ<br>ຄູຍ້ອງຍໍຊົມເຊີຍເດັກ<br>ຄູໃຫ້ອາສາສະໝັກອອກມາບອກຕຳແໜ່ງລຸ່ມ, ເທິງ, ນອກ, ໃນໃຫ້ໝູ່ເບິ່ງ 2-3 ຄົນ<br>ຄູຕິດຕາມຊ່ວຍເຫຼືອເດັກທີ່ຍັງບໍ່ທັນໄດ້ດີ<br>ຄູພາເດັກຫຼິ້ນເກມດ້ວຍການຮ້ອງເພງ ຫຼິ້ນເຄື່ອງຫຼິ້ນໃຫ້ເດັກຢ່າງເປັນວົງມົນ ຖ້າຄູຮ້ອງເພງຈົບ ຄູໃຫ້ສັນຍານດ້ວຍການຊີ້ມືໃສ່ສິ່ງຂອງໃນຫ້ອງຮຽນແລ້ວໃຫ້ເດັກບອກຊື່, ຖ້າເດັກຄົນໃດບອກບໍ່ໄດ້ໃຫ້ອອກມາຟ້ອນໃຫ້ໝູ່ເບິ່ງ<br>ຊົມເຊີຍເດັກ<br>**3. ຂັ້ນສະຫຼຸບ**<br>ຄູຖາມເດັກວ່າມື້ນີ້ສາວຄູພາພວກຫຼານຮຽນກ່ຽວກັບຫຍັງ ?<br>ເດັກຕອບ<br>ຄູໃຫ້ເດັກເວົ້າຄືນກ່ຽວກັບຊືເຄື່ອງໃຊ້ໃນຫ້ອງຮຽນໂຕະ, | 5 ນາທີ | ແລະ ຖົງ | ໃນ |

| | | | | | |
|---|---|---|---|---|---|
| | | ຕັ່ງ, ຕູ້ເກັບຜົນງານ, ຕູ້ມ້ຽນເຄື່ອງຫຼິ້ນ ຫຼືກະຕ່າ, ພັດລົມ, ແອ<br>ຄູໃຫ້ເດັກ ບອກຕຳແໜ່ງ, ປຶ້ມຢູ່ເທິງໂຕະ, ຢູ່ລຸ່ມໂຕະ, ປຶ້ມຢູ່ໃນຖົງ ແລະ ນອກຖົງ<br>ຍ້ອງຍໍຊົມເຊີຍເດັກ<br>❖ ສຶກສາອົບຮົມເດັກ<br>ພວກຫຼານຕ້ອງຮັກສາອະນາໄມໂຕະ, ຕັ່ງໃຫ້ສະອາດ, ບໍ່ຂີດ,ຂຽນບິກສໍໃສ່ ແລະ -ໍປີນໂຕະ, ປີນຕັ່ງ, ປີນຕູ້ ເພາະພວກຫຼານຊິຕົກໂຕະ, ຕົກຕັ່ງ ແລະ ຢ້ານຕູ້ລົ້ມທັບພວກຫຼານເຈັບ, ຂາຫັກ, ແຂນຫັກ ແລະ ຊິກາຍເປັນຄົນພິການ | | | |

**ບົດສອນ**

- ໜ່ວຍ: ສິ່ງຕ່າງໆອ້ອມຕົວເຮົາ — ອາທິດທີ: 1 ມື້ທີ: 2
- ກິດຈະກຳ: ວົງມົນ — ຂັ້ນອະນຸບານ: 1
- ຫົວຂໍ້: ເຄື່ອງຫຼິ້ນ — ເວລາ 15 – 20 ນາທີ

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ເວລາ | ອຸປະກອນ | ປະເມີນ |
|---|---|---|---|---|---|
| | | **1. ຂັ້ນນຳເຂົ້າສູ່ບົດຮຽນ**<br>ຄູຈັດເດັກນັ່ງເປັນລະບຽບ<br>ຄູ ແລະ ນັກຮຽນເຄົາລົບເຊິ່ງກັນ ແລະ ກັນ<br>ກາກວດກາຈຳນວນພົນ: ເຕັມ .........ຄົນ, ມາ.....ຄົນ ຂາດ ........ຄົນ<br>ຄູສົນທະນາກັບເດັກກ່ຽວກັບເຄື່ອງຫຼິ້ນຂອງຕົວເອງ<br>ຫຼິ້ນເຄື່ອງຂອງພວກຫຼານມີຫຼິ້ນຫຍັງແດ່?<br>ເດັກຕອບ ( ຍ້ອງຍໍຊົມເຊີຍ ) | 5 ນາທີ | ບົດເພງ<br>ເຄື່ອງຫຼິ້ນ | |

| | | | | | |
|---|---|---|---|---|---|
| - ເພື່ອໃຫ້ເດັກສາມາດເລົ່າຄຳຄ່ອງເຄື່ອງຫຼິ້ນປະກອບທ່າທາງ | ການເລົ່າຄຳຄ່ອງເຄື່ອງຫຼິ້ນປະກອບທ່າທາງ | **2. ຂັ້ນດຳເນີນການສອນ**<br>ຄູສະເໜີບົດຮຽນທີ່ຈະພາເດັກຮຽນມື້ນີ້ສາວຄູຈະພາພວກຫຼານຮຽນກ່ຽວກັບ" ເຄື່ອງຫຼິ້ນ "ຄູເລົ່າຄຳຄ່ອງເຄື່ອງຫຼິ້ນ<br>ຄູເລົ່າຄຳຄ່ອງເຄື່ອງຫຼິ້ນເທື່ອລະວັກລະຕອນໃຫ້ເດັກຟັງກ່ອນ 2-3 ເທື່ອ<br>ຄູພາເດັກເລົ່າຄຳຄ່ອງພ້ອມກັນໝົດຫ້ອງ<br>ຄູເລົ່າຄຳຄ່ອງ ເຄື່ອງຫຼິ້ນພ້ອງປະກອບທ່າທາງໃຫ້ເດັກເບິ່ງເທື່ອລະວັກລະຕອນ 2-3 ເທື່ອ<br>ຄູໃຫ້ເດັກເລົ່າຄຳຄ່ອງເຄື່ອງຫຼິ້ນປະກອບທ່າທາງຕາມຫຼັງສາວຄູ 2-3 ເທື່ອ<br>ຄູແບ່ງນັກຮຽນອອກເປັນ 2 ກຸ່ມ, ກຸ່ມທີ1: ປະກອບທ່າທາງ, ກຸ່ມທີ2: ເລົ່າຄຳຄ່ອງ<br>ຄູໃຫ້ເດັກປະຕິບັດພ້ອມຕິດຕາມຊ່ວຍເຫຼືອເດັກແຕ່ລະກຸ່ມ<br>ຄູສົນທະນາກັບເດັກກ່ຽວກັບເນື້ອໃນຄຳຄ່ອງ | 10 ນາທີ | | ສັງເກດການເລົ່າຄຳຄ່ອງປະກອບທ່າທາງ |
| ເພື່ອໃຫ້ເດັກສາມາດບອກຊື່ເຄື່ອງຫຼິ້ນໃນຫ້ອງຮຽນ | ໑ ຊື່ເຄື່ອງຫຼິ້ນລົດນ້ອຍ ຕຸກກະຕາ, ເຮືອບິນ, ໝາກບານ, ໄມ້ບູ້ອກ | ຄູເອົາລົດນ້ອຍ, ຕຸກກະຕາ, ເຮືອບິນ, ໝາກບານ, ໄມ້ບູ້ອກໃຫ້ເດັກເບິ່ງ<br>ຄູສົນທະນາກັບເດັກກ່ຽວກັບເຄື່ອງຫຼິ້ນ ແລະ ບອກຊື່ເຄື່ອງຫຼິ້ນໃນຫ້ອງຮຽນ<br>ຄູໃຫ້ເດັກບອກຊື່ເຄື່ອງຫຼິ້ນໃນຫ້ອງຮຽນລົດນ້ອຍ, ຕຸກກະຕາ, ເຮືອບິນ, ໝາກບານ, ໄມ້ບູ້ອກ<br>ຊົມເຊີຍເດັກ | | ເຄື່ອງຫຼິ້ນໃນຫ້ອງຮຽນລົດນ້ອຍ, ຕຸກກະຕາເຮືອບິນ, ໝາກບານ, ໄມ້ບູ້ອກ | ສັງເກດການບອກຊື່ເຄື່ອງຫຼິ້ນໃນຫ້ອງຮຽນຂອງເດັກນຳສາວຄູ |
| | | ຄູເອົາຮູບພາບ: ຕຸກກະຕາ ໝາກບານມາໃຫ້ເດັກເບິ່ງຄູພາເດັກຫຼິ້ນເກມດ້ວຍການຮ້ອງເພງມ້ຽນເຄື່ອງຫຼິ້ນ ຮ້ອງເພງຈົບ ຄູຍົກຮູບພາບຕຸກກະຕາ, ໝາກບານຂຶ້ນສະຫຼັບ | 5 ນາທີ | | ສັງເກດການເວົ້າ |

| | | | | | |
|---|---|---|---|---|---|
| | | ກັນ ແລ້ວໃຫ້ເດັກເວົ້າເປັນຄຳຕາມຮູບພາບ ຄູຊົມເຊີຍເດັກ<br>- ຄູໃຫ້ເດັກເວົ້າເປັນຄຳຕາມຮູບພ້ອມກັນໝົດຫ້ອງ<br>- ຄູໃຫ້ອາສາສະໝັກອອກມາເວົ້າເປັນຄຳຕາມຮູບພາບ: ຕຸກກະຕາ, ໝາກບານໃຫ້ໝູ່ເບິ່ງ 2-3 ຄົນ<br>- ຍ້ອງຍໍຊົມເຊີຍ<br>**3. ຂັ້ນສະຫຼຸບ**<br>- ຄູຖາມເດັກວ່າມື້ນີ້ສາວຄູພາພວກຫຼານຮຽນກ່ຽວກັບຫຍັງ ?<br>- ເດັກຕອບ<br>- ຄູໃຫ້ເດັກເວົ້າຄືນວ່າມື້ນີ້ສາວຄູພາພວກຫຼານຮຽນກ່ຽວກັບຫຍັງ?<br>- ຄູໃຫ້ເດັກເວົ້າຄືນກ່ຽວກັບຊື່ເຄື່ອງຫຼິ້ນໃນຫ້ອງຮຽນເວົ້າເປັນຄຳຕາມຮູບພາບ ເລົ່າຄຳຄ່ອງ<br>- ຍ້ອງຍໍຊົມເຊີຍເດັກ<br>❖ ສຶກສາອົບຮົມເດັກ<br>- ພວກຫຼານຕ້ອງຮັກສາເຄື່ອງຫຼິ້ນ, ບໍ່ມ້າງເຄື່ອງຫຼິ້ນ, ເມື່ອຫຼິ້ນແລ້ວເກັບໄວ້ເປັນລະບຽບ, ເວລາຫຼິ້ນບໍ່ໃຫ້ຍາດກັນ ແລະ ບໍ່ໃຫ້ແກວ່ໃສ່ກັນ ຖ້າຖືກຫົວຫົວແຕກ, ຖ້າຖືກຕາ ຕາຊິບອດ | | | ເປັນຄຳຕາມຮູບພາບ, ຕຸກກະຕາ, ໝາກບານ |

**ບົດສອນ**

- ໜ່ວຍ: ສິ່ງຕ່າງໆອ້ອມຕົວເຮົາ - ອາທິດທີ: 1 ມື້ທີ: 3
- ກິດຈະກຳ: ວົງມົນ - ຂັ້ນອະນຸບານ: 1
- ຫົວຂໍ້: ເຄື່ອງນຸ່ງ - ເວລາ 15 – 20 ນາທີ

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ເວລາ | ອຸປະກອນ | ປະເມີນ |
|---|---|---|---|---|---|
| | | **1. ຂັ້ນນຳເຂົ້າສູ່ບົດຮຽນ**<br>ຄູຈັດເດັກນັ່ງເປັນລະບຽບ<br>ຄູ ແລະ ນັກຮຽນເຄົາລົບເຊິ່ງ | 5 ນາທີ | ຄຳຄ່ອງ<br>ເຄື່ອງຫຼິ້ນ | |

| | | | | | |
|---|---|---|---|---|---|
| | | ກັນ ແລະ ກັນ ກວດກາຈຳນວນ ພົນ: ເຕັມ.........ຄົນ, ມາ..... ຄົນ ຂາດ........ຄົນ<br>• ທວນຄືນບົດຮຽນເກົ່າ:<br>ຄູພາເດັກສ້າງບັນຍາກາດ ດ້ວຍການເລົ່າຄຳຄ່ອງເຄື່ອງຫຼິ້ນ ປະກອບທ່າທາງ 2-3 ເທື່ອ<br>**2. ຂັ້ນດຳເນີນການສອນ** | | | |
| ເພື່ອໃຫ້ເດັກ ສາມາດບອກຊື່ ເຄື່ອງໄດ້ | ຊື່ເຄື່ອງນຸ່ງ:ໂສ້ງ, ເສື້ອ, ສິ້ນກະໂປ່ງ | ຄູສະເໜີບົດຮຽນທີ່ຈະພາ ເດັກຮຽນມື້ນີ້ສາວຄູຈະພາພວກ ຫຼານຮຽນກ່ຽວກັບ" ເຄື່ອງນຸ່ງ "<br>ຄູເອົາຮູບພາບເຄື່ອງນຸ່ງ: ໂສ້ງ, ເສື້ອ, ສິ້ໜ, ກະໂປ່ງ ມາໃຫ້ເດັກ ສັງເກດ ແລະ ສົນທະນາກັບເດັກ ກ່ຽວກັບຊື່ເຄື່ອງນຸ່ງ ຄູໃຫ້ເດັກ ບອກຊື່ເຄື່ອງນຸ່ງ | 10 ນາທີ | ເຄື່ອງນຸ່ງ: ໂສ້ງ,ເສື້ອ ສິ້ນ, ກະ ໂປ່ງ | ສັງເກດ ການບອກຊື່ ເຄື່ອງນຸ່ງ |
| ເພື່ອໃຫ້ເດັກ ສາມາດແທນຄ່າ ຈຳນວນ ແລະ ບອກຈຳນວນ 1-5ໄດ້ | ແທນຄ່າຈຳນວນ 1-5, ບອກ ຈຳນວນ 1-5 | ຄູໃຫ້ອາສາສະໝັກອອກມາ ບອກຊື່ເຄື່ອງນຸ່ງໃຫ້ໝູ່ເບິ່ງ 2-3 ຄົນ<br>ຊົມເຊີຍເດັກ<br>ຄູເອົາກ້ອນຫີນ 5 ກ້ອນ ແລະ ບັດເລກ 1-5 ມາໃຫ້ເດັກ ສັງເກດ<br>ຄູະທິບາຍ ແລະ ສາທິດການ ແທນຄ່າຈຳນວນ 1-5 ແລະ ບອກຄ່າຈຳນວນ 1-5 ດ້ວຍການ ນັບກັບກ້ອນຫີນໃຫ້ເດັກເບິ່ງ 2-3 ເທື່ອ<br>ຄູໃຫ້ເດັກອອກແທນຄ່າຈຳ ນວນ 1-5 ແລະ ບອກຄ່າຈຳ ນວນ 1-5 ດ້ວຍການນັບກັບ ກ້ອນຫີນ 2-3 ຄົນ<br>ຄູຕິດຕາມຊ່ວຍເຫຼືອເດັກ<br>ຍ້ອງຍໍຊົມເຊີຍເດັກ | 5 ນາທີ | ກ້ອນຫີນ ບັດເລກ | ສັງເກດ ການບອກ ຈຳນວນ |
| | | **3. ຂັ້ນສະຫຼຸບ**<br>ຄູຖາມເດັກວ່າມື້ນີ້ສາວຄູພາ ພວກຫຼານຮຽນກ່ຽວກັບຫຍັງ ?<br>ເດັກຕອບ | | | |

| | | | | | |
|---|---|---|---|---|---|
| | | ຄູໃຫ້ເດັກເວົ້າຄືນກ່ຽວກັບຊື່ເຄື່ອງນຸ່ງ ແລະ ຄ່າຈຳນວນ 1-5<br>❖ ສຶກສາອົບຮົມເດັກ<br>ພວກຫຼານຕ້ອງນຸ່ງເຄື່ອງທີ່ສະອາດ ເວລາຫຼິ້ນເປື້ອນ ຫຼື ກິນເຂົ້າໜົມບໍ່ເຊັດໃສ່ໂສ້ງ, ໃສ່ເສື້ອບໍ່ນຸ່ງເຄື່ອງປຽກຊຸ່ມ ຕາກໃຫ້ແຫ້ງກ່ອນຈຶ່ງຄ່ອຍນຸ່ງ ເມື່ອເຄື່ອງເປື້ອນໃຫ້ພໍ່ແມ່ຊັກໃຫ້ສະອາດກ່ອນຈຶ່ງນຸ່ງ | | | |

**ບົດສອນ**

- ໜ່ວຍ: ສິ່ງຕ່າງໆອ້ອມຕົວເຮົາ - ອາທິດທີ: 1 ມື້ທີ: 4
- ກິດຈະກຳ: ວົງມົນ - ຂັ້ນອະນຸບານ: 1
- ຫົວຂໍ້: ອາຫານ - ເວລາ 15 – 20 ນາທີ

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ເວລາ | ອຸປະກອນ | ປະເມີນ |
|---|---|---|---|---|---|
| | | **1. ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຄູຈັດເດັກນັ່ງເປັນລະບຽບ<br>- ຄູ ແລະ ນັກຮຽນ ເຄົາລົບເຊິ່ງກັນ ແລະ ກັນ ກວດກາຈຳນວນພົນ: ເຕັມ .........ຄົນ, ມາ.....ຄົນ ຂາດ .......ຄົນສົນທະນາກັບເດັກ ກ່ຽວກັບອາຫານທີ່ເດັກເຄີຍກິນ<br>ຄູຖາມເດັກພວກຫຼານເຄີຍກິນ ອາຫານຫຍັງແດ່?<br>- ເດັກຕອບ | 5 ນາທີ | ບົດເພງ ອາຫານຂອງຂ້ອຍ | |
| ເພື່ອໃຫ້ເດັກສາມາດຮ້ອງເພງອາຫານຂອງຂ້ອຍພ້ອມທັງປະກອບທ່າທາງ | ການຮ້ອງເພງອາຫານຂອງຂ້ອຍພ້ອມທັງປະກອບທ່າທາງ | **2. ຂັ້ນດຳເນີນການສອນ**<br>ຄູສະເໜີບົດຮຽນທີ່ຈະພາເດັກ ຮຽນມື້ນີ້ສາວຄູຈະພາພວກຫຼານຮຽນກ່ຽວກັບ" ອາຫານ "ຄູຮ້ອງເພງ ອາຫານຂອງຂ້ອຍ ໃຫ້ເດັກຟັງ 2-3 ເທື່ອ | 10 ນາທີ | -ຮູບພາບ: ໄຂ່, ຊີ້ນ ຜັກ, ປາ ເຂົ້າໜົມ ໝາກໄມ້ | -ສັງເກດການຮ້ອງເພງອາຫານຂອງຂ້ອຍພ້ອມປະກອບທ່າທາງຂອງເດັກ |

| | | | | | |
|---|---|---|---|---|---|
| ເພື່ອໃຫ້ເດັກ ສາມາດບອກຊື່ອາ ຫານຢ່າງ ຖືກຕ້ອງນຳ ສາວຄູ | | ຄູພາເດັກຮ້ອງເພງ ອາຫານຂອງຂ້ອຍ ເທື່ອລະວັກ, ເທື່ອລະຕອນ<br>ຄູໃຫ້ເດັກຮ້ອງເພງພ້ອມກັນໝົດຫ້ອງຄູ<br>ຮ້ອງເພງ ອາຫານຂອງຂ້ອຍ ພ້ອມປະກອບທ່າທາງໃຫ້ເດັກເບິ່ງ 2-3<br>ເທື່ອ<br>ຄູໃຫ້ເດັກຮ້ອງເພງພ້ອມກັນ ປະກອບທ່າທາງພ້ອມກັນໝົດຫ້ອງ<br>ຄູແບ່ງເດັກອອກເປັນ 2 ກຸ່ມ ກຸ່ມ 1 ຮ້ອງເພງ, ກຸ່ມ 2 ປະກອບທ່າທາງ ໂດຍໃຫ້ແຕ່ລະກຸ່ມຜັດປ່ຽນກັນ<br>ຄູຕິດຕາຊ່ວຍເຫຼືອເດັກ<br>ຄູຊົມເຊີຍເດັກ<br>ຄູເອົາຮູບພາບ: ໄຂ່, ຊີ້ນ, ຜັກປາ, ເຂົ້າ, ໝາກໄມ້ ແລະ ເຂົ້າໜົມມາໃຫ້ເດັກສັງເກດກ່ອນ<br>ຄູສົນທະນາກັບເດັກກ່ຽວກັບຊື່ອາຫານໄຂ່, ຊີ້ນ, ຜັກ, ປາ, ເຂົ້າ, ໝາກໄມ້ ແລະ ເຂົ້າໜົມ<br>ຄູໃຫ້ເດັກອາສາສະໝັກອອກມາບອກຊື່ອາຫານ ໃຫ້ໝູ່ຟັງ 2-3 ຄົນຄູຕິດຕາມຊ່ວຍເຫຼືອ<br>**3. ຂັ້ນສະຫຼຸບ**<br>ຄູຖາມເດັກຄືນກ່ຽວກັບບົດຮຽນທີ່ຮຽນມາ<br>ຄູໃຫ້ເດັກຕອບຄືນກ່ຽວກັບຊື່ຂອງອາຫານ ແລະ ຮ້ອງເພງ<br>ຄູຍ້ອງຍໍຊົມເຊີຍ | 5 ນາທີ | | 10 ສັງເກດ ການບອກຊື່ ອາຫານຂອງ ເດັກ |

| | | | | | |
|---|---|---|---|---|---|
| | | ❖ **ສຶກສາອົບຮົມເດັກ**<br>ກ່ອນທີ່ພວກຫຼານຈະກິນ ຜັກ ຫຼື ໝາກໄມ້ຕ້ອງລ້າງໃຫ້ ສະອາດກ່ອນຈິ່ງກິນ, ພວກ ຫຼານບໍ່ຄວນກິນຊີ້ນດິບ, ປາ ດິບຖ້າຈະກິນຕົວຢ່າງ: ລາບ ປາ, ມ່າເພັຍຊີ້ນ ຕ້ອງຂົ້ວ ກ່ອນຈິ່ງກິນ ຖ້າເຮົາກິນດິບ ຈະເກີດແມ່ທ້ອງຫຼາຍຊະນິດ | | | |

## ບົດສອນ

- ໜ່ວຍ: ສິ່ງຕ່າງໆອ້ອມຕົວເຮົາ - ອາທິດທີ: 1 ມື້ທີ: 5
- ກິດຈະກໍາ: ວົງມົນ - ຂັ້ນອະນຸບານ: 1
- ຫົວຂໍ້: ເຄື່ອງດື່ມ - ເວລາ 15 – 20 ນາທີ

| ຈຸດປະສົງ | ເນື້ອໃນ | ກິດຈະກໍາ | ເວລາ | ອຸປະກອນ | ປະເມີນ |
|---|---|---|---|---|---|
| | | **1. ຂັ້ນນໍາເຂົ້າສູ່ບົດຮຽນ**<br>ຄູຈັດເດັກນັ່ງເປັນລະບຽບ ພາເດັກສ້າງບັນຍາກາດ ຮ້ອງເພງອາຫານຂອງຂ້ອຍພ້ອມ ປະກອບທ່າທາງ 1-2 ເທື່ອ<br>• ທວນຄືນບົດຮຽນເກົ່າ: ອາຫານທີ່ພວກຫຼານເຄີຍກິນມີ ຫຍັງແດ່?<br>ເດັກຕອບ: : ໄຂ່, ຊີ້ນ, ຜັກ ປາ, ເຂົ້າ, ໝາກໄມ້ ແລະ ເຂົ້າໜົມ | 5 ນາທີ | | |
| 11 ເພື່ອໃຫ້ ເດັກສາມາດບອກ ຊື່ເຄື່ອງ ດື່ມນໍາສາວຄູໄດ້ | 12 ຊື່ເຄື່ອງດື່ມ: ນໍ້າຕົ້ມ, ນໍ້າເຕົ້າຮູ້ , ນໍ້າໝາກກ້ຽງ, ນໍ້າໝາກພ້າວ, ນົມ | **2. ຂັ້ນດໍາເນີນການສອນ**<br>ຄູສະເໜີບົດຮຽນທີ່ຈະພາ ເດັກຮຽນມື້ນີ້ສາວຄູຈະພາພວກ ຫຼານຮຽນກ່ຽວກັບ" ເຄື່ອງດື່ມ "<br>ຄູເອົາຮູບພາບເຄື່ອງດື່ມ ( ນໍ້າ ຕົ້ມ, ນໍ້າເຕົ້າຮູ້, ນໍ້າໝາກກ້ຽງ, ນໍ້າ ໝາກພ້າວ, ນົມ) ມາໃຫ້ເດັກ ສັງເກດກ່ອນ<br>ຄູສົນທະນາກັບເດັກກ່ຽວ ເຄື່ອງດື່ມ:ນໍ້າຕົ້ມ, ນໍ້າເຕົ້າຮູ້, ນໍ້າ | 10 ນາທີ | ຮູບພາບ ເຄື່ອງດື່ມ ນໍ້າຕົ້ມ, ນໍ້າ ເຕົ້າຮູ້, ນໍ້າ ໝາກກ້ຽງ, ນໍ້າໝາກ ພ້າວ,ນົມ | 13 ສັງເກດ ການບອກຊື່ ເຄື່ອງດື່ມ ຂອງເດັກ<br><br>14 ສັງເກດ ການບອກ ຕໍາແໜ່ງລຸ່ມ |

| | | | | | |
|---|---|---|---|---|---|
| ເພື່ອໃຫ້ເດັກສາມາດ: ເວົ້າເປັນຄຳຕາມຮູບພາບນ້ຳດື່ມ, ຊີ້ນ, ໄຂ່ນຳສາວຄູໄດ້ | ການເວົ້າເປັນຄຳຕາມຮູບພາບ: ນ້ຳດື່ມ, ຊີ້ນ ແລະ ໄຂ່ | ໝາກກ້ຽງ, ນ້ຳໝາກພ້າວ, ນົມ<br>ຄູໃຫ້ເດັກອອກມາບອກຊື່ເຄື່ອງດື່ມເທື່ອລະຄົນ<br>ຄູໃຫ້ເດັກອາສາສະໝັກອອກມາບອກຊື່ເຄື່ອງດື່ມໃຫ້ໝູ່ຟັງ 2-3 ຕາມເວລາທີ່ກຳນົດ<br>ຄູຊົມເຊີຍເດັກ<br>ຄູເອົາຮູບພາບ: ນ້ຳດື່ມ, ຊີ້ນ ແລະ ໄຂ່, ມາໃຫ້ເດັກສັງເກດ<br>ຄູໃຫ້ເດັກເວົ້າເປັນຄຳຕາມຮູບພາບ: ນ້ຳດື່ມ, ຊີ້ນ ແລະ ໄຂ່<br>ຄູຕິດຕາມຊ່ວຍເຫຼືອເດັກ<br>ຄູຊົມເຊີຍເດັກ<br>**3. ຂັ້ນສະຫຼຸບ**<br>ຄູຖາມເດັກກ່ຽວກັບບົດຮຽນທີ່ຮຽນມາ<br>ຄູໃຫ້ເດັກເວົ້າຄືນກ່ຽວກັບຊື່ເຄື່ອງດື່ມ, ການເວົ້າເປັນຄຳຕາມຮູບພາບ<br>ຍ້ອງຍໍຊົມເຊີຍເດັກ<br>❖ ສຶກສາອົບຮົມເດັກ<br>ພວກເຮົາທຸກຄົນຕ້ອງດື່ມນ້ຳທີ່ສະອາດ, ຖ້າພວກຫຼານຊິດື່ມຕ້ອງເບິ່ງກ່ອນວ່າມັນສະອາດ ຫຼື ບໍ່ຖ້າສະອາດຈິ່ງດື່ມ ແລະ ເຄື່ອງດື່ມກໍ່ຄືກັນຕ້ອງໃຫ້ພໍ່ແມ່ເບິ່ງກ່ອນຈິ່ງດື່ມເພາະຢ້ານມັນໝົດກຳນົດ | 5 ນາທີ | | , ເທິງ, ນອກ, ໃນ<br>ສັງເກດການເວົ້າເປັນຄຳຕາມຮູບພາບ ນ້ຳດື່ມ, ຊີ້ນ, ໄຂ່ຂອງເດັກ |

9.3 ແຕ່ງບົດສອນຂັ້ນອະນຸບານ 2

**ກິດຈະກຳວົງມົນ**

ໜ່ວຍ ບ້ານຂອງຂ້ອຍ.     ອາທິດທີ 1 ມື້ທີ 1

**ຫົວຂໍ້: ບ້ານ ແລະ ເມືອງ**

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ຂອງບ້ານ, ເມືອງທີ່ເດັກອາໄສຢູ່ຢ່າງຖືກຕ້ອງ ແລະ ຮ້ອງເພງບ້ານຂອງເຮົາຕາມຈັງຫວະ.
2. ບອກຮູບຮ່າງລັກສະນະຕົວພະຍັນສະນະທີ່ຄ້າຍຄືກັນ ຢ່າງຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

1. ຊື່ບ້ານ, ເມືອງທີ່ເດັກອາໄສຢູ່ ແລະ ການຮ້ອງເພງ ບ້ານຂອງເຮົາຕາມຈັງຫວະ
2. ຮູບຮ່າງລັກສະນະພະຍັນສະນະທີ່ຄ້າຍຄືກັນໃນຮູບພາບ: ຂ ຊ ດ ຕ ບ ປ.

## III. ສື່ການຮຽນ-ການສອນ

1. ຕົວເດັກ, ບົດເພງ ບ້ານຂອງເຮົາ(ເບິ່ງປຶ້ມຄູ່ມືຄູ) ແລະ ເຄື່ອງເຄາະຈັງຫວະ.
2. ຮູບພາບ: ໝູ່ບ້ານ ແລະ ພະຍັນສະນະທີ່ຄ້າຍຄືກັນໃນຮູບພາບ: ຂ ຊ ດ ຕ ບ ປ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການປະຕິບັດຕົນໃນການມາໂຮງຮຽນ.
2. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາກັບເດັກກ່ຽວກັບຊື່ບ້ານ ແລະ ຊື່ເມືອງທີ່ເດັກອາໄສຢູ່.
3. ໃຫ້ເດັກບອກຊື່ບ້ານ ແລະ ຊື່ເມືອງທີ່ເດັກອາໄສຢູ່.
4. ໃຫ້ເດັກຮ້ອງເພງຕາມຈັງຫວະ ແລະ ຄູສົນທະນາກ່ຽວກັບເນື້ອໃນບົດເພງ.
5. ໃຫ້ເດັກສັງເກດຮູບພາບ: ຕົວພະຍັນຊະນະ, ບອກຮູບຮ່າງລັກສະນະຂອງພະຍັນສະນະຄ້າຍຄືກັນ: ຂ ຊ ດ ຕ ບ ປ.
6. ໃຫ້ເດັກເວົ້າຄືນກ່ຽວກັບຊື່ບ້ານ, ເມືອງທີ່ເດັກອາໄສຢູ່, ຮ້ອງເພງຄືນ, ຄູເວົ້າຊື່ບ້ານ, ເມືອງແລ້ວໃຫ້ເດັກລຸກຂຶ້ນໃຫ້ຖືກຕາມຊື່ທີ່ຄູເວົ້າທີ່ຕົນເອງອາໄສຢູ່ ແລະ ບອກຮູບຮ່າງລັກສະນະຂອງພະຍັນຊະນະຄ້າຍຄືກັນ.
7. ສຶກສາອົບຮົມເດັກກ່ຽວກັບການຮັກສາອະນາໄມ: ປັດກວາດເດີນບ້ານ ແລະ ຖິ້ມຂີ້ເຫຍື້ອໃສ່ກະຕ່າ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ຂອງບ້ານ ແລະ ເມືອງທີ່ເດັກອາໄສຢູ່ ແລະ ການຮ້ອງເພງຕາມຈັງຫວະ.
2. ຄວາມຖືກຕ້ອງໃນການບອກຮູບຮ່າງລັກສະນະຂອງພະຍັນຊະນະທີ່ຄ້າຍຄືກັນ.

**ຂ. ຕົວຢ່າງບົດສອນແບບຮຽງຄວາມຂັ້ນອະນຸບານ 2**

**ໜ່ວຍ: ບ້ານຂອງຂ້ອຍ ອາທິດທີ່ 1 ມື້ທີ່ 1.**

**ກິດຈະກໍາວົງມົນ: ເວລາ 20-25 ນາທີ.**

**ຫົວຂໍ້: ບ້ານ ແລະ ເມືອງ.**

## I. ຈຸດປະສົງ:

**ເພື່ອໃຫ້ເດັກສາມາດ:**

1. ບອກຊື່ຂອງບ້ານ, ເມືອງທີ່ເດັກອາໄສຢູ່ ຢ່າງຖືກຕ້ອງ ແລະ ຮ້ອງເພງ ຕາມຈັງຫວະ.
2. ບອກຮູບຮ່າງລັກສະນະທີ່ຄ້າຍຄືກັນຢ່າງຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ:

1. ຊື່ບ້ານ ແລະ ເມືອງທີ່ເດັກອາໄສຢູ່ ແລະ ຮ້ອງເພງບ້ານຂອງເຮົາ.
2. ບອກຮູບຮ່າງລັກສະນະຕົວພະຍັນຊະນະທີ່ຄ້າຍຄືກັນ ຂ, ຊ, ດ, ຕ ແລະ ບ ປ.

## III. ສື່ການຮຽນ-ການສອນ:

1. ຕົວເດັກ, ບົດເພງ ບ້ານຂອງເຮົາ ແລະ ເຄື່ອງເຄາະຈັງຫວະ.
2. ຮູບພາບ ໝູ່ບ້ານ; ບັດພະຍັນຊະນະປະກອບຮູບພາບ: ຂ ຊ, ດ ຕ ແລະ ບ ປ.

## IV. ກິດຈະກໍາການຮຽນ-ການສອນ

**1. ຂັ້ນນໍາເຂົ້າສູ່ບົດຮຽນ**

- ຈັດເດັກເຂົ້າສູ່ລະບຽບ
- ຄູກັບເດັກທັກທາຍສະບາຍດີເຊິ່ງກັນ ແລະ ກັນ.
- ຄູພາເດັກສ້າງບັນຍາກາດດ້ວຍການສົນທະນາຖາມ-ຕອບກັບເດັກກ່ຽວກັບການມາໂຮງຮຽນຂອງເດັກເຊັ່ນ: ຫຼານມາໂຮງຮຽນຈັກໂມງ? ໃຜມາສົ່ງຫຼານ? ໝູ່ເພື່ອນຢູ່ບ້ານດຽວກັນທີ່ມາຮຽນນໍາກັນຢູ່ໃນຫ້ອງມີໃຜແດ່? ໃຫ້ເດັກຕອບ 1-2 ຄົນ.
- ທວນຄືນບົດຮຽນເກົ່າ

**2. ຂັ້ນດໍາເນີນການສອນ**

- ຄູສະເໜີກິດຈະກໍາທີ່ຈະຮຽນໃນຊົ່ວໂມງນີ້ໃຫ້ເດັກຟັງ
- • ຄູຍົກຮູບພາບໝູ່ບ້ານໃຫ້ເດັກສັງເກດ ຈາກນັ້ນ ຄູສົນທະນາຖາມ-ຕອບຮ່ວມກັນກັບເດັກເຖິງຊື່ບ້ານ ແລະ ຊື່ເມືອງທີ່ເດັກອາໄສຢູ່ຕາມລໍາດັບຄໍາຖາມເຊັ່ນ: ຫຼານອາໄສຢູ່ບ້ານໃດ? ເມືອງໃດ?
- ໃຫ້ເດັກຕອບຄໍາຖາມຄູເທື່ອລະຄົນກ່ຽວກັບຊື່ບ້ານ ຊື່ເມືອງຂອງຕົນເອງທີ່ອາໄສຢູ່.
- ຄູເປັນຜູ້ຕິດຕາມ ແລະ ແນະນໍາຄໍາຕອບຊ່ວຍເດັກ.
- • ຄູສະເໜີຊື່ບົດເພງ ບ້ານຂອງເຮົາໃຫ້ເດັກຮູ້ກ່ອນ.
- ຄູຮ້ອງເພງໃຫ້ເດັກຟັງກ່ອນ 1-2 ຄັ້ງ
- ຄູພາເດັກຮ້ອງເພງເທື່ອລະວັກ, ລະຕອນພ້ອມທັງປະກອບທ່າທາງໃຫ້ເດັກຮ້ອງ ແລະ ເຮັດຕາມຈົນຈົບເພງ.

- ຄູໃຫ້ເດັກຮ້ອງເພງພ້ອມກັນໝົດຫ້ອງ ໂດຍແມ່ນຄູເປັນຜູ້ເຄາະຈັງຫວະ ພ້ອມທັງຕິດຕາມການຮ້ອງເພງຂອງເດັກ.
- ໃຫ້ເດັກຮ້ອງເພງເທື່ອລະວັກ ລະຕອນພ້ອມກັນ ແຕ່ຕົ້ນຈົນຈົບເພງ.
- ຄູແບ່ງເດັກອອກເປັນ 2 ກຸ່ມໆໜຶ່ງຮ້ອງເພງ ກຸ່ມໜຶ່ງເຮັດທ່າທາງປະກອບ ແລ້ວຜັດປ່ຽນກັນປະຕິບັດ.
- ຄູໃຫ້ອາສາສະໝັກອອກມາຮ້ອງເພງ 1-2 ຄົນ.
- ຈາກນັ້ນຄູສົນທະນາຖາມ-ຕອບກັບເດັກກ່ຽວກັບເນື້ອໃນຂອງບົດເພງຕາມລໍາດັບດັ່ງນີ້:

1) ບົດເພງທີ່ພວກຫຼານຮ້ອງນັ້ນຊື່ຫຍັງ? ແລະ ເວົ້າເຖິງຫຍັງແດ່? ໃຫ້ເດັກຕອບ 1-2 ຄົນ
2) ຢູ່ໃນບົດເພງຊາວບ້ານເພິ່ນພາກັນເຮັດຫຍັງແດ່? ໃຫ້ເດັກຕອບ 1-2 ຄົນ.
3) ເພື່ອຮັກສາໃຫ້ບ້ານຂອງພວກຫຼານມີຄວາມສະອາດພວກຫຼານຕ້ອງເຮັດແນວໃດແດ່? ໃຫ້ເດັກຕອບ 1-2 ຄົນ.

- ຄູຕິດຕາມຊ່ວຍເຫຼືອເດັກຜູ້ທີ່ເຮັດຍັງບໍ່ທັນໄດ້ດີ ແລ ຍ້ອງຍໍຊົມເຊີຍ.

- ຄູຕິດບັດພະຍັນຊະນະ ຂ ຊ, ດ ຕ, ບ ປ. ໃຫ້ເດັກສັງເກດ, ຈາກນັ້ນພາເດັກອ່ານພະຍັນຊະນະເທື່ອລະຕົວຕາມລໍາດັບ.

- ໃຫ້ເດັກບອກຮູບຮ່າງລັກສະນະຕົວພະຍັນຊະນະທີ່ຄ້າຍຄືກັນດ້ວຍການຕັ້ງຄໍາຖາມເຊັ່ນ: ຫຼານເຫັນຕົວພະຍັນຊະນະໃດທີ່ຄ້າຍຄືກັນ? ຄືກັນຢູ່ບ່ອນໃດ? ຕົວ ຂ ຊ, ດ ຕ ແລະ ບ ປ ຕາມລໍາດັບ.
- ໃຫ້ເດັກອາສາສະໝັກອອກມາບອກຮູບຮ່າງຕົວອັກສອນທີ່ຄ້າຍຄືກັນ 1-3 ຄົນ.
- ຄູເປັນຜູ້ຕິດຕາມຊ່ວຍເຫຼືອແນະນໍາຄໍາຕອບທີ່ຖືກຕ້ອງໃຫ້ເດັກ.
- ຍ້ອງຍໍຊົມເຊີຍເດັກ.

3. **ຂັ້ນສະຫຼຸບບົດຮຽນ**

- ຄູໃຫ້ເດັກຮ້ອງເພງ ບ້ານຂອງເຮົາຄືນອີກເທື່ອໜຶ່ງ ແລະ ພ້ອມທັງບອກຊື່ບ້ານ, ເມືອງຂອງຕົນເອງຄືນ.
- ໃຫ້ເດັກບອກຕົວພະຍັນຊະນະທີ່ຄ້າຍຄືກັນຄືນພ້ອມກັນໝົດຫ້ອງ.
- ຄູແນະນໍາເດັກຄືນອີກເທື່ອໜຶ່ງ ພ້ອມທັງຍ້ອງຍໍຊົມເຊີຍເດັກ.
- ສຶກສາອົບຮົມ ແລະ ມອບວຽກບ້ານໃຫ້ເດັກກ່ຽວກັບການອະນາໄມ: ຢູ່ບ້ານພວກຫຼານຄວນຮັກສາອະນາໄມ ປັດກວາດເດີ່ນບ້ານຊ່ວຍກັນ ເພື່ອເຮັດໃຫ້ບ້ານສະອາດ, ຊ່ວຍພໍ່ ແມ່, ຖິ້ມຂີ້ເຫຍື້ອໃສ່ກະຕ່າ ແລະ ປັດກວາດເຮືອນຊານໃຫ້ສະອາດຢູ່ສະເໝີ.

## V. ການວັດ ແລະ ປະເມີນຜົນ

**ສັງເກດ ແລະ ທົດສອບຄວາມເຂົ້າໃຈ:**

1. ຄວາມຖືກຕ້ອງໃນການຕອບຄໍາຖາມກ່ຽວກັບຊື່ບ້ານ, ເມືອງທີ່ເດັກອາໄສຢູ ແລະ ຮ້ອງເພງບ້ານຂອງເຮົາຕາມຈັງຫວະ.
2. ຄວາມຖືກຕ້ອຝໃນການບອກຮູບຮ່າງລັກສະນະຕົວອັກສອນທີ່ຄ້າຍຄືກັນ ຂ ຊ, ດ ຕ, ບ ປ.

ທີ່...............................................

ວັນທີ່.................ເດືອນ...............ປີ...............

ຄໍາເຫັນ ແລະ ລາຍເຊັນວິຊາການໂຮງຮຽນ　　　　　　　　ລາຍເຊັນຜູ້ແຕ່ງບົດສອນ

**ຄ. ຕົວຢ່າງບົດສອນແບບຕາຕະລາງ**

ບົດສອນແບບຕາຕະລາງແມ່ນບົດສອນທີ່ຂຽນໃສ່ຕາຕະລາງ ເຊິ່ງປະກອບມີ: ຈຸດປະສົງ, ເນື້ອໃນຕົ້ນຕໍ, ສື່ການຮຽນ-ການສອນ, ກິດຈະກຳການຮຽນ-ການສອນ, ການວັດ ແລະ ປະເມີນຜົນດັ່ງນີ້:

ຕົວຢ່າງ:

ໜ່ວຍ: ບ້ານຂອງຂ້ອຍ,  ອາທິດ 1 ມື້ທີ 1

ກິດຈະກຳວົງມົນ,  ເວລາ: 20-25 ນາທີ

ຫົວຂໍ້: ບ້ານ ແລະ ເມືອງ

| ຈຸດປະສົງ | ເນື້ອໃນຕົ້ນຕໍ | ກິດຈະກຳການຮຽນ-ການສອນ | ສື່ການສອນ | ປະເມີນຜົນ |
|---|---|---|---|---|
| ເພື່ອໃຫ້ເດັກສາມາດ:<br><br>ບອກຊື່ຂອງບ້ານ, ເມືອງທີ່ເດັກອາໄສຢູ່ ຢ່າງຖືກຕ້ອງ | ຊື່ບ້ານ ແລະ ເມືອງທີ່ເດັກອາໄສຢູ່ | **1. ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຈັດເດັກເຂົ້າສູ່ລະບຽບ<br>- ຄູກັບເດັກທັກທາຍສະບາຍດີເຊິ່ງກັນ ແລະກັນ.<br>- ຄູພາເດັກສ້າງບັນຍາກາດດ້ວຍການສົນທະນາຖາມ-ຕອບກັບເດັກກ່ຽວກັບການມາໂຮງຮຽນຂອງເດັກເຊັ່ນ: ຫຼານມາໂຮງຮຽນຈັກໂມງ? ໃຜມາສົ່ງຫຼານ? ໝູ່ເພື່ອນຢູ່ບ້ານດຽວກັນທີ່ມາຮຽນນຳກັນຢູ່ໃນຫ້ອງມີໃຜແດ່? ໃຫ້ເດັກຕອບ 1-2 ຄົນ.<br>- ທວນຄືນບົດຮຽນເກົ່າ<br>**2. ຂັ້ນດຳເນີນການສອນ**<br>- ຄູສະເໜີກິດຈະກຳທີ່ຈະຮຽນໃນຊົ່ວໂມງນີ້ໃຫ້ເດັກຟັງ<br>• ຄູຍົກຮູບພາບໝູ່ບ້ານໃຫ້ເດັກສັງເກດ ຈາກນັ້ນ ຄູສົນທະນາຖາມ-ຕອບຮ່ວມກັນກັບເດັກເຖິງຊື່ບ້ານ ແລະ ຊື່ເມືອງທີ່ເດັກອາໄສຢູ່ຕາມລຳດັບຄຳຖາມເຊັ່ນ: ຫຼານອາໄສຢູ່ບ້ານໃດ? ເມືອງໃດ?<br>- ໃຫ້ເດັກຕອບຄຳຖາມຄູເທື່ອລະຄົນກ່ຽວກັບຊື່ບ້ານ ຊື່ເມືອງຂອງຕົນເອງທີ່ອາໄສຢູ່.<br>- ຄູເປັນຜູ້ຕິດຕາມ ແລະ ແນະນຳຄຳຕອບຊ່ວຍເດັກ.<br><br>• ຄູສະເໜີຊື່ບົດເພງ ບ້ານຂອງເຮົາໃຫ້ເດັກຮູ້ກ່ອນ.<br>- ຄູຮ້ອງເພງໃຫ້ເດັກຟັງກ່ອນ 1-2 ຄັ້ງ | ຕົວເດັກ, ຮູບພາບ ໝູ່ບ້ານ | ສັງເກດ ແລະ ທົດສອບຄວາມເຂົ້າໃຈ: ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບຊື່ບ້ານ, ເມືອງທີ່ເດັກ |

| | | | | |
|---|---|---|---|---|
| ຮ້ອງເພງ ປະກອບທ່າທາງ ຕາມຈັງຫວະ. | ຮ້ອງເພງ ບ້ານຂອງເຮົາ. | - ຄູພາເດັກຮ້ອງເພງເທື່ອລະວັກ, ລະຕອນ ພ້ອມທັງປະກອບທ່າທາງໃຫ້ເດັກຮ້ອງ ແລະ ເຮັດຕາມຈົນຈົບເພງ.<br>- ຄູໃຫ້ເດັກຮ້ອງເພງພ້ອມກັນໝົດຫ້ອງ ໂດຍແມ່ນຄູເປັນຜູ້ເຄາະຈັງຫວະ ພ້ອມທັງຕິດຕາມການຮ້ອງເພງຂອງເດັກ.<br>- ໃຫ້ເດັກຮ້ອງເພງເທື່ອລະວັກ ລະຕອນພ້ອມກັນ ແຕ່ຕົ້ນຈົນຈົບເພງ.<br>- ຄູແບ່ງເດັກອອກເປັນ 2 ກຸ່ມໆໜຶ່ງຮ້ອງເພງ ກຸ່ມໜຶ່ງເຮັດທ່າທາງປະກອບ ແລ້ວຜັດປ່ຽນກັນປະຕິບັດ.<br>- ຄູໃຫ້ອາສາສະໝັກອອກມາຮ້ອງເພງ 1-2 ຄົນ.<br>- ຈາກນັ້ນຄູສົນທະນາຖາມ-ຕອບກັບເດັກກ່ຽວກັບເນື້ອໃນຂອງບົດເພງຕາມລຳດັບດັ່ງນີ້:<br>4) ບົດເພງທີ່ພວກຫຼານຮ້ອງນັ້ນຊື່ຫຍັງ? ແລະ ເວົ້າເຖິງຫຍັງແດ່? ໃຫ້ເດັກຕອບ 1-2 ຄົນ<br>5) ຢູ່ໃນບົດເພງຊາວບ້ານເພິ່ນພາກັນເຮັດຫຍັງແດ່? ໃຫ້ເດັກຕອບ 1-2 ຄົນ.<br>6) ເພື່ອຮັກສາໃຫ້ບ້ານຂອງພວກຫຼານມີຄວາມສະອາດພວກຫຼານຕ້ອງເຮັດແນວໃດແດ່? ໃຫ້ເດັກຕອບ 1-2 ຄົນ.<br>- ຄູຕິດຕາມຊ່ວຍເຫຼືອເດັກຜູ້ທີ່ເຮັດຍັງບໍ່ທັນໄດ້ດີ ແລ ຍ້ອງຍໍຊົມເຊີຍ.<br>• ຄູຕິດບັດພະຍັນຊະນະ ຂ ຊ, ດ ຕ, ບ ປ. ໃຫ້ເດັກສັງເກດ, ຈາກນັ້ນພາເດັກອ່ານພະຍັນຊະນະເທື່ອລະຕົວຕາມລຳດັບ. | ບົດເພງ ບ້ານຂອງເຮົາ ແລະ ເຄື່ອງເຄາະ ຈັງຫວະ. | ອາໄສຢູ່ ຮ້ອງເພງ ບ້ານຂອງເຮົາຕາມຈັງຫວະ. |
| ບອກຮູບຮ່າງ ລັກສະນະທີ່ຄ້າຍຄືກັນ ຢ່າງຖືກຕ້ອງ. | ບອກຮູບຮ່າງ ລັກສະນະຕົວ ພະຍັນຊະນະທີ່ຄ້າຍຄືກັນ ຂ, ຊ, ດ, ຕ ແລະ ບ ປ. | - ໃຫ້ເດັກບອກຮູບຮ່າງລັກສະນະຕົວ ພະຍັນຊະນະທີ່ຄ້າຍຄືກັນດ້ວຍການຕັ້ງຄຳຖາມເຊັ່ນ: ຫຼານເຫັນຕົວພະຍັນຊະນະໃດທີ່ຄ້າຍຄືກັນ? ຄືກັນຢູ່ບ່ອນໃດ? ຕົວ ຂ ຊ, ດ ຕ ແລະ ບ ປ ຕາມລຳດັບ.<br>- ໃຫ້ເດັກອາສາສະໝັກອອກມາບອກຮູບຮ່າງຕົວອັກສອນທີ່ຄ້າຍຄືກັນ 1-3 ຄົນ.<br>- ຄູເປັນຜູ້ຕິດຕາມຊ່ວຍເຫຼືອແນະນຳຄຳຕອບທີ່ຖືກຕ້ອງໃຫ້ເດັກ.<br>- ຍ້ອງຍໍຊົມເຊີຍເດັກ. | ບັດພະຍັນຊະນະປະກອບຮູບພາບ: ຂ ຊ, ດ ຕ ແລະ ບ ປ. | ຄວາມຖືກຕ້ອງໃນການບອກຮູບຮ່າງລັກສະນະຕົວອັກສອນທີ່ຄ້າຍຄືກັນ |

| | | | | |
|---|---|---|---|---|
| | | **1. ຂັ້ນສະຫຼຸບບົດຮຽນ**<br>- ຄູໃຫ້ເດັກຮ້ອງເພງ ບ້ານຂອງເຮົາຄືນອີກເທື່ອໜຶ່ງ ແລະ ພ້ອມທັງບອກຊື່ບ້ານ, ເມືອງຂອງຕົນເອງຄືນ.<br>- ໃຫ້ເດັກບອກຕົວພະຍັນຊະນະທີ່ຄ້າຍຄືກັນຄືນ ພ້ອມກັນໝົດຫ້ອງ.<br>- ຄູແນະນຳເດັກຄືນອີກເທື່ອໜຶ່ງ ພ້ອມທັງຍ້ອງຍໍ ຊົມເຊີຍເດັກ.<br>- ສຶກສາອົບຮົມເດັກ ແລະ ມອບວຽກບ້ານກ່ຽວກັບການອະນາໄມ: ຢູ່ບ້ານພວກຫຼານຄວນຮັກສາອະນາໄມ ປັດກວດເດີ່ນບ້ານຊ່ວຍກັນ ເພື່ອເຮັດໃຫ້ບ້ານສະອາດ, ຊ່ວຍພໍ່ ແມ່, ຖິ້ມຂີ້ເຫຍື້ອໃສ່ກະຕ່າ ແລະ ປັດກວດເຮືອນຊານໃຫ້ສະອາດຢູ່ສະເໝີ. | | ຂ ຊ, ດ ຕ, ບ ປ. |

ທີ່.................................................

ວັນທີ່..................ເດືອນ................ປີ................

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ                                        ລາຍເຊັນຜູ້ແຕ່ງບົດສອນ

9.4 ແຕ່ງບົດສອນຂັ້ນອະນຸບານ 3

- **ຕົວຢ່າງແຜນການສອນທີ່ມີໃນປື້ມແຜນຈັດປະສົບການ**

**ກິດຈະກຳວົງມົນ**

ໜ່ວຍ ຕົວຂອງຂ້ອຍ. ອາທິດທີ 1 ມື້ທີ 1

**ຫົວຂໍ້: ຊື່ ແລະ ນາມສະກຸນຕົນເອງ ແລະ ໝູ່ເພື່ອນ**

**I. ຈຸດປະສົງ**

ເພື່ອໃຫ້ເດັກສາມາດ:

1. ບອກຊື່, ນາມສະກຸນ, ເພດ, ຮູບຮ່າງລັກສະນະຂອງຕົນເອງ ແລະ ໝູ່ເພື່ອນໄດ້ຢ່າງຖືກຕ້ອງ.
2. ບອກສ່ວນປະກອບຂອງຮ່າງກາຍໄດ້ຢ່າງຖືກຕ້ອງ.
3. ປຽບທຽບຄວາມສູງກວ່າ, ຕໍ່າກວ່າ, ສູງເທົ່າກັນ, ຕຸ້ຍຈ່ອຍໄດ້ຢ່າງຖືກຕ້ອງ.
4. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ

**II. ເນື້ອໃນຕົ້ນຕໍ**

1. ຊື່, ນາມສະກຸນ, ຮູບຮ່າງລັກສະນະຕົນເອງ, ໝູ່ເພື່ອນ ແລະ ສ່ວຍປະກອບຂອງຮ່າງກາຍ

- ຊື່ ແລະ ນາມສະກຸນຕົນເອງ ແລະ ໝູ່ເພື່ອນ ທ້າວ.....ເພດຊາຍ; ນາງ.......ເພດຍິງ
- ຮູບຮ່າງລັກສະນະ: ຕຸ້ຍ, ຈ່ອຍ, ຕໍ່າ, ສູງ.
- ຮ່າງກາຍຂອງຄົນເຮົາປະກອບດ້ວຍ 3 ພາກສ່ວນ: ຫົວ, ເລົາຄີງ, ແຂນ ແລະ ຂາ

2. ການປຽບທຽບຄວາມສູງໂດຍໃຊ້ຄຳວ່າ: ຕໍ່າກວ່າ, ສູງກວ່າ, ສູງເທົ່າກັນ, ຕຸ້ຍ, ຈ່ອຍ.

## III. ສື່ການຮຽນ-ການສອນ

1. ເດັກນ້ອຍຍິງ ແລະ ເດັກນ້ອຍຊາຍຕຸ້ຍ ຈ່ອຍ ສູງ ຕ່ຳ.
2. ໂປສະເຕີຮ່າງກາຍຂອງຄົນເຮົາ
3. ບົດເພງ ເຈົ້າຊື່ຫຍັງ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ເຈົ້າຊື່ຫຍັງ.
2. ໃຫ້ເດັກນ້ອຍເວົ້າກ່ຽວກັບຊື່ ນາມສະກຸນ ເພດ ຮູບຮ່າງ ໝູ່ເພື່ອນ ແລະ ເດັກນ້ອຍໃນຫ້ອງຮຽນ
3. ໃຫ້ເດັກສັງເກດໂປສະເຕີຮ່າງກາຍຂອງຄົນ ແລ້ວບອກສ່ວນປະກອບ.
4. ໃຫ້ເດັກສັງເກດ ເດັກນ້ອຍທີ່ມີຮູບຮ່າງຈ່ອຍ ຕຸ້ຍ ຕ່ຳ ສູງ ແລ້ວປຽບທຽບ.
5. ໃຫ້ເດັກນ້ອຍເວົ້າຄືນຊື່ ນາມສະກຸນ ເພດ ແລະ ຮູບຮ່າງຂອງຕົນເອງ, ສ່ວນປະກອບປະກອບຂອງຮ່າງກາຍ ແລະ ເວົ້າເປັນຄຳສັບຕາມຮູບພາບພ້ອມກັນ.
6. ສຶກສາອົບຮົມເດັກກ່ຽວກັບຄວາມສາມັກຄີ ແລະ ການໃຊ້ຄຳເວົ້າທີ່ສຸພາບ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ ນາມສະກຸນ ເພດ ຮູບຮ່າງລັກສະນະຂອງຕົນເອງ ແລະ ໝູ່ເພື່ອນ.
2. ຄວາມຖືກຕ້ອງໃນການບອກສ່ວນປະກອບຂອງຮ່າງກາຍ.
3. ຄວາມຖືກຕ້ອງໃນການປຽບທຽບ: ຕ່ຳກວ່າ ສູງກວ່າ ສູງເທົ່າກັບ ຕຸ້ຍ ຈ່ອຍ.
4. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

**ກ. ຕົວຢ່າງບົດສອນແບບຮຽງຄວາມຂັ້ນອະນຸບານ 3**

ໜ່ວຍ: ຕົວຂອງຂ້ອຍ ອາທິດທີ່ 1 ມື້ທີ່ 1.

ກິດຈະກຳວົງມົນ:   ເວລາ 30-35 ນາທີ.

ຫົວຂໍ້:  ຊື່ ແລະ ນາມສະກຸນ, ເພດ, ຮູບຮ່າງລັກສະນະຕົນເອງ ແລະ ໝູ່ເພື່ອນ.

## I. ຈຸດປະສົງ:

**ເພື່ອໃຫ້ເດັກສາມາດ:**

1. ບອກຊື່, ນາມສະກຸນ, ເພດ, ຮູບຮ່າງລັກສະນະ ແລະ ສ່ວນປະກອບຂອງຮ່າງກາຍຕົນເອງ, ໝູ່ເພື່ອນ.
2. ປຽບທຽບຄວາມສູງໂດຍໃຊ້ຄຳວ່າ: ສູງກ່ວາ, ຕ່ຳກວ່າ.
3. ເວົ້າຄຳສຸພາບກັບໝູ່ເພື່ອນ.

## II. ເນື້ອໃນຕົ້ນຕໍ

1. ບອກຊື່, ນາມສະກຸນ, ເພດ, ຮູບຮ່າງລັກສະນະ ແລະ ສ່ວນປະກອບຂອງຮ່າງກາຍຕົນເອງ, ໝູ່ເພື່ອນ.

- ຊື່ ແລະ ນາມສະກຸນຕົນເອງ ແລະ ໝູ່ເພື່ອນ ທ້າວ.........ເພດຊາຍ; ນາງ............ເພດຍິງ.
- ຮູບຮ່າງລັກສະນະ: ຕຸ້ຍ, ຈ່ອຍ, ຕ່ຳ, ສູງ.
- ຮ່າງກາຍຂອງຄົນເຮົາປະກອບດ້ວຍ 3 ພາກສ່ວນ: ຫົວ, ເລົາຄີງ, ແຂນແລະຂາ.

2. ການປຽບທຽບຄວາມສູງໂດຍໃຊ້ຄຳວ່າ: ຕ່ຳກວ່າ, ສູງກວ່າ, ສູງເທົ່າກັນ.

## III. ສື່ການຮຽນ-ການສອນ

1. ເດັກນ້ອຍຍິງ ແລະ ເດັກນ້ອຍຊາຍຕຸ້ຍ, ຈ່ອຍ, ສູງ, ຕ່ຳ.
2. ໂປສະເຕີຮ່າງກາຍຂອງຄົນ.

## IV. ກິດຈະກຳການຮຽນ-ການສອນ

### 1. ຂັ້ນນຳເຂົ້າສູ່ບົດຮຽນ

- ຈັດເດັກເຂົ້າສູ່ລະບຽບ
- ກວດກາຈຳນວນພົນ
- ຄູແນະນຳຊື່ ແລະ ເພດຂອງຄູໃຫ້ເດັກຮູ້
- ຄູສົນທະນາກັບເດັກກ່ຽວກັບການມາໂຮງຮຽນ

### 2. ຂັ້ນດຳເນີນການສອນ

- ຄູສະເໜີກິດຈະກຳ ແລະ ຫົວຂໍ້ທີ່ຈະຮຽນໃນຊົ່ວໂມງນີ້ໃຫ້ເດັກຟັງ
- ຄູສົນທະນາກັບເດັກດ້ວຍການຕັ້ງຄຳຖາມສົນທະນາຖາມ-ຕອບກ່ຽວກັບຊື່ ແລະ ເພດຂອງເດັກໃນຫ້ອງຮຽນ
- ຄູໃຫ້ເດັກແຕ່ລະຄົນບອກຊື່ ແລະ ເພດຂອງຕົນເອງໃຫ້ຄູ ແລະ ໝູ່ເພື່ອນໃນຫ້ອງຟັງ
- ຄູຍົກໂປສະເຕີຮ່າງກາຍຂອງຄົນໃຫ້ເດັກສັງເກດ
- ຄູໃຫ້ເດັກຊີ້ໃສ່ແຕ່ລະພາກສ່ວນຂອງຮ່າງກາຍພ້ອມທັງຕັ້ງຄຳຖາມສົນທະນາກັບເດັກໄປພ້ອມ.
- ຍ້ອງຍໍຊົມເຊີຍເດັກ.
- ຄູເອົາເດັກນ້ອຍສອງຄົນທີ່ມີຮູບຮ່າງຈ່ອຍ ຕຸ້ຍ ຕ່ຳ ສູງ ມາຢືນຮຽງກັນໃຫ້ໝູ່ເພື່ອນໃນຫ້ອງສັງເກດ ແລະ ປຽບທຽບແລ້ວໃຫ້ບອກຮູບຮ່າງຂອງໝູ່ໂດຍໃຊ້ຄຳວ່າ: ຕ່ຳກວ່າ ສູງກວ່າ  ສູງເທົ່າກັນ.
- ຈາກນັ້ນໃຫ້ເດັກແຕ່ລະຄົນບອກຮູບຮ່າງຂອງຕົນເອງ.
- ຍ້ອງຍໍຊົມເຊີຍເດັກ.

### 3. ຂັ້ນສະຫຼຸບບົດຮຽນ

- ຄູ ແລະ ເດັກພ້ອມກັນສະຫຼຸບບົດຮຽນທີ່ຮຽນຜ່ານມາດ້ວຍຄູຕັ້ງຄຳຖາມວ່າຄູໃຫ້ພວກຫຼານເຮັດຫຍັງແດ່ ແລະ ເວົ້າເຖິງຫຍັງແດ່? ໃຫ້ເດັກຕອບ

  \+ ວັດຜົນ: ໃຫ້ເດັກນ້ອຍອາສາສະໝັກອອກມາເວົ້າຊື່ ນາມສະກຸນ ເພດ ແລະ ຮູບຮ່າງຂອງຕົນເອງຄືນ.

  \+ ສຶກສາອົບຮົມ: ໃຫ້ເດັກມີຄວາມສາມັກຄີຮັກແພງຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ເວົ້າຄຳສຸພາບກັບໝູ່ເພື່ອນ ແລະ ໝັ່ນອະນາໄມຮ່າງກາຍຂອງຕົນເອງໃຫ້ມີຄວາມສະອາດທຸກມື້ໆ.

## V. ການວັດ ແລະ ປະເມີນຜົນ

**ສັງເກດ ແລະ ທົດສອບຄວາມເຂົ້າໃຈ:**

- ການບອກຊື່ ນາມສະກຸນ ເພດ ຮູບຮ່າງລັກສະນະ ສ່ວນປະກອບຂອງຮ່າງກາຍຂອງຕົນເອງ ແລະ ໝູ່ເພື່ອນ.

- ການປຽບທຽບໂດຍໃຊ້ຄຳວ່າ: ຕ່ຳກວ່າ ສູງກວ່າ ສູງເທົ່າກັນ.
- ການໃຊ້ຄຳທີ່ສຸພາບເວົ້າກັບໝູ່ເພື່ອນ.

ທີ່.................................................

ວັນທີ່.................ເດືອນ...............ປີ................

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ ລາຍເຊັນຜູ້ແຕ່ງບົດສອນ

- **ຕົວຢ່າງບົດສອນແບບຕາຕະລາງ**

ບົດສອນແບບຕາຕະລາງແມ່ນບົດສອນທີ່ຂຽນໃສ່ຕາຕະລາງ ເຊິ່ງປະກອບມີ: ຈຸດປະສົງ, ເນື້ອໃນຕົ້ນຕໍ, ສື່ການຮຽນ-ການສອນ, ກິດຈະກຳການຮຽນ-ການສອນ, ການວັດ ແລະ ປະເມີນຜົນດັ່ງນີ້:

ຕົວຢ່າງ:

ໜ່ວຍ: ຕົວຂອງຂ້ອຍ, ອາທິດ 1 ມື້ທີ 1

ກິດຈະກຳວົງມົນ, ເວລາ: 30-35 ນາທີ

ຫົວຂໍ້: ຊື່ ນາມສະກຸນ ເພດ ຮູບຮ່າງລັກສະນະຂອງຕົນເອງ ແລະ ໝູ່ເພື່ອນ.

| ຈຸດປະສົງ | ເນື້ອໃນຕົ້ນຕໍ | ກິດຈະກຳການຮຽນ-ການສອນ | ສື່ການສອນ | ປະເມີນຜົນ |
|---|---|---|---|---|
| **ເພື່ອໃຫ້ເດັກສາມາດ:**<br><br>1.ບອກຊື່, ນາມສະກຸນ, ເພດ,ຮູບຮ່າງລັກສະນະ ແລະສ່ວນປະກອບຂອງຮ່າງກາຍຕົນເອງ,ໝູ່ເພື່ອນ.<br>2.ປຽບທຽບ | - ບອກຊື່ ນາມສະກຸນ, ເພດ, ຮູບຮ່າງລັກສະນະ ແລະ ສ່ວນປະກອບຂອງຮ່າງກາຍຕົນເອງ, ໝູ່ເພື່ອນ. | **1. ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຈັດເດັກເຂົ້າສູ່ລະບຽບ<br>- ກວດກາຈຳນວນພົນ<br>- ຄູແນະນຳຊື່ ແລະ ເພດຂອງຄູໃຫ້ເດັກຮູ້<br>- ຄູສົນທະນາກັບເດັກກ່ຽວກັບການມາໂຮງຮຽນ<br>**2. ຂັ້ນດຳເນີນການສອນ**<br>- ຄູສະເໜີກິດຈະກຳ ແລະ ຫົວຂໍ້ທີ່ຈະຮຽນໃນຊົ່ວໂມງນີ້ໃຫ້ເດັກຟັງ<br>- ຄູສົນທະນາກັບເດັກດ້ວຍການຕັ້ງຄຳຖາມສົນທະນາຖາມ-ຕອບກ່ຽວກັບຊື່ ແລະ ເພດຂອງເດັກໃນຫ້ອງຮຽນ<br>- ຄູໃຫ້ເດັກແຕ່ລະຄົນບອກຊື່ ແລະ ເພດຂອງຕົນເອງໃຫ້ຄູ ແລະ ໝູ່ເພື່ອນໃນຫ້ອງຟັງ<br>- ຄູຍົກໂປສະເຕີຮ່າງກາຍຂອງຄົນໃຫ້ເດັກສັງເກດ<br>- ຄູໃຫ້ເດັກຊີ້ໃສ່ແຕ່ລະພາກສ່ວນຂອງຮ່າງກາຍພ້ອມທັງຕັ້ງຄຳຖາມສົນທະນາກັບເດັກ | ເດັກນ້ອຍຍິງ ແລະ ເດັກນ້ອຍຊາຍຕຸ້ຍ, ຈ່ອຍ, ສູງ, ຕ່ຳ.<br>2.ໂປສະເຕີຮ່າງກາຍຂອງຄົນ. | ສັງເກດ ແລະ ທົດສອບຄວາມເຂົ້າໃຈ:<br>+ການບອກຊື່ ນາມສະກຸນ ເພດ ຮູບຮ່າງລັກສະນະ |

| | | | | |
|---|---|---|---|---|
| ຄວາມສູງໂດຍ ໃຊ້ຄຳວ່າ: ສູງກ່ວາ,ຕ່ຳກວ່າ.<br>3.ເວົ້າຄຳສຸພາບກັບໝູ່ເພື່ອນ.<br>3 ບອກຮູບຮ່າງລັກສະນະທີ່ຄ້າຍຄືກັນຢ່າງຖືກຕ້ອງ. | - ຊື່ ແລະ ນາມສະກຸນ ຕົນເອງ ແລະ ໝູ່ເພື່ອນ ທ້າວ .........ເພດ ຊາຍ; ນາງ ............ເພດ ຍິງ.<br>- ຮູບຮ່າງລັກສະນະ: ຕຸ້ຍ, ຈ່ອຍ, ຕ່ຳ, ສູງ.<br>- ຮ່າງກາຍຂອງຄົນເຮົາປະກອບດ້ວຍ 3 ພາກສ່ວນ: ຫົວ, ເລົາຄີງ, ແຂນແລະຂາ.<br>- ການປຽບທຽບຄວາມສູງໂດຍ ໃຊ້ຄຳວ່າ: ຕ່ຳກວ່າ, ສູງກວ່າ, ສູງເທົ່າກັນ. | ໄປພ້ອມ.<br>- ຍ້ອງຍໍຊົມເຊີຍເດັກ.<br>- ຄູເອົາເດັກນ້ອຍສອງຄົນທີ່ມີຮູບຮ່າງຈ່ອຍ ຕຸ້ຍ ຕ່ຳ ສູງ ມາຢືນຮຽງກັນໃຫ້ໝູ່ເພື່ອນໃນຫ້ອງສັງເກດ ແລະ ປຽບທຽບແລ້ວໃຫ້ບອກຮູບຮ່າງຂອງໝູ່ໂດຍໃຊ້ຄຳວ່າ: ຕ່ຳກວ່າ ສູງກວ່າ ສູງເທົ່າກັນ.<br>- ຈາກນັ້ນໃຫ້ເດັກແຕ່ລະຄົນບອກຮູບຮ່າງຂອງຕົນເອງ.<br>- ຍ້ອງຍໍຊົມເຊີຍເດັກ.<br>**2. ຂັ້ນສະຫຼຸບບົດຮຽນ**<br>- ຄູ ແລະ ເດັກພ້ອມກັນສະຫຼຸບບົດຮຽນທີ່ຮຽນຜ່ານມາດ້ວຍຄູຕັ້ງຄຳຖາມວ່າຄູໃຫ້ພວກຫຼານເຮັດຫຍັງແດ່ ແລະ ເວົ້າເຖິງຫຍັງແດ່? ໃຫ້ເດັກຕອບ<br>**+ ວັດຜົນ:** ໃຫ້ເດັກນ້ອຍອາສາສະໝັກອອກມາເວົ້າຊື່ ນາມສະກຸນ ເພດ ແລະ ຮູບຮ່າງຂອງຕົນເອງຄືນ.<br>**+ ສຶກສາອົບຮົມ:** ໃຫ້ເດັກມີຄວາມສາມັກຄີຮັກແພງຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ເວົ້າຄຳສຸພາບກັບໝູ່ເພື່ອນ ແລະ ໝັ່ນອະນາໄມຮ່າງກາຍຂອງຕົນເອງໃຫ້ມີຄວາມສະອາດທຸກມື້ໆ. | | ສ່ວນປະກອບຂອງຮ່າງກາຍຂອງຕົນເອງ ແລະ ໝູ່ເພື່ອນ<br>+ການປຽບທຽບໂດຍໃຊ້ຄຳວ່າ: ຕ່ຳກວ່າ ສູງກວ່າ ສູງເທົ່າກັນ.<br>+ ການໃຊ້ຄຳທີ່ສຸພາບເວົ້າກັບໝູ່ເພື່ອນ. |

ທີ່.................................................

ວັນທີ່.................ເດືອນ...............ປີ...............

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ                    ລາຍເຊັນຜູ້ແຕ່ງບົດສອນ

## 10. ການຜະລິດສື່ການສອນ

ຫຼັກການຜະລິດອຸປະກອນ: ຕ້ອງມີຈຸດປະສົງຢ່າງຈະແຈ້ງ ການອອກແບບອຸປະກອນຕ້ອງແຕ່ງ່າຍຫາຍາກ ອຸປະກອນແຕ່ລະຢ່າງຕ້ອງມີການພົວພັນກັນຢ່າງຕໍ່ເນື່ອງ ອຸປະກອນອອກແບບເປັນລຳລັບ, ອຸປະກອນຕ້ອງຮັບປະກັນສ້ອມແປງເອງໄດ້.

### 1) ຜະລິດຕົວພະຍັນຊະນະ ແລະ ສະຫຼະລາວ





1) ຜະລິດຕົວອັກສອນຊາ ພາສາອັງກິດແຕ່ A – Z ແລະ ສະຫຼະ ພາສາອັງກິດ



1) ຜະລິດຖົງໄວ້ໃສ່ອຸປະກອນ



1) ຜະລິດດອກໄມ້ດ້ວຍຜ້າໄຍບົວ



**11. ເຝິກສອນຕົວຈິງໃນຫ້ອງ ແລະ ຖອດຖອນບົດຮຽນ**

ກິດຈະກຳ ເຝິກສອນຕົວຈິງໃນກຸ່ມນ້ອຍ

ອຸປະກອນ ບົດສອນ,ອຸປະກອນປະກອບບົດສອນ

ວິທີດຳເນີນກິດຈະກຳ

- ນັກຮຽນຄູທຸກຄົນໃນກຸ່ມຜັດປ່ຽນກັນສອນຕາມບົດສອນທີ່ໄດ້ກຽມມາ.
- ນັກຮຽນຄູສັງເກດການສອນຂອງໝູ່ ແລະ ຈົດບັນທຶກ.
- ຄູຕິດຕາມສັງເກດການສອນຂອງແຕ່ລະກຸ່ມ.
- ຖອດຖອນບົດຮຽນ ແລະ ປະກອບຄຳເຫັນກ່ຽວກັບການສອນຮ່ວມກັນ.
- ແຕ່ລະກຸ່ມລາຍງານຜົນການສອນຕົວຈິງ.
- ຄູສັງລວມ, ແນະນຳເພີ່ມເຕີມອີກ.

**ເຝິກການສອນຕົວຈິງຜ່ານກຸ່ມໃຫຍ່ໝົດຫ້ອງ**

ກິດຈະກຳ   ການສອນຕົວຈິງຜ່ານຫ້ອງ

ອຸປະກອນ   ບົດສອນ, ອຸປະກອນປະກອບບົດສອນ

ວິທີດຳເນີນກິດຈະກຳ

- ຄູໃຫ້ນັກຮຽນຄູຜັດປ່ຽນກັນສອນ.
- ນັກຮຽນຄູທີ່ຍັງບໍ່ໄດ້ສອນສັງເກດ ແລະ ຈົດບັນທຶກ.
- ຖອດຖອນບົດຮຽນຮ່ວມກັນ.
- ຄູສະຫຼຸບ ແລະ ແນະນຳເພີ່ມເຕີມ.
- ໃຫ້ແຕ່ລະກຸ່ມເລືອກຕົວແທນເພື່ອໄປສອນທົດລອງໃນໂຮງຮຽນລ້ຽງເດັກອະນຸບານ.

**12. ເຝິກສອນຕົວຈິງກັບເດັກໃນໂຮງຮຽນລ້ຽງເດັກ-ອະນຸບານ  ແລະ ຖອດຖອນບົດຮຽນ**

ກິດຈະກຳ:     ການສອນຕົວຈິງໃນໂຮງຮຽນ ລ້ຽງເດັກ - ອະນຸບານ.

ອຸປະກອນ:     ບົດສອນ, ອຸປະກອນປະກອບການສອນຕົວຈິງ.

ວິທີດຳເນີນກິດຈະກຳ:

- ແບ່ງນັກຮຽນຄູເຂົ້າສອນຕົວຈິງໃນຫ້ອງຮຽນອະນຸບານຕາມແຕ່ລະຊັ້ນອາຍຸ.
- ຄູຕິດຕາມສັງເກດການສອນຂອງນັກຮຽນຄູ.
- ນັກຮຽນຄູທີ່ບໍ່ໄດ້ສອນຕິດຕາມ ແລະ ຈົດບັນທຶກການສອນ.
- ຖອດຖອນບົດຮຽນຮ່ວມກັນ.
- ຄູສະຫຼຸບແລະແນະນຳເພີ່ມເຕີມ.

**ໃຈຄວາມ**

ໃນບົດສອນໃຫ້ນັກຮຽນຄູໄດ້ຮຽນຮູ້ກ່ຽວກັບຈຸດປະສົງ,ເນື້ອໃນ,ວິທີສອນສັງເກດສິນທະນາສຳລັບເດັກ ອາຍຸ 3 ເດືອນ - 6 ປີ ແລະ ເຝິກແອບການແຕ່ງບົດສອນສຳລັບການສອນສັງເກດສິນທະນາຕັ້ງແຕ່ 3 ເດືອນ - 6 ປີ, ໄດ້ສຶກສາແບບຟອມສຳລັບການລົງໄປສັງເກດການສອນໃນໂຮງຮຽນ ລ້ຽງເດັກອະນຸບານ.

**ວຽກມອບໝາຍ**

1 ແບ່ງນັກຮຽນຄູອອກເປັນ 5 ກຸ່ມ

ກຸ່ມທີ 1 ເຝິກແອບການແຕ່ງບົດສອນສັງເກດສິນທະນາສຳລັບເດັກ 3 – 12 ເດືອນ.

ກຸ່ມທີ 2 ເຝິກແອບການແຕ່ງບົດສອນສັງເກດສິນທະນາສຳລັບເດັກ 12 – 24 ເດືອນ.

ກຸ່ມທີ 3 ເຝິກແອບການແຕ່ງບົດສອນສັງເກດສິນທະນາສຳລັບເດັກ 24 – 36 ເດືອນ.

ກຸ່ມທີ 4 ເຝິກແອບການແຕ່ງບົດສອນສັງເກດສິນທະນາສຳລັບເດັກ 3 – 4 ປີ.

ກຸ່ມທີ 5 ເຝິກແອບການແຕ່ງບົດສອນສັງເກດສິນທະນາສຳລັບເດັກ 4 – 6 ປີ.

2 ແຕ່ລະກຸ່ມສອນຜ່ານກຸ່ມຕົນເອງ.

3 ເລືອກຕົວແທນແຕ່ລະກຸ່ມສອນຜ່ານໃນຫ້ອງ.

4 ຮ່ວມກັນສັງເກດສິນທະນາ ແລະ ຖອດຖອນບົດຮຽນ.

## ວຽກເພີ່ມເຕີມທີ່ຄວນນຳໄປປະຕິບັດ

1. ໃຫ້ນັກຮຽນຄູເຝິກແອບການແຕ່ງບົດສອນສັງເກດສິນທະນາ ແຕ່ລະສົ່ງ ອາຍຸ 3-5 ປີ.
2. ກະກຽມອຸປະກອນປະກອບບົດສອນ ແລະສອນທົດລອງ.

# ບົດທີ3
# ການສອນຄໍາຄ່ອງສໍາລັບເດັກກ່ອນໄວຮຽນ

ເວລາ 18 ຊົ່ວໂມງ

| |
|---|
| ຈຸດປະສົງໃຫ້ນັກສຶກສາສາມາດ:<br>• ອະທິບາຍຄວາມໝາຍ ແລະ ຄວາມສໍາຄັນຂອງການສອນຄໍາຄ່ອງເດັກກ່ອນໄວຮຽນ<br>• ບອກຈຸດປະສົງການສອນຄໍາຄ່ອງ, ເນື້ອໃນ, ຂັ້ນຕອນ, ວິທີສອນຄໍາຄ່ອງ ແລະ ວິທີການປະເມີນການສອນຄໍາຄ່ອງ |

## 1. ອະທິບາຍຄວາມໝາຍ ແລະ ຄວາມສໍາຄັນຂອງການສອນຄໍາຄ່ອງເດັກກ່ອນໄວຮຽນ

### 1.1. ຄວາມໝາຍຂອງຄໍາຄ່ອງເດັກກ່ອນໄວຮຽນ

ຄໍາຄ່ອງແມ່ນຄໍາເວົ້າ ຫຼື ປະໂຫຍກທີ່ເກາະກ່າຍກັນ, ສໍາພັດກັນ ແລະ ຄ່ອງກັນ ເພື່ອໃຫ້ເດັກໄດ້ເຝິກທາງດ້ານພາສາ ແລະ ການພັດທະນາ ໂດຍສະເພາະແມ່ນການຟັງ, ການເວົ້າຕະຫຼອດເຖິງການສະແດງທ່າທາງຕ່າງໆອອກມາຕາມລັກສະນະ ແລະ ເນື້ອໃນຂອງຄໍາຄ່ອງ ເພື່ອຢາກໃຫ້ບັນລຸຜົນສໍາເລັດດັ່ງກ່າວຄູຕ້ອງມີຄວາມຮູ້, ໃນການແຕ່ງຄໍາຄ່ອງ, ນໍາໄປໝູນໃຊ້ໃຫ້ແທດເໝາະກັບໜ່ວຍການສອນ.

1.2. ຄວາມສໍາຄັນຂອງການສອນຄໍາຄ່ອງເດັກກ່ອນໄວຮຽນ

ການສອນຄໍາຄ່ອງໃຫ້ເດັກແມ່ນ: ເພື່ອພັດທະນາທາງດ້ານພາສາ, ການຟັງ, ເຝິກຄວາມຈໍາໃຫ້ແກ່ເດັກໄດ້ພັດທະນາທາງດ້ານອາລົມ ແລະ ຈິດໃຈ ເດັກມີຄວາມເບີກບານມ່ວນຊື່ນ, ມີຄວາມກ້າຫານ ແລະ ຊ່ວຍໃຫ້ເດັກເຂົ້າໃຈຄວາມໝາຍຂອງບົດຮຽນ.

ຄໍາຄ່ອງທີ່ຄູສາມາດຈະນໍາສອນເດັກ2 ເດັກມີ 2 ປະເພດ

## 2. ຈຸດປະສົງຂອງການສອນຄໍາຄ່ອງ

ຄໍາຄ່ອງແມ່ນຄໍາເວົ້າ ຫຼື ປະໂຫຍກທີ່ເກາະກ່າຍສໍາພັດກັນ ແລະ ຄ່ອງກັນເພື່ອໃຫ້ເດັກໄດ້ເຝິກທັກສະທາງດ້ານພາສາ ( ການເວົ້າ ແລະ ເຂົ້າໃຈກ່ຽວກັບບົດຮຽນຂອງໜ່ວຍການສອນນັ້ນໆ, ຈິ່ງມີຈຸດປະສົງ

- ເພື່ອພັດທະນາທາງດ້ານພາສາຂອງເດັກ
- ເພື່ອເຝິກທາງດ້ານການຟັງ, ການເວົ້າ ແລະ ຄວາມຈໍາໃຫ້ແກ່ເດັກ
- ເພື່ອໃຫ້ເດັກມີຄວາມເບີກບານມ່ວນຊື່ນເຊັ່ນ: ໄດ້ພັດທະນາທາງດ້ານອາລົມ ແລະ ຈິດໃຈ
- ໃຫ້ເດັກສາມາດເລົ່າຄໍາຄ່ອງປະກອບທ່າທາງຕາມຄູ ຫຼື ຈິນຕະນາການຂອງເດັກ
- ໃຫ້ເດັກມີຄວາມກ້າຫານ ແລະ ໄດ້ສະແດງທ່າທາງຕ່າງໆເວລາເລົ່າຄໍາຄ່ອງຕາມຄູ ຫຼື ຕາມຈິນຕະນາການຂອງເດັກ
- ຊ່ວຍໃຫ້ເດັກເຂົ້າໃຈຄວາມໝາຍຂອງບົດຮຽນ ແລະ ຊ່ວຍແກ້ບັນຫາຕ່າງໆຂອງເດັກໄດ້

## 3. ເນື້ອໃນການສອນຄໍາຄ່ອງ

**ຄໍາຄ່ອງທີ່ຄູເອົາມາສອນເດັກມີຢູ່ 2 ປະເພດຄື:**

- ຄໍາຄ່ອງທີ່ມີຄວາມສໍາພັນກັບໜ່ວຍການສອນ
- ຄໍາຄ່ອງທີ່ບໍ່ມີຄວາມສໍາພັນກັບໜ່ວຍການສອນ

**ປະເພດທີ1:** ເປັນຄາຄ່ອງທີ່ມີຄວາມສາພັນກັບໜ່ວຍການສອນຕາມແຜນຈັດປະສົບການທີ່ຈັດໃຫ້ເດັກ

ເຊັ່ນ:ໜ່ວຍການສອນສິ່ງແວດລ້ອມອ້ອມຂ້າງ , ຄຳຄ່ອງຕ້ອງພົວພັນກັບແມງກະເບື້ອ ທີ່ມີເນື້ອໃນເວົ້າເຖິງລັກສະນະສະເພາະຂອງແມງກະເບື້ອ ຫຼື ເວົ້າວົງຈອນຂອງແມງກະເບື້ອ

ຕົວຢ່າງ: ຄຳຄ່ອງ ( ດັກແດ້)

| | |
|---|---|
| ຂ້ອຍຄືດັກແດ້ | ເກີດໃນຝັກຫຼອກ |
| ບໍ່ອອກໄປໃສ | ອັດໄວ້ໃຫ້ແຈບ |
| ບໍ່ກິນຂອງແຊບ | ຂອງນົວແນວໃດ |
| ຂ້ອຍຢູ່ທາງໃນ | ຫຼາຍວັນຈິ່ງໃຫຍ່ |
| ພໍຂ້ອຍນັ້ນໄດ້ | ອອກປີກອອກຂາ |
| ຕົນໂຕແຂງກ້າ | ບິນອອກຝັກຫຼອກ |
| ເຫັນນົກຮ້ອງບອກ | ຢ່າກິນຂ້ອຍທ້ອນ |

**ປະເພດທີ2**: ຄຳຄ່ອງທີ່ບໍ່ມີຄວາມສຳພັນກັບໜ່ວຍການສອນ, ໝາຍຄວາມວ່າເປັນຄຳຄ່ອງຈາກໜ່ວຍຕ່າງໆສາມາດນຳມາສອນເດັກ ນອກຈາກໜ່ວຍການສອນ ແລ້ວຄູສາມາດນຳເອົາຄຳຄ່ອງດັ່ງກ່າວມາສອນເດັກໄດ້, ເພື່ອໃຫ້ເດັກໄດ້ຮຽນຮູ້ດ້ານຕ່າງໆເຊັ່ນ: ມາລະຍາດ, ຮູ້ຈັກອະນາໄມແຂ້ວ, ມື, ຮູ້ຈັກການປະພຶດຕົນຕໍ່ບຸກຄົນອ້ອມຂ້າງ, ຮູ້ຮີດຄອງປະເພນີ, ຮູ້ຮັກສາອະນາໄມ ແລະ ກ່ຽວກັບບັນຫາອື່ນໆ

ຕົວຢ່າງ: ຄູຢາກເໜັ້ນໜັກໃຫ້ເດັກຮູ້ກ່ຽວກັບການຕື່ນເດິກລຸກເຊົ້າ, ການຮັກສາອະນາໄມ, ມີຄວາມອົດທົນ ແລະ ດຸໝັ່ນໄປໂຮງຮຽນ, ຄູກໍຕ້ອງເອົາຄຳຄ່ອງທີ່ມີເນື້ອໃນັ່ງກ່າວມາສອນເດັກເຊັ່ນ:

ຕົວຢ່າງ: ຄຳຄ່ອງ ເລັບມືສະອາດ

| | |
|---|---|
| ເລັບມືຂອ້ຍ | ທັງສັ້ນທັງຂາວ |
| ມັນບໍ່ຍາວ | ບໍ່ດຳບໍ່ເປື້ອນ |
| ມືສອງເບື້ອງ | ຂອງຂ້ອຍຂາວງາມ |
| ຂ້ອຍເຮັດຕາມ | ຄຳຄູສອນສັ່ງ |

- ສຳລັບການຈັດໃຫ້ເດັກຮຽນຄຳຄ່ອງ ທີ່ບໍ່ມີຄວາມສຳພັນກັບໜ່ວຍການສອນນີ້ ຄູສາມາດເອົາມາສອນເດັກໄດ້ໃນຕອນແລງ ຫຼື ແຊກເຂົ້າໃນກິດຈະກຳອື່ນໆກໍ່ໄດ້.

ສິ່ງທີ່ຄວນເອົາໃຈໃສ່ຄຳຄ່ອງທີ່ນຳມາສອນເດັກທີ່ມີຄວາມສຳພັນ ແລະ ບໍ່ມີຄວາມສຳພັນກັບໜ່ວຍການສອນຈະຕ້ອງມີລັກສະນະດັ່ງນີ້:

ກ. ເປັນຄຳສັບທີ່ເດັກເຂົ້າໃຈງ່າຍ ແລະ ສາມາດຈົດຈຳໄດ້.

ຂ. ປະໂຫຍກສັ້ນ, ຈະແຈ້ງ ແລະ ເໝາະສົມກັບຊ່ຳອາຍຸເດັກ.

ຄ. ມີເນື້ອໃນສຶກສາເດັກແຕ່ລະດ້ານ.

## 4. ຂັ້ນຕອນຂອງການສອນຄຳຄ່ອງ

1) ສະເໜີຊື່ບົດຄຳຄ່ອງ.
2) ເລົ່າຄຳຄ່ອງປະກອບທ່າທາງຕາມເນື້ອໃນກ່ອນ 1-2 ຄັ້ງ
3) ສົນທະນາຖາມ-ຕອບຕາມເນື້ອໃນບົດຄຳຄ່ອງທີ່ໄດ້ຟັງ.
4) ເລົ່າຄຳຄ່ອງພ້ອມກັນຕາມຫຼັງຄູເທື່ອລະວັກ, ເທື່ອລະຕອນຈົນຈົບບົດຄຳຄ່ອງ.
5) ເລົ່າຄຳຄ່ອງພ້ອມກັນຈົນຈົບເພງ.
6) ເລົ່າຄຳຄ່ອງພ້ອມທັງສະແດງທ່າທາງປະກອບ.
7) ສະຫຼຸບກ່ຽວກັບເນື້ອໃນບົດຄຳຄ່ອງໂດຍຫຍໍ້ໃຫ້ເດັກນ້ອຍຟັງ.

8) ເວົ້າເປັນຄຳສັບ ແລະ ປະໂຫຍກຕາມເນື້ອໃນຄຳຄ່ອງ.

- **ຂັ້ນຕອນທີ 1 ( ສຳລັບຄູ )**
  - ຄູພາເດັກສ້າງບັນຍາກາດດ້ວຍຮູບແບຕ່າງໆເຊັ່ນ: ຮ້ອງເພງ, ຫຼິ້ນເກມ ແລະ ອື່ນໆທີ່ມີຄວາມເໝາະສົມ
  - ຄູບອກຊື່ຄຳຄ່ອງທີ່ຈະຮຽນໃຫ້ເດັກຮູ້
  - ຄູເລົ່າຄຳຄ່ອງໃຫ້ເດັກຟັງໝົດບົດກ່ອນ 1-2 ເທື່ອ
  - ຄູອະທິບາຍເນື້ອໃນຄຳຄ່ອງໂດຍຫຍໍ້ໃຫ້ເດັກຮູ້
  - ຄູສາທິດການເລົ່າຄຳຄ່ອງປະກອບທ່າທາງໃຫ້ເດັກເບິ່ງປະມານ 1 – 3 ເທື່ອ
- **ຂັ້ນຕອນທີ2 ( ສຳລັບເດັກ)**
  - ຄູເລົ່າຄຳຄ່ອງໄປເທື່ອລະວັກແລ້ວໃຫ້ເດັກເວົ້າຕາມຫຼັງຄູຈົນໝົດບົດ 2-3 ເທື່ອ
  - ຄູເລົ່າຄຳຄ່ອງປະກອບທ່າທາງໄປເທື່ອລະວັກແລ້ວ ໃຫ້ເດັກປະຕິບັດຕົວຈິງນຳຫຼັງສາວຄູ ຈົນໝົດບົດ 2-3 ເທື່ອ
  - ຄູ ແລະ ເດັກເລົ່າຄຳຄ່ອງປະກອບທ່າທາງພ້ອມກັນໝົດຫ້ອງ
  - ຄູໃຫ້ເດັກເລົ່າຄຳຄ່ອງປະກອບທ່າທາງພ້ອມກັນໝົດຫ້ອງ
  - ຄູຕິດຕາມການເລົ່າຄຳຄ່ອງຂອງເດັກ ໂດຍການຊຸກຍູ້, ຊ່ວຍເຫຼືອເດັກບາງຕອນທີ່ເດັກປະຕິບັດບໍ່ໄດ້ດີ ດັ່ງກ່າວ
  - ໃນເມື່ອເດັກຈື່ໄດ້ສ່ວນໜຶ່ງແລ້ວ ຄູໃຫ້ເດັກອອກມາເລົ່າເທື່ອລະຄົນ ໂດຍຄູໃຫ້ກຳລັງໃຈເດັກ ແລະ ຊ່ວຍເຫຼືອເດັກ ແຕ່ລະຄົນ
  - ໃຫ້ເດັກເລົ່າດ້ວຍຕົນເອງພ້ອມທັງປະກອບທ່າທາງຕາມຄູຫຼືຕາມຈິນຕະນາການຂອງເດັກ

➢ **ຂັ້ນຕອນການສະຫຼຸບ**

- **ຂັ້ນຕອນທີ 3 ( ຄູ ແລະ ເດັກ)**
  - ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນຂອງຄຳຄ່ອງທີ່ຮຽນມາເຊັ່ນ:
  - ຄູຕັ້ງຄຳຖາມວ່າ ເນື້ອໃນຂອງບົດຄຳຄ່ອງໄດ້ເວົ້າເຖິງຫຍັງແດ່ ສົນທະນາກັບເດັກ
  - ໃຫ້ເດັກສະແດງຄວາມຄວາມຄິດເຫັນ ( ຕາມຄວາມເຂົ້າໃຈ )
  - ສຶກສາເດັກໂດຍຜ່ານຄຳຄ່ອງ
  - ຄູແລະນັກຮຽນພ້ອມກັນເຮັດກິດຈະກຳ ( ການຫຼິ້ນບົດບາດສົມໝຸດ, ຮ້ອງເພງ ແລະ ຫຼິ້ນອື່ນໆຕາມ ຄວາມເໝາະສົມກັບເດັກ)

➢ **ຮູບແບບການຈັດກິດຈະກຳຄຳຄ່ອງ**

- ການຈັດກິດຈະກຳຄຳຄ່ອງມີຫຼາຍຮູບແບບ
- ຄຳຄ່ອງປະກອບການຫຼິ້ນນິ້ວມື
- ຄຳຄ່ອງປະກອບທ່າທາງ
- ຄຳຄ່ອງປະກອບຮູບພາບ
- ຄຳຄ່ອງປະກອບການແຕ້ມ
- ຄຳຄ່ອງປະກອບວັດຖຸ

## 5. ວິທີສອນຄຳຄ່ອງໃຫ້ແກ່ເດັກກ່ອນໄວຮຽນ

ກ. ການກະກຽມຂອງຄູ

- ແຕ່ງບົດຄຳຄ່ອງ
- ທຳຄວາມເຂົ້າໃຈ ໃນບົດຄຳຄ່ອງ ແລະ ຈຸດປະສົງຂອງຄຳຄ່ອງທີ່ຈະເອົາມາສອນເດັກ

- ເຝິກຊ້ອມເລົ່າຄໍາຄ່ອງປະກອບທ່າທາງ

1. **ຂັ້ນນໍາສູ່ບົດຮຽນ**

- ຄູຈັດເດັກນັ່ງເປັນລະບຽບ, ຈາກນັ້ນສາວຄູພາເດັກຮ້ອງເພງສ້າງບັນຍາກາດເພງສະບາຍດີ 1-2 ເທື່ອ

2. **ຂັ້ນດໍາເນີນການສອນ**

- ຄູສະເໜີໃຫ້ເດັກຮູ້ກ່ອນ, ມື້ນີ້ສາວຄູຈະພາພວກຫຼານເລົ່າຄໍາຄ່ອງ ບ້ານຂອງເຮົາ
- ສາວຄູສາທິດການເລົ່າຄໍາຄ່ອງບ້ານຂອງເຮົາ ເທື່ອລະວັກລະຕອນໃຫ້ເດັກຟັງ 1-2 ເທື່ອ
- ໃຫ້ເດັກໝົດທຸກຄົນເລົ່ານໍາຫຼັງສາວຄູປະມານ 2-3 ເທື່ອ
- ສາວຄູ ແລະ ເດັກເລົ່າຄໍາຄ່ອງບ້ານຂອງເຮົາພ້ອມກັນອີກ 1-2 ເທື່ອ
- ສາວຄູສາທິດເລົ່າຄໍາຄ່ອງ ບ້ານຂອງເຮົາ ພ້ອມທັງປະກອບທ່າທາງໃຫ້ເດັກເບິ່ງ 1-2 ເທື່ອ
- ໃຫ້ເດັກທັງໝົດທຸກຄົນເລົ່າຄໍາຄ່ອງປະກອບທ່າທາງນໍາຫຼັງສາວຄູປະມານ 2-3 ເທື່ອ ( ຄູຕົບມືຊົມເຊີຍເດັກ
- ຄູແບ່ງນັກຮຽນອອກເປັນ 2 ກຸ່ມ
- ກຸ່ມທີ1: ເລົ່າຄໍາຄ່ອງ
- ກຸ່ມທີ 2: ປະກອບທ່າທາງ
- ໃຫ້ເດັກແຕ່ລະຄົນອອກມາຜັດປ່ຽນກັນອອກມາເລົ່າຄໍາຄ່ອງປະກອບທ່າທາງໂດຍການຊ່ວຍເຫຼືອຂອງຄູ
- ຕົບມືຊົມເຊີຍເດັກແຕ່ລະຄົນ
- ສາວຄູເລົາຄໍາຄ່ອງໃຫ້ເດັກເປັນຜູ້ສະແດງທ່າທາງປະກອບ 1-ຟ2 ເທື່ອ
- ສາວຄູໃຫ້ເດັກອາສາສະໝັກອອກມາເລົ່າຄໍາຄ່ອງປະກອບທ່າທາງ ( ຄູຕົບມືຊົມເຊີຍເດັກ)

3. ຂັ້ນສະຫຼຸບບົດຮຽນ

- ສາວຄູຖາມເດັກຄືນວ່າ: ມື້ນີ້ສາວຄູພາພວກຫຼານຮຽນຄໍາຄ່ອງຫຍັງ? ( ເດັກຕອບ)
- ສາວຄູໃຫ້ເດັກອອກມາເລົ່າຄໍາຄ່ອງປະກອບທ່າທາງຄືນ 1-2 ຄົນ
- ສາວຄູໃຫ້ເດັກເລົ່າຄໍາຄ່ອງປະກອບທ່າທາງພ້ອມກັນໝົດຫ້ອງ 1 ເທື່ອ

- ສຶກສາອົບຮົມເດັກ

  ພວກຫຼານເມືອຮອດເຮືອນຕ້ອງຮຽນເລົ່າຄໍາຄ່ອງນໍາພໍ່, ແມ່ ແລະ ອ້າຍເອື້ອຍພວກຫຼານຈິ່ງຈະເລົ່າໄດ້, ຮຽນເກັ່ງ,

- ການວັດ ແລະ ການປະເມີນ

  ສັງເກດການເລົ່າຄໍາຄ່ອງບ້ານຂອງເຮົາປະກອບທ່າທາງຂອງເດັກແຕ່ລະຄົນ

## 6. ວິທີການປະເມີນການສອນຄໍາຄ່ອງ

ຮ່າງສັງເກດການສອນຄໍາຄ່ອງໃນໂຮງຮຽນລ້ຽງເດັກ - ອະນຸບານ

| ເນື້ອໃນສັງເກດ | ຜົນການສັງເກດ |
|---|---|
| 1. ການກະກຽມອຸປະກອນ ແລະ ບົດສອນຂອງຄູ<br>- ສອນໜ່ວຍ<br>- ເວລາ | |
| 2. ການນໍາເຂົ້າສູ່ບົດຮຽນ<br>- ໃຊ້ເພງ, ຄໍາຄ່ອງ, ຄໍາທວາຍສິນທະນາ ແລະ ເກມຕ່າງໆ | |
| 3. ການດໍາເນີນການສອນ<br>- ເຕັກນິກການສອນແບບບູລະນາການ<br>- ການມີສ່ວນຮ່ວມຂອງເດັກ | |

| | |
|---|---|
| - ວິທີຊ່ວຍເຫຼືອເດັກໃນເວລາຄູກໍາລັງສອນ ແລະ ໃຫ້ກໍາລັງໃຈເດັກ<br>- ການນໍາໃຊ້ຄໍາຖາມ<br>- ການນໍາໃຊ້ອຸປະກອນ<br>- ການໃຊ້ຄໍາເວົ້າ ແລະ ກິລິຍາທ່າທາງທີ່ສະແດງອອກຕໍ່ເດັກຢ່າງນີ້ມນອນອ່ອນຫວານ.<br>- ບັນຍາກາດ ການຮຽນ - ການ**ສອນ.** | |
| 4. ສະຫຼຸບບົດຮຽນ:<br>- ການປະເມີນຄວາມຮູ້ຂອງເດັກ.<br>- ນໍາໃຊ້ເກມ ບົດເພງ ຄໍາຖາມສົນທະນາ.<br>- ສຶກສາແນວຄິດເດັກໂດຍຜ່ານບົດເລື່ອງ. | |

**6.1 ຮ່າງປະເມີນຕາມແຜນຈັດປະສົບການ**

**ຕົວຢ່າງ 2: ການບັນທຶກການສັງເກດການເລົ່າຄໍາຄ່ອງ.**

ຫົວຂໍ້:..........................ອາທິດທີ ....... ວັນທີ່ ....... ເດືອນ ...... ປີ 20

| ລ/ດ | ຊື່ ແລະ ນາມສະກຸນ | ຫົວຂໍ້ຕິດຕາມ | | | | | | | | |
|---|---|---|---|---|---|---|---|---|---|---|
| | | ດ້ານທັດສະນະຄະຕິ (ຄວາມອົດທົນ) | | | ດ້ານຄວາມຮູ້ (ຕອບຄໍາຖາມຕາມເນື້ອໃນຄໍາຄ່ອງ) | | | ດ້ານທັກສະ (ການອອກສຽງຄໍາສັບຕາມການກໍານົດ) | | |
| | | ດີ | ກາງ | ປັບປຸງ | ດີ | ກາງ | ປັບປຸງ | ດີ | ກາງ | ປັບປຸງ |
| 1 | | | | | | | | | | |
| 2 | | | | | | | | | | |
| 3 | | | | | | | | | | |
| 4 | | | | | | | | | | |

ວັນທີ່......................

ລາຍຊື່ຜູ້ປະເມີນ

1) ກໍານົດເກນຈັດລະດັບທັກສະ ຫຼື ພັດທະນາການເດັກເປັນລາຍບຸກຄົນ.

☐ ດີ: ເດັກສາມາດເຮັດຕາມຈຸດປະສົງທີ່ກໍານົດໄດ້.

☐ ກາງ: ເດັກສາມາດເຮັດຕາມຈຸດປະສົງທີ່ກໍານົດໄດ້ສ່ວນໃດສ່ວນໜຶ່ງ.

☐ ປັບປຸງ: ເດັກບໍ່ສາມາດເຮັດຕາມຈຸດປະສົງໄດ້.

ກິດຈະກຳ:    ສັງເກດການສອນກິດຈະກຳໃນວົງມົນການສອນຄຳຄ່ອງໃນໂຮງຮຽນລ້ຽງເດັກ - ອະນຸບານ

ອຸປະກອນ:    ປຶ້ມຂຽນ,ບິກຂຽນ,ຮ່າງສັງເກດການສອນ

ວິທີດຳເນີນກິດຈະກຳ:

- ຄູແນະນຳນັກຮຽນໃຊ້ຮ່າງສັງເກດການສອນ
- ແບ່ງກຸ່ມນັກຮຽນເຂົ້າສັງເກດໃນຫ້ອງຮຽນຕາມແຕ່ລະຊ່ວງອາຍຸ.
- ພາຍຫຼັງສັງເກດແລ້ວ ໃຫ້ນັກຮຽນກັບມາລວມກັນ.
- ແຕ່ລະກຸ່ມສົນທະນາ ແລະ ຄົ້ນຄວ້າກ່ຽວກັບການສັງເກດ.
- ຄູສະຫຼຸບ ແລະ ແນະນຳເພີ່ມເຕີມ.

**ເຝິກແຕ່ງບົດສອນ ແລະ ຜະລິດອຸປະກອນ**

**ເຝິກແຕ່ງບົດສອນ ແລະ ຜະລິດອຸປະກອນ**

- ກິດຈະກຳ: ເຝິກແຕ່ງບົດສອນ ແລະ ຜະລິດອຸປະກອນ
- ອຸປະກອນ: ປຶ້ມຂຽນ, ບິກ, ເຈ້ຍສີຕ່າງໆ, ສໍສີ, ເຈັ້ຍຂາວ, ກັບນົມ, ຫລອດໜຶ້ງເຂົ້າ, ຕຸກນ້ຳ, ກໍ້ດ້າຍ, ເຂັມຫຍິບ, ຜ້າເສດ, ກາວລາເທັກ, ມີດຕັດ
- ວິທີດຳເນີນກິດຈະກຳ:

- ຄູສົນທະນາ ແລະ ລະດົມຄວາມຄິດຂອງນັກຮຽນຄູເຖິງຂັ້ນຕອນການສັງເກດສົນທະນາກິດຈະກຳໃນວົງມົນຂອງໂຮງຮຽນລ້ຽງເດັກອະນຸບານ
- ແບ່ງນັກຮຽນໃນຫ້ອງອອກເປັນ 4 ກຸ່ມ ໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນຈົກສະຫຼາກເອົາຫົວຂໍ້ແຕ່ງບົດສອນຕາມແຕ່ລະຊັ້ນຮຽນທີ່ຄູກຳນົດດັ່ງລຸ່ມນີ້::

    ກຸ່ມທີ 1:    ແຕ່ງບົດສອນຊັ້ນລ້ຽງເດັກ

    ກຸ່ມທີ 2:    ແຕ່ງບົດສອນຊັ້ນອະນຸບານ 1

    ກຸ່ມທີ 3:    ແຕ່ງບົດສອນຊັ້ນອະນຸບານ 2

    ກຸ່ມທີ 4:    ແຕ່ງບົດສອນຊັ້ນອະນຸບານ 3

- ຫົວໜ້າກຸ່ມແບ່ງໜ່ວຍການສອນໃຫ້ແຕ່ລະກຸ່ມເປັນບຸກຄົນຮັບຜິດຊອບ
- ຄູແນະນຳວິທີແຕ່ງບົດສອນໂດຍເອົາບົດສອນແບບຢ່າງຂອງຄູໃສ່ເຈ້ຍແຜ່ນໃຫຍ່ໄປຕິດໃສ່ກະດານ    ໃຊ້ການອະທິບາຍສົນທະນາກັບນັກຮຽນຄູໝົດຫ້ອງ
- ຄູແນະນຳ ແລະ ນຳພານັກຮຽນຄູຜະລິດອຸປະກອນປະກອບການສອນຄຳຄ່ອງແຕ່ລະຮູບແບບ
- ໃຫ້ນັກຮຽນຄູເຝິກແຕ່ງບົດສອນເປັນລາຍບຸກຄົນຕາມໜ່ວຍການສອນທີ່ໄດ້ຮັບມອບໝາຍພ້ອມທັງຜະລິດອຸປະກອນປະກອບບົດສອນ.
- ການຜະລິດອຸປະກແນປະກອບບົດສອນ, ປະກອບມີຫຸ່ນຍັກ, ຫຸ່ນຖົງມື, ຫຸ່ນນີ້ວມື ແລະ ຜ້າ

**ເຝິກສອນຕົວຈິງໃນຫ້ອງ ແລະ ຖອດຖອນບົດຮຽນ**

**ກິດຈະກຳ   ເຝິກສອນຕົວຈິງໃນກຸ່ມນ້ອຍ**

ອຸປະກອນ   ບົດສອນ,ອຸປະກອນປະກອບບົດສອນ

**ວິທີດຳເນີນກິດຈະກຳ**

- ນັກຮຽນຄູທຸກຄົນໃນກຸ່ມຜັດປ່ຽນກັນສອນຕາມບົດສອນທີ່ໄດ້ກຽມມາ.
- ນັກຮຽນຄູສັງເກດການສອນຂອງໝູ່ ແລະ ຈົດບັນທຶກ.
- ຄູຕິດຕາມສັງເກດການສອນຂອງແຕ່ລະກຸ່ມ.
- ຖອດຖອນບົດຮຽນ ແລະ ປະກອບຄຳເຫັນກ່ຽວກັບການສອນຮ່ວມກັນ.
- ແຕ່ລະກຸ່ມລາຍງານຜົນການສອນຕົວຈິງ.

- ຄູສັງລວມ, ແນະນຳເພີ່ມເຕີມອີກ.

**ເຝິກການສອນຕົວຈິງຜ່ານກຸ່ມໃຫຍ່ໝົດຫ້ອງ**

ກິດຈະກຳ ການສອນຕົວຈິງຜ່ານຫ້ອງ

ອຸປະກອນ ບົດສອນ, ອຸປະກອນປະກອບບົດສອນ

**ວິທີດຳເນີນກິດຈະກຳ**

- ຄູໃຫ້ນັກຮຽນຄູຜັດປ່ຽນກັນສອນ.
- ນັກຮຽນຄູທີ່ຍັງບໍ່ໄດ້ສອນສັງເກດ ແລະ ຈົດບັນທຶກ.
- ຖອດຖອນບົດຮຽນຮ່ວມກັນ.
- ຄູສະຫຼຸບ ແລະ ແນະນຳວິທີທີ່ຖືກຕ້ອງໃຫ້ນັກຮຽນເຂົ້າໃຈ, ບັນຫາທີ່ປະຕິບັດບໍ່ທັນໄດ້ດີ

**ເຝິກການສອນຕົວຈິງຜ່ານກຸ່ມໃຫຍ່ໝົດຫ້ອງ ( ຕໍ່ )**

- ນັກຮຽນຄູສືບຕໍ່ເຝິກສອນຕົວຈິງໂດຍຜັດປ່ຽນກັນສອນພາຍໃນຫ້ອງ
- ນັກຮຽນຄູຜູ້ທີ່ບໍ່ໄດ້ສອນໃຫ້ສັງເກດ ແລະ ບັນທຶກການສອນ
- ຖອດຖອນບົດຮຽນຮ່ວມກັນ

**ເຝິກການສອນຕົວຈິງຜ່ານກຸ່ມໃຫຍ່ໝົດຫ້ອງ ( ຕໍ່ )**

- ນັກຮຽນຄູສືບຕໍ່ເຝິກສອນຕົວຈິງຜ່ານໝົດຫ້ອງໂດຍຜ່ານບົດຫ້ອງໂດຍຜັດປ່ຽນກັນສອນ
- ນັກຮຽນຄູຜູ້ທີ່ບໍ່ໄດ້ສອນໃຫ້ສັງເກດ ແລະ ບັນທຶກ
- ຖອດຖອນບົດຮຽນຮ່ວມກັນ
- ຄູສັງລວມ ແລະ ສະຫຼຸບຄືນສິ່ງທີ່ນັກຮຽນປະຕິບັດຕົວຈິງບໍ່ທັນໄດ້ຄົບຖ້ວນ
- ໃຫ້ແຕ່ລະກຸ່ມຄັດເລືອກເອົາ 1 ຄົນ, ທີ່ສອນໄດ້ດີທີ່ສຸດ ເພື່ອລົງໄປສອນຕໍ່ໂຮງຮຽນລ້ຽງເດັກອະນຸບານ

**ເຝິກສອນຕົວຈິງກັບເດັກໃນໂຮງຮຽນລ້ຽງເດັກ-ອະນຸບານ ແລະ ຖອດຖອນບົດຮຽນ**

ກິດຈະກຳ: ການສອນຕົວຈິງໃນໂຮງຮຽນ ລ້ຽງເດັກ - ອະນຸບານ.

ອຸປະກອນ: ບົດສອນ, ອຸປະກອນປະກອບການສອນ

**ວິທີດຳເນີນກິດຈະກຳ:**

- ແບ່ງນັກຮຽນຄູເຂົ້າສອນຕົວຈິງໃນຫ້ອງຮຽນອະນຸບານຕາມແຕ່ລະຊົ່ວອາຍຸ.
- ຄູຕິດຕາມສັງເກດການສອນຂອງນັກຮຽນຄູ.
- ນັກຮຽນຄູທີ່ບໍ່ໄດ້ສອນຕິດຕາມສັງເກດການສອນ
- ຖອດຖອນບົດຮຽນຮ່ວມກັນ.
- ຄູສັງລວມ ແລະ ຄູສະຫຼຸບຄືນສິ່ງທີ່ປະຕິບັດຕົວຈິງບໍ່ທັນໄດ້ດີ.
- ຮ່າງປະເມີນຕາມແຜນຈັດປະສົບການ
- ສັງເກດການສອນຄຳຄ່ອງໃນໂຮງຮຽນລ້ຽງເດັກ-ອະນຸບານ
- ລົງສັງເກດການສອນ
- ບັນທຶກ, ສະຫຼຸບ ແລະ ລາຍງານ

## 7. ສັງເກດການສອນຄຳຄ່ອງໃນໂຮງຮຽນລ້ຽງເດັກ-ອະນຸບານ

### 7.1. ລົງສັງເກດການສອນ

ສິ່ງທີ່ຕ້ອງສັງເກດໃນການສັງເກດການສອນ

1. ພຶດຕິກຳການສອນຂອງຄູ ແລະ ພຶດຕິກຳການຮຽນຂອງນັກຮຽນ
2. ການຈັດການໃນຊັ້ນຮຽນ ເທັກນິກວິທີທີ່ຄູສ້າງບັນຍາກາດເພື່ອການຮຽນຮູ້ຂອງນັກຮຽນ

3. ຄວາມສຳພັນລະຫວ່າງບຸກຄົນໃນຊັ້ນຮຽນ ລະຫວ່າງຄູກັບນັກຮຽນ ແລະ ນັກຮຽນກັບນັກຮຽນ
4. ການມີສ່ວນຮ່ວມໃນກິດຈະກຳການສອນຂອງນັກຮຽນເຊັ່ນ: ການຖາມ ແລະ ການຕອບຄຳຖາມ ການເວົ້າຈາສົນທະນາ ການເຮັດວຽກທີ່ໄດ້ມອບໝາຍ
5. ຄວາມແຕກຕ່າງໃນດ້ານສະຖານທີ ສະພາບແວດລ້ອມ ແລະ ສາຖານະເສດຖະກິດຂອງນັກຮຽນ
6. ຄວາມແຕກຕ່າງຂອງບົດບາດຂອງຜູ້ທີ່ກ່ຽວຂ້ອງທັງແບບຖາວອນ ແລະ ແບບຊົ່ວຄາວ.
7. ຄວາມແຕກຕ່າງດ້ານປະຕິສຳພັນຂອງບຸກຄົນ ເວລາ ສະຖານທີ່.

**ອົງປະກອບຂອງການສັງເກດ ມີຢ່າງໜ້ອຍ 2 ຢ່າງຄື:**

- **ສິ່ງທີ່ຈະສັງເກດ:** ສ່ວນໃຫ່ຍເປັນຄຸນລັກສະນະດ້ານຈິດໃຈເຊັ່ນ ຄວາມສົນໃຈ ການປັບຕົວ ບຸກຄະລິກກະພາບເປັນຕົ້ນ ອີກຢ່າງໜຶ່ງຄຸນລັກສະນະດ້ານການປະຕິບັດ ເຊິ່ງໄດ້ແກ່ວິທີການ ຫຼື ຂັ້ນຕອນໃນການປະຕິບັດ ແລະ ຜົນງານການປະຕິບັດ, ພຶດຕິກຳຄວາມສາມາດທີ່ຕ້ອງການສັງເກດມີຢູ່ 2 ແບບ

- ພຶດຕິກຳເຫັນໄດ້ແຈ້ງແມ່ນພຶດຕິກຳມັກສະແດງອອກທາງຮ່າງກາຍ ຈິ່ງສະດວກໃນການສັງເກດເຊັ່ນ ການເວົ້າ ການຊັກຖາມ ການໃຊ້ເຄື່ອງມືປະຕິບັດງານ...

- ພຶດຕິກຳແອບແຝງເປັນພຶດຕິກຳທີ່ສະແດງອອກຢ່າງລຶ້ຊ້ອນຄຸມເຄືອບໍ່ແຈ່ມແຈ້ງສັງເກດເຫັນໄດ້ຍາກ ເຊັ່ນ ຄວາມຮູ້ສຶກຕ່າງໆທັດສະນະຄວາມເຫັນຄວາມຄິດເປັນຕົ້ນ ມັກຈະເປັນຄຸນລັກສະນະທາງດ້ານຈິດໃຈເປັນສ່ວນໃຫ່ຍ.

- **ຜູ້ສັງເກດ:** ໃຊ້ປະສາດສຳພັດເປັນເຄື່ອງມືທີ່ກວດສອບ ຫຼື ຈຳແນກພຶດຕິກຳສະແດງອອກ ຜົນຂອງການສັງເກດຈະທ່ຽງຕົງ ແລະ ຈະເຊື່ອງໝັ້ນໄດ້ພຽງໃດຍ່ອມຂຶ້ນຢູ່ກັບສະພາວະ 3 ປະການຂອງຜູ້ສັງເກດຄື:

- ຄວາມຕັ້ງໃຈ ຜູ້ສັງເກດ ສັງເກດຢ່າງຕັ້ງໃຈ ມີຈຸດມຸ້ງໝາຍຢ່າງຊັດເຈນບໍ່ສັງເກດຢ່າງເລື່ອນລອຍມີຈຸດໝາຍທີ່ແນ່ນອນ..

- ປະສາດສຳພັດຕ້ອງໄວຢູ່ໃນສະພາບທີ່ໃຊ້ການໄດ້ດີ.

- ການຮັບຮູ້ພຶດຕິກຳທີ່ຈະສັງເກດເມື່ອນັກຮຽນສະແດງອອກມາຕ້ອງຮູ້ຕ້ອງເຫັນຢ່າງໄວອາຮູ້ຄວາມໝາຍໄດ້ທັນທີ.

- **ຫຼັກການການສັງເກດ: ການດຳເນີນການສັງເກດມີຫຼັກດັ່ງນີ້:**

**ກ.**ມີຈຸດມຸ້ງໝາຍຜູ້ສັງເກດຕ້ອງຮູ້ວ່າຈະສັງເກດພຶດຕິກຳໃນເລື່ອງໃດພ້ອມທັງຕ້ອງແຍກແຍະ ການສະແດງອອກຂອງພຶດຕິກຳນັ້ນໃຫ້ລະອຽດ ຄວບຄຸມທຸກແງ່ທຸກມຸມທີ່ສາມາດເບິ່ງເຫັນໄດ້ ສຳພັດໄດ້.

ຂ. ຮັບຮູ້ໄວ ສາມາດເບິ່ງເຫັນພຶດຕິກຳ ຫຼື ອາການທີ່ນັກຮຽນສະແດງອອກມາໄດ້ຢ່າງໄວເພາະພຶດຕິກຳບາງຢ່າງສະແດງອອກມາແລ້ວຈະຜ່ານໄປເລີຍບໍ່ເກີດຊໍ້ຄືນເລື້ອຍປານໃດ ຫຼື ອາດຈະບໍ່ເກີດຂຶ້ນອີກເລີຍກໍ່ໄດ້.

**ຄ.** ສັງເກດຫຼາຍຄົນ ຫຼື ຫຼາຍເທື່ອເພື່ອເຮັດໃຫ້ຜົນງານສັງເກດນັ້ນເຊື່ອຖືໄດ້ ຫຼື ມີຄວາມເຊື່ອໝັ້ນສູງຂຶ້ນຖ້າເປັນໄປໄດ້ຄວນໃຊ້ຜູ້ສັງເກດຫຼາຍຄົນເຊັ່ນ 2-5 ຄົນ ເພື່ອສັງເກດພຶດຕິກຳການສະແດງອອກໄປພ້ອມໆກັນ.

**ງ.** ສັງເກດໃຫ້ຖືກກັບຄວາມເປັນຈິງຄວນສັງເກດໃນພາວະທີ່ເປັນທຳມະຊາດເປັນໄປແບບປົກກະຕິ ຫຼື ໃຫ້ເປັນໄປຕາມລັກສະນະທີ່ເຄີຍເປັນ.

**ຈ.** ມີການບັນທຶກຜົນ ຄວນມີການບັນທຶກຜົນການສັງເກດທີ່ໄດ້ຢ່າງຖືກຕ້ອງ ແລະ ໄວ ອາດອາດຈະໃຊ້ການບັນທຶກແບບໃຊ້ເຄື່ອງໝາຍ ຫຼື ແບບບັກທຶກໂດຍການຈັດກຸ່ມ.

- **ເງື່ອນໄຂ ແລະ ຂໍ້ຄວນລະວັງໃນການສັງເກດ:**

ເຊັ່ນຕ້ອງເລືອກເອົາວິທີຈົດບັນທຶກຜົນການສັງເກດທີ່ເໝາະສົມຜົນການສັງເກດຈະດີພໍພຽງໃດຍ່ອມຂຶ້ນກັບຜູ້ສັງເກດເປັນສ່ວນຫຼາຍເຊັ່ນ ອາລົມ ແຮງຈູງໃຈ ອະຄະຕິສະພາບທາງສະໝອງ ແລະ ສະພາບຮ່າງກາຍເປັນຕົ້ນ.

### 7.2. ບັນທຶກ, ສະຫຼຸບ ແລະ ລາຍງານ

**ສະຫຼຸບ**

ແມ່ນການຫຍໍ້ເອົາສະເພາະໃຈຄວາມທີ່ສຳຄັນຂອງເລື່ອງທີ່ເປັນປະເດັນເຊັ່ນ: ສະຫຼຸບເລື່ອງທີ່ເຮົາໄດ້ເຫັນໄດ້ສັງເກດ, ໄດ້ປະສົບພົບພໍ້ດ້ວຍຕົນເອງ, ໄດ້ປະຕິບັດ ແລ້ວມາລາຍງານໃຫ້ພາກສວນທີ່ກ່ຽວຂ້ອງຮັບຊາບ.

**ການບັນທຶກ**

ບັນທຶກໝາຍເຖິງ ຂໍ້ຄວາມທີ່ຈົດໄວ້ເພື່ອຊ່ວຍຄວາມຊົງຈຳ ຫຼື ເພື່ອເປັນຫຼັກຖານຂໍ້ຄວາມທີ່ນຳມາຈົດຫຍໍ້ໆໄວ້ເພື່ອໃຫ້ຮູ້ເລື່ອງເດີມ

- **ຄວາມສຳຄັນຂອງການບັນທຶກ**

ການບັນທຶກໃນເລື່ອງຕ່າງໆ ມີຄວາມສຳຄັນດັ່ງນີ້:

6. ເປັນຫຼັກຖານໃນການດຳເນີນງານທີ່ປະຕິບັດງານຢູ່ ຫຼື ເປັນຫຼັກຖານໃນງານທີ່ກຳລັງດຳເນີນການສຳເລັດຮຽບຮ້ອຍແລ້ວ.
7. ເປັນເຄື່ອງມືຊີ້ສະຖານະພາບໃນການເຮັດວຽກໃຫ້ຮູ້ເຖິງຜົນງານທີ່ປະຕິບັດມາແລ້ວວ່າເປັນແນວໃດ
8. ເປັນແນວທາງໃນການປະຕິບັດງານໃນອະນາຄົດ ເມື່ອໄດ້ມີການຈົດບັນທຶກໄວ້ຢ່າງຖືກຕ້ອງ ສາມາດນຳມາປຽບທຽບຂໍ້ດີ ແລະ ຂໍ້ເສຍຂອງງານເດີມ ແລະ ນຳເອົາສວນທີ່ບໍ່ດີມາປັບປຸງແກ້ໄຂໃຫ້ໄດ້ດີຍິ່ງຂຶ້ນ.
9. ເປັນຫຼັກຖານໃນການກວດສອບຄວາມຖືກຕ້ອງຂອງການປະຕິບັດວຽກໄດ້
10. ເປັນຂໍ້ມູນສຳລັບອ້າງອີງໃນການຂຽນທາງວິຊາການ.

**ລາຍງານຜົນການສັງເກດ**

ການລາຍງານໝາຍເຖິງ ການນຳສະເໜີຂໍ້ມູນຈາກການສັງເກດ, ສຶກສາ, ຄົ້ນຄ້ວາ, ທົດລອງ ເຊິ່ງໄດ້ຮັບການມອບໝາຍໃຫ້ປະຕິບັດງານຕໍ່ຜູ້ທີ່ກ່ຽວຂ້ອງຢ່າງມີລະບົບ.

## 8. ວິທີການແຕ່ງບົດສອນ

### 8.1. ຮ່າງບົດສອນ

**ໂຄ່ງຮ່າງແຜນການສອນຮູບແບບຮຽງຄວາມ**

ໜ່ວຍ:...........................................................

ອາທິດທີ່:.......................................................

ຊົ່ວໂມງທີ:..................................................ເວລາ..................ນາທີ

ຫົວຂໍ້:................................................................

**I. ຈຸດປະສົງ:**

1. ..............................................................
2. ..............................................................
3. ..............................................................

## II. ເນື້ອໃນຕົ້ນຕໍ:

1. .............................................................
2. .............................................................
3. ..............................................................

## III. ສື່ການຮຽນ-ການສອນ:

1. ..............................................................
2. .................................................................
3. ..................................................................

## IV. ກິດຈະກຳການຮຽນ-ການສອນ:

1. .....................................................................
2. ......................................................................
3. .....................................................................

## V. ການວັດ ແລະ ປະເມີນ:

1. ......................................................................
2. .......................................................................
3. ........................................................................

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ ທີ່................ວັນທີ...........ເດືອນ.......ປີ..........

............................................... ລາຍເຊັນຜູ້ແຕ່ງບົດສອນ

### 8.2. ອົງປະກອບ ແລະ ຂັ້ນຕອນການແຕ່ງບົດສອນ

**ອົງປະກອບຂອງບົດສອນ**

ບົດສອນແບບຕາຕະລາງແມ່ນບົດສອນທີ່ຂຽນໃສ່ຕາຕະລາງ ເຊິ່ງປະກອບມີ: ຈຸດປະສົງ, ເນື້ອໃນຕົ້ນຕໍ, ສື່ການຮຽນ-ການສອນ, ກິດຈະກຳການຮຽນ-ການສອນ, ການວັດ ແລະ ປະເມີນຜົນ

**ຂັ້ນຕອນການແຕ່ງບົດສອນ**

ການແຕ່ງບົດສອນມີ 3 ຂັ້ນຕອນໃຫ່ຍຄື: ຂັ້ນນຳເຂົ້າສູ່ບົດຮຽນ, ຂັ້ນດຳເນີນການສອນ, ຂັ້ນສະຫຼຸບບົດຮຽນ ເຊິ່ງມີລາຍລະອຽດດັ່ງນີ້:

**1) ຂັ້ນນຳເຂົ້າສູ່ບົດຮຽນ:**

ຂັ້ນນຳເຂົ້າສູ່ບົດຮຽນແມ່ນຂັ້ນຕອນດຶງດູດຄວາມສົນໃຈຂອງເດັກເຂົ້າສູ່ການຮຽນ, ການກວດລະບຽບ ແລະ ການຈັດຕັ້ງຫ້ອງເພື່ອໃຫ້ເດັກມີຄວາມມ່ວນຊື່ນ, ມີຄວາມພ້ອມຢາກຮຽນຮູ້, ການນຳເຂົ້າສູ່ບົດຮຽນມີຫຼາຍວິທີເຊັ່ນ: ການສົນທະນາ( ຖາມ-ຕອບ ), ເລົ່າຄຳຄ່ອງ, ຮ້ອງເພງ, ຫຼິ້ນເກມ, ໃຊ້ຄຳທວາຍ, ນັບເລກ, ເລົ່າເຫດການ, ສະແດງບົດບາດສົມມຸດ ແລະ ເຮັດທ່າທາງຕ່າງໆ. ໃນເວລາສອນຕົວຈິງໃຫ້ຄູເລືອກເອົາໜຶ່ງວິທີເຫັນວ່າກ່ຽວພັນກັບຫົວຂໍ້ຂອງບົດຮຽນໃນມື້ນັ້ນມາເປັນວິທີການນຳເດັກເຂົ້າສູ່ບົກຮຽນ.

2) **ຂັ້ນດຳເນີນການສອນ:**

ຂັ້ນດຳເນີນການສອນແມ່ນຂັ້ນຕອນການຮຽນຮູ້ດ້ວຍຕົນເອງ ແລະ ຮຽນຮ່ວມກັບໝູ່ເພື່ອນຊ່ວຍໃຫ້ເດັກເກີດປະສົບການຮຽນຮູ້ສິ່ງຕ່າງໆຈາກວິທີການສອນເຊັ່ນ: ການສັງເກດ, ການສົນທະນາ, ອະທິບາຍ, ສາທິ, ປະຕິບັດຕົວຈິງ. ສະນັ້ນ ການຈັດກິດຈະກຳການຮຽນ-ການສອນ ແຕ່ລະຄັ້ງການນຳໃຊ້ວິທີສອນ, ສື່ການຮຽນ-ການສອນຄູຕ້ອງຄຳນຶງເຖິງລະດັບຄວາມສາມາດຂອງເດັກເພື່ອໃຫ້ເດັກເຂົ້າໃຈເນື້ອໃນສິ່ງທີ່ນຳມາຮຽນຢ່າງຖືກຕ້ອງ.

3) **ຂັ້ນສະຫຼຸບບົດຮຽນ**:

ຂັ້ນສະຫຼຸບບົດຮຽນແມ່ນຂັ້ນຕອນກວດກາຄືນ ຄວາມເຂົ້າໃຈເນື້ອໃນທີ່ນຳມາຮຽນ, ກວດກາລະດັບທັກສະທີ່ໄດ້ເຝິກແອບ ແລະ ກວດກາພຶດຕິກຳທີ່ສະແດງອອກໃຫ້ເຫັນໃນເວລາຄູສົນທະນາຖາມ-ຕອບກ່ຽວກັບ ຊື່ສິ່ງຕ່າງໆ , ສະນັ້ນ ຄູຕ້ອງສ້າງຄຳຖາມຕາມຈຸດປະສົງທີ່ມີໃນບົດ, ພ້ອມທັງມີຄຳຕອບທີ່ຖືກຕ້ອງ. ນອກຈາກການສົນທະນາກ່ຽວກັບຄວາມຮູ້ແລ້ວທຸກຄັ້ງຕ້ອງສຶກສາແນວຄິດເດັກຕາມຈຸດປະສົງທີ່ກຳນົດໄວ້ ແລະ ຍ້ອງຍໍຊົມເຊີຍດ້ວຍຄຳເວົ້າ ຫຼື ຕົບມື.

**8.3. ແຕ່ງບົດສອນຕາມແຜນຈັດປະສົບການ**

- **ຕົວຢ່າງບົດສອນແບບຮຽງຄວາມ:**

**ກິດຈະກຳວົງມົນ**

**ອະນຸບານ 1**

**ໜ່ວຍ: ຕົວຂອງຂ້ອຍ** — **ອາທິດທີ 2 ມື້ທີ່ 3**

**ຫົວຂໍ້: ອະນາໄມຮ່າງກາຍ** — **ເວລາ 15-20 ນາທີ**

**I. ຈຸດປະສົງ:**

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ລ້າງມື ປະກອບທ່າທາງໄດ້.
2. ລ້າງມືຕາມຂັ້ນຕອນໄດ້.

**II. ເນື້ອໃນຕົ້ນຕໍ**

1. ການເລົ່າຄຳຄ່ອງ ລ້າງມື ປະກອບທ່າທາງ
2. ການລ້າງມືຕາມຂັ້ນຕອນ

**III. ສື່ການຮຽນ-ການສອນ**

1. ຄຸນ້ຳ 2 ໜ່ວຍ, ສະບູ, ໂອ ແລະ ຜ້າເຊັດມື.
2. ບົດຄຳຄ່ອງລ້າງມື ( ປຶ້ມຄູ່ມືຄູ ).

**IV. ກິດຈະກຳການຮຽນ-ການສອນ**

1. **ຂັ້ນນຳເຂົ້າສູ່ບົດຮຽນ:**

- ຈັດເດັກເຂົ້າສູ່ລະບຽບ
- ກວດກາຈຳນວນພົນ
- ຄູທັກທາຍຖາມສະບາຍດີກັບເດັກໃນຫ້ອງ ແລະ ໃຫ້ເດັກບອກການອະນາໄມຕົນເອງ 2-3 ຄົນ.

2. **ຂັ້ນດຳເນີນການສອນ**

- ຄູສະເໜີຊື່ໜ່ວຍການສອນ(ໜ່ວຍຕົວຂອງຂ້ອຍ), ຊື່ກິດຈະກຳ(ກິດຈະກຳວົງມົນ), ຫົວຂໍ້(ການອະນາໄມຮ່າງກາຍຕົນເອງ)
- ຄູສົນທະນາກັບເດັກກ່ຽວກັບອະນາໄມຮ່າງກາຍໃຫ້ມີຄວາມສະອາດ ໂດຍແມ່ຄູເປັນຜູ້ຕັ້ງຄຳຖາມວ່າ: ມີໃຜແນ່ບໍ່ຢາກໃຫ້ຮ່າງກາຍເຮົາເປິເປື້ອນຊີ້ມີຂີ້ນ? ຢາກໃຫ້ຕົນຕົວເຮົາສະອາດເດີເຮົາຄວນເຮັດແນວໃດແດ່? ມີໃຜຈະໃຫ້ຄຳເຫັນ........
- ຄູສະຫຼຸບການໃຫ້ຄຳເຫັນຂອງເດັກ ແລະ ສະຫຼຸບການອະນາໄມຮ່າງກາຍໃຫ້ສະອາດ...
- ຄູຍ້ອງຍໍຊົມເຊີບເດັກ
- ຄູໃຫ້ເດັກຢືນຂື້ນເປັນຮູບວົງມົນ
- ຄູສະເໜີບົດ ຄຳຄ່ອງ ລ້າງມື ໃຫ້ເດັກຟັງ
- ຄູເລົ່າຄຳຄ່ອງປະກອບທ່າທາງໃຫ້ເດັກຟັງ-ເບິ່ງ 1-2 ເທື່ອ.
- ຄູພາເດັກເລົ່າຄ່ອງຄ່ອງປະກອບທ່າທາງໄປພ້ອມກັນເທື່ອລະວັກ ເທື່ອລະຕອນຈົນຈົບ
- ຄູເລົ່າຄຳຄ່ອງ ແລະ ໃຫ້ເດັກປະກອບທ່າທາງພ້ອມກັນ
- ຄູແບ່ງເດັກອອກເປັນກຸ່ມ 2 ກຸ່ມເພື່ອປະຕິບັດ

  ກຸ່ມທີ 1 ເລົ່າຄຳຄ່ອງ

  ກຸ່ມທີ 2 ເຮັດທ່າທາງປະກອບ ແລ້ວຜັດປ່ຽນກັບປະຕິບັດ
- ຄູໃຫ້ເດັກປະຕິບັດ 1-3 ເທື່ອ.
- ຄູຕິດຕາມແນະນຳເດັກຜູ້ທີ່ເຮັດບໍ່ທັນໄດ້ດີ.
- ຄູສົນທະນາຮ່ວມກັນກັບເດັກກ່ຽວກັບເນື້ອໃນຂອງບົດຄຳຄ່ອງ
- ຄູສົນທະນາກັບເດັກກ່ຽວກັບການລ້າງມືຕາມຂັ້ນຕອນ
- ຄູສາທິດການລ້າງມືຕາມຂັ້ນຕອນ
- ໃຫ້ເດັກເຝິກປະຕິບັດລ້າງມືຕາມຂັ້ນຕອນ
- ຄູຍ້ອງຍໍຊົມເຊີຍເດັກ.

3. **ຂັ້ນສະຫຼຸບບົດຮຽນ:**

- ຄູຖາມເດັກຄືນວ່າທີ່ຜ່ານໄປນັ້ນແມ່ນເຮົາເລົ່າຄຳຄ່ອງມີຊື່ວ່າແນວໃດ?
- ຄູໃຫ້ເດັກອາສາສະໝັກອອກມາເລົ່າຄຳຄ່ອງຄືນອີກເທື່ອໜຶ່ງພ້ອມທັງເວົ້າຄືນກ່ຽວກັບການລ້າງມືຂອງຕົນເອງ 1-3 ຄົນ.
- ສຶກສາອົບຮົມເດັກກ່ຽວກັບການລ້າງມືກ່ອນ, ຫຼັງຮັບປະທານອາຫານ ແລະ ພາບຫຼັງເຂົ້າຫ້ອງນໍ້າ, ວິດຖ່າຍ: ຖ່າຍໜັກ, ຖ່າຍເບົາທຸກໆຄັ້ງ.

**V. ການວັດ ແລະ ປະເມີນ**

**ສັງເກດ:**

1. ການມີສ່ວນຮ່ວມໃນການເລົ່າຄຳຄ່ອງປະກອບທ່າທາງຂອງເດັກ.
2. ການເຝິກປະຕິບັດລ້າງມືຕາມຂັ້ນຕອນ.

ວັນທີ່...............ເດືອນ...........ປີ.............

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ ລາຍເຊັນຜູ້ແຕ່ງບົດສອນ

**ກິດຈະກຳວົງມົນ**

**ອະນຸບານ 1**

**ໜ່ວຍ: ຕົວຂອງຂ້ອຍ** **ອາທິດທີ 4 ມື້ທີ່ 1**

**ຫົວຂໍ້: ນຸ່ງເຄື່ອງ** **ເວລາ 15-20 ນາທີ**

**I. ຈຸດປະສົງ:**

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ນຸ່ງເຄື່ອງ ປະກອບທ່າທາງໄດ້.
2. ນຸ່ງເຄື່ອງໄດ້.

**II. ເນື້ອໃນຕົ້ນຕໍ**

1. ການເລົ່າຄຳຄ່ອງ ນຸ່ງເຄື່ອງ ປະກອບທ່າທາງ
2. ການນຸ່ງເຄື່ອງ: ຕິດກະດູດເສື້ອ, ປີ້ນຄໍເສື້ອ, ການນຸ່ງສິ້ນ, ກະໂປງ, ໂສ້ງ: ເກາະຄໍ, ໃສ່ຊິບ

**III. ສື່ການຮຽນ-ການສອນ**

1. ບົດຄຳຄ່ອງ ນຸ່ງເຄື່ອງ ( ປື້ມຄູ່ມືຄູ ).
2. ເຄື່ອງນຸ່ງ: ເສື້ອ, ໂສ້ງ, ກະໂປງ.

**IV. ກິດຈະກຳການຮຽນ-ການສອນ**

**1) ຂັ້ນນຳເຂົ້າສູ່ບົດຮຽນ:**

- ຈັດເດັກເຂົ້າສູ່ລະບຽບ
- ກວດກາຈຳນວນພົນ
- ຄູທັກທາຍຖາມສະບາຍດີກັບເດັກໃນຫ້ອງດ້ວຍການສົນທະນາຖາມ-ຕອບກ່ຽວກັບເຄື່ອງນຸ່ງຂອງເດັກ

**2) ຂັ້ນດຳເນີນການສອນ**

- ຄູສະເໜີຊື່ໜ່ວຍການສອນ(ໜ່ວຍຕົວຂອງຂ້ອຍ), ຊື່ກິດຈະກຳ(ກິດຈະກຳວົງມົນ), ຫົວຂໍ້(ນຸ່ງເຄື່ອງ)
- ຄູສະເໜີບົດຄຳຄ່ອງໃຫ້ເດັກຟັງ ຄຳຄ່ອງ: ນຸ່ງເຄື່ອງ
- ຄູເລົ່າຄຳຄ່ອງປະກອບທ່າທາງໃຫ້ເດັກຟັງ-ເບິ່ງ 1-2 ເທື່ອ.
- ຄູພາເດັກເລົ່າຄ່ອງຄ່ອງປະກອບທ່າທາງໄປພ້ອມກັນເທື່ອລະວັກ ເທື່ອລະຕອນຈົນຈົບ
- ຄູເລົ່າຄຳຄ່ອງ ແລະ ໃຫ້ເດັກປະກອບທ່າທາງພ້ອມກັນ
- ຄູແບ່ງເດັກອອກເປັນກຸ່ມ 2 ກຸ່ມເພື່ອປະຕິບັດ

  ກຸ່ມທີ 1 ເລົ່າຄຳຄ່ອງ

  ກຸ່ມທີ 2 ເຮັດທ່າທາງປະກອບ ແລ້ວຜັດປ່ຽນກັບປະຕິບັດ
- ຄູໃຫ້ເດັກປະຕິບັດ 1-3 ເທື່ອ.

- ຄູຕິດຕາມແນະນຳເດັກຜູ້ທີ່ເຮັດບໍ່ທັນໄດ້ດີ.
- ຄູສົນທະນາຮ່ວມກັນກັບເດັກກ່ຽວກັບເນື້ອໃນຂອງບົດຄຳຄ່ອງ
- ຄູຍ້ອງຍໍຊົມເຊີບເດັກ
- ຄູສົນທະນາກັບເດັກກ່ຽວກັບການນຸ່ງເຄື່ອງ ໂດຍແມ່ຄູເປັນຜູ້ຕັ້ງຄຳຖາມວ່າ: ມີໃຜແນ່ນຸ່ງເຄື່ອງເອງເປັນ? ກ່ອນຈະນຸ່ງເຄື່ອງເຮົາຄວນເຮັດແນວໃດແດ່? ມີໃຜຈະໃຫ້ຄຳເຫັນ
- ຄູສະຫຼຸບການໃຫ້ຄຳເຫັນຂອງເດັກ
- ຄູຍ້ອງຍໍຊົມເຊີຍເດັກ
- ຄູສາທິດການວິທີນຸ່ງເຄື່ອງໃຫ້ເດັກເບິ່ງກ່ອນ(ຕິດກະດູດເສື້ອ, ປີ້ນຄໍເສື້ອ, ການນຸ່ງສົ້ນ, ກະໂປງ, ໂສ້ງ: ເກາະຄໍ, ໃສ່ຊິບ)
- ຄູໃຫ້ເດັກເຝິກປະຕິບັດວິທີ່ນຸ່ງເຄື່ອງຕາມຂັ້ນຕອນໃຫ້ຖືກຕ້ອງ
- ຄູຕິດຕາມຊ່ວຍເຫຼືອເດັກໃນເວລາເຝິກປະຕິບັດຕົວຈິງ
- ຄູຍ້ອງຍໍຊົມເຊີຍເດັກ.

3) **ຂັ້ນສະຫຼຸບບົດຮຽນ:**

- ຄູຖາມເດັກຄືນວ່າທີ່ຜ່ານໄປນັ້ນແມ່ນເຮົາເລົ່າຄຳຄ່ອງມີຊື່ວ່າແນວໃດ?
- ຄູໃຫ້ເດັກອາສາສະໝັກອອກມາເລົ່າຄຳຄ່ອງຄືນອີກເທື່ອໜຶ່ງພ້ອມທັງເວົ້າຄືນກ່ຽວວິທີນຸ່ງເຄື່ອງທີ່ຖືກຕ້ອງ.
- ສຶກສາອົບຮົມເດັກກ່ຽວກັບການນຸ່ງເສື້ອຕ້ອງຕິດກະດູມເສື້ອ ປີ້ນຄໍເສື້ອ, ນຸ່ງກະໂປງ, ໂສ້ງຕ້ອງຕ້ອງເກາະຂໍ, ໃສ່ຊິບ ແລະ ເກັບມ້ຽນເຄື່ອງນຸ່ງໃຫ້ຖືກບ່ອນ.

## V. ການວັດ ແລະ ປະເມີຜົນ

**ສັງເກດ:**

1. ການເລົ່າຄຳຄ່ອງ ນຸ່ງເຄື່ອງ ປະກອບທ່າທາງ
2. ການເຝິກປະຕິບັດການນຸ່ງເຄື່ອງຂອງເດັກ

ວັນທີ່...............ເດືອນ...........ປີ............

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ ລາຍເຊັນຜູ້ແຕ່ງບົດສອນ

- **ຕົວຢ່າງບົດສອນແບບຮຽງຄວາມ:**

**ກິດຈະກຳວົງມົນ**

**ອະນຸບານ 2**

**ໜ່ວຍ: ຕົວຂອງຂ້ອຍ** **ອາທິດທີ 1 ມື້ທີ່ 1**

**ຫົວຂໍ້: ແນະນຳຕົນເອງ** **ເວລາ 20-25 ນາທີ**

## I. ຈຸດປະສົງ:

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ແນະນຳຊື່ ປະກອບທ່າທາງຕາມຈິນຕະນາການໄດ້.
2. ບອກຊື່ ນາມສະກຸນ ແລະ ເພດຂອງຕົນ ຂອງໝູ່ເພື່ອນ ຢ່າງຖືກຕ້ອງ
3. ເວົ້າຄຳສຸພາບຕໍ່ຜູ້ໃຫ່ຍ ແລະ ໝູ່ເພື່ອນ

## II. ເນື້ອໃນຕົ້ນຕໍ

1. ການເລົ່າຄຳຄ່ອງ ແນະນຳຊື່ ປະກອບທ່າທາງ
2. ຊື່ ນາມສະກຸນ ແລະ ເພດຂອງຕົນເອງ ຂອງໝູ່ເພື່ອນ ຢ່າງຖືກຕ້ອງ
3. ການເວົ້າຄຳສຸພາບຕໍ່ຜູ້ໃຫ່ຍ ແລະ ໝູ່ເພື່ອນ: ທ້າວ ນາງ ເຈົ້າ ໂດຍ ຂ້ອຍ ຫຼານ

## III. ສື່ການຮຽນ-ການສອນ

1. ຮູບພາບເດັກນ້ອຍຍິງ ຊາຍ ຫຼື ເດັກນ້ອຍຍິງ ເດັກນ້ອຍຊາຍໃນຫ້ອງຮຽນ.
2. ບົດຄຳຄ່ອງ ແນະນຳຊື່ ( ປື້ມຄູ່ມືຄູ ).

## IV. ກິດຈະກຳການຮຽນ-ການສອນ

### 1. ຂັ້ນນຳເຂົ້າສູ່ບົດຮຽນ:

- ຈັດເດັກເຂົ້າສູ່ລະບຽບ
- ກວດກາຈຳນວນພົນ
- ຄູທັກທາຍຖາມສະບາຍດີກັບເດັກໃນຫ້ອງ.

### 2. ຂັ້ນດຳເນີນການສອນ

- ຄູສະເໜີຊື່ໜ່ວຍການສອນ(ໜ່ວຍຕົວຂອງຂ້ອຍ), ຊື່ກິດຈະກຳ(ກິດຈະກຳວົງມົນ), ຫົວຂໍ້: ແນະນຳຊື່ຕົນເອງ
- ຄູສົນທະນາຖາມ-ຕອບກັບເດັກກ່ຽວກັບແລະ ສ້າງຄວາມລຶ້ງເຄີຍກັບເດັກທຸກຄົນໃນຫ້ອງ ໂດຍແມ່ນຄູເປັນຜູ້ແນະນຳຊື່ ແລະ ນາມສະກຸນ ເພດຂອງຕົນເອງຕໍ່ເດັກກ່ອນ
- ຄູສະເໜີບົດ ຄຳຄ່ອງ ແນະນຳຊື່ ໃຫ້ເດັກຟັງ
- ຄູເລົ່າຄຳຄ່ອງປະກອບທ່າທາງໃຫ້ເດັກຟັງ-ເບິ່ງ 1-2 ເທື່ອ.
- ຄູພາເດັກເລົ່າຄ່ອງຄ່ອງປະກອບທ່າທາງໄປພ້ອມກັນເທື່ອລະວັກ ເທື່ອລະຕອນຈົນຈົບ
- ຄູເລົ່າຄຳຄ່ອງ ແລະ ໃຫ້ເດັກປະກອບທ່າທາງພ້ອມກັນ
- ຄູແບ່ງເດັກອອກເປັນກຸ່ມ 2 ກຸ່ມເພື່ອປະຕິບັດ

  ກຸ່ມທີ 1 ເລົ່າຄຳຄ່ອງ

ກຸ່ມທີ 2 ເຮັດທ່າທາງປະກອບ ແລ້ວຜັດປ່ຽນກັນປະຕິບັດ

- ຄູໃຫ້ເດັກປະຕິບັດ 1-2 ເທື່ອ.
- ຄູຕິດຕາມແນະນຳເດັກຜູ້ທີ່ເຮັດບໍ່ທັນໄດ້ດີ.
- ຄູສົນທະນາຖາມ-ຕອບກ່ຽວກັບຊື່ ແລະ ນາມສະກຸນ, ເພດຂອງຕົນເອງ ແລະ ໝູ່ເພື່ອນ
- ຄູໃຫ້ເດັກແຕ່ລະຄົນລຸກຂຶ້ນພ້ອມທັງສະເໜີຊື່ ນາມສະກຸນ ແລະ ເພດຂອງຕົນເອງໃຫ້ໝູ່ຟັງ ໂດຍໃຊ້ຄຳເວົ້າທີ່ສຸພາບຕໍ່ຄູ ແລະ ໝູ່ເພື່ອນ
- ຄູສະຫຼຸບການໃຫ້ຄຳເຫັນຂອງເດັກ ແລະ ສະຫຼຸບການບອກຊື່ ນາມສະກຸນ ແລະ ເພດຂອງເດັກ
- ຄູຍ້ອງຍໍຊົມເຊີຍເດັກ

**3. ຂັ້ນສະຫຼຸບບົດຮຽນ:**

- ຄູຖາມເດັກຄືນວ່າທີ່ຜ່ານໄປນັ້ນແມ່ນເຮົາເລົ່າຄຳຄ່ອງມີຊື່ວ່າແນວໃດ?
- ຄູໃຫ້ເດັກເລົ່າຄຳຄ່ອງຄືນອີກເທື່ອໜຶ່ງພ້ອມກັນ
- ໃຫ້ເດັກເວົ້າຄືນຄຳທີ່ສຸພາບກັບຜູ້ໃຫ່ຍ ແລະ ໝູ່ເພື່ອນດ້ວຍກັນ: ທ່ານ ນາງ ເຈົ້າ ຂ້ອຍ ຫຼານ.

- ສຶກສາອົບຮົມເດັກກ່ຽວກັບການຊ່ວຍເຫຼືອກັນລະຫວ່າງເດັກຍິງ ແລະ ເດັກຊາຍ: ຜູ້ຊາຍຕ້ອງເປັນຄົນທີ່ມີຄວາມສູ້ຊົນຫຼາຍກວ່າຜູ້ຍິງ ຕ້ອງຊ່ວຍເຫຼືອ ບໍ່ຕ້ອງຫົວຂ້ອນເຢາະເຍີຍ ເຮັດໃຫ້ເດັກຍິງອາຍ ແລ້ວຄຳເວົ້າຕ້ອງສຸພາບອ່ອນໂຍນຈະເຮັດໃຫ້ຜູ້ໃຫ່ຍຍ້ອງຍໍຊົມເຊີຍວ່າເປັນເດັກຄຳຮູ້.

## V. ການວັດ ແລະ ປະເມີນຜົນ

**ສັງເກດ ແລະ ທົດສອບຄວາມເຂົ້າໃຈ:**

1. ການມີສ່ວນຮ່ວມໃນການເລົ່າຄຳຄ່ອງ ແລະ ຕອບຄຳຖາມກຽ່ວກັບເນື້ອໃນຄຳຄ່ອງຂອງເດັກ.
2. ຄວາມຖືກຕ້ອງໃນການບອກຊື່ ນາມສະກຸນ ເພດຂອງຕົນເອງ ແລະ ໝູ່ເພື່ອນ
3. ການສະແດງເວົ້າຄຳສຸພາບຕໍ່ຜູ້ໃຫ່ຍ ແລະ ໝູ່ເພື່ອນ

ວັນທີ່...........ເດືອນ..........ປີ............

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ ລາຍເຊັນຜູ້ແຕ່ງບົດສອນ

**ບົດສອນ**

**ກິດຈະກຳວົງມົນ**

**ອະນຸບານ 2**

**ໜ່ວຍ: ສິ່ງຕ່າງໆອ້ອມຕົວເຮົາ** **ອາທິດທີ 2 ມື້ທີ່ 4**

**ຫົວຂໍ້: ຢາ** **ເວລາ 20-25 ນາທີ**

## I. ຈຸດປະສົງ:

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ຢໍຢາ ປະກອບທ່າທາງ, ບອກປະເພດຢາປະຈຳບ້ານ ແລະ ປະໂຫຍດຢ່າງຖືກຕ້ອງ.
2. ບອກສີ ແລະ ວາງຮູບຕາມແບບ ຢ່າງຖືກຕ້ອງ

3. ອ່ານພະຍັນຊະນະປະສົມກັບສະຫຼະ ◌ຶ ທີ່ມີວັນນະຍຸດ ◌່, ◌້ ເປັນສຽງດົນຕີຢ່າງຖືກຕ້ອງ

## II. ເນື້ອໃນຕົ້ນຕໍ

1. ການເລົ່າຄໍາຄ່ອງ ຢໍຢາ ປະກອບທ່າທາງ ແລະ ປະເພດຢາປະຈໍາບ້ານ: ຢາແດງ, ຢາດົມ ແລະ ຢາທາ(ຢາມ່ອງ, ຢາແດງ: ປະໂຫຍດ: ຢາແດງແມ່ນທາປົວບາດແຜທີ່ເກີດຈາກການລົ້ມ, ມີດບາດ, ແກ້ວ, ເຫຼັກບາດ; ຢາມ່ອງ: ແມ່ນທາຕຸ່ມຄັນທີ່ເກີດຈາກຍຸງ, ມົດ, ແມງໄມ້ອື່ນໆຕອດ ຫຼື ກັດ; ຢາດົມແມ່ນແກ້ວິນວຽນ, ເຈັບຫົວ
2. ສີ: ສີແດງ, ສີຟ້າ ແລະ ການວາງຮູບຕາມແບບ: ວາງຮູບຈອກສີແດງ, ແກ້ວສີຟ້າສະຫຼັບກັນ 3 ຄູ່
3. ການອ່ານພະຍັນຊະນະປະສົມກັບສະຫຼະ ◌ຶ ທີ່ມີວັນນະຍຸດ ◌່, ◌້ ເປັນສຽງດົນຕີ: ກຶ ກຶ່ ກຶ້

## III. ສື່ການຮຽນ-ການສອນ

1. ຮູບພາບຫຼື ວັດຖຸຈິງ: ຢາແດງ ຢາດົມ ຢາມ່ອງ.
2. ບົດຄໍາຄ່ອງ ຢໍຢາ ( ປຶ້ມຄູ່ມືຄູ ).
3. ຮູບພາບຈອກສີແດງ 3 ແຜ່ນ, ແກ້ວສີຟ້າ 3 ແຜ່ນ ແລະ ແຜ່ນແບບການວາງຮູບຕາມສີ: ຈອກສີແດງ ແກ້ວສີຟ້າວາງສະຫຼັບກັນ 3 ຄູ່
4. ບັດສະຫຼະ ◌ຶ ບັດພະຍັນຊະນະ ກ ບັດວັນນະຍຸດ: ◌່, ◌້ ແລະ ບັດຄໍາສັບ: ກຶ ກຶ່ ກຶ້

## IV. ກິດຈະກໍາການຮຽນ-ການສອນ

### 1) ຂັ້ນນໍາເຂົ້າສູ່ບົດຮຽນ:

- ຈັດເດັກເຂົ້າສູ່ລະບຽບ
- ກວດກາຈໍານວນພົນ
- ຄູທັກທາຍຖາມສະບາຍດີກັບເດັກໃນຫ້ອງ.

### 2) ຂັ້ນດໍາເນີນການສອນ

- ຄູສະເໜີຊື່ໜ່ວຍການສອນ(ໜ່ວຍສິ່ງແວດລ້ອມອ້ອມຕົວເຮົາ),ຊື່ກິດຈະກໍາ(ກິດຈະກໍາວົງມົນ),ຫົວຂໍ້:ຢາ
- ຄູສົນທະນາຖາມ-ຕອບກັບເດັກກ່ຽວກັບເຄື່ອງມືການແພດວ່າມີຫຍັງແດ່? ແລ້ວເວລາເຮົາບໍ່ສະບາຍຕ້ອງໄປຫາໃຜ? ເພິ່ນຊິເຮັດແນວໃດກັບຈິນເຈັບ ຫຼັງຈາກກວດແລ້ວເພິ່ນເອົາຫຍັງໃຫ້ມາກິນ(ຢາ)ໃຫ້ເດັກຕອບ
- ຄູສະຫຼຸບຄືນການຕອບຂອງເດັກ ແລະ ຄວາມຖືກຕ້ອງ
- ຄູສະເໜີບົດ ຄໍາຄ່ອງ ຢໍຢາ ໃຫ້ເດັກຟັງ
- ຄູເລົ່າຄໍາຄ່ອງປະກອບທ່າທາງໃຫ້ເດັກຟັງ-ເບິ່ງ 1-2 ເທື່ອ.
- ຄູພາເດັກເລົ່າຄ່ອງຄ່ອງປະກອບທ່າທາງໄປພ້ອມກັນເທື່ອລະວັກ ເທື່ອລະຕອນຈົນຈົບ
- ຄູເລົ່າຄໍາຄ່ອງ ແລະ ໃຫ້ເດັກປະກອບທ່າທາງພ້ອມກັນ
- ຄູແບ່ງເດັກອອກເປັນກຸ່ມ 2 ກຸ່ມເພື່ອປະຕິບັດ

  ກຸ່ມທີ 1 ເລົ່າຄໍາຄ່ອງ

  ກຸ່ມທີ 2 ເຮັດທ່າທາງປະກອບ ແລ້ວຜັດປ່ຽນກັບປະຕິບັດ
- ຄູໃຫ້ເດັກປະຕິບັດ 1-2 ເທື່ອ.
- ຄູຕິດຕາມແນະນໍາເດັກຜູ້ທີ່ເຮັດບໍ່ທັນໄດ້ດີ.

- ຄູສົນທະນາຖາມ-ຕອບກ່ຽວກັບເນື້ອໃນຄຳຄ່ອງວ່າ: ຢາປະເພດຢາປະຈຳບ້ານມີຢາໃດແດ່ທີ່ພວກຫຼານເຄີຍເຫັນ ຢາແດງ, ຢາດົມ ແລະ ຢາທາ(ຢາມ່ວງ, ຢາແດງ: ແລະ ມີປະໂຫຍດແນວໃດແດ່?: ຢາແດງແມ່ນທາປົວບາດແຜທີ່ເກີດຈາກການລົ້ມ, ມີດບາດ, ແກ້ວ, ເຫຼັກບາດ; ຢາມ່ວງ: ແມ່ນທາຕຸ່ມຄັນທີ່ເກີດຈາກຍຸງ, ມົດ, ແມງໄມ້ອື່ນໆຕອດ ຫຼື ກັດ; ຢາດົມແມ່ນແກ້ວິນວຽນ, ເຈັບຫົວ
- ຄູບິກຮູບພາບຂຶ້ນໃຫ້ເດັກສັງເກດ ພ້ອມບອກສີທີ່ຖືກຕ້ອງ ສີ: ສີແດງ, ສີຟ້າ ແລະ ການວາງຮູບຕາມແບບ: ວາງຮູບຈອກສີແດງ, ແກ້ວສີຟ້າສະຫຼັບກັນ 3 ຄູ່
- ຄູໃຫ້ເດັກສັງເກດແຜ່ນແບບ ພ້ອມທັງວາງຮູບຕາມແບບທີ່ຄູກະກຽມມາໃຫ້ວາງຢ່າງຖືກຕ້ອງ
- ຄູສະຫຼຸບພ້ອມທັງແນະນຳຄືນກ່ຽວກັບການວາງຮູບຕາມແບບ
- ຄູເອົາຍົກບັດສະຫຼະ xື ບັດພະຍັນຊະນະ ກ ບັດວັນນະຍຸດ: x່, x້ ແລະ ບັດຄຳສັບ: ກື ກື່ ກື້ ຂຶ້ນໃຫ້ເດັກສັງເກດພ້ອມທັງພາເດັກອ່ານຈົນຄົບທຸກບັດ
- ໃຫ້ເດັກອ່ານບັດຄຳສັບດ້ວຍຕົວເອງ
- ຄູຕິດຕາມແນະນຳຜູ້ທີ່ຍັງອ່ານບໍ່ທັນໄດ້ດີ
- ຄູຍ້ອງຍໍຊົມເຊີຍເດັກ

**3) ຂັ້ນສະຫຼຸບບົດຮຽນ:**

- ຄູຖາມເດັກຄືນວ່າທີ່ຜ່ານໄປນັ້ນແມ່ນເຮົາເລົ່າຄຳຄ່ອງມີຊື່ວ່າແນວໃດ?
- ຄູໃຫ້ເດັກເລົ່າຄຳຄ່ອງຄືນອີກເທື່ອໜຶ່ງພ້ອມກັນ
- ໃຫ້ເດັກເວົ້າຄືນປະເພດຂອງຢາປະຈຳບ້ານວ່າມີຢາຫຍັງແດ່?
- ໃຫ້ເດັກອ່ານບັດພະຍັນຊະນະຄືນພ້ອມກັບໝົດຫ້ອງ

- ສຶກສາອົບຮົມເດັກກ່ຽວກັບການໃຊ້ຢາແຕ່ລະຢ່າງຕ້ອງລະມັດລະວັງ ບໍ່ໃຫ້ເອົາຢາໄປຫຼິ້ນເພາະຈະເຮັດໃຫ້ເກີດອັນຕະລາຍ ສະນັ້ນພວກຫຼານຕ້ອງຟັງຄວາມຜູ້ໃຫຍ່.

## V. ການວັດ ແລະ ປະເມີນຜົນ

**ສັງເກດ ແລະ ທົດສອບຄວາມເຂົ້າໃຈ:**

1. ການເລົ່າຄຳຄ່ອງ ຍໍຢາ ປະກອບທ່າທາງ, ບອກປະເພດຢາປະຈຳບ້ານ ແລະ ປະໂຫຍດຢ່າງຖືກຕ້ອງ.
2. ຄວາມຖືກຕ້ອງໃນການບອກສີ ແລະ ວາງຮູບຕາມແບບ
3. ການອ່ານພະຍັນຊະນະປະສົມກັບສະຫຼະ xື ທີ່ມີວັນນະຍຸດ x່, x້ ເປັສສຽງດົນຕີ: ກື ກື່ ກື້

ວັນທີ່...........ເດືອນ...........ປີ.............

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ ລາຍເຊັນຜູ້ແຕ່ງບົດສອນ

# ບົດສອນ

**ອະນຸບານ 3**

**ກິດຈະກຳວົງມົນ**

**ໜ່ວຍ: ຕົວຂອງຂ້ອຍ** **ອາທິດທີ 2 ມື້ທີ 1**

**ຫົວຂໍ້: ຕາ** **ເວລາ 15-20 ນາທີ**

## I. ຈຸດປະສົງ:

ເພື່ອໃຫ້ເດັກສາມາດ:

1. ບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການປົວລະບັດຮັກສາຕາໄດ້ຢ່າງຖືກຕ້ອງ.
2. ປະຕິບັດຕົວຈິງໃນການສັງເກດເບິ່ງສິ່ງຂອງຕ່າງໆໃນຫ້ອງຮຽນ.
3. ເລົ່າຄຳຄ່ອງ, ເວົ້າຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນຄຳຄ່ອງໄດ້ຊັດເຈນ

## II. ເນື້ອໃນຕົ້ນຕໍ

1. ສ່ວນປະກອບ, ຄຸນປະໂຫຍດ ແລະ ການປົວລະບັດຮັກສາຕາ
   - ສ່ວນປະກອບຂອງຕາ: ໜ່ວຍຕາ, ຂົນຕາ
   - ຄຸນປະໂຫຍດຂອງຕາ: ໃຊ້ໄວ້ເບິ່ງ ແລະ ສັງເກດສິ່ງຕ່າງໆທີ່ຢູ່ອ້ອມຕົວ
   - ການປົວລະບັດຮັກສາຕາ: ລະວັງບໍ່ໃຫ້ຂີ້ຝຸ່ນ ຫຼື ແມງໄມ້ເຂົ້າຕາ, ບໍ່ເອົາມືເປື້ອນສີຕາ, ບໍ່ຢູ່ບ່ອນມືດ ແລະ ບໍ່ເບິ່ງສິ່ງຂອງທີ່ມີສີຂາວກາງແດດກ້າ
2. ການເລົ່າຄຳຄ່ອງ ຮັກສາຕາ, ເວົ້າຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ
   - ຄຳສັບ: ໜ່ວຍຕາ, ມົນຕາ, ແສງແດດ, ຂີ້ຝຸ່ນ, ແມງໄມ້
   - ເວົ້າປະໂຫຍກ: ຂ້ອຍບໍ່ເບິ່ງແສງແດດກ້າ, ຂ້ອຍບໍ່ມົນຕາໃສ່ຂີ້ຝຸ່ນ, ຂ້ອຍຮັກສາຕາ

## III. ສື່ການຮຽນ-ການສອນ

1. ຮູບຕາ.
2. ບົດຄຳຄ່ອງ ຮັກສາຕາ ( ປື້ມຄູ່ມືຄູ ).

## IV. ກິດຈະກຳການຮຽນ-ການສອນ

### 1. ຂັ້ນນຳເຂົ້າສູ່ບົດຮຽນ:

- ຈັດເດັກເຂົ້າສູ່ລະບຽບ
- ກວດກາຈຳນວນພົນ
- ຄູທັກທາຍຖາມສະບາຍດີກັບເດັກໃນຫ້ອງ ແລະ ໃຫ້ເດັກບອກການອະນາໄມຕົນເອງ 2-3 ຄົນ.

### 2. ຂັ້ນດຳເນີນການສອນ

- ຄູສະເໜີຊື່ໜ່ວຍການສອນ(ໜ່ວຍຕົວຂອງຂ້ອຍ), ຊື່ກິດຈະກຳ(ກິດຈະກຳວົງມົນ), ຫົວຂໍ້: ຕາ (ການປົວລະບັດຮັກສາຕາ)
- ຄູສະເໜີບົດ ຄຳຄ່ອງ ຮັກສາຕາ ໃຫ້ເດັກຟັງ
- ຄູເລົ່າຄຳຄ່ອງປະກອບທ່າທາງໃຫ້ເດັກຟັງ-ເບິ່ງ 1-2 ເທື່ອ.

- ຄູພາເດັກເລົ່າຄ່ອງຄ່ອງປະກອບທ່າທາງໄປພ້ອມກັນເທື່ອລະວັກ ເທື່ອລະຕອນຈົນຈົບ
- ຄູເລົ່າຄຳຄ່ອງ ແລະ ໃຫ້ເດັກປະກອບທ່າທາງພ້ອມກັນ
- ຄູແບ່ງເດັກອອກເປັນກຸ່ມ 2 ກຸ່ມເພື່ອປະຕິບັດ
  ກຸ່ມທີ 1 ເລົ່າຄຳຄ່ອງ
  ກຸ່ມທີ 2 ເຮັດທ່າທາງປະກອບ ແລ້ວຜັດປ່ຽນກັບປະຕິບັດ
- ຄູໃຫ້ເດັກປະຕິບັດ 1-3 ເທື່ອ.
- ຄູຕິດຕາມແນະນຳເດັກຜູ້ທີ່ເຮັດບໍ່ທັນໄດ້ດີ.
- ຄູສົນທະນາຮ່ວມກັນກັບເດັກກ່ຽວກັບເນື້ອໃນຂອງບົດຄຳຄ່ອງ
- ຍ້ອງຍໍຊົມເຊີຍເດັກ
- ຄູຍົກບັດຄຳສັບ ແລະ ບັດປະໂຫຍກຕາມເນື້ອໃນຄຳຄ່ອງ ເທື່ອລະບັດ ແລ້ວພາເດັກເວົ້າ ພ້ອມກັນໝົດຫ້ອງ ແລະ ໃຫ້ເດັກເວົ້າຄຳສັບ ແລະ ປະໂຫຍກເທື່ອລະຄົນຈົນຄົບ
- ຄູຍົກຮູບຕາຂຶ້ນໃຫ້ເດັກສັງເກດ ແລ້ວສົນທະນາຖາມ-ຕອບກັບເດັກວ່າ ຕາຂອງຄົນເຮົາປະກອບມີຫຍັງແດ່? (ໃຫ້ເດັກຕອບ) ປະກອບມີ ໜ່ວຍຕາ, ຂົນຕາ ແລ້ວຕາມີໄວ້ເຮັດໜ້າທີ່ຫຍັງແດ່?
- ຄູໃຫ້ເດັກປະຕິບັດຕົວຈິງໂດຍໃຫ້ສັງເກດເບິ່ງສິ່ງຕ່າງໆທີ່ຢູ່ອ້ອມຕົວ
- ຄູສົນທະນາຖາມ-ຕອບກັບເດັກກ່ຽວກັບຄຸນປະໂຫຍດ ແລະ ການປົວລະບັດຮັກສາຕາ ໂດຍຄູຕັ້ງຫົວຂໍ້ໄວ້ວ່າຕາມີໄວ້ເຮັດຫຍັງແດ່? ເດັກຕອບ........ ແລ້ວເຮົາຄວນປົວລະບັດຮັກສາຕາຄືແນວໃດ?.........
- ຄູສະຫຼຸບການໃຫ້ຄຳເຫັນຂອງເດັກ ແລະ ສະຫຼຸບການປົວລະບັດຮັກສາຕາ...
- ຄູຍ້ອງຍໍຊົມເຊີຍເດັກ

3. **ຂັ້ນສະຫຼຸບບົດຮຽນ:**
- ຄູຖາມເດັກຄືນວ່າທີ່ຜ່ານໄປນັ້ນແມ່ນເຮົາເລົ່າຄຳຄ່ອງມີຊື່ວ່າແນວໃດ?
- ຄູໃຫ້ເດັກເລົ່າຄຳຄ່ອງຄືນອີກເທື່ອໜຶ່ງພ້ອມທັງເວົ້າຄືນກ່ຽວກັບສ່ວນປະກອບ ແລະ ປະໂຫຍດຂອງຕາ.
- ສຶກສາອົບຮົມເດັກກ່ຽວກັບການອະນາໄມການປົວລະບັດຮັກສາຕາເປັນປະຈຳ ບໍ່ຄວນຖືເບົາ ພ້ອມກັນນັ້ນພວກຫຼານຕ້ອງມີຄວາມສາມັກຄີຊ່ວຍເຫຼືອຮັກແພງເຊິ່ງກັນແລະກັນ.

## V. ການວັດ ແລະ ປະເມີນຜົນ

**ສັງເກດ ແລະ ທົດສອບຄວາມເຂົ້າໃຈ:**

1. ຄວາມຖືກຕ້ອງໃນການບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການປົວລະບັດຮັກສາຕາ
2. ການປະຕິບັດຕົວຈິງໃນການສັງເກດສິ່ງຕ່າງໆ.
3. ຄວາມຊັດເຈນໃນການເວົ້າເປັນຄຳສັບ ແລະ ປະໂຫຍກຕາມເນື້ອໃນຄຳຄ່ອງ

ວັນທີ່...........ເດືອນ..........ປີ..........

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ ລາຍເຊັນຜູ້ແຕ່ງບົດສອນ

## 10 ການຜະລິດສື່ການສອນ

ການຜະລິດອຸປະກອນ ຫຼື ສື່ການຮຽນ-ການສອນຂອງຜູ້ສອນນັບເປັນອີງປະກອບທີ່ສຳຄັນຫຼາຍ ອີກປະການໜຶ່ງໃນຂະບວນການຮຽນ-ການສອນ ເນື່ອງຈາກຄວາມກ້າວໜ້າທາງເທັກໂນໂລຢີໃນປະຈຸບັນມີການພັດທະນາ ແລະ ປ່ຽນແປງຢ່າງໄວວາເປັນເຫດໃຫ້ຜູ້ສອນຕ້ອງຮູ້ຈັກນຳເອົາວິທີການ ແລະ ສື່ຕ່າງໆ ມາໃຊ້ໃນການຈັດການຮຽນ-ການສອນ ທັງນີ້ເພື່ອຊ່ວຍໃຫ້ຄຸນນະພາບການຮຽນຮູ້ດີຂຶ້ນ ແລະ ໃຫ້ຜູ້ຮຽນໄດ້ຮູ້ປະລິມານຫຼາຍຂຶ້ນໃນໄລຍະເວລາທີ່ກຳນົດ ລວມເຖິງຊ່ວຍໃຫ້ຜູ້ຮຽນເກີດຄວາມສົນໃຈ ແລະ ມີສ່ວນຮ່ວມໃນການຮຽນ-ການສອນເຊິ່ງຊ່ວຍສົ່ງເສີມການຄິດ ແລະ ການແກ້ບັນຫາໃຫ້ກັບຜູ້ຮຽນ ເຮັດໃຫ້ການສອນບັນລຸຜົນສຳເລັດຕາມຈຸດປະສົງ.

- **ເຝິກສອນຕົວຈິງໃນຫ້ອງຮຽນ ແລະ ຖອດຖອນບົດຮຽນ**

ກິດຈະກຳວົງມົນ ການສອນຄຳຄ່ອງ ກໍ່ແມ່ນກິດຈະກຳໜຶ່ງທີ່ນັກຮຽນຄູ ໄດ້ເຝິກສອນຕົວຈິງຄືກັນກັບກິດຈະກຳການສອນສັງເກດແອບເວົ້າ ເພື່ອພັດທະນາທາງດ້ານພາສາໃຫ້ແກ່ເດັກກ່ອນໄວຮຽນ ໂດຍການໃຊ້ການເລົ່າຄຳຄ່ອງປະກອບທ່າທາງເຄື່ອນໄຫວຕ່າງໆ ໂດຍນຳໃຊ້ວິທີສອນແບບບູລະນາການໃຫ້ແກ່ເດັກ ດ້ວຍຫຼາຍຮູບແບບໃນການຈັດກິດຈະກຳແບບມີຊີວິດຊີວາ ເພື່ອໃຫ້ເດັກໄດ້ເກີດມີຄວາມເຂົ້າໃຈ, ເນື້ອໃນຂອງບົດຄຳຄ່ອງຕາມຈຸດປະສົງທີ່ວາງໄວ້ ດັ່ງຂັ້ນຕອນຂອງການປະຕິບັດກິດຈະກຳດັ່ງຕໍ່ໄປນີ້: ຄູສາທິດການສອນກິດຈະກຳວົງມົນການສອນຄຳຄ່ອງໃນແຕ່ລະສົ່ມອາຍຸຂອງເດັກໃນໂຮງລ້ຽງເດັກ-ອະນຸບານໃຫ້ນັກສຶກສາຄູເບິ່ງກ່ອນ ຈາກນັກນຳພານັກຮຽນຄູລົງສັງເກດ

- **ໃຈຄວາມ**

ຄຳຄ່ອງແມ່ນການພັດທະນາພາສາທາງດ້ານພາສາຂອງເດັກ, ໂດຍສະເພາະແມ່ນການຟັງ, ການເວົ້າຕະຫຼອດເຖິງການສະແດງທ່າທາງຕ່າງໆອອກມາຕາມລັກສະນະ ແລະ ເນື້ອໃນຂອງຄຳຄ່ອງ ເພື່ອຢາກໃຫ້ບັນລຸຜົນສຳເລັດດັ່ງກ່າວຄູຕ້ອງມີຄວາມຮູ້ໃນການແຕ່ງຄຳຄ່ອງ, ນຳໄປໝູນໃຊ້ໃຫ້ແທດເໝາະກັບໜ່ວຍການສອນ

- **ເຝິກຂຽນຄຳຄ່ອງສຳລັບເດັກ**

1. ແຕ່ງຄຳຄ່ອງຮ່ວມກັນໝົດຫ້ອງໃຫ້ໄດ້ 2 ບົດ ( ປະເພດລະບົດ)
2. ເຝິກແຕ່ງເປັນກຸ່ມ, ແບ່ງກຸ່ມຕາມຈຳນວນຂອງນັກຮຽນໃຫ້ແຕ່ງຄຳກອນຕາມແຕ່ລະຊໍ່າອາຍຸຂອງເດັກ, ໃຫ້ແຕ່ງປະເພດຂອງຄຳຄ່ອງ, ແຕ່ລະກຸ່ມບໍ່ໃຫ້ຄືກັນ

# ບົດທີ4
# ການສອນເລົ່ານິທານສໍາລັບເດັກກ່ອນໄວຮຽນ

**ເວລາ 18 ຊົ່ວໂມງ**

| |
|---|
| ຈຸດປະສົງໃຫ້ນັກສຶກສາສາມາດ:<br>- ອະທິບາຍຄວາມໝາຍ ແລະ ຄວາມສໍາຄັນຂອງການສອນເລົ່ານິທານສໍາລັບເດັກກ່ອນໄວຮຽນ<br>- ບອກຈຸດປະສົງການສອນເລົ່ານິທານ, ເນື້ອໃນ, ຂັ້ນຕອນ, ວິທີສອນເລົ່ານິທານ ແລະ ວິທີການປະເມີນການສອນເລົ່ານິທານ<br>- ແຕ່ງບົດສອນແລະຜະລິດອຸປະກອນປະກອບການຮຽນ-ການສອນໂດຍນໍາໃຊ້ວັດຖຸທີ່ມີໃນທ້ອງຖິ່ນເຂົ້າໃນການສອນເລົ່າເລື່ອງໄດ້ຢ່າງເໝາະສົມ<br>- ນໍາໃຊ້ບົດເລື່ອງເຂົ້າໃນການຈັດການຮຽນ-ການສອນເດັກຢ່າງເໝາະສົມ |

## 1. ຄວາມໝາຍຄວາມສໍາຄັນຂອງການເລົ່າເລື່ອງສໍາລັບເດັກ

ໃນການດໍາລົງຊີວິດປະຈໍາວັນຕາມທໍາມະຊາດຂອງເດັກແມ່ນຕິດພັນຢ່າງສະໜິດແໜ້ນກັບການຟັງເລົ່າເລື່ອງ, ເລົ່າເຫດການ ຫຼື ເລົ່ານິທານພື້ນບ້ານພື້ນເມືອງພາຍໃນຄອບຄົວກໍຄືສັງຄົມອ້ອມຂ້າງເດັກ.ດັ່ງນັ້ນ,ຈຶ່ງເວົ້າໄດ້ວ່າການເລົ່າເລື່ອງໃຫ້ເດັກຟັງມີຄວາມໝາຍສໍາຄັນຕໍ່ກັບການພັດທະນາທັກສະຕ່າງໆຂອງເດັກຢ່າງຮອບດ້ານ ເຊັ່ນ: ພັດທະນາທາງດ້ານພາສາ, ອາລົມຈິດ,ສະຕິປັນຍາ ແລະ ສັງຄົມສຶກສາເຊິ່ງມັນສະແດງອອກແຕ່ລະດ້ານດັ່ງລຸ່ມນີ້

### 1.1. ດ້ານພາສາ

ຜ່ານການຮັບຟັງການເລົ່າເລື່ອງຈາກຄູ ຫຼື ຜູ້ໃຫຍ່ຈະຊ່ວຍໃຫ້ເດັກໄດ້ຮຽນຄໍາສັບໃໝ່ຮູ້ຈັກຄວາມໝາຍຂອງຄໍາສັບເລົ່ານັ້ນ,ສາມາດເວົ້າເປັນປະໂຫຍກສັ້ນໄດ້ລ່ຽນໄຫຼສົນທະນາ ແລະ ສະແດງຄໍາຄິດເຫັນຂອງຕົນກັບຄູ ແລະ ໝູ່ເພື່ອນດ້ວຍຄວາມກ້າຫານ ແລະ ຄ່ອງແຄ້ວໄດ,ສາມາດເລົ່າເລື່ອງຄືນໃຫ້ຄູ ແລະໝູ່ເພື່ອນຟັງໃນບາງຕອນຂອງບົດເລົ່າທີ່ສໍາຄັນ ແລະ ປະທັບໃຈ ຈາກການເລົ່າເລື່ອງປະເພດຕ່າງໆ ທີ່ປະກອບດ້ວຍຫຼາກຫຼາຍຮູບແບບໜ້າຈັບໃຈສູ່ເດັກຟັງຈະເປັນການກະຕຸກໃຫ້ເດັກສົນໃຈຕໍ່ປຶ້ມເລື່ອງ,ເຊິ່ງໃນເບື້ອງຕົ້ນເດັກຈະເລົ່າ ຫຼື ເວົ້າໄປຕາມຄູເລົ່າໃຫ້ເດັກຟັງຈາກນັ້ນຈະເລົ່າຕາມຮູບພາບທີ່ເຫັນ ແລະ ຈະເລົ່າຕາມຈິນຕະນາການຂອງເຂົາເອງນີ້ຄືວິທີການເບື້ອງຕົ້ນທີ່ຈະເອົາເດັກເຂົ້າໄປສູ່ໂລກແຫ່ງການອ່ານເຊິ່ງເປັນການລິເລີ່ມໃນການສ້າງລັກສະນະນິໄສໃຫ້ເດັກເກີດມີຄວາມຮັກຕໍ່ການອ່ານ ແລະ ການຮຽນພາສາໃຫ້ດີຂຶ້ນ

### 1.2. ດ້ານອາລົມຈິດ

ບົດເລື່ອງທີ່ຄູເລືອກມາເລົ່າສູ່ເດັກຟັງ ຈະສ້າງຄວາມສະເທືອນໃຈດ້ານອາລົມຈິດຂອງເດັກຢູ່ສະເໝີ ບາງເລື່ອງຈະເຮັດໃຫ້ເກີດອາລົມເບີກບານມ່ວນຊື່ນ,ຍິ້ມແຍ້ມແຈ່ມໃສຕິດຕາມໄປດ້ວຍຮອຍຍິ້ມ ແລະ ສຽງຫົວບາງເລື່ອງຕື່ນເຕັ້ນພະຈົນໄພເຮັດໃຫ້ເກີດມີອາລົມຢາກຮູ້ຢາກເຫັນ,ຢາກຕິດຕາມເລື່ອງລາວ ວ່າມັນຈະເປັນແນວໃດ? ໃນຂັ້ນຕໍ່ໄປ ບາງເລື່ອງຟັງແລ້ວພັດເຮັດໃຫ້ຢ້ານກົວເພາະມີການຕໍ່ສູ້ກັນຢ່າງດຸເດືອດລະຫວ່າງສັດໃຫຍ່ ຫຼື ສັດນ້ອຍເດັກຟັງແລ້ວເກີດອາລົມຄຽດແຄ້ນເຄັ່ງຕຶງຫງຸດຫງິດ,ໂສກເສົ້າ,ເສຍໃຈບາງຄັ້ງກໍມີນໍ້າຕາລັ່ງໄຫຼອອກມາເຊິ່ງບົ່ງບອກ ແລະ ສະດງໃຫ້ເຫັນວ່າບົດເລື່ອງມີອິດທິພົນ ແລະ ບົດບາດສໍາຄັນຕໍ່ການເຝິກອາລົມຈິດຂອງເດັກໄດ້.

**1.3. ດ້ານສະຕິປັນຍາ**

ນິດເລື່ອງແຕ່ລະນິດທີ່ຄູຄັດເລືອກມາເລົ່າສູ່ເດັກຟັງມີຄຸນຄ່າ ໃນແຕ່ລະດ້ານແຕກຕ່າງກັນເພາະໃນແຕ່ລະນິດເລື່ອງນັກຂຽນໄດ້ກໍານົດເປົ້າໝາຍສ້າງຂອດບັນຫາໃຫ້ເດັກໄດ້ຄົ້ນຄິດ ແລະ ເຝິກຝົນສະໝອງໃຫ້ຮູ້ຈັກຊອກວິທີແກ້ໄຂບັນຫາຢ່າງຄ່ອງແຄ້ວດ້ວຍຕົນເອງ ເຮັດໃຫ້ເດັກຄົ້ນຄິດ,ຮູ້ຈໍາແນກສິ່ງຜິດ ສິ່ງຖືກຕ້ອງ ນີ້ຄືຂະບວນການພັດທະນາທາງດ້ານສະຕິປັນຍາຂອງເດັກ ຟັງເພື່ອເຝິດຝົນສະຕິປັນຍາຂອງເດັກໃຫ້ແຫຼມຄົມຜ່ານການຟັງນິດເລົ່າເລື່ອງຂອງຄູຜູ້ໃຫຍ່,ໝູ່ເພື່ອນຕະຫຼອດຮອດການອ່ານ ແລະ ການເລົ່າຂອງເດັກເອງ.

**1.4. ດ້ານສັງຄົມ**

ການອ່ານ ຫຼື ເລົ່າເລື່ອງສູ່ເດັກຟັງຈະເປັນການເຝິກລັກສະນະນິໄສໃຫ້ເດັກໄດ້ມີສະມາທິໃນການຟັງ, ມີຄວາມອົດທົນລໍຄອຍຜ່ານນິດເລື່ອງຈະຊ່ວຍສຶກສາເດັກມີຈິດໃຈອ່ອນໂຍນມີຄວາມສາມັກຄີ, ເອື້ອເຟື້ອເຜື່ອແຜ່, ຮູ້ຂໍໂທດ ແລະ ໃຫ້ອາໄພມີຄວາມສາມາດຢູ່ຮ່ວມກັບໝູ່ເພື່ອນ,ຄອບຄົວ ແລະ ສັງຄົມໄດ້ດີ, ຫຼີກລ້ຽງພຶດຕິກໍາທີ່ບໍ່ດີ ແລະ ບໍ່ມີປະໂຫຍດໃນຂະນະທີ່ຄູກໍາລັງອ່ານຫຼືເລົ່າເລື່ອງໃຫ້ເດັກຟັງຢູ່ນັ້ນຄູຈະມີໂອກາດໃກ້ຊິດຕິດແທດກັບເດັກຢ່າງເປັນກັນເອງຄູອາດຈະຍາດແຍ່ງໂອກາດນີ້ ສຶກສາອົບຮົມເດັກໂດຍຜ່ານເນື້ອໃນ ຫຼື ຕົວລະຄອນໃນນິດເລື່ອງເປັນສື່ກາງເພື່ອຈູງໃຈເດັກໃຫ້ຮໍ່າຮຽນເອົາເປັນແບບຢ່າງທັດສະນະຄະຕິ ແລະ ພຶດຕິກໍາທີ່ດີຂອງຕົວລະຄອນໃນນິດເລື່ອງນັ້ນໃຫ້ກາຍເປັນຄໍາສອນເດັກແບບທໍາມະຊາດໂດຍສົມທຽບໃສ່ຜູ້ອື່ນໆ ມາໃສ່ຕົວເດັກເອງຢ່າງບໍ່ຮູ້ສຶກຕົວເພາະອີງໃສ່ຈິດຕະສາດຂອງເດັກຈະບໍ່ມັກການສິດສອນ ຫຼື ສຶກສາອົບຮົມແບບເປັນທາງການຄືກັບສຶກສາອົບຮົມຜູ້ໃຫຍ່ແມ່ນຍາກທີ່ຈະໄດ້ຮັບໝາກຜົນ.

ການເລົ່າເລື່ອງແມ່ນສິລະປະຢ່າງໜຶ່ງເພື່ອພັດທະນາພາສາໃຫ້ແກ່ເດັກເຊິ່ງເລີ່ມຈາກການຟັງ,ການເວົ້າ,ການອ່ານຈາກຮູບພາບ ແລະ ການແຕ້ມຮູບເຊິ່ງເປັນພື້ນຖານຂອງການຂຽນເຮັດໃຫ້ເດັກເກີດມີນິໄສຮັກການຮຽນເພາະວ່ານິດເລື່ອງທີ່ເດັກໄດ້ຟັງຈະເຊື່ອມຊຶມເຂົ້າໄປສູ່ຄວາມຊົງຈໍາ ແລະ ຈະກາຍເປັນຄວາມຮັກທີ່ອ່ອນໂຍນຄວາມປະທັບໃຈອັນສຸດຊຶ້ງທີ່ຜູ້ເລົ່າມອບເປັນຂອງຂວັນໃຫ້ແກ່ຜູ້ຟັງຊຸກຍູ້ໃຫ້ພາສາເວົ້າ ແລະ ຈິນຕະນາການຂອງເດັກມີການຂະຫຍາຍຕົວຢ່າງບໍ່ຢຸດຢັ້ງເພື່ອເສີມສ້າງໃຫ້ເດັກມີອຸດົມຄະຕິທີ່ດີໃນອະນາຄົດ.

ກິດຈະກໍາ ການສົນທະນາກ່ຽວກັບຄວາມໝາຍ,ຄວາມສໍາຄັນຂອງການເລົ່າເລື່ອງສໍາລັບເດັກ

ອຸປະກອນ ບັດຄໍາຖາມ,ປຶ້ມເລື່ອງ

**ວິທີດໍາເນີນກິດຈະກໍາ**

- ໃຫ້ຮັກຮຽນຄູ1-2ຄົນມາເລົ່າເລື່ອງ ຫຼື ອ່ານເລື່ອງໃຫ້ຟັງແລ້ວສົນທະນາຮ່ວມກັນໝົດຫ້ອງກັບເນື້ອໃນຂອງນິດເລື່ອງ
- ແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມໃຫ້ແຕ່ລະກຸ່ມຄົ້ນຄ້ວາຄໍາຖາມລຸ່ມນີ້
- ນິດເລື່ອງໄດ້ພັດທະນາທັກສະຂອງເດັກໃນດ້ານໃດແດ່? ແຕ່ລະດ້ານສະແດງອອກຄືແນວໃດ?
- ໃຫ້ແຕ່ລະກຸ່ມຄົ້ນຄ້ວາສົນທະນາຮ່ວມກັນແລ້ວຕ່າງໜ້າແຕ່ລະກຸ່ມນໍາສະເໜີ
- ກຸ່ມອື່ນໆ ປະກອບຄໍາຄິດຄໍາເຫັນ
- ຄູສັງລວມ ແລະ ສະຫຼຸບຄືນກ່ຽວກັບຄວາມໝາຍຄວາມສໍາຄັນຂອງການເລົ່າເລື່ອງ

## 2. ຈຸດປະສົງຂອງການເລົ່າເລື່ອງສໍາລັບເດັກ

ການສອນເລົ່າເລື່ອງສໍາລັບເດັກມີຈຸດປະສົງດັ່ງນີ້:

- ພັດທະນາພາສາຄໍາເວົ້າ
- ເຝິກການຟັງ-ການສະມາທິ
- ເຝິກແນວຄິດສະຕິປັນຍາໃຫ້ແຫຼມຄົມ
- ສົ່ງເສີມຄວາມກ້າຫານ
- ຜ່ອນຄາຍຄວາມເຄັ່ງຕຶງ ແລະ ສ້າງຄວາມເບີກບານມ່ວນຊື່ນ
- ຕອບສະໜອງຄວາມຮຽກຮ້ອງຕ້ອງການ ແລະ ຄວາມປະທັບໃຈໃຫ້ແກ່ເດັກຕາມທໍາມະຊາດຂອງເຂົາ
- ສ້າງຈຸດສົນໃຈໃຫ້ແກ່ເດັກຢາກມາໂຮງຮຽນຢ່າງປົກກະຕິ
- ສອນໃຫ້ເດັກຮຽນຮູ້ບັນຫາຕ່າງໆ ແລະ ຮູ້ແກ້ໄຂບັນຫາເທື່ອລະກ້າວ
- ຮຽນຮູ້ເອົາແບບຢ່າງທີ່ດີຈາກບົດເລື່ອງແລ້ວແກ້ໄຂພຶດຕິກໍາທີ່ບໍ່ດີ
- ປູກຝັງນິໄສໃຫ້ເດັກຮັກການອ່ານ ແລະ ການຮຽນ.

ກິດຈະກໍາ ກ່ຽວກັບຈຸດປະສົງຂອງການເລົ່າເລື່ອງສໍາລັບເດັກ

ອຸປະກອນ ບັດຄໍາຖາມ

**ວິທີດໍາເນີນກິດຈະກໍາ**

- ຄູພານັກຮຽນສ້າງບັນຍາກາດດ້ວຍການຫຼິ້ນເກມຕັດຮູບພາບຕ່າງໆ ໃຫ້ເປັນຮູບພາບທີ່ສົມບູນ
- ແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
- ຄູຢາຍຊອງເກມໃຫ້ກຸ່ມລະ 1 ຊອງ
- ຄູອະທິບາຍກະຕິການການຫຼິ້ນ
- ແຕ່ລະກຸ່ມເລີ່ມຫຼິ້ນພ້ອມກັນ
- ກຸ່ມໃດຕໍ່ແລ້ວກ່ອນໃຫ້ຍົກມືຂຶ້ນແລ້ວອ່ານໃຫ້ທຸກຄົນຟັງພ້ອມທັງອະທິບາຍຄວາມໝາຍຂອງຮູບພາບ
- ຄູສັງລວມ ແລະ ສະຫຼຸບຄືນກ່ຽວກັບການຫຼິ້ນເກມຂອງແຕ່ລະກຸ່ມ
- ຄູຕັ້ງຄໍາຖາມເພື່ອລະດົມສະໝອງເປັນລາຍບຸກຄົນເຊິ່ງມີຄໍາຖາມດັ່ງນີ້:

1. ຈຸດປະສົງຂອງການເລົ່າເລື່ອງສໍາລັບເດັກມີແນວໃດ?

- ໃຫ້ນັກຮຽນປະກອບຄໍາຄິດຄໍາເຫັນເປັນລາຍບຸກຄົນ
- ຄູສັງລວມ ແລະ ສະຫຼຸບຄືນ
- ນໍາພານັກຮຽນຄູເບິ່ງ CD ກ່ຽວກັບຮູບແບບຕ່າງໆຂອງການເລົ່າເລື່ອງ

## 3. ເນື້ອໃນຂອງການສອນເລົ່ານິທານ

### ຮູບແບບການສອນເລົ່າເລື່ອງສໍາລັບເດັກ

ຮູບແບບຂອງການສອນເລົ່າເລື່ອງສໍາລັບເດັກມີດັ່ງນີ້:

- ເລົ່າປາກເປົ່າ
- ເລົ່າເລື່ອງປະກອບປຶ້ມ ຫຼື ຮູບພາບ

- ການເລົ່າລະຄອນເຈັ້ຍ
- ເລົ່າປະກອບຜ້າກັ້ນເປື້ອນ
- ເລົ່າປະກອບຫຸ່ນເຊີດ
- ເລົ່າປະກອບຫຸ່ນນິ້ວມື
- ເລົ່າປະກອບການແຕ້ມ
- ເລົ່າປະກອບອຸປະກອນໃກ້ຕົວ
- ເລົ່າປະກອບຮູບຕິດ(ປານາເຊັຍນເຕີ)

## 4 ຂັ້ນຕອນຂອງການສອນເລົ່ານິທານ

ການເລົ່າບົດເລື່ອງ ຄູຈະເລົ່າເລື່ອງທີ່ກ່ຽວກັບເລື່ອງລາວທີ່ຄູຕ້ອງການໃຫ້ເດັກເຂົ້າໃຈ ຫຼື ໃຫ້ປະຕິບັດຕາມ ສ່ວນຫຼາຍຈະເປັນການປູກຝັງ ຫຼື ການສອນໃນເລື່ອງທີ່ເປັນນາມມະທຳ, ວິທີການນີ້ຈະຊ່ວຍໃຫ້ເດັກເຂົ້າໃຈໄດ້ດີຂຶ້ນ ເພາະເດັກໃນໄວນີ້ຈະມັກຟັງບົດເລື່ອງ ແລະ ມັກຮຽນແບບຕົວລະຄອນໃນບົດເລື່ອງ, ໃນການເລົ່າຄູອາດໃຊ້ຮູບພາບ ຫຼື ຮຸ່ນ ຫຼື ສ່ວນຕ່າງໆຂອງຮ່າງການປະກອບ ເຊິ່ງປະຕິບັດຕາມຂັ້ນຕອນດັ່ງນີ້:

1) ສະເໜີຊື່ບົດນິທານ
2) ດຳເນີນການເລົ່າປະກອບສຽງ, ທ່າທາງ, ຈັງຫວະ, ອາລົມ, ອຸປະກອນ
3) ສົນທະນາກ່ຽວກັບເນື້ອໃນບົດນິທານ
4) ສະຫຼຸບການເລົ່ານິທານ

**ຂັ້ນຕອນການສອນເລົ່າເລື່ອງໄດ້ຈັດແບ່ງອອກເປັນ 3 ຂັ້ນຕອນ**

- **ບາດກ້າວເລີ່ມເຂົ້າສູ່ບົດຮຽນ**

ຄູຄວນມີຄວາມສາມາດໃຊ້ຫຼາຍໆວິທີເພື່ອດຶງດູດຄວາມສົນໃຈຂອງເດັກເຂົ້າສູ່ບົດຮຽນທີ່ກຳລັງຈະສອນ ດ້ວຍ 2 ຮູບແບບຄື: ສອນແບບທາງກົງ ແລະ ທາງອ້ອມເຊັ່ນ: ບອກຫວົບົດໂດຍກົງ, ຫຼິ້ນເກມ ແລະ ອື່ນໆທີ່ພົວພັນກັບບົດເລື່ອງທີ່ຄູຢາກຈະສອນເດັກ.

- **ຂັ້ນຕອນດຳເນີນການເລົ່າ**

ໃນເວລາເດັກມີຄວາມສົນໃຈຕໍ່ຄຳຖາມແລ້ວຄູບໍ່ຄວນຊັກຊ້າ ຄວນເລີ່ມຕົ້ນເລົ່າເລື່ອງໃຫ້ເດັກຟັງເລີຍ. ສິລະປະໃນການເລົ່າຄວນນຳໃຊ້ສຽງ, ທ່າທາງ ແລະ ໃຊ້ວັດຖຸອຸປະກອນຕ່າງໆປະກອບເຂົ້າບົດເລື່ອງ ເຮັດໃຫ້ການສອນນັ້ນມີບັນຍາກາດຄຶກຄື້ນມີຊີວິດຊີວາເບີກບານມ່ວນຊື່ນສະໜຸກສະໜານ ແລະ ປະທັບໃຈແກ່ເດັກທຸກຄົນ.

ເວລາເລົ່າໃຫ້ເດັກຟັງແລ້ວ ຄູຕ້ອງຕັ້ງຄຳຖາມສົນທະນາກັບເດັກກ່ຽວກັບເນື້ອໃນບົດເລື່ອງຕາມເລົ່າມາ ນອກນັ້ນຕ້ອງໃຫ້ເດັກໄດ້ປະກອບສວນນຳຄູຕື່ມ ເພື່ອສ້າງບັນຍາກາດ ແລະ ເຮັດໃຫ້ເດັກບໍ່ອິດເມື່ອຍ.

- **ບາດກ້າວສະຫຼຸບ**

ເມື່ອຄູເລົ່າເລື່ອງໃຫ້ເດັກຟັງຈົບລົງແລ້ວຄູຄວນກະຕຸ້ນທາງດ້ານຈິດໃຈເດັກ ແລະ ກະຕຸ້ນຄວາມສາມາດເຮັດໃຫ້ເດັກຄິດ ແລະ ພັດທະນາຈິນຕະນາການຂອງເດັກຢ່າງກວ້າງຂວາງ ແລະ ເປີດໂອກາດໃຫ້ເດັກມີສ່ວນຮ່ວມໃນການກະທຳຕົວຈິງເຊັ່ນ: ຜ່ານການຟັງບົດເລື່ອງມານັ້ນຫຼານຄິດແນວໃດ? ມີໃຜແດ່? ຍ້ອນຫຍັງມັນຈຶ່ງເປັນແນວນັ້ນ? ຫຼານຮັກໃຜ? ບໍ່ຮັກໃຜ? ຍ້ອນຫຍັງ? ເພື່ອເຮັດໃຫ້ຊົ່ວການຮຽນໂມງດີຂຶ້ນ ແລະ ຊ່ວຍໃຫ້ເດັກເຂົ້າໃຈເນື້ອ

ໃນບົດເລື່ອງລະອຽດກວ່າເກົ່າຄູອາດຈະນໍາພາເດັກຫຼິ້ນເກມຕ່າງໆເຊັ່ນ: ຮ້ອງເພງ, ເລົ່າຄໍາຄ່ອງສະແດງບົດບາດ ສົມມຸດ ແລະ ສະແດງລະຄອນສັ້ນ.

## 5 ວິທີສອນເລົ່ານິທານໃຫ້ແກ່ເດັກກ່ອນໄວຮຽນ

ເພື່ອເຮັດໃຫ້ການເລົ່າບົດເລື່ອງທີ່ໄດ້ຮັບຜົນດີດຶງດູດຈິດໃຈຂອງເດັກ ເຂົ້າໃນບົດເລື່ອງຢ່າງເຕັມສ່ວນຄູ ສອນຄວນເລົ່າດ້ວຍຫຼາຍຮູບແບບ ເຊິ່ງປະກອບດ້ວຍສິລະປະການເລົ່າທີ່ແຕກຕ່າງກັນ ເພາະສິລະປະການເລົ່າປຽບເ ໝືອນຄວາມງົດງາມ ແລະ ຄວາມດູດດື່ມຂອງຜູ້ເລົ່າເພື່ອເຮັດໃຫ້ຜູ້ຟັງມີຄວາມນິຍົມຊົມຊອບມີຊີວິດຊີວາຈັບອົກ ຈັບໃຈເກີດຄວາມສະເທືອນໃຈ ແລະ ມີຄວາມສະຫງວນມັນນິທານ ຫຼື ບົດເລື່ອງກໍຄືມັກມາໂຮງຮຽນເພື່ອຟັງການ ເລົ່າເລື່ອງຈາກຄູ ດັ່ງນັ້ນຄູຜູ້ເລົ່າເລື່ອງໃຫ້ເດັກຟັງຄວນຄໍານຶງເຖິງບັນຫາດັ່ງນີ້:

**ກ. ເນື້ອເລື່ອງ.**

ຜູ້ຈະເລົ່າເລື່ອງໃຫ້ເດັກຟັງຕ້ອງກໍາແໜ້ນເນື້ອໃນຕົ້ນຕໍຂອງເລື່ອງເຊັ່ນ: ຄໍາເວົ້າ ແລະ ການເຄື່ອນໄຫວ ຂອງຕົວລະຄອນຕ່າງໆ ໃນບົດເລື່ອງຢ່າງລະອຽດ.

**ຂ. ສຽງ.**

ສຽງຂອງຜູ້ເລົ່າຈະຕ້ອງດັງພໍສົມຄວນເພື່ອໃຫ້ເດັກໝົດຫ້ອງ ໄດ້ຍິນຢ່າງຊັດເຈນຈັງຫວະຂອງສຽງໃຫ້ເ ໝາະສົມກັບເນື້ອໃນ ແລະ ຕົວລະຄອນຂອງບົດເລື່ອງເຊັນ ມີສຽງດັງ, ຄ່ອຍ, ສຽງຜູ້ເຖົ້າ, ຜູ້ໜຸ່ມ, ເດັກນ້ອຍ, ສຽງ ຄົນຮ້າຍ ສຽງເປັນສິ່ງໜຶ່ງປະກອບໃຫ້ຜູ້ຟັງເກີດຄວາມສົນໃຈ.

**ຄ. ທ່າທາງ**

ທ່າທາງເປັນສິ່ງໜຶ່ງຊ່ວຍໃຫ້ບົດເລື່ອງມີຄວາມເຂັ້ມຂຸ້ນມີຊີວິດຊີວາ ຈັບອົກຈັບໃຈເຮັດໃຫ້ຜູ້ຟັງເກີດມີ ຈິນຕະນາການກວ້າງຂວາງ ແລະ ເພີດເພີນໄປນໍາບົດເລື່ອງ, ຖ້າການເລົ່າບົດເລື່ອງຂາດຮູບພາບຈະຕ້ອງໄດ້ໃຊ້ທ່າທາງ ເຂົ້າຊ່ວຍຈຶ່ງເຮັດໃຫ້ການເລົ່າປະສົບຜົນສໍາເລັດສູງ.

**ງ. ຈັງຫວະ**

ຈັງຫວະການເວົ້າເປັນສິ່ງໜຶ່ງທີ່ຈະຊ່ວຍໃຫ້ບົດເລື່ອງເປັນໜ້າຈັບໃຈການເລົ່າຈະຊ້າ ຫຼື ໄວໃຫ້ເບິ່ງ ເຫດການທີ່ເກີດຂຶ້ນຢູ່ໃນບົດເລື່ອງ.

**ຈ. ອາລົມ**

ເວລາເລົ່າເລື່ອງໃຫ້ເດັກຟັງຄູຕ້ອງໃຊ້ສະມາທິສອນບົດບາດຂອງຕົວລະຄອນ ເພື່ອເລົ່າເລື່ອງໃຫ້ເດັກເຫັນ ຄວາມຮູ້ສຶກອັນແທ້ຈິງຂອງຄູທີ່ສະແດງອອກສີໜ້າ ເຊັ່ນ: ອາລົມລ່າເລີງແຈ່ມໃສ, ຕື່ນເຕັ້ນ, ໂສກເສົ້າ ແລະ ອື່ນໆ.

**ສ. ຂໍ້ຕົກລົງ**

ກ່ອນຈະອ່ານ ຫຼື ເລົ່າເລື່ອງບົດໃດໜຶ່ງໃຫ້ເດັກຟັງຄູ ແລະ ເດັກຄວນຕົກລົງກັນຢ່າງລະອຽດຄື ເວລາຄູ ເລົ່າເດັກຕ້ອງຕັ້ງໃຈຟັງບໍ່ລົມກັນ, ບໍ່ຢອກກັນ ແລະ ບໍ່ວິນແຊວຟັງແລ້ວຄູຖາມຕ້ອງຕອບຄໍາຖາມຄູໃຫ້ໄດ້ ຫຼື ອາດ ເລົ່າຫຍໍ້ຕາມຮູບພາບໃຫ້ໝູ່ ແລະ ຄູຟັງເຝິກໃຫ້ເດັກມີຄວາມອົດທົນ ແລະ ມີສະມາທິທີ່ດີ.

## ວິທີສອນເລົ່ານິທານ

### 1) ເລົ່າປາກເປົ່າ

ການເລົ່າປາກເປົ່ານີ້ ຜູ້ເລົ່າາຕ້ອງກຽມໂຕເອງໃຫ້ກຽມພ້ອມພໍສົມຄວນເພາະຈຸດສົນໃຈຂອງເດັກນ້ອຍທີ່ກໍາລັງຟັງນິທານຈະຢູ່ທີ່ຜູ້ເລົ່າ ວິທີກຽມຕົວເລົ່ານິທານມີດັ່ງນີ້:

- ກຽມຕົວດ້ານເນື້ອໃນຂອງນິທານ

- ອ່ານນິທານທີ່ຈະເລົ່າໃຫ້ເຂົ້າໃຈ, ຮູ້ຈັກຈຸດມຸ້ງໝາຍຂອງບົດເລື່ອງໃຫ້ດີ
- ຈັດປະເດັນເນື້ອໃນຂອງບົດເລື່ອງທີ່ຈະເລົ່ານັ້ນເພື່ອໃຫ້ເດັກຮູ້ຫຍັງ?
- ເພີ່ມ ຫຼື ຫຼຸດຕົວລະຄອນເພື່ອຄວາມເໝາະສົມໃນການເລົ່າ, ອັນສໍາຄັນຄືຜູ້ເລົ່າຕອ້ງສາມາດປັບປຸງບົດເລື່ອງໃຫ້ສອດຄ່ອງກັບຄວາມສົນໃຈຂອງເດັກໄດ້ນໍາອີກ ຖ້າຫາກວ່າເດັກກໍາລັງມ່ວນຄູຈະເພີ່ມເນື້ອໃນເຂົ້າໄປອີກກໍ່ໄດ້.

- **ຕົວຢ່າງໃນການໃຊ້ປຶ້ມເລົ່ານິທານ**

ເລື່ອງຫົວຜັກກາກນີ້ເປັນເລື່ອງຂອງການອອກແຮງດຶງ ສະນັ້ນປຶ້ມກໍໃຫ້ຈັບໃນລັກສະນະຄືກັນກັບພໍ່ເຖົ້າດຶງຫົວກັກາດເວລານັບໜຶ່ງສອງສາມກໍ່ຈະເຮັດດຶງປຶ້ມຄືພໍ່ເຖົ້າດຶງຫົວຜັກກາດ(ໃຊ້ນິ້ວມືຂວາສອດເຂົ້າໜ້າຕໍ່ໄປທຸກເທື່ອທີ່ປ່ຽນໜ້າ).

ຢືນໃຫ້ທ່ຽງຈາກນັ້ນອອກແຮງດຶງ, ຕໍາແໜ່ງຂອງປຶ້ມໃຫ້ຢູ່ຕໍາແໜ່ງເກົ່າ, ຫົວ,ລໍາຕົວ ແລະ ແຂນເອ່ນອອກຈາກປຶ້ມເປັນທ່າດຶງຫົວຜັກກາດ.

ໃຫ້ທົດລອງເລົ່າໃຊ້ແວ່ນຈິນຄອງແຄ້ວແລ້ວຈຶ່ງນໍາໄປເລົ່າສູ່ເດັກຟັງລອງສັງເກດເບິ່ງວ່າຈະເຫັນເດັກເອ່ນຕົວຕາມໃນເວລາດຶງຫົວຜັກກາດ.

ຖ້າຢາກສ້າງສັນບັນຍາກາດໃຫ້ມັນຄຶກຄື້ນກວ່າເກົ່າຜູ້ເລົ່າຕ້ອງຊັກຊວນໃຫ້ເດັກເຂົ້າມາມີສ່ວນຮ່ວມນໍາໃນເວລາດຶງຜັກກາດເຊັ່ນ:ເມື່ອດຶງເທື່ອທີໜຶ່ງບໍ່ໄດ້ແລ້ວໃຫ້ເດັກອອກມາເປັນຕົວແທນແມ່ເຖົ້າມາດຶງຕໍ່ເທື່ອທີສອງກໍ່ໃຫ້ເດັກອອກມາເປັນຫຼານສາວດຶງຄືກັບຢູ່ໃນຮູບແລະໃຫ້ມາຕໍ່ກັນເປັນໝາ ເປັນແມວ ແລະ ເປັນໜູແລ້ວພ້ອມພາກັນດຶງ.

ຖ້າຫາກໃຫ້ເດັກມີສ່ວນຮ່ວມນໍາໃນການເລົ່າປະກອບປຶ້ມຮູບນີ້ເດັກຈະຮູ້ສຶກຕື່ນເຕັ້ນມ່ວນຊື່ນ ແລະ ຈື່ຈໍາໃຫ້ດີກວ່າ.



**2) ການເລົ່າລະຄອນເຈັ້ຍ**

ຖ້າຫາກຈະເລົ່ານິທານໃຫ້ເດັກຈຳນວນຫຼາຍກວ່າ 40 ຄົນຂຶ້ນໄປໂດຍໃຊ້ຮູບປະກອບເປັນຕົວລະຄອນເຈັ້ຍເຊິ່ງເຮົາສາມາດແຕ້ມຂຶ້ນມາໃໝ່ມີຂະໜາດໃຫຍ່ໃສ່ສີຊັດເຈນກວ່າໃນປຶ້ມເພື່ອໃຫ້ເດັກເຫັນຮູບຊັດເຈນມີການເຄື່ອນໄຫວຂອງຕົວລະຄອນຢ່າງຕໍ່ເນື່ອງ.

ລະຄອນເຈັ້ຍແມ່ນການສະແດງຫຼືເລົ່າເລື່ອງຕາມຮູບພາບຕົວລະຄອນທີ່ຢູ່ໃນແຜ່ນເຈັ້ຍ.

ການເລົ່າເລື່ອງ ຫຼື ສະແດງລະຄອນເຈັ້ຍໃຫ້ເດັກໄດ້ຟັງ ແລະ ໄດ້ຊົມຮູບພາບພ້ອມກັນເດັກຈະຮູ້ສຶກວ່າມີຄວາມຕື່ນເຕັ້ນມ່ວນຊື່ນດເຂົ້າໃຈ ແລະ ຈື່ຈຳໄດ້ດີທີ່ສຸດ.

ລະຄອນເຈັ້ຍເຮັດໃຫ້ຜູ້ເລົ່າແລະຜູ້ຊົມຮູ້ວ່າມີຄວາມໃກ້ຊິດກັນຫຼາຍຂຶ້ນເພາະວ່າຜູ້ເລົ່າແລະຜູ້ຊົມບາງຄັ້ງກໍ່ມີການສະແດງແບບມີສ່ວນຮ່ວມນຳກັນ,ມີການສົນທະນາສ້າງຄວາມຄຸ້ນເຄີຍລະຫວ່າງຄູ ແລະ ນັກຮຽນ,ສ້າງຄວາມກ້າຫານໃຫ້ແກ່ເດັກເຮັດໃຫ້ເດັກກາຍເປັນນັກຮຽນທີ່ມີຄວາມດຸໝັ່ນ ແລະ ຮຽນເກັ່ງໄດ້.

ລະຄອນເຈັ້ຍແມ່ນເອົາຮູບພາບມາອະທິບາຍການເຄື່ອນໄຫວຂອງຕົວລະຄອນສະນັ້ນຕ້ອງເນັ້ນທີ່ພາບຫຼາຍກວ່າຄຳອະທິບາຍເນື້ອໃນ.

ລະຄອນເຈັ້ຍບາງເລື່ອງເຮັດໃຫ້ເດັກໄດ້ເຫັນຮູບການເຄື່ອນໄຫວຂອງຕົວລະຄອນເຂົ້າໃຈເນື້ອເລື່ອງນັ້ນໄດ້ທັນທີ.

**ການນຳໃຊ້ລະຄອນເຈັ້ຍ**

ລະຄອນເຈັ້ຍແມ່ນການເລົ່ານິທານທີ່ມີຮູບພາບປະກອບນຳ ດັ່ງນັ້ນຜູ້ທີ່ຈະເລົ່າລະຄອນເຈັ້ຍຈຶ່ງຈຳເປັນຮູ້ວິທີການນຳໃຊ້ລະຄອນເຈັ້ຍໃຫ້ດີເສຍກ່ອນ,ການເລົ່າລະຄອນເຈັ້ຍມີຢູ່ 3 ວິທີ:

- ການເລົ່າ ຫຼື ສະແດງໃນໂຮງ ຫຼື ຫີບລະຄອນເຈັ້ຍ
- ການເລົ່າ ຫຼື ສະແດງເອົາມືຖືໄວ້ເຄິ່ງໜ້າເອິກຂອງຕົນເອງ.
- ການເລົ່າ ຫຼື ການສະແດງແບບເອົາຕັ້ງໃສ່ເທິງໂຕະທຸກໆຄັ້ງກ່ອນຈະເລົ່າ ຫຼື ສະແດງລະຄອນເຈັ້ຍກ່ອນອື່ນໝົດຕ້ອງກວດເບິ່ງຮູບແຕ່ລະແຜ່ນວ່າຈະໄດ້ຈັດຮຽງກັນຕາມລຳດັບ ຫຼື ບໍ່,ຖ້າບໍ່ຖືກຕ້ອງຈັດຕາມລຳດັບເວລາເລົ່າຈະຜິດພາດບໍ່ເຂົ້າຕາມເນື້ອເລື່ອງຫຼັງຈາກຈັດຮຽງຖືກຕ້ອງແລ້ວກໍ່ເອົາຮູບໜ້າທີ່ໜຶ່ງໃຫ້ຄົນຊົມເບິ່ງແລ້ວເວົ້າຕາມບົດທີ່ຂຽນໄວ້ທາງຫຼັງແຜ່ນສຸດທ້າຍຫຼັງຈາກອ່ານເລື່ອງໜ້າທີໜຶ່ງໝົດແລ້ວໃຫ້ເອົາມືຂວາດຶງຮູບແຜ່ນທີໜຶ່ງໝົດແລ້ວໃຫ້ເອີມມືຂວາດຶງຮູບແຜ່ນທີ່ໜຶ່ງອອກໄປທາງຂວາມື ແລະ ເອົາມາວາງໄວ້ຫຼັງຂອງໃບສຸດທ້າຍແລ້ວຜູ້ຊົມກໍ່ຈະເຫັນຮູບຂອງແຜ່ນທີ່ສອງ ຈາກນັ້ນຜູ້ເລົ່າກໍ່ເອົາຮູບແຜ່ນທີສອງທີ່ໄວ້ຢູ່ເບື້ອງຫຼັງຂອງຮູບແຜ່ນທີໜຶ່ງ,ເມື່ອອ່ານສຸດແລ້ວດຶງອອກແບບແຜ່ນທີ່ໜຶ່ງເຮັດແບບນີ້ຕໍ່ໄປເລື່ອຍໆຈົນສຸດເລື່ອງ.

- ກ່ອນອື່ນໝົດໃຫ້ກວດເບິ່ງວ່າ ຮູບແຕ່ລະແຜ່ນຈັດຮຽງຕາມລຳດັບແລ້ວຫຼືບໍ່?
- ໃຫ້ຜູ້ເລົ່າເອົາຮູບແຜ່ນທີໜຶ່ງໃຫ້ຄົນຊົມເບິ່ງແລ້ວອ່ານເລື່ອງທີ່ຂຽນໄວ້ເບື້ອງຫຼັງຂອງຮູບແຜ່ນສຸດທ້າຍ.
- ຫຼັງຈາກການອ່ານເລື່ອງຂອງຮູບແຜ່ນທີໜຶ່ງໝົດແລ້ວໃຫ້ດຶງເອົາຮູບແຜ່ນນັ້ນໄປທາງຂວາດ້ວຍມືຂວາ.
- ໃຫ້ສອດຮູບແຜ່ນທີ 1 ໄວ້ທາງຫຼັງສຸດແລ້ວຄົນເບິ່ງກໍ່ຈະເຫັນຮູບແຜ່ນທີ່ສອງ.
- ໃຫ້ຜູ້ເລົ່າອ່ານເລື່ອງຂອງຮູບແຜ່ນທີ່ສອງທີ່ຂຽນໄວ້ເບື້ອງຫຼັງຂອງຮູບແຜ່ນທີ່ 1 .
- ໃຫ້ເຮັດແບບນີ້ຕໍ່ໄປເລື້ອຍໆຈົນສຸດເລື້ອຍ.

**ເຕັກນິກການສະແດງລະຄອນເຈັ້ຍ**

ຜູ້ເລົ່າ ຫຼື ສະແດງລະຄອນເຈັ້ຍສາມາດເລືອກແບບເລົ່າໄດ້ຕາມແບບວິທີການນຳໃຊ້ລະຄອນເຈັ້ຍ. ແຕ່ຖ້າຫາກຜູ້ເລົ່າມີເຕັກນິກໃນການເລົ່າເຂົ້າຕື່ມກໍ່ຈະເຮັດໃຫ້ເລື່ອງທີ່ເລົ່ານັ້ນມີຄວາມຕື່ນເຕັ້ນ ແລະ ມ່ວນຊື່ນຂຶ້ນຕື່ມອີກຄືກ່ອນຈະເລົ່າ;ເລົ່າຕ້ອງຫາເຈັ້ຍ ຫຼື ວັດສະດຸສິ່ງໃດໜຶ່ງມາປິດບັງຮູບໜ້າທີ່ໜຶ່ງໄວ້ກ່ອນ ເພາະໜ້າທີ່ໜຶ່ງເປັນໜ້າທີ່ເປີດຫົວເລື່ອງຈະເຮັດໃຫ້ເດັກເກີດຄວາມສົນໃຈຫຼາຍຂຶ້ນຕື່ມເຂົາຢາກຈະຮູ້ວ່າຢູ່ໃນນັ້ນມີເລື່ອງຫຍັງຢາກຈະເຫັນໄວໆ

ເວລາເລົ່າຖ້າຫາກຕົວລະຄອນຫຼືມີທ່າທີ່ຕ່າງໆຜູ້ເລົ່າຕ້ອງເຮັດເຄື່ອນເໜັງພາບໄປຕາມຈັງຫວະໃຊ້ທ່າທີ່ແບບຕື່ນເຕັ້ນ ແລະ ສະເໜີໃຫ້ຜູ້ຊົມສະແດງຊ່ວຍກັນແບບມີສ່ວນຮ່ວມເຊັ່ນ:ເວົ້າດຶງຊ່ວຍກັນ,ຊ່ວຍກັນຮ້ອງສຽງດັ່ງໆ ແລະຜູ້ເລົ່າກໍ່ຄວນຊັກຖາມຜູ້ຊົມຄືກັນເຊັ່ນວ່າ ໃຫຍ່ບໍ່?ຢູ່ໃສ?ເຮັດແນວໃດ?ໃຜເຫັນ?...

ຖ້າຜູ້ເລົ່າໃຊ້ມືຈັບເວລາສະແດງກໍຕ້ອງປິ່ນຕົວຊ້າໆ ຍົກຮູບຂຶ້ນໃຫ້ຜູ້ຊົມໄດ້ເຫັນທົ່ວເຖິງກັນທຸກຄົນ.

**ສິ່ງທີ່ຄວນລະຫວ່າງ**

ລະຄອນເຈັ້ຍເນັ້ນທີ່ຮູບພາບໃນແຜ່ນເຈັ້ຍຫຼາຍກວ່າເນື້ອໃນເພາະຮູບພາບສະແດງເຖິງການເຄື່ອນໄຫວຕ່າງໆຂອງເນື້ອໃນ,ເນື້ອໃນເຮົາສາມາດຕັດອອກຫຼືຕື່ມໄດ້ແຕ່ຮູບພາບນັ້ນເຮົາຈະັດອອກບໍ່ໄດ້ຍົກເວັ້ນແຕ່ໃນກກໍລະນີຮູບທີ່ມີການເຄື່ອນໄຫວຊໍ້າກັນ.

ດັ່ງນັ້ນເວລາເລົ່າລະຄອນເຈັ້ຍຜູ້ເລົ່າບໍ່ຄວນເຮັດດັ່ງນີ້:

- ບໍ່ເອົາຫົວກົ້ມລົງບັງຮູບ
- ບໍ່ດຶງຮູບອອກທາງຊ້າຍມືເພາະຕົວລະຄອນຈະຍ່າງຖອຍຫຼັງ
- ບໍ່ດຶງຮູບຂຶ້ນທາງເທິງ ຫຼື ລົງທາງລຸ່ມ
- ບໍ່ເອົາຊີ້ມືຕົວລະຄອນ
- ຢ່າມົວກົ້ມອ່ານເນື້ອເລື່ອງຢູ່ເພາະຈະເຮັດໃຫ້ເສຍບັນຍາກາດຄວາມມ່ວນຊື່ນ(ຜູ້ເລົ່າຕ້ອງຈື່ຄໍາບັນຍາຍໄດ້ກັບປາກ)
- ບໍ່ໃຫ້ຮູບປິ່ນຫົວລົງ
- ບໍ່ເລົ່າຟ້າວຟັງຈົນເກີນໄປຕ້ອງຕິດຕາມຜູ້ຊົມໄປນໍາ
- ບໍ່ເວົ້າຍືດເວລາຈົນເກີນໄປເພາະຜູ້ຊົມຈະລໍາຄານຫຼືເບື່ອຟັງ
- ເວລາສະແດງຈົບຫ້າມຖາມຜູ້ຊົມວ່າມ່ວນບໍ່,ຕົບມືໃຫ້ແດ່ຕ້ອງໃຊ້ຄໍາວ່າຂອບໃຈ



### 3) ເລົ່າປະກອບຜ້າກັນເປື້ອນ

ການເລົ່າເລື່ອງປະກອບຜ້າກັນເປື້ອນແມ່ນການເລົ່າທີ່ນຳໃຊ້ຜ້າກັນເປື້ອນເປັນເວທີຂອງຕົວລະຄອນຊຶ່ງຜູ້ເລົ່າຕ້ອງນຸ່ງຜ້າກັນເປື້ອນແລ້ວສາມາດເອົາຮູບຕົວລະຄອນມາຕິດໃສ່ໃນຂະນະທີ່ເລົ່າເຫດການຕ່າງໆຂອງເລື່ອງ.

ການເລົ່າເລື່ອງປະກອບຜ້າກັນເປື້ອນນີ້ກໍແມ່ນວິທີແກ່ເດັກອັນໜຶ່ງທີ່ສ້າງຄວາມຕື່ນເຕັ້ນໃຫ້ແກ່ເດັກ ແລະ ເດັກເອງກໍຍັງສາມາດອອກມາຕິດຮ່ວມກັນກັບຜູ້ເລົ່າເຮັດໃຫ້ສະໜິດສະໜົມກັນຫຼາຍຂຶ້ນ.

- **ວິທີນຳໃຊ້**
  - ຜູ້ເລົ່າຕ້ອງເອົາຕຸກກະຕາຫຼືຮູບຕົວລະຄອນຕ່າງໆໃຊ້ໄວ້ໃນຖົງເສື້ອໜົດທຸກຕົວ
  - ຜູ້ເລົ່າເອົາຜ້າກັນເປື້ອນມັດໃສ່ໂຕ,ມັດໃສ່ຄໍ ແລະ ມັດໃສ່ແອວ
  - ຜູ້ເລົ່າຈິເອົາຕຸກກະຕາຫຼືຮູບຕົວລະຄອນມາຕິດໃສ່ຕາມລຳດັບຕົວລະຄອນ.

ຜົນຂອງການເລົ່າປະກອບຜ້າກັນເປື້ອນ:

- ເດັກສາມາດຈັບບາຍຕົວລະຄອນໄດ້
- ເດັກມີສ່ວນຮ່ວມໃນການຕິດຕາມຕົວລະຄອນ
- ນຳໃຊ້ເຂົ້າໃນການສອນໄດ້ຫຼາຍວິຊາ
- ສາມາດເອົາໃສ່ຖົງເສື້ອຖົງໂສ້ງນຳໄດ້




### 4) ເລົ່າປະກອບຫຸ່ນເສີດ

ການເລົ່າເລື່ອງປະກອບຫຸ່ນເສີດເປັນວິທີໜຶ່ງທີ່ສາມາດດຶງດູດຄວາມສົນໃຈຈາກເດັກຫຼາຍເພາະການເລົ່າປະກອບຫຸ່ນເສີດນີ້ແຕກຕ່າງກັບວິທີອື່ນ,ຕົວລະຄອນທຸກໆຕົວສາມາດເໜັງຕີງແລະເຄື່ອນໄຫວໄປມາໄດ້ຕະຫຼອດເວລາ.ຫຸ່ນເສີດສາມາດສະແດງໃຫ້ເດັກຈຳນວນຫຼາຍຮັບຊົມໄດ້ໂດຍໃຊ້ຜ້າເປັນບ່ອນກັ້ນບັງເວທີແລະຖ້າມີຜ້າສາກໃສ່ທາງຫຼັງເວທີຍິ່ງເປັນກາຍນດີພາໃຫ້ເກີດມີຄວາມມ່ວນຊື່ນຫຼາຍຂຶ້ນ.

ຫຸ່ນຕ້ອງມີຄວາມສວຍງາມ ແລະ ປະດິດແບບງ່າຍໂດຍເອົາວັດສະດຸເສດເຫຼືອທີ່ມີໃນທ້ອງຖິ່ນເອົາມາຜະລິດເຊັ່ນ:ກັບນົມ,ຫວດໜື້ງເຂົ້າ,ກະບອກໄມ້ໃຜ່,ຕຸກນໍ້າດື່ມ,ຜ້າເສດ.



**5) ເລົ່າປະກອບຫຸ່ນນິ້ວມື**

ຫຸ່ນນິ້ວມືອາດຈະປະດິດຈາກຜ້າເຈ້ຍແລະເສດວັດສະດຸຕ່າງໆເຊິ່ງເປັນຮູບຄົນ,ສັດດໝາກໄມ້,ຜັກ...ແລ້ວນໍາມາສຸບໃສ່ນິ້ວມືໃນເວລາເລົ່າເລື່ອງຈະເຮັດໃຫ້ເດັກແຕ່ລະຄົນເກີດມີຄວາມຮູ້ສຶກຫຸ່ນນິ້ວມືນ້ອຍໆນັ້ນຄືກັນກັບຕົວເຂົາເອງແລະເຂົາຈະສົນໃຈເປັນພິເສດ.



**6) ເລົ່າປະກອບການແຕ້ມ**

ວິທີນີ້ຜູ້ເລົ່າແຕ້ມຮູບກາຕູນປະກອບໄປພ້ອມ ເຊັ່ນ ເລົ່າໄປທັງແຕ້ມຮູບໄປພ້ອມຈົນຈົບເລື່ອງເຊິ່ງຈະຊ່ວຍໃຫ້ເດັກສົນໃຈຕື່ນເຕັ້ນ ແລະ ເກີດມີຄວາມພໍໃຈໃນຕົວຜູ້ເລົ່າ,ສິ່ງສໍາຄັນຜູ້ເລົ່າຕ້ອງມີຄວາມສາມາດ ໃນການແຕ້ມ

ຮູບໄອພໍ ຄວນແຕ້ມໃຫ້ງາມໃຫ້ເດັກສາມາດເຂົ້າໃຈຮູບແຕ້ມນັ້ນໄດ້ເພາະຮູບທີ່ແຕ້ມປະກອບການເລົ່າເລື່ອງນັ້ນ ນອກຈາກສາກໃນນິດເລື່ອງແລ້ວຍັງຕ້ອງແຕ້ມຕົວລະຄອນນຳອີກ ແລະ ຜູ້ເລົ່າຄວນເລືອກນິດເລື່ອງທີ່ມີຕົວລະຄອນ ໜ້ອຍ ຫຼື ຕົວລະຄອນທີ່ເລົ່ານັ້ນຕ້ອງໝັ້ນໃຈວ່າ ແຕ້ມໄດ້ທັນທີທັນໃດຖ້າຜູ້ເລົ່າເຝິກແຕ້ມກ່ອນອອກໄປເລົ່າໃຫ້ເດັກ ຟັງຍິ່ງເປັນການດີເຊັ່ນ:



**7) ເລົ່າປະກອບການພັບ**

ການເລົ່ານິທານເລົ່າໄປພັບເຈ້ຍໄປນຳເປັນສິລະປະຢ່າງໜຶ່ງ ເຊິ່ງຜູ້ເລົ່າມີຄວາມສາມາດພໍສົມຄວນເພາະການ ພັບເຈ້ຍເປັນຮູບຕ່າງໆ ແລ້ວແຕ່ງນິທານໃສ່ເຂົ້າໄປນຳຂັ້ນຕອນຂອງການພັບມີຮູບຮ່າງຄ້າຍກັບອັນໃດກໍສົມມຸດໃຫ້ ຮູບນັ້ນໆ ເປັນສະຖານທີ່ ຫຼື ຕົວລະຄອນຂອງນິດເລື່ອງນັ້ນເຊັ່ນ

- **ນິດເລື່ອງຊາຍຂີ້ເບື່ອສອງຄົນ**

ຜູ້ເລົ່າຈະເອົາເຈ້ຍຂາວມາແຜ່ນໜຶ່ງພັບໃຫ້ເປັນຮອຍຕາມແນວຕັ້ງແລ້ວເລີ່ມເລົ່ານິດເລື່ອງມີຊາຍຂີ້ເບື່ອສອງ ຄົນຊ່ວຍກັນປຸກສ້າງເຮືອນຢູ່ຂອງພວກເຂົາທັງສອງຢູ່ເຮືອນຕຶກໄດ້ສອງມື້ກໍພາກັນເບື່ອຈຶ່ງຊວນກັນແປງເຮືອນໃໝ່ທີ່ ມີຫຼັງຄາເປັນຈອມແຫຼມ ທັງສອງຢູ່ເຮືອນຊັ້ນດຽວໄດ້ສອງມື້ກໍພາກັນເບື່ອອີກແລ້ວເທື່ອນີ້ເບື່ອຫຼາຍກວ່າເທື່ອກ່ອນໆ ອີກຫຼາຍເທົ່າ ( ຜູ້ເລົ່າຖາມເດັກວ່າ ພວກຫຼານລອງທວາຍເບິ່ງດູວ່າຊາຍສອງຄົນນີ້ເບື່ອຫຍັງ (ເດັກຕອບ))

ຊາຍທັງສອງເບື່ອໂລກມະນຸດເພາະສະພາບແວດລ້ອມເປື້ອນເປິະຫຼາຍຈຶ່ງຊວນກັນໃສ່ປີກໃສ່ເຄື່ອງຈັກໃຫ້ ເຮືອນຂອງເຂົາແລ້ວທັງສອງກໍພາກັນຂັບຈະຫຼວດໜີໄປຢູ່ໂລກໃໝ່ໄປບ່ອນທີ່ມີສະພາບແວດລ້ອມທີ່ດີ.

ການເລົ່າເລື່ອງດ້ວຍວິທີພັບໄປເລົ່າໄປນີ້ຜູ້ເລົ່າສາມາດນຳນິດເລື່ອງເກົ່າມາປະກອບພັບກໍໄດ້ຖ້າຜູ້ເລົ່າພັບໄດ້ ຫຼາຍຢ່າງກໍຈະມີນິດເລື່ອງປະກອບການພັບອີກຫຼາຍເລື່ອງ.

ທີ່ສຳຄັນນອກຈາກເດັກຈະໄດ້ຟັງນິດເລື່ອງແລ້ວ ຍັງສາມາດເຮັດກິດຈະກຳການພັບເຈ້ຍໄດ້ນຳອີກ.

**8) ປະກອບອຸປະກອນ**

ອຸປະກອນປະກອບການການເລົ່າເລື່ອງທີ່ເປັນສື່ໃກ້ຕົວເຊິ່ງຜູ້ເລົ່າບໍ່ໄດ້ກຽມຫຍັງມາເລີຍຜູ້ເລົ່າກໍສາມາດ ຈັບນຳການແບບມິຕິເອົາສິ່ງທີ່ວາງໄວ້ໃກ້ໆຕົວເຮົາມາເປັນສື່ປະກອບການເລົ່າເຊັ່ນ:ຄູອາດຈະຈັບເອົາສໍຂາວ ຫຼື ໝອນ ເຊັດກະດານມາປະກອບການເລົ່າກໍໄດ້ ໂດຍບໍ່ຕ້ອງແຕ່ງຫຍັງເພີ່ມເຕີມຢ່າລືມວ່າ ເດັກນ້ອຍມີຈິນຕະພັນຢູ່ລ້ວຈຶ່ງງ່າຍ ແກ່ການສົມມຸດເຊິ່ງນຳໄປສູ່ຈິນຕະນາການສອດຄ່ອງກັບເນື້ອໃນຂອງນິດເລື່ອງນັ້ນໆ ເຊັ່ນ

- **ເລື່ອງເຈົ້າຍິງນິດທາ**

ຕອນແມ່ມົດໃຈຮ້າຍພາເຈົ້າຍິງຂຶ້ນໄປເບິ່ງເຂັມປັ່ນດ້າຍຢູ່ເທິງປາສາດ ຂະນະທີ່ທຸກຄົນໃນພະລາດຊະວັງກຳລັງສະເຫຼີມສະຫຼອງວັນເກີດເຈົ້າຍິງພໍຂຶ້ນໄປເທິງປາສາດ ແມ່ມົດກໍຈັບເອົາເຂັມປັ່ນດ້າຍຂຶ້ນມາໃຫ້ເຈົ້າຍິງເບິ່ງ (ຕອນນີ້ຜູ້ເລົ່າກໍຕ້ອງຈັບໝອນເຊັດກະດານຂຶ້ນມາສົມມຸດເປັນບ່ອນວາງເຂັມປັ່ນດ້າຍ) ແມ່ມົດຈັບເອົາເຂັມປັ່ນດ້າຍສີຟ້າເຫຼື້ອມຍາວເຫຼື້ອມແວວວາວຢູ່ຕໍ່ໜ້າ (ຕອນນີ້ຜູ້ເລົ່າເຮັດທ່າທີຈັບເອົາເຂັມຂຶ້ນມາເຊິ່ງບໍ່ຈຳເປັນຕ້ອງມີຫຍັງພຽງແຕ່ທຳທ່າຈັບກໍພໍ) ຈາກນັ້ນແມ່ມົດກໍ່ເອົາເຂັມປັ່ນດ້າຍໃຫ້ເຈົ້າຍິງເບິ່ງ,ເຈົ້າຍິງຕົກຕະລຶງໃນຄວາມງາມຂອງເຂັມທີ່ແວວວາວຢູ່ຕໍ່ໜ້າ (ຕອນນີ້ເລົ່າໃຊ້ມືໜຶ່ງຈັບເຂັມສ່ວນອີກຂ້າງໜຶ່ງສູບຕາມສົ້ນເຂັມ)

ເຈົ້າຍິງລູບເຂັມປັ່ນດ້າຍໄປຊ້າໆຈົນເຖິງປາຍເຂັມແລ້ວເຈົ້າຍິງຕ້ອງສະດຸ້ງປາຍເຂັມທີ່ແຫຼມໄປແທງປາຍນິ້ວມືຂອງເຈົ້າຍິງ.ຈາກຕົວຢ່າງນີ້ຈະເຫັນວ່າ ສິ່ງທີ່ປະກອບການເລົ່າເລື່ອງບໍ່ຈຳເປັນຟຸ່ມເຟືອຍ ຫຼື ຕ້ອງກຽມການຫຼາຍຈົນວຸ້ນວາຍ.

ຜູ້ເລົ່າສາມາດຊັກຈູງໃຫ້ຜູ້ຟັງວາດພາບຕາມເນື້ອເລື່ອງໃນບົດເລື່ອງໄດ້ຫຼາຍໜ້ອຍພຽງໃດກໍຂຶ້ນກັບເຕັກນິກຂອງຜູ້ເລົ່າ

**9) ເລົ່າປະກອບຮູບຕິດ (ປານາເຊັນເຕີ)**

ປະກອບຮູບຕິດໃນການເລົ່າເລື່ອງນີ້ກໍຄືກັນກັບການເລົ່າປະກອບຜ້າກັນເປື້ອນແຕ່ວ່າປະກອບຮູບຕິດ(ປານາເຊັນເຕີ)ນີ້ຈະເປັນໜ້າຂອງຕົວລະຄອນໃຫຍ່ກວ່າ ແລະ ຕ້ອງໃຊ້ຜ້າແພຜືນໃຫຍ່ຕິດໄວ້ຕາມຝາ ຫຼື ກະດານ.

ຜູ້ເລົ່າຈະຕິດຮູບໃສ່ແຜ່ນແພໃນຂະນະທີ່ເລົ່າບົດເລື່ອງຕິດໄປຕາມສາກຂອງຕົວລະຄອນ ແລ ຍັງສາມາດໃຫ້ເດັກອອກມາຕິດຮ່ວມກັບຜູ້ເລົ່າໄດ້.

**ດຳເນີການເລົ່າ.**

ໃນເວລາເດັກມີຄວາມສົນໃຈຕໍ່ຄຳຖາມແລ້ວຄູບໍ່ຄວນຊັກຊ້າ ຄວນເລີ່ມຕົ້ນເລົ່າເລື່ອງໃຫ້ເດັກຟັງເລີຍ. ສິລະປະໃນການເລົ່າຄວນນຳໃຊ້ສຽງ, ທ່າທາງ ແລະ ໃຊ້ວັດຖຸອຸປະກອນຕ່າງໆ ປະກອບເຂົ້າບົດເລື່ອງ ເຮັດໃນການສອນນັ້ນມີບັນຍາກາດຄຶກຄື້ນມີຊີວິດຊີວາມີຄວາມເບີກບານມ່ວນຊື່ນສະໜຸກສະໜານ ແລະ ປະທັບໃຈແກ່ເດັກທຸກຄົນ. ເວລາເລົ່າໃຫ້ເດັກຟັງແລ້ວ ຄູຕ້ອງຕັ້ງຄຳຖາມສົນທະນາກັບເດັກກ່ຽວກັບເນື້ອໃນບົດເລື່ອງຕາມເລົ່າມາ ນອກນັ້ນໃຫ້ເດັກໄດ້ປະກອບສ່ວນນຳຄູຕື່ມ ເພື່ອສ້າງບັນຍາກາດ ແລະ ເຮັດໃຫ້ເດັກບໍ່ອິດເມື່ອຍ.

ຕົວຢ່າງ: ສອນເລື່ອງໄກ່ກໍ່ໃຫ້ເດັກຮ້ອງເປັນສຽງໄກ່ ພົບທ ແລະ ອື່ຍນໆອີກ.

**ສະຫຼຸບ**

ເມື່ອຄູເລົ່າເລື່ອງໃຫ້ເດັກຟັງຈົບລົງແລ້ວຄູຄວນກະຕຸ້ນທາງດ້ານຈິດໃຈເດັກ ແລະ ກະຕຸ້ນຄວາມສາມາດເຮັດໃຫ້ເດັກຄິດ ແລະ ພັດທະນາຈິນຕະນາການຂອງເດັກຢ່າງກວ້າງຂວາງ ແລະ ເປີດໂອກາດໃຫ້ເດັກໄດ້ມີສ່ວນຮ່ວມໃນການກະທຳຕົວຈິງເຊັ່ນ:ຜ່ານການເລົ່າບົດເລື່ອງມານັ້ນຫຼານຄິດແນວໃດ?ມີໃຜແດ່?ຍ້ອນຫຍັງບັນຫາມັນຈຶ່ງເປັນແນວນັ້ນ?ຫຼານຮັກໃຜ?ບໍ່ຮັກໃຜ?ຍ້ອນຫຍັງ?ເພື່ອເຮັດໃຫ້ຊົ່ວໂມງການຮຽນໃຫ້ດີຂຶ້ນ ແລະ ຊ່ວຍໃຫ້ເດັກເຂົ້າໃຈເນື້ອໃນບົດເລື່ອງລະອຽດກວ່າເກົ່າຄູອາດຈະນຳພາເດັກຫຼິ້ນເກມຕ່າງໆ ເຊັ່ນ:ຮ້ອງເພງ,ເລົ່າຄຳຄ່ອງສະແດງບົດບາດສົມມຸດ ແລະ ສະແດງລະຄອນສັ້ນ...

**ວິທີດຳເນີນກິດຈະກຳ**

- ຄູຖາມເພື່ອລະດົມສະໝອງເປັນລາຍບຸກຄົນເຊິ່ງມີຄຳຖາມດັ່ງນີ້:

  1. ວິທີສອນເລົ່າເລື່ອງສຳລັບເດັກມີຈັກຂັ້ນຕອນຄືຂັ້ນຕອນໃດແດ່?

  - ໃຫ້ນັກຮຽນປະກກອບຄຳເຫັນເປັນລາຍບຸກຄົນ

- ຄູສັງລວມ ແລະ ສະຫຼຸບຄືນ

- ແບ່ງນັກຮຽນອອກເປັນ 4 ກຸ່ມ,ກຸ່ທີ່1 ແລະ ກຸ່ມທີ່2 ໃຫ້ຄົ້ນຄ້ວາຄໍາຖາມທີ່ 1 ສ່ວນ ກຸ່ມທີ່3 ແລະ ກຸ່ມທີ່4 ໃຫ້ຄົ້ນຄ້ວາຄໍາຖາມທີ່2 ເຊິ່ງມີຄໍາຖາມຄົ້ນຄ້ວາດັ່ງລຸ່ມນີ້:

1. ການສອນເລົ່າເລື່ອງແຕ່ລະຂັ້ນຕອນຄວນປະຕິບັດແນວໃດ?

2. ເພື່ອເຮັດໃຫ້ການເລົ່າເລື່ອງໄດ້ຮັບຜົນດີ ຄູຄວນນໍາໃຊ້ນໍ້າສຽງ,ທ່າທາງຈັງຫວະ ແລະ ອາລົມຕ່າງໆ ແນວໃດ?

- ໃຫ້ແຕ່ລະກຸ່ມຄົນຄ້ວາສົນທະນາຮ່ວມກັນ
- ຕ່າງໜ້າແຕ່ລະກຸ່ມນໍາສະເໜີພ້ອມທັງສາທິດຕົວຈິງໃຫ້ເບິ່ງ
- ກຸ່ມອື່ນໆປະກອບຄໍາຄິດຄໍາເຫັນ
- ຄູສັງລວມ ແລະ ສະຫຼຸບຄືນບັນຫາທີ່ນັກຮຽນປະຕິບັດບໍ່ທັນໄດ້ດີໂດຍໃຊ້ການອະທິບາຍຍົກຕົວຢ່າງ ແລະ ສາທິດຕົວຈິງໃຫ້ນັກຮຽນເບິ່ງ

## 6 ເທັກນິກການເລົ່ານິທານ ແລະ ການປະເມີນ

1) ທໍາຄວາມເຂົ້າໃຈກັບເນື້ອເລື່ອງນິທານທີ່ຈະເລົ່າເສຍກ່ອນໂດຍຈິນຕະນາການອອກມາ
2) ຄວນເລືອກຄໍາທີ່ເປັນຄໍາງ່າຍໆ ທີ່ເດັກຟັງ ຫຼື ນຶກອອກ ເປັນພາບໃນຈິນຕະນາການໄດ້
3) ເມື່ອເນື້ອໃນເລື່ອງມີຕົວລະຄອນລົມກັນ ຄວນໃຊ້ບົດບາດສົມມຸດສົນທະນາ ເພາະຈະເຮັດໃຫ້ເດັກຕື່ນເຕັ້ນ ກວ່າ
4) ເລີ່ມຕົ້ນເລື່ອງໃຫ້ດີເພື່ອຮຽກຮ້ອງຄວາມສົນໃຈ ພະຍາຍາມຫຼີກລຽງການບັນຍາຍທີ່ບໍ່ຈໍາເປັນ
5) ການເລົ່າເລື່ອງຄວນໃຊ້ສຽງແບບສົນທະນາກັນຄືຊ້າ ຊັດເຈນ ມີໜັກ-ເບົາ
6) ໃນຄະນະທີ່ເລົ່ານິທານຄວນຈັບເວລາໃຫ້ດີເວັ້ນຈັງຫວະຕາມອາລົມຂອງເລື່ອງເຊັ່ນ: ຖ້າເນື້ອເລື່ອງມີສິ່ງເສົ້າ ໃຈກໍ່ເວົ້າໃຫ້ໄວຂຶ້ນເຮັດທ່າທາງຈິງຈັງ
7) ນິທານທີ່ນໍາມາເລົ່າໃຫ້ຍາວພໍໆກັບໄລຍະເວລາຄວາມສົນໃຈຂອງເດັກຄືປະມານ 15-25 ນາທີ ສໍາລັບເດັກ ອະນຸບານ ຫຼື ເປັນຄໍາກໍ່ຈະປະມານ 1.000 ຄໍາ
8) ເວລາເລົ່ຕ້ອງພະຍາຍາມເປັນກັນເອງໃຫ້ຫຼາຍທີ່ສຸດໃຫ້ຄວາມຮັກຄວາມສະໜິດສະໜົມກັບເດັກຢ່າງຈິງຈັງ
9) ເວລາເລົ່າຄວນມີອຸປະກອນປະກອບ ຈະຊ່ວຍໃຫ້ເດັກມີຄວາມສົນໃຈດີຂຶ້ນ
10) ເວລາເລົ່າຢ່າຫຍໍ້ເລື່ອງໃຫ້ສັ້ນຫຼາຍຈົນເກີນໄປຈະເຮັດໃຫ້ເດັກບໍ່ຮູ້ເລື່ອງ
11) ຈັດບັນຍາກາດຂອງຫ້ອງໃຫ້ເໝາະເຊັ່ນ: ອາດນັ່ງເລົ່າກັບພື້ນ ຫຼື ເຊີດຫຸ່ນປະກອບການເລົ່າ ຫຼື ອາດຈະໄປ ເລົ່າຢູ່ນອກຫ້ອງກໍ່ໄດ້
12) ຢ່າສະແດງທ່າທາງປະກອບການເລົ່າຫຼາຍຈົນເກີນໄປຈະເຮັດໃຫ້ນິທານໝົດຄວາສະໜຸກ ພະຍາຍາມເລົ່າໃຫ້ ເປັນທໍາມະຊາດງ່າຍໆ ແລະ ມີຊີວິດຊີວາ
13) ຂະນະທີ່ເລົ່າອາດໃຫ້ເດັກໄດ້ມີສ່ວນຮ່ວມໃນການເລົ່ານິທານໄປນໍາກໍ່ໄດ້ເຊັ່ນ ສະແດງທ່າທາງຕາມເນື້ອເລື່ອງ ແຕ່ບໍ່ຄວນຫຼາຍເກີນໄປ
14) ຂະນະທີ່ເລົ່ານິທານສາຍຕາຂອງຄູຈະຕ້ອງເບິ່ງໃຫ້ທົ່ວນັກຮຽນທຸກຄົນອາດຈະນັ່ງເປັນເຄິ່ງວົງມົນ ຫຼື ນັ່ງກັບ ພື້ນກໍ່ໄດ້.

15) ຂະນະທີ່ກຳລັງເລົ່ານິທານຖ້າຫາກມີເດັກເວົ້າຂຶ້ນ ຫຼື ຖາມຂັດຈັງຫວະຄູຄວນບອກໃຫ້ລໍຈົນກວ່າຈະຈົບເລື່ອງ

16) ຫຼັງຈາກເລົ່ານິທານຄວນເປີດໂອກາດໃຫ້ເດັກຖາມ ແລະ ວິຈານແຕ່ບໍ່ຄວນບັງຄັບໃຫ້ເດັກເວົ້າ ໃຫ້ຖາມເພາະຈະເຮັດໃຫ້ເດັກເສຍຄວາມມ່ວນຊື່ນ.

- ຮ່າງປະເມີນຕາມແຜນຈັດປະສົບການ

**ຕົວຢ່າງ 2: ການບັນທຶກການສັງເກດການເລົ່ານິທານ.**

ຫົວຂໍ້:..........................ອາທິດທີ 1 ວັນທີ່ 5 ເດືອນ 9 ປີ 2019

| ລ/ດ | ຊື່ ແລະ ນາມສະກຸນ | ຫົວຂໍ້ຕິດຕາມ | | | | | | | | |
|---|---|---|---|---|---|---|---|---|---|---|
| | | ດ້ານທັດສະນະຄະຕິ (ຄວາມອົດທົນ) | | | ດ້ານຄວາມຮູ້ (ຕອບຄຳຖາມຕາມເນື້ອໃນນິທານ) | | | ດ້ານທັກສະ (ມີຄວາມມ່ວນຊື່ນໃນເວລາຟັງນິທາ) | | |
| | | ດີ | ກາງ | ປັບປຸງ | ດີ | ກາງ | ປັບປຸງ | ດີ | ກາງ | ປັບປຸງ |
| 1 | | | | | | | | | | |
| 2 | | | | | | | | | | |
| 3 | | | | | | | | | | |
| 4 | | | | | | | | | | |

ວັນທີ່.......................

ລາຍຊື່ຜູ້ປະເມີນ

1) ກຳນົດເກນຈັດລະດັບທັກສະ ຫຼື ພັດທະນາການເດັກເປັນລາຍບຸກຄົນ.
   - ☐ ດີ: ເດັກສາມາດເຮັດຕາມຈຸດປະສົງທີ່ກຳນົດໄດ້.
   - ☐ ກາງ: ເດັກສາມາດເຮັດຕາມຈຸດປະສົງທີ່ກຳນົດໄດ້ສ່ວນໃດສ່ວນໜຶ່ງ.
   - ☐ ປັບປຸງ: ເດັກບໍ່ສາມາດເຮັດຕາມຈຸດປະສົງໄດ້.

# 7 ສັງເກດການສອນເລົ່ານິທານໃນໂຮງຮຽນລ້ຽງເດັກ-ອະນຸບານ

## 7.1 ລົງສັງເກດການສອນ

.ກ່ອນຈະລົງໄປສັງເກດການຮຽນ-ການສອນເລົ່ານິທານຢູ່ໂຮງຮຽນສາທິດ ກ່ອນອື່ນຕ້ອງກະກຽມພ້ອມພ້ອມເຄື່ອງມືໃຫ້ຄົບເພື່ອບໍ່ໃຫ້ສັບສົນໃນເວລາມາສະຖອດຖອນບົດຮຽນຕົວຢ່າງ: ຮ່າງການສັງເກດ

ຊື່ຜູ້ສັງເກດ......................ຂັ້ນ.........................ອາຍຸ..................ປີ

ສະຖານທີ່ສັງເກດ.....................................................................

ວັນທີ່ສັງເກດ.................................................ເວລາ...................

ກິດຈະກຳ..............................................................................

ພຶດທິກຳທີ່ສັງເກດໄດ້ ທັງ 5 ພັດທະນາການ

ດ້ານຮ່າງກາຍ:...................................................................
ດ້ານອາລົມ-ຈິດໃຈ..................................................................
ດ້ານສັງຄົມ.........................................................................
ດ້ານສະຕິປັນຍາ......................................................................
ດ້ານພາສາ.............................................................................

ຄວາມຄິດເຫັນເພີ່ມເຕີມ:

...........................................................................................

...........................................................................................

ລົງຊື່ຜູ້ສັງເກດ

...............................................

**7.2 ບັນທຶກ, ສະຫຼຸບ ແລະ ລາຍງານ**

**ການບັນທຶກ**

ຕ້ອງໄປຕາມຮ່າງທີ່ສ້າງຂຶ້ນບັນທຶກໝາຍເຖິງ ຂໍ້ຄວາມທີ່ຈົດໄວ້ເພື່ອຊ່ວຍຄວາມຊົງຈຳ ຫຼື ເພື່ອເປັນຫຼັກຖານ ຂໍ້ຄວາມທີ່ນຳມາຈົດຫຍໍ້ໆໄວ້ເພື່ອໃຫ້ຮູ້ເລື່ອງເດີມ

**ການສະຫຼຸບ**

ແມ່ນການຫຍໍ້ເອົາສະເພາະໃຈຄວາມທີ່ສຳຄັນຂອງເລື່ອງທີ່ເປັນປະເດັນເຊັ່ນ: ສະຫຼຸບເລື່ອງທີ່ເຮົາໄດ້ເຫັນໄດ້ສັງເກດ, ໄດ້ປະສົບພົບພໍ້ດ້ວຍຕົນເອງ, ໄດ້ປະຕິບັດ ແລ້ວມາລາຍງານໃຫ້ພາກສອນທີ່ກ່ຽວຂ້ອງຮັບຊາບ.

**ລາຍງານຜົນການສັງເກດ**

ການລາຍງານໝາຍເຖິງ ການນຳສະເໜີຂໍ້ມູນຈາກການສັງເກດ, ສຶກສາ, ຄົ້ນຄ້ວາ, ທົດລອງ ເຊິ່ງໄດ້ຮັບການມອບໝາຍໃຫ້ປະຕິບັດງານຕໍ່ຜູ້ທີ່ກ່ຽວຂ້ອງຢ່າງມີລະບົບ.

# 8 ວິທີການແຕ່ງບົດສອນ

8.1 ຮ່າງບົດສອນ

**4) ໂຄ່ງຮ່າງແຜນການສອນຮູບແບບຕາຕະລາງ**

ໜ່ວຍ...................................ອາທິດທີ................ມື້ທີ່..................

ຊື່ກິດຈະກຳ:................................................ເວລາ................ນາທີ

ຫົວຂໍ້:................................................................................

| ຈຸດປະສົງ | ເນື້ອໃນຕົ້ນຕໍ | ກິດຈະກຳການຮຽນ-ການສອນ | ສື່ການຮຽນ-ການສອນ | ການວັດ ແລະ ປະເມີນຜົນ |
|---|---|---|---|---|
| ເພື່ອໃຫ້ເດັກ | | 4. ຂັ້ນນຳເຂົ້າສູ່ບົດຮຽນ<br>...................................<br>...................................<br>...................................<br>5. ຂັ້ນດຳເນີນການສອນ | | |

| | | | | |
|---|---|---|---|---|
| ສາມາດ:<br>................<br>.................<br>................. | ..................<br>..................<br>..................<br>..................<br>.................. | ..................................<br>..................................<br>..................................<br>...................................<br>...................................<br>6. ຂັ້ນສະຫຼຸບບົດຮຽນ<br>..................................<br>...................................<br>...................................<br>– ສຶກສາອົບຮົມເດັກ<br>...................................<br>...................................<br>.................................. | .........................<br>.........................<br>......................... | ....................<br>...................<br>.................... |

ທີ່.................................................

ວັນທີ່..................ເດືອນ................ປີ................

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ ລາຍເຊັນຜູ້ແຕ່ງບົດສອນ

**8.2 ອົງປະກອບ ແລະ ຂັ້ນຕອນການແຕ່ງບົດສອນ**

- **ອົງປະກອບຂອງບົດສອນ**

- ຈຸດປະສົງ
- ເນື້ອໃນ
- ກິດຈະກຳການຮຽນ - ການສອນ
- ເວລາກິດຈະກຳ
- ອຸປະກອນ
- ປະເມີນ

- **ຂັ້ນຕອນການແຕ່ງບົດສອນ**

**1) ສຳລັບອະນຸບານ 1**

**ຂັ້ນນຳເຂົ້າສູ່ບົດຮຽນ**

ເປັນການກຽມເດັກໃຫ້ພ້ອມ ແລະ ກະຕຸ້ນໃຫ້ເດັກສົນໃຈ ທີ່ຈະຮ່ວມກິດຈະກຳຕໍ່ໄປກິດຈະກຳທີ່ໃຊ້ອາດຈະເປັນການຮ້ອງເພງ, ເລົ່າຄຳຄ່ອງ, ສົນທະນາ ແລະ ເບິ່ງຮູບພາບເຊິ່ງຈະໃຊ້ໄລຍະເວລາສັ້ນ.

**ຂັ້ນຕອນສອນ**

ການຈັດກິດຈະກຳຕ້ອງການໃຫ້ເດັກໄດ້ຮັບຄວາມຮູ້ ແລະ ປະສົບການດ້ວຍກິດຈະກຳຫຼາຍຮູບແບບເຊັ່ນ:

- ການສົນທະນາຖາມ-ຕອບ, ອະທິບາຍເປັນການໂອ້ລົມ ລະຫວ່າງຄູກັບເດັກ ຫຼື ເດັກກັບເດັກ ເຊິ່ງສື່ທີ່ໃຊ້ອາດຈະເປັນວັດຖຸຈິງ ແລະ ຮູບພາບ.
- ການເລົ່ານິດເລື່ອງຄູຈະເລົ່າເລື່ອງທີ່ກ່ຽວກັບເລື່ອງລາວທີ່ຄູຕ້ອງການໃຫ້ເດັກເຂົ້າໃຈ ຫຼື ປະຕິບັດຕາມສ່ວນຫຼາຍຈະເປັນການປູກຝັງ ຫຼື ການສອນທີ່ເປັນເລື່ອງນາມມະທຳ ວິທີການນີ້ຈະຊ່ວຍໃຫ້ເດັກເຂົ້າໃຈໄດ້ດີຂຶ້ນເພາະເດັກໃນໄວນີ້ຈະມັກຟັງນິດເລື່ອງ ແລະ ຮຽນແບບຕົວລະຄອນໃນນິດດເລື່ອງ ໃນການເລົ່າເລື່ອງຄູອາດໃຊ້ຮູບພາບ, ຫຸ່ນ ຫຼື ສ່ວນຕ່າງໆຂອງຮ່າງກາຍປະກອບ.
- ການສາທິດປະຕິບັດການທົດລອງເປັນການສອນທີ່ເຮັດໃຫ້ເດັກໄດ້ຮັບປະສົບການທາງກົງເພາະໄດ້ທົດລອງປະຕິບັດດ້ວຍຕົນເອງໄດ້ສັງເກດເຫັນການປ່ຽນແປງໃນສິ່ງທີ່ຕົນເອງໄດ້ທົດລອງເປັນການເຝິກທັກສະການສັງເກດ, ການແກ້ບັນຫາ ແລະ ສົ່ງເສີມໃຫ້ເດັກມີຄວາມຢາກຮູ້ຢາກເຫັນ ແລະ ຄົ້ນພົບຄວາມຮູ້ດ້ວຍຕົນເອງ.
- ການຈັດທັກສະນະສຶກສາເປັນການສອນທີ່ໃຫ້ເດັກໄດ້ຮັບປະສົບການໂດຍກົງອີຮູບແບບໜຶ່ງອາດຈະເປັນການພາເດັກໄປຮຽນນອກຫ້ອງຮຽນຮອບບໍລິເວນໂຮງຮຽນນອກໂຮງຮຽນ ແຕ່ຄູຈະຕ້ອງເບິ່ງແຍງເອົາໃຈໃສ່ໃນເລື່ອງຄວາມປອດໄພ.

**ຂັ້ນຕອນສະຫຼຸບບົດຮຽນ**

ເປັນການສະຫຼຸບສິ່ງຕ່າງໆທີ່ຮຽນມາໃຫ້ເດັກໄດ້ເຂົ້າໃຈດີຂຶ້ນເຊິ່ງຄູອາດຈະໃຊ້ ຄຳຖາມ, ເພງ, ຄຳຄ່ອງ, ເກມໃນການສະຫຼຸບບົດຮຽນ.

- ການວັດ ແລະ ປະເມີນ

ເປັນການຕິດຕາມຜົນການຮຽນຮູ້ຂອງເດັກກ່ຽວກັບສິ່ງທີ່ຮຽນມາຈາກການຈັດກິດຈະກຳຕ່າງໆເຊັ່ນ: ກິດຈະກຳສອນເພງ, ຄຳຄ່ອງ, ນິດເລື່ອງ, ສັງເກດສົນທະນາ, ເກມ, ເວົ້າເປັນຄຳສັບ ອ່ານອອກສຽງພະຍັນຊະນະເຊິ່ງຈະໄດ້ໃຊ້ວິທີສັງເກດດັ່ງນີ້:

7) ການຕອບຄຳຖາມ, ສົນທະນາຖາມ-ຕອບ ແລະ ສະແດງຂໍ້ຄິດເຫັນ.
8) ການຟັງ, ການເວົ້າ, ການອ່ານ.
9) ຄວາມສົນໃຈໃນການເຂົ້າຮ່ວມກິດຈະກຳ.

**2) ສຳລັບອະນຸບານ 2**

**ຂັ້ນນຳເຂົ້າສູ່ບົດຮຽນ**

ແມ່ນຂັ້ນຕອນຄວາມສົນໃຈຂອງເດັກເຂົ້າສູ່ການຮຽນ ເພື່ອໃຫ້ເດັກມີຄວາມພ້ອມຢາກຮຽນຮູ້ໃນການນຳເຂົ້າສູ່ບົດຮຽນໂດຍຮ້ອງເພງ, ເລົ່າຄຳຄ່ອງ, ສົນທະນາ, ເບິ່ງຮູບພາບ ແລະ ຫຼິ້ນເກມ ເຊິ່ງຈະໃຊ້ໄລຍະເວລາສັ້ນໆ 2-3 ນາທີ ຄູຄວນນຳໃຊ້ໃຫ້ແທດເໝາະກັບສຳອາຍຸຂອງເດັກ ແລະ ກ່ຽວຂ້ອງກັບກິດຈະກຳທີ່ນຳມາຮຽນ.

**ຂັ້ນດຳເນີນການສອນ**

ແມ່ນຂັ້ນຕອນສິ່ງຄວາມຮູ້ທາງດ້ານເນື້ອໃນທີ່ຄູນຳເອົາບັນດາຫົວຂໍ້ເນື້ອໃນຈາກແຜນການຈັດປະສົບການມາຈັດກິດຈະກຳ ໂດຍນຳໃຊ້ວິທີການສັງເກດຮູບພາບ, ນິທານ ແລະ ອື່ນໆ. ເພື່ອໃຫ້ເດັກໄດ້ຄົ້ນຄິດ ແລະ ມີສ່ວນຮ່ວມກັບຄູໃນເວລາປະຕິບັດກິດຈະກຳ.

**ຂັ້ນຕອນສະຫຼຸບບົດຮຽນ**

ແມ່ນການສະຫຼຸບສິ່ງຕ່າງໆທີ່ໄດ້ຮຽນຜ່ານມາ ໂດຍການເອົາເນື້ອໃນຕົ້ນຕໍຂອງສິ່ງທີ່ຮຽນມາເວົ້າໂດຍຫຍໍ້ ເຊິ່ງຄູອາດຈະໃຊ້ຄຳຖາມ ກ່ຽວກັບນິທານ ຫຼື ໃຊ້ເກມໃນການສະຫຼຸບບົດຮຽນ.

➢ **ສິ່ງທີ່ຄວນເອົາໃຈໃສ່.**

ການຈັດກິດຈະກຳການຮຽນ-ການສອນກິດຈະກຳວົງມົນ ຄູຄວນຈັດການສອນແບບບູລະນາການໂດຍໃຫ້ເດັກຮຽນຮູ້ດ້ວຍຕົນເອງຕາມວິທີການສອນດັ່ງນີ້:

- ນຳໃຊ້ຮູບພາບ, ເຄື່ອງຕົວຈິງ ແລະ ເຄື່ອງຈຳລອງເພື່ອໃຫ້ເດັກສັງເກດ.
- ສົນທະນາ, ຖາມ-ຕອບ, ອະທິບາຍລະຫວ່າງຄູກັບເດັກ ຫຼື ເດັກກັບເດັກ.
- ທັດສະນະສຶກສານອກຫ້ອງຮຽນ: ບໍລິເວນເດີ່ນໂຮງຮຽນ, ນອກຫ້ອງຮຽນ: ສະຖານສຳຄັນເຊັ່ນ: ວັດ, ສວນສາທາລະນະ...
- ການສາທິດ ຫຼື ການທົດລອງເດັກໄດ້ສັງເກດ, ສຳຜັດ, ບອກສິ່ງຕ່າງໆທີ່ເກີດຂຶ້ນດ້ວຍຕົນເອງ.

3) **ສຳລັບອະນຸບານ 3**

ການຈັດກິດຈະກຳວົງມົນໃນຊັ້ນອະນຸບານ 3 ໃຊ້ເວລາປະມານ 30-35 ນາທີ ເຊິ່ງປະກອບດ້ວຍການສອນພາສາລາວ, ຄະນິດສາດ ແລະ ວິທະຍາສາດ. ຄູຄວນຈັດກິດຈະກຳການຮຽນ-ການສອນເດັກໃນຮູບແບບບູລະນາການໂດຍຈັດການສອນຜ່ານນິທານ, ການສັງເກດຮູບພາບ ແລະ ບັດຄຳ. ເພື່ອໃຫ້ເດັກນ້ອຍໄດ້ຮັບຄວາມຮູ້, ຄວາມສາມາດນຳໄປໃຊ້ໃນຊີວິດປະຈຳວັນ, ຄູຕ້ອງຄຳນຶງເຖິງລະດັບຄວາມຮູ້ຄວາມສາມາດຂອງເດັກນ້ອຍ. ໃນກໍລະນີເດັກນ້ອຍມີຄວາມຕ້ອງການພິເສດຄູຄວນພິຈາລະນາການນຳໃຊ້ກິດຈະກຳໃຫ້ເໝາະສົມ. ຕົວຢ່າງ ເດັກນ້ອຍທີ່ສາຍຕາສັ້ນຄວນໃຫ້ເດັກນ້ອຍຄົນອື່ນຊ່ວຍເຫຼືອ ຫຼື ວ່າໃຫ້ເດັກນ້ອຍຄົນນັ້ນມານັ່ງໃກ້ໆ, ອຸປະກອນທີ່ນຳມາໃຊ້ຄວນໃຫ້ໃຫຍ່, ຊັດເຈນ ແລະ ໃຫ້ເດັກໄດ້ສຳພັດຕົວຈິງ. ການສອນກິດຈະກຳວົງມົນມີຂັ້ນຕອນປະຕິບັດດັ່ງນີ້:

**ຂັ້ນຕອນທີ 1 ການກະກຽມ**

- ກະກຽມບົດສອນ ຫຼື ແຜນປະສົບການໃຫ້ແທດເໝາະກັບຫົວຂໍ້ ແລະ ກິດຈະກຳທີ່ຈະສອນ.
- ກະກຽມສະຖານທີ່ທີ່ຈະປະຕິບັດເຊັ່ນ: ຫ້ອງຮຽນ ຫຼື ສະຖານທີ່ຫ້ອງຮຽນ.
- ກະກຽມອຸປະກອນໃຫ້ພຽງພໍກັບຈຳນວນເດັກທີ່ມີໃນຫ້ອງຮຽນ.

**ຂັ້ນຕອນທີ່ 2 ດຳເນີນການສອນ**

- ອະທິບາຍ, ແນະນຳ ແລະ ສາທິດວິທີປະຕິບັດກິດຈະກຳໃຫ້ເດັກເຂົ້າໃຈກ່ອນຈຶ່ງໃຫ້ເດັກລົງມືປະຕິບັດ.
- ນຳໃຊ້ເຄື່ອງຕົວຈິງ, ເຄື່ອງຈຳລອງ ຫຼື ຮູບພາບເພື່ອໃຫ້ເດັກນ້ອຍສັງເກດ.
- ໃຫ້ເດັກນ້ອຍໄດ້ສາທິດ ຫຼື ທົດລອງດ້ວຍຕົນເອງ ເພື່ອໃຫ້ເດັກນ້ອຍໄດ້ສັງເກດເຫັນການປ່ຽນແປງໃນສິ່ງທີ່ຕົນໄດ້ປະຕິບັດ.
- ບາງຄັ້ງອາດຈະພາເດັກນ້ອຍໄປຮຽນນອກຫ້ອງຮອບບໍລິເວນໂຮງຮຽນ ຫຼື ທັດສະນະສຶກສານອກສະຖານທີແຕ່ຄູຕ້ອງເບິ່ງແຍງເອົາໃຈໃສ່ຄວາມປອດໄພເປັນສິ່ງສຳຄັນ.
- ສົນທະນາ, ຖາມ-ຕອບ ແລະ ອະທິບາຍລະຫວ່າງຄູກັບເດັກນ້ອຍ ຫຼື ເດັກນ້ອຍກັບເດັກນ້ອຍກ່ຽວກັບເນື້ອໃນຂອງບົດຮຽນທີ່ໄດ້ຮຽນ.

**ຂັ້ນຕອນທີ 3 ການສະຫຼຸບບົດສອນ**

- ເມື່ອສຳເລັດການຮຽນທຸກເທື່ອຄູຄວນສະຫຼຸບເນື້ອໃນບົດຮຽນໃຫ້ເດັກຟັງ.
- ຍ້ອງຍໍຊົມເຊີຍເດັກທີ່ປະຕິບັດກິດຈະກຳໄດ້ດີ ແລະ ແນະນຳເດັກທີ່ເຮັດບໍ່ທັນໄດ້ດີ.
- ສຶກສາອົບຮົມເດັກທຸກໆຄັ້ງຫຼັງຈາກປະຕິບັດກິດຈະກຳສຳເລັດແລ້ວ.

### 8.3 ແຕ່ງບົດສອນຕາມແຜນຈັດປະສົບການ

**ບົດສອນ**

ໜ່ວຍ: ຕົວຂອງຂ້ອຍ ອາທິດ 1 ມື້ທີ 5

ກິດຈະກຳວົງມົນ ເວລາ: 15-20 ນາທີ

ຫົວຂໍ້: ໜ້າທີ່ຂອງຕີນ ແລະ ມື

ອະນຸບານ 1

| ຈຸດປະສົງ | ເນື້ອໃນຕົ້ນຕໍ | ກິດຈະກຳການຮຽນ-ການສອນ | ສື່ການສອນ | ປະເມີນຜົນ |
|---|---|---|---|---|
| | | **1) ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຈັດເດັກເຂົ້າສູ່ລະບຽບ<br>- ຄູກັບເດັກທັກທາຍສະບາຍດີເຊິ່ງກັນ ແລະກັນ.<br>- ຄູພາເດັກສ້າງບັນຍາກາດດ້ວຍການຮ້ອງເພງຮ່າງກາຍຂອງຂ້ອຍ<br>- ທວນຄືນບົດຮຽນເກົ່າ<br>- ຄູຖາມເດັກວ່າໃນຮ່າງກາຍຂອງເຮົາມີຫຍັງແດ່? ໃຫ້ເດັກບອກ<br>**2) ຂັ້ນດຳເນີນການສອນ**<br>- ຄູສະເໜີກິດຈະກຳທີ່ຈະຮຽນໃນຊົ່ວໂມງນີ້ໃຫ້ເດັກຟັງ | | |
| ເພື່ອໃຫ້ເດັກສາມາດ:<br><br>ຟັງການເລົ່າເລື່ອງຮ່ວມກັບໝູ່ເພື່ອນດ້ວຍຄວາມມ່ວນຊື່ນ<br><br>ບອກໜ້າທີ່ | ການຟັງເລົ່າເລື່ອງ ໜ້າທີ່ຂອງຕີນ ແລະ ມື<br><br>ໜ້າທີ່ຂອງຕີນ: ໃຊ້ໄວ້ຍ່າງ ແລະ ມື | - ຄູສະເໜີບົດເລື່ອງທີ່ຈະເລົ່າໃຫ້ເດັກຟັງໃນຊົ່ວໂມງນີ້ພວກຫຼານຈະໄດ້ຟັງນິທານເລື່ອງ ໜ້າທີ່ຂອງຕີນ ແລະ ມື<br>- ຄູເລົ່າເລື່ອງໃຫ້ເດັກຟັງເທື່ອລະວັກລະຕອນ<br>- ຫຼັງຈາກເລົ່າເລື່ອງຈົບແລ້ວຄູຖາມເດັກຄືນກ່ຽວກັບເນື້ອໃນບົດເລື່ອງບາງວັກບາງຕອນວ່າ: ບົດເລື່ອງມີຈັກຕົວລະຄອນມີຕົວລະຄອນໃດແດ່?<br>- ຄູສົນທະນາກັບເດັກກ່ຽວກັບເນື້ອໃນບົດເລື່ອງ<br>- ຄູໃຫ້ເດັກປະກອບຄຳຄິດຄຳເຫັນໃສ່ບົດເລື່ອງ<br>- ຈາກນັ້ນໃຫ້ເດັກບອກໜ້າທີ່ຂອງຕີນເຮັດຫຍັງແດ່ ແລະ ໜ້າທີ່ຂອງມືເອົາໄວ້ເຮັດຫຍັງ<br>- ຄູສະຫຼຸບຄືນການບອກໜ້າທີ່ຂອງຕີນ ມື ຂອງ | ບົດເລື່ອງໜ້າທີ່ຂອງຕີນ ແລະ ມື | ສັງເກດ:<br><br>ຈາກການຟັງເລົ່າເລື່ອງດ້ວຍຄວາມມ່ວນຊື່ນ<br><br>ສັງເກດຈາກການບອກໜ້າທີ່ຂອງ |

| | | | | |
|---|---|---|---|---|
| ຂອງ ຕີນ ແລະ ມື | ໃຊ້ໄວ້ ຈັບບາຍ | ເດັກ<br>- ຍ້ອງຍໍຊົມເຊີຍເດັກເກັ່ງຫຼາຍ, ດີຫຼາຍ....<br>**3 ຂັ້ນສະຫຼຸບ**<br>- ຄູຖາມຄືນກ່ຽວກັບບົດເລື່ອງທີຄູເລົ່າໃຫ້ຟັງວ່າ ບົດເລື່ອງທີ່ຄູເລົ່າຜ່ານໄປນັ້ນມີຊື່ເລື່ອງວ່າ ແນວໃດ?<br>- ຄູໃຫ້ເດັກຕອບ ( ຍ້ອງຍໍຊົມເຊີຍເດັກ )<br>+ **ວັດປະເມີນຜົນ**<br>- ຄູໃຫ້ເດັກເລົ່າບາງວັກບາງຕອນຂອງບົດເລື່ອງ ຄືນ<br>- ຄູຍ້ອງຍໍຊົມເຊີຍເດັກ<br>- ຄູໃຫ້ເດັກເວົ້າຄືນກ່ຽວກັບໜ້າທີຂອງຕີນ ແລະ ມື<br>- ສຶກສາອົບຮົມເດັກ ກ່ຽວກັບການຕັດເລັບຕີນ , ເລັບມື ແລະ ລ້າງຕີນໃຫ້ສະອາດ. | | ຕີນ ມື |

ທີ່..................................................

ວັນທີ່.................ເດືອນ...............ປີ................

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ                                   ລາຍເຊັນຜູ້ແຕ່ງບົດສອນ

## ບົດສອນ

ໜ່ວຍ: ສິ່ງຕ່າງໆອ້ອມຕົວເຮົາ                                   ອາທິດ 3 ມື້ທີ 3

ກິດຈະກຳວົງມົນ                                   ເວລາ: 30-35 ນາທີ

ຫົວຂໍ້: ອາຫານຄາວ

ອະນຸບານ 2

| ຈຸດປະສົງ | ເນື້ອໃນຕົ້ນຕໍ | ກິດຈະກຳການຮຽນ-ການສອນ | ສື່ການສອນ | ປະເມີນຜົນ |
|---|---|---|---|---|
| | | **2) ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຈັດເດັກເຂົ້າສູ່ລະບຽບ<br>- ຄູກັບເດັກທັກທາຍສະບາຍດີເຊິ່ງກັນ ແລະກັນ.<br>- ຄູພາເດັກສ້າງບັນຍາກາດດ້ວຍການຮ້ອງເພງ ອາຫານດີມີປະໂຫຍດ<br>- ທວນຄືນບົດຮຽນເກົ່າ<br>- ຄູຖາມເດັກວ່າເຊົ້ານີ້ກ່ອນພວກຫຼານຈະມາ | | |

| | | | | |
|---|---|---|---|---|
| ເພື່ອໃຫ້<br>ເດັກ<br>ສາມາດ:<br><br>ຟັງນິທານ<br>ລິດຊາດ<br>ອາຫານຢ່າງ<br>ມ່ວນຊື່ນ<br>ແລະບອກ<br>ປະເພດ,<br>ລົດຊາດ,<br>ກິ່ນອາຫານ<br>ຄາວຢ່າງ<br>ຖືກຕ້ອງ<br><br>ອ່ານ<br>ອອກສຽງ<br>ພະຍັນຊະນ<br>ະປະສົມກັບ<br>ສະຫຼະ X ທີ່<br>ມີວັນນະຍຸດ<br>X່ , X້ | ການຟັງ<br>ນິທານເລື່ອງ<br>ລົດຊາດ<br>ອາຫານ,<br>ປະເພດ<br>ຕ່າງໆ:ເຊັ່ນ:<br>ອາຫານຄາວ:<br>ແກງຈືດ,<br>ຂົ້ວ, ເອາະ,<br>ແຈ່ວ, ມົກ<br><br>ການອ່ານ<br>ອອກສຽງ<br>ພະຍັນຊະນ<br>ະປະສົມກັບ<br>ສະຫຼະ X ທີ່<br>ມີວັນນະຍຸດ<br>X່ , X້ | ໂຮງຮຽນໄດ້ກິດເຂົ້າເຊົ້າລະບໍ່? ກິນກັບຫຍັງແດ່? ໃຫ້ເດັກບອກ<br>**2) ຂັ້ນດຳເນີນການສອນ**<br>- ຄູສະເໜີກິດຈະກຳທີ່ຈະຮຽນໃນຊົ່ວໂມງນີ້ໃຫ້ເດັກຟັງ<br>- ຄູສະເໜີບົດເລື່ອງທີ່ຈະເລົ່າໃຫ້ເດັກຟັງໃນຊົ່ວໂມງນີ້ພວກຫຼານຈະໄດ້ຟັງນິທານເລື່ອງ ລົດຊາດອາຫານ<br>- ຄູເລົ່າເລື່ອງໃຫ້ເດັກຟັງເທື່ອລະວັກລະຕອນ<br>- ຫຼັງຈາກເລົ່າເລື່ອງຈົບແລ້ວຄູສົນທະນາຖາມ-ຕອບເດັກຄືນກ່ຽວກັບເນື້ອໃນບົດເລື່ອງບາງວັກບາງຕອນວ່າ: ບົດເລື່ອງມີຈັກຕົວລະຄອນມີຕົວລະຄອນໃດແດ່?<br>- ຄູໃຫ້ເດັກປະກອບຄຳຄິດຄຳເຫັນໃສ່ບົດເລື່ອງ<br>- ຈາກນັ້ນຄູສະຫຼຸບຄືນກ່ຽວກັບການຕອບຂອງເດັກ.<br>- ໃຫ້ເດັກສັງເກດ ແລະ ໄດ້ຊີມອາຫານທີ່ຄູກະກຽມມາ ແລ້ວສົນທະນາກັບເດັກ ກ່ຽວກັບປະເພດອາຫານ, ລົດຊາດອາຫານ, ກິ່ນຂອງອາຫານຄາວ<br>- ຄູໃຫ້ເດັກບອກປະເພດຂອງອາຫານ, ລົດຊາດອາຫານແຕ່ລະຢ່າງ, ກິ່ນຂອງອາຫານຄາວ<br>- ຄູສະຫຼຸບຄືນການບອກປະເພດຂອງອາຫານ, ລົດຊາດອາຫານແຕ່ລະຢ່າງ, ກິ່ນຂອງອາຫານຄາວຄືນ<br>- ຍ້ອງຍໍຊົມເຊີຍເດັກເກັ່ງຫຼາຍ, ດີຫຼາຍ....<br>- ຄູໃຫ້ເດັກສັງເກດພະຍັນຊະນະ, ບັດສະຫຼະ, ວັນນະຍຸດ ແລະ ອ່ານພະຍັນຊະນະປະສົມກັບສະຫຼະ X ທີ່ມີວັນນະຍຸດ X່ , X້<br>- ຄູພາເດັກອ່ານເທື່ອລະບັດພ້ອມກັນໝົດຫ້ອງ, ອ່ານເທື່ອລະຄົນ<br>- ຄູຊ່ວຍເຫຼືອເດັກຜູ້ທີ່ອ່ານຍັງບໍ່ທັນໄດ້ດີ<br>- ຍ້ອງຍໍຊົມເຊີຍເດັກ<br>**4 ຂັ້ນສະຫຼຸບ**<br>- ຄູຖາມຄືນກ່ຽວກັບບົດເລື່ອງທີຄູເລົ່າໃຫ້ຟັງວ່າບົດເລື່ອງທີ່ຄູເລົ່າຜ່ານໄປນັ້ນມີຊື່ເລື່ອງວ່າແນວໃດ? ມີຕົວລະຄອນໃດແດ່?<br>- ໃຫ້ເດັກບອກປະເພດອາຫານທີ່ຄູນຳມາ | ວັດຖຸຈິງ(ອາຫານແຕ່ລະປະເພດ)<br>ບົດນິທານເລື່ອງ ລົດຊາດຂອງອາຫານ | ສັງເກດ:<br><br>ຈາກການຟັງເລົ່າເລື່ອງດ້ວຍຄວາມມ່ວນຊື່ນ<br><br>ສັງເກດຈາກການບອກປະເພດອາຫານຄາວ ແລະ ອ່ານພະຍັນຊະນະຂອງເດັກ |

| | | | | |
|---|---|---|---|---|
| | | - ຄູໃຫ້ເດັກຕອບ ( ຍ້ອງຍໍຊົມເຊີຍເດັກ )<br>+ **ວັດປະເມີນຜົນ**<br>- ຄູໃຫ້ເດັກອ່ານພະຍັນຊະນະປະສົມກັບສະຫຼະ ໂX ທີ່ມີວັນນະຍຸດ X່ , X້ ຄືນ 1-2 ເທື່ອ<br>- ຄູຍ້ອງຍໍຊົມເຊີຍເດັກ<br>- ສຶກສາອົບຮົມເດັກ ກ່ຽວກັບການກິນອາຫານທີ່ສຸກດີ ແລະ ສະອາດ | | |

ທີ່.................................................

ວັນທີ່.................ເດືອນ...............ປີ................

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ

ລາຍເຊັນຜູ້ແຕ່ງບົດສອນ

# ບົດສອນ

**ໜ່ວຍ: ຕົວຂອງຂ້ອຍ**

**ຂັ້ນອະນຸບານ 3** **ອາທິດທີ 3 ມື້ທີ 2**

**ກິດຈະກຳ ວົງມົນ:** **ເວລາ 30- 35 ນາທີ**

**ຫົວຂໍ້: ສອນປະກອບຂອງແຂນ ແລະ ຄຸນປະໂຫຍດ**

| ຈຸດປະສົງ: | ເນື້ອໃນ | ກິດຈະກຳການຮຽນ-ການສອນ | ອຸປະກອນ | ປະເມີນ |
|---|---|---|---|---|
| | | **1) ຂັ້ນດຳເນີນກິດຈະກຳການຮຽນ-ການສອນ**<br>- ຄູສະເໜີບົດຮຽນທີ່ຈະຮຽນໃນຊົ່ວໂມງນີ້<br>- ຄູສົນທະນາກ່ຽວກັບສ່ວນປະກອບຂອງຮ່າງກາຍຂອງຄົນຮ່າງຂອງຄົນເຮົາ<br>- ຄູໃຫ້ເດັກນ້ອຍຍົກແຂນຂຶ້ນທັງສອງເບື້ອງ ແລ້ວສົນທະນາຖາມ-ຕອບກ່ຽວກັບສ່ວນປະກອບຂອງແຂນວ່າມີຫຍັງແດ່? ວ່າມີໜ້າທີ່ເຮັດຫຍັງແດ່? ເດັກຕອບ ແລະ ປະກອບຄຳເຫັນ | | |

| | | | | |
|---|---|---|---|---|
| **ໃຫ້ເດັກສາມາດ:**<br>1 ບອກສ່ວນປະກອບຂອງແຂນ ແລະ ຄຸນປະໂຫຍດຂອງມືໄດ້ຖືກຕ້ອງ<br>2 ປະຕິບັດຕົວຈິງໃນການຈັບບາຍວັດຖຸສິ່ງຂອງ<br>3 ເວົ້າຄຳສັບຕາມເນື້ອໃນບົດນິທານ ແລະ ເວົ້າເປັນປະໂຫຍດຕາມຮູບພາບໄດ້ຊັດເຈນ<br>4 ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ | 1 ບອກສ່ວນປະກອບຂອງແຂນ ແລະ ຄຸນປະໂຫຍດຂອງມື:<br>2 ສ່ວນປະກອບແຂນ: ກົກແຂນ, ແຂນສອກ, ຄໍ່ມື, ມື: ມື, ຝາມື, ຫຼັງມື, ນີ້ວມື, ຂໍ້ມື, ເລັບມື, ນີ້ວມື, ນິ້ວໂປ້, ນີ້ວຊີ້, ນີ້ວກາງ, ນີ້ວນາງ, ນີ້ວກ້ອຍ<br>3 ຄຸນປະໂຫຍດຂອງມື: ໃຊ້ໄວ້ຈັບ, ບາຍ, ແລະ ຖືວັດຖຸສິ່ງຂອງຕ່າງໆ: ອ່ອນ, ແຂງ ກ້ຽງ, ຊາ, ໜາ, ບາງ<br>4 ການຟັງນິທານເລື່ອງ ມືວິເສດ ເວົ້າເປັນຄຳສັບຕາມເນື້ອໃນບົດເລື່ອງ: ມື, ຝາມື, ຫຼັງມື, ນີ້ວມື, ກ້ຽງ, ຊາ<br>5 ການເວົ້າເປັນປະໂຫຍກຕາມຮູບພາບ: ມືສອງເບື້ອງ, ມືຂອງລາວລວມມີ | - ຍ້ອງຍໍຊົມເຊີຍເດັກ.<br>- ຄູສະເໜີບົດເລື່ອງທີ່ຈະເລົ່າໃຫ້ເດັກຟັງໃນຊົ່ວໂມງນີ້ພວກຫຼານຈະໄດ້ຟັງນິທານເລື່ອງ ມືວິເສດ<br>- ຄູເລົ່າເລື່ອງໃຫ້ເດັກຟັງເທື່ອລະວັກລະຕອນພ້ອມທັງປະກອບທ່າທາງມື<br>- ຫຼັງຈາກເລົ່າເລື່ອງຈົບແລ້ວຄູຖາມເດັກຄືນກ່ຽວກັບເນື້ອໃນບົດເລື່ອງບາງວັກບາງຕອນວ່າ: ບົດເລື່ອງມີຈັກຕົວລະຄອນ ມີຕົວລະຄອນໃດແດ່? ມືເປັນຄືນແນວໃດ?...<br>- ຄູໃຫ້ເດັກປະກອບຄຳຄິດຄຳເຫັນໃສ່ບົດເລື່ອງ<br>- ຄູສະຫຼຸບການຕອບຂອງເດັກຄືນ<br>- ຄູຍົກບັດຄຳສັບຂຶ້ນແລ້ວພາເດັກເວົ້າຄຳສັບ ເທື່ອລະຄຳສັບຈົນຄົບ<br>- ຄູຍົກບັດຄຳສັບຂຶ້ນເທື່ອລະບັດໃຫ້ເດັກເວົ້າຕາມຈົບຄົບພ້ອມກັນ ແລະ ເວົ້າຄຳສັບເທື່ອລະຄົນ<br>- ຍ້ອງຍໍຊົມເຊີຍເດັກ.<br>- ຄູໃຫ້ເດັກປະຕິບັດຕົວຈິງໃນການຈັບບາຍສິ່ງຂອງຕ່າງໆທີ່ຄູກຽມມາ ຈາກນັ້ນຄູຖາມ-ຕອບ ແລະ ສົນທະນາກ່ຽວກັບຄຸນປະໂຫຍດຂອງມືວ່າຖ້າບໍ່ມີມືຈະມີຄວາມລຳບາກແນວໃດແດ່? ສະນັ້ນເຮົາຄວນຮັກສາ ແລະ ໃຊ້ມືໃຫ້ເກີດປະໂຫຍດແລະໝັ່ນຮັກສາໃຫ້ສະອາດຢູ່ເລື້ອຍໆ<br>- ຄູຍ້ອງຍໍຊົມເຊີຍເດັກ ເກັ່ງຫຼາຍ...ດີຫຼາຍ....<br><br>**2) ຂັ້ນສະຫຼຸບ**<br>- ຄູຖາມຄືນກ່ຽວກັບບົດເລື່ອງທີຄູເລົ່າໃຫ້ຟັງວ່າບົດເລື່ອງທີ່ຄູເລົ່າຜ່ານໄປນັ້ນມີຊື່ເລື່ອງວ່າແນວໃດ?<br>- ຄູໃຫ້ເດັກຕອບ(ຍ້ອງຍໍຊົມເຊີຍເດັກ)<br>+ **ວັດປະເມີນຜົນ**<br>- ຄູໃຫ້ເດັກເວົ້າປະໂຫຍກຄືນຕາມຮູບ | ແຂນ, ມື, ສຳລີ, ໄມ້, ຜ້າໜາ-ບາງ, ເຈ້ຍຂາວ, ກະດາດຊາຍ<br>ຮູບພາບ: ມືມີສອງເບື້ອງ, ເດັກນ້ອຍຕັດເລັບມື, ເດັກນ້ອຍລ້າງມື<br><br>ບົດເລື່ອງ ແລະຮູບພາບປະກອບບົດເລື່ອງ | ສັງເກດຈາກຄວາມຖືກຕ້ອງໃນການບອກສ່ວນປະກອບຂອງແຂນ ແລະ ຄຸນປະໂຫຍດຂອງມື<br><br>ສັງເກດຈາກການເວົ້າຄຳສັບ ແລະ ເວົ້າເປັນປະໂຫຍກຕາມຮູບພາບ<br><br>ສັງເກດຄວາມມີມາລະຍາດໃນການຟັງນິທານ |

| | | | | |
|---|---|---|---|---|
| | ສິບນິ້ວ, ເດັກນ້ອຍຕັດເລັບມືໃຫ້ສັ້ນ, ເດັກນ້ອຍລ້າງມືໃຫ້ສະອາດ | ພາບ<br>- ຄູໃຫ້ເດັກເວົ້າສ່ວນປະກອບຂອງແຂນ ແລະ ຄຸນປະໂຫຍກຂອງມືຄືນພ້ອມກັນ 1-2 ເທື່ອ<br>- ຄູຍ້ອງຍໍຊົມເຊີຍເດັກ<br>**+ ຂັ້ນຕັກເຕືອນ ແລະ ມອບວຽກບ້ານ**<br>- ພວກຫຼານເວລານັ່ງຟັງນິທານບໍ່ຄວນລືມກັນໃຫ້ຕັ້ງໃຈຟັງ ຖ້າບໍ່ດັ່ງນັ້ນເມື່ອຄູຖາມຄືນຈະຕອບຄູບໍ່ໄດ້ ແລ້ວພວກເຮົາຄວນຮັກສາຄວາມສະອາດຮ່າງກາຍ ໂດຍສະເພາະແມ່ນມືຂອງເຮົາ. | | |

## 9. ແຕ່ງບົດສອນຕົວຈິງ

9.1 ແຕ່ງບົດສອນຊັ້ນລ້ຽງເດັກ

9.2 ແຕ່ງບົດສອນຂັ້ນອະນຸບານ 1

9.3 ແຕ່ງບົດສອນຂັ້ນອະນຸບານ 2

9.4 ແຕ່ງບົດສອນຂັ້ນອະນຸບານ 3

## 10. ການຜະລິດສື່ການສອນ

## 11. ເຝິກສອນຕົວຈິງໃນຫ້ອງຮຽນ ແລະ ຖອດຖອນບົດຮຽນ

## 12. ເຝິກການສອນຕົວຈິງກັບເດັກໃນໂຮງຮຽນລ້ຽງເດັກ-ອະນຸບານ ແລະ ເມີນ, ຖອດຖອນບົດຮຽນ

**ເຝິກແຕ່ງບົດສອນ, ສອນຕົວຈິງໃນຫ້ອງ ແລະ ຖອດຖອນບົດຮຽນ**

ກິດຈະກຳ ເຝິກສອນຕົວຈິງໃນກຸ່ມນ້ອຍ

ອຸປະກອນ ບົດສອນ, ອຸປະກອນປະກອບບົດສອນ

ວິທີດຳເນີນກິດຈະກຳ

- ນັກຮຽນຄູທຸກຄົນໃນກຸ່ມຜັດປ່ຽນກັນສອນຕາມບົດສອນທີ່ໄດ້ກຽມມາ.
- ນັກຮຽນຄູສັງເກດການສອນຂອງໝູ່ ແລະ ຈົດບັນທຶກ.
- ຄູຕິດຕາມສັງເກດການສອນຂອງແຕ່ລະກຸ່ມ.
- ຖອດຖອນບົດຮຽນ ແລະ ປະກອບຄຳເຫັນກ່ຽວກັບການສອນຮ່ວມກັນ.
- ແຕ່ລະກຸ່ມລາຍງານຜົນການສອນຕົວຈິງ.
- ຄູສັງລວມ, ແນະນຳເພີ່ມເຕີມອີກ.

**ເຝິກການສອນຕົວຈິງຜ່ານກຸ່ມໃຫຍ່ໝົດຫ້ອງ**

ກິດຈະກຳ ການສອນຕົວຈິງຜ່ານຫ້ອງ

ອຸປະກອນ ບົດສອນ, ອຸປະກອນປະກອບບົດສອນ

**ວິທີດຳເນີນກິດຈະກຳ**

- ຄູໃຫ້ນັກຮຽນຄູຜັດປ່ຽນກັນສອນ.
- ນັກຮຽນຄູທີ່ຍັງບໍ່ໄດ້ສອນສັງເກດ ແລະ ຈົດບັນທຶກ.
- ຖອດຖອນບົດຮຽນຮ່ວມກັນ.
- ຄູສະຫຼຸບ ແລະ ແນະນຳເພີ່ມເຕີມ.
- ໃຫ້ແຕ່ລະກຸ່ມເລືອກຕົວແທນເພື່ອໄປສອນທົດລອງໃນໂຮງຮຽນລ້ຽງເດັກອະນຸບານ.

**ເຝິກສອນຕົວຈິງກັບເດັກໃນໂຮງຮຽນລ້ຽງເດັກ-ອະນຸບານ ແລະ ຖອດຖອນບົດຮຽນ**

ກິດຈະກຳ: ການສອນຕົວຈິງໃນໂຮງຮຽນ ລ້ຽງເດັກ - ອະນຸບານ.

ອຸປະກອນ: ບົດສອນ, ອຸປະກອນປະກອບການສອນຕົວຈິງ.

ວິທີດຳເນີນກິດຈະກຳ:

- ແບ່ງນັກຮຽນຄູເຂົ້າສອນຕົວຈິງໃນຫ້ອງຮຽນອະນຸບານຕາມແຕ່ລະຊ່ຳອາຍຸ.
- ຄູຕິດຕາມສັງເກດການສອນຂອງນັກຮຽນຄູ.
- ນັກຮຽນຄູທີ່ບໍ່ໄດ້ສອນຕິດຕາມ ແລະ ຈົດບັນທຶກການສອນ.
- ຖອດຖອນບົດຮຽນຮ່ວມກັນ.
- ຄູສະຫຼຸບແລະແນະນຳເພີ່ມເຕີມ.

**ໃຈຄວາມ**

ໃນບົດສອນໃຫ້ນັກຮຽນຄູໄດ້ຮຽນຮູ້ກ່ຽວກັບຈຸດປະສົງ, ເນື້ອໃນ, ວິທີສອນເລົ່າເລື່ອງສຳລັບເດັກ ອາຍຸ 3 ເດືອນ - 6 ປີ ແລະ ເຝິກແອບການແຕ່ງບົດສອນສຳລັບການສອນເລົ່ານິທານຕັ້ງແຕ່ 3 ເດືອນ - 6 ປີ,ໄດ້ສຶກສາແບບຟອມສຳລັບການລົງໄປສັງເກດການສອນໃນໂຮງຮຽນ ລ້ຽງເດັກອະນຸບານ.

**ວຽກມອບໝາຍ**

1 ແບ່ງນັກຮຽນຄູອອກເປັນ 5 ກຸ່ມ

ກຸ່ມທີ 1 ເຝິກແອບການແຕ່ງບົດສອນຊັ້ນລ້ຽງເດັກ

ກຸ່ມທີ 2 ເຝິກແອບການແຕ່ງບົດສອນເລົ່ານິທານສຳລັບເດັກ 12 – 24 ເດືອນ.

ກຸ່ມທີ 3 ເຝິກແອບການແຕ່ງບົດສອນເລົ່ານິທານສຳລັບເດັກ 24 – 36 ເດືອນ.

ກຸ່ມທີ 4 ເຝິກແອບການແຕ່ງບົດສອນເລົ່ານິທານສຳລັບເດັກ 3 – 4 ປີ.

ກຸ່ມທີ 5 ເຝິກແອບການແຕ່ງບົດສອນເລົ່ານິທານສຳລັບເດັກ 4 – 6 ປີ.

2 ແຕ່ລະກຸ່ມສອນຜ່ານກຸ່ມຕົນເອງ.

3 ເລືອກຕົວແທນແຕ່ລະກຸ່ມສອນຜ່ານໃນຫ້ອງ.

4 ຮ່ວມກັນສັງເກດສົນທະນາ ແລະ ຖອດຖອນບົດຮຽນ

## ວຽກເພີ່ມເຕີມທີ່ຄວນນຳໄປປະຕິບັດ

1. ໃຫ້ນັກຮຽນຄູເຝິກແອບການແຕ່ງບົດສອນສັງເກດສົນທະນາ ແຕ່ລະສົ່ງ ອາຍຸ 3-5 ປີ.
2. ກະກຽມອຸປະກອນປະກອບບົດສອນ ແລະສອນທົດລອງ.

# ບົດທີ 5
# ການສອນລະຄອນສຳລັບເດັກກ່ອນໄວຮຽນ

**ເວລາ 24 ຊົ່ວໂມງ**

| ຈຸດປະສົງໃຫ້ນັກສຶກສາສາມາດ: |
|---|
| - ອະທິບາຍຄວາມໝາຍ ແລະ ຄວາມສຳຄັນຂອງການສອນລະຄອນສຳລັບເດັກກ່ອນໄວຮຽນ |
| - ບອກຈຸດປະສົງການສອນລະຄອນ, ເນື້ອໃນ, ຂັ້ນຕອນ, ວິທີສອນລະຄອນ ແລະ ວິທີການປະເມີນການສອນລະຄອນ |

## 1. ອະທິບາຍຄວາມໝາຍ ແລະ ຄວາມສຳຄັນຂອງການສອນລະຄອນສຳລັບເດັກກ່ອນໄວຮຽນ

### 1.1. ຄວາມໝາຍຂອງລະຄອນ

ລະຄອນແມ່ນວັນນະຄະດີປະເພດໜຶ່ງທີ່ໃຊ້ສັບພາສາ ຄຳເວົ້າມີຊີວິດຊີວາທີ່ສະແດງເຖິງການເຄື່ອນໄຫວຂອງຕົວລະຄອນຕ່າງໆເຊັ່ນ: ພາບຄົນ, ສັດ, ພືດ ແລະ ລະຄອນຍັງແມ່ນການສະແດງບົດບາດສົມມຸດຕາມເນື້ອໃນຂອງບົດເລື່ອງ,ເພື່ອເຮັດໃຫ້ບົດລະຄອນທີ່ຂຽນຂຶ້ນມານັ້ນມີຊີວິດ ຊີວາ, ໃຫ້ຜູ້ເບິ່ງເຂົ້າໃຈແຈ້ງ ໂດຍຜ່ານການສະແດງ ແລະ ສົນທະນາຂອງຕົວລະຄອນ

### 1.2. ຄວາມສຳຄັນຂອງລະຄອນ

ລະຄອນແມ່ນການສະແດງບົດບາດສົມມຸດ ເດັກກັບການຫຼິ້ນເປັນຂອງຄູ່ກັນ,ການຫຼິ້ນເປັນທຳມະຊາດຂອງການສະແດງອອກຂອງເດັກໃນທຸກຊາດ, ທຸກພາສາ, ທຳມະຊາດສ້າງໃຫ້ເດັກໄດ້ຮຽນຮູ້, ສິ່ງຕ່າງໆຮອບຕົວດ້ວຍການຫຼິ້ນ, ສະນັ້ນ ຄູອະນຸບານຄວນສົ່ງເສີມການຫຼິ້ນຂອງເດັກ ເພື່ອໃຫ້ເກີດການຮຽນຮູ້ ໃນການປັບຕົວເຂົ້າກັບໝູ່ຄູ່ຮູ້ຈັກໃຊ້ຮ່າງກາຍໃຫ້ມີຄວາມສອດຄ່ອງ ແລະ ຄ່ອງແຄ້ວໃນການເຄື່ອນໄຫວເຮັດໃຫ້ພາສາຂອງເດັກມີການຂະຫຍາຍຕົວສະຫຼຸບໄດ້ວ່າການຫຼິ້ນໄດ້ສົ່ງຜົນສະທ້ອນຕໍ່ການພັດທະນາທັງ 4 ດ້ານຂອງເດັກບໍ່ວ່າຈະເປັນທາງດ້ານຮ່າງກາຍ, ອາລົມ, ສັງຄົມ ແລະ ສະຕິປັນຍານອກຈາກການຫຼິ້ນແລ້ວລະຄອນຍັງເປັນອີກສ່ວນໜຶ່ງຂອງການຫຼິ້ນບົດບາດສົມມຸດ, ຜ່ານການຫຼິ້ນ ສົມມຸດນັ້ນ

- ເດັກໄດ້ນຳເອົາ''ຈິນຕະນາການທາງດ້ານລະຄອນ''ມາເປັນສ່ວນໜຶ່ງຂອງກິດຈະກຳການຫຼິ້ນດ້ວຍເຫດນັ້ນລະຄອນຈຶ່ງມີຄວາມສຳຄັນຢ່າງຍິ່ງຕໍ່ກັບເດັກບໍ່ຕ່ຳກ່ວາການຫຼິ້ນ,ເຊິ່ງພໍສະຫຼຸບໄດ້ດັ່ງນີ້:
- ລະຄອນຊ່ວຍໃຫ້ເດັກມີຄວາມບັນເທີງໃຈ,ມີຄວາມເບີກບານມ່ວນຊື່ນ,ມີອາລົມດີ ລະຄອນໄດ້ຖ່າຍທອດຄວາມຈິດຕະນາການ
- ລະຄອນໄດ້ເຮັດໃຫ້ພາສາຂອງເດັກມີການຂະຫຍາຍ,ໃນເວລາສະແດງລະຄອນເດັກໄດ້ເວົ້າ ແລະສະແດງຕາມບົດບາດຂອງລະຄອນ

## 2. ຈຸດປະສົງຂອງການສອນລະຄອນ

- ສົ່ງໃຫ້ເດັກເຄື່ອນໄຫວຮ່ວມກັນ, ມີການພົວພັນ ແລະ ປັບຕົວເຂົ້າກັບໝູ່ເພື່ອນ
- ສົ່ງເສີມໃຫ້ເດັກມີລັກສະນະທ່າທີ ແລະ ການເວົ້າທີ່ຖືກຕ້ອງ
- ຮຽນເອົາແບບຢ່າງທີ່ດີຈາກຕົວລະຄອນ
- ມີຄວາມພ້ອມທາງການສະແດງ

## 3. ເນື້ອໃນຂອງການສອນລະຄອນ

**ລະຄອນມີ 2 ປະເພດຄື:**

1) **ລະຄອນເວທີສໍາລັບເດັກ**: ແມ່ນລະຄອນທີ່ສະແດງເພື່ອໃຫ້ເດັກເກີດຄວາມເບີກບານມ່ວນຊື່ນ ມີການຈັດສາກ ມີນັກສະແດງ, ມີຜູ້ກໍາກັບການສະແດງ, ນັກສະແດງຕ້ອງມີການເຝິກຊ້ອມ ແລະ ຕ້ອງມີອຸປະກອນປະກອບການສະແດງ, ຜູ້ສະແດງຕ້ອງເຮັດຕາມການກໍາກັບທຸກຢ່າງ.

2) **ລະຄອນສ້າງສັນ**

ປະເພດລະຄອນສ້າງສັນປະກອບມີ:

- ການຫຼິ້ນບົດບາດສົມມຸດ(ການຫຼິ້ນຮຽນແບບຜູ້ໃຫ່ຍ)
- ລະຄອນຈາກນິທານຫຼັງຈາກການເລົ່ານິທານແລ້ວໃຫ້ນັກສະແດງຕາມເນື້ອໃນຂອງບົດນັ້ນ
- ລະຄອນໃບ້(ກຶກ) ແມ່ນການສະແດງທ່າທາງອາລົມແຕ່ບໍ່ໃຫ້ໃຊ້ສຽງ, ການສະແດງດັ່ງກ່າວແມ່ນໃຫ້ຖືກຕາມເນື້ອໃນຂອງບົດເລື່ອງທີ່ຢາກໃຫ້ຜູ້ຊົມຮູ້ນໍາ.
- ລະຄອນຫຸ່ນ ແມ່ນການສະແດງໂດຍໃຊ້ຫຸ່ນເປັນຕົວລະຄອນເຊິ່ງມີຜູ້ພາກຕາມເນື້ອໃນຂອງບົດເລື່ອງ
- ລະຄອນເພງ ມີການຮ້ອງເພງ, ຟ້ອນປະກອບການສະແດງ
- ລະຄອນເຈ້ຍ (ຄາມິຊິບາຍ) ປະກອບດ້ວຍບົດເລື່ອງ ແລະ ຮູບພາບທີ່ມີຂະໜາດ 26 x 38 cm ຈໍານວນ 10 ແຜ່ນຂຶ້ນໄປ ຫຼື ຕາມຄວາມເໝາະສົມທີ່ຖືກໍານົດໄວ້ໃນບົດເລື່ອງນັ້ນ ເຊິ່ງເນື້ອໃນບົດເລື່ອງຈະຂຽນໄວ້ທາງດ້ານຫຼັງຂອງຮູບແຕ່ລະຕອນ ເພື່ອຄວາມສະດວກເວລາເລົ່າ.

## 4. ຂັ້ນຕອນຂອງການສອນລະຄອນ

- ເພື່ອເຮັດໃຫ້ການສະແດງລະຄອນ ໄດ້ຮັບປະສິດທິຜົນຕາມຈຸດປະສົງທີວາງໄວ້ ນັກຮຽນທຸກຄົນຈະຕ້ອງແຕິບັດຕາມຂັ້ນຕອນການສະແດງລະຄອນດັ່ງລຸ່ມນີ້:
- ເລີ້ມຕົ້ນຕົວລະຄອນ ອອກມາຕາມລໍາດັບບົດລະຄອນ
- ຕົວລະຄອນທີ່ 1 ອອກມາສະແດງບົດບາດສົມມຸດເທິງເວທີ ໂດຍໃຊ້ທ່າທາງປະກອບປະສານສຽງເວົ້າຈາປາໄສຕ່າງໆໃນການສະແດງຕົວຈິງສານ ດ້ວຍຮູບແບບ ຮ່ວມສົນທະນາກັນເປັນຕົ້ນຕໍ ສ່ວຍການເລົ່າເລື່ອງ ແມ່ນການເລົ່າໄປຕາມບົດເລື່ອງ ໂດຍໃຊ້ເລົ່າພຽງແຕ່ຄົນດຽວຈົນຈົບບົດເລື່ອງ

## 5. ວິທີສອນສອນລະຄອນໃຫ້ແກ່ເດັກກ່ອນໄວຮຽນ

### 5.1. ການກະກຽມສະແດງລະຄອນ

ເພື່ອເຮັດ ໃຫ້ການສະແດງລະຄອນສໍາລັບເດັກໄດ້ຮັບປະສິດທິຜົນ ເຕັມໄປດ້ວຍບັນຍາກາດທີ່ເບີດບານມ່ວນຊື່ນເປັນໜ້າປະທັບໃຈສໍາລັບເດັກແລະທ່ານຜູ້ເບິ່ງຜູ້ຊົມດັ່ງກ່າວຄູອະນຸບານຕ້ອງມີການກະກຽມລະອຽດຂັ້ນຕອນຕ່າງໆຂອງການສະແດງລະຄອນສໍາລັບດັ່ງລຸ່ມນີ້:

### 5.2. ການເລືອກບົດ

- ເລືອກບົດລະຄອນທີ່ເໝາະສົມກັບສໍາອາຍຸຂອງເດັກ
- ເລືອກຕົວເດັກທີ່ຈະນໍາເອົາມາສະແດງບົດລະຄອນຕົວຈິງ
- ເລືອກບົດລະຄອນສັ້ນບໍ່ຫຼາຍເກີນໄປ
- ເນື້ອໃນບົດບາດລະຄອນຈະຕ້ອງສຶກສາໃຫ້ເດັກເປັນຄົນດີມີຕິເຕືອນໃຈ
- ເລືອກເອົາລັກສະນະສົນທະນາສັ້ນແລະເຂົ້າໃຈງ່າຍ
- ຕົວລະຄອນທີ່ຄວນນໍາມາໃຊ້ເຊັ່ນ:ກະຕ່າຍ, ແມວ, ໄກ່, ເປັດ, ແລະ ອື່ນໆ
- ຕົວລະຄອນບໍ່ຄວນນໍາມາໃຊ້ຫຼາຍເກີນໄປປະມານ 3-4 ຕົວ ຖ້າຫຼາຍກ່ວານັ້ນ ຈາກເຮັດໃຫ້ເດັກສັບສົນ ແລະຈໍາແນກບໍ່ໄດ້

**5.3. ອຸປະກອບການສະແດງ**

- ໂຮງລະຄອນ ແກັດເຈັ້ຍ ຜ້າກັ້ງທີ່ປະດັບປະດາທີ່ສວ່ຍງາມ
- ຫຸ່ນເຊີດ ຫຸ່ນໜ້າກາກ
- ແພເສດ ວັດສະດຸຕ່າງໆ
- ຜະລິດອຸປະກອບປະກອບສະແດງລະຄອນຕົວຈິງ



5.4.**ການເຝິກຊ້ອມສະແດງລະຄອນ**

- ໃນການເຝິກຊ້ອມລະຄອນຕົວຈິງຜູ້ສະແດງຕ້ອງປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:
- ຈຳເນື້ອໃນບົດລະຄອນໃຫ້ໄດ້
- ແບ່ງການຮັບຜິດຊອບ ໃຫ້ນັກສະແດງແຕ່ລະຄົນໃຫ້ລະອຽດ
- ນຳພາເດັກເຝິກຊ້ອມລະຄອນຕົວຈິງ
- ສະແດງບົດບາດສົມມຸດຕາມຕົວລະຄອນໄດ້
- ໃຊ້ນ້ຳສຽງຕົວລະຄອນໃຫ້ໄດ້ເຊັ່ນ: ສຽງຜູ້ເຖົ້າ, ເດັກ, ສຽງພໍ່,ແມ່ ແລະ ອື່ນໆ
- ຕົວລະຄອນບໍ່ຄວນ ປິ່ນຫຼັງໃສ່ຜູ້ຊົມ
- ໃນເວລາສະແດງລະຄອນບໍ່ຄວນເວົ້າພ້ອມກັນ ເພາະຈະເຮັດຜູ້ຊົມສັບສົນ
- ບໍ່ຄວນດັດສຽງເດັກນ້ອຍ ຫຼື ສຽງແຫຼມເກີນໄປ ເພາະຈະເຮັດໃຫ້ຟັງເຂົ້າໃຈ



## 6. ເທັກນິກການສອນລະຄອນ ແລະ ການປະເມີນ

ການຈັດການຮຽນຮູ້ໂດຍໃຊ້ການສະແດງລະຄອນ ຄືຂະບວນການຮຽນຮູ້ທີ່ສອນໃຫ້ຜູ້ຮຽນເກີດການຮຽນຮູ້ ຕາມວັດຖຸປະສົງ ໂດຍໃຫ້ຜູ້ຮຽນໄດ້ຮຽນຮູ້ຕາມວັດຖຸປະສົງແລະ ເນື້ອຫາທີ່ກຽມໄວ້ຕັ້ງແຕ່ຕົ້ນຈົນຈົບ

ຂັ້ນຕອນການຈັດການຮຽນຮູ້:

- ຂັ້ນກະກຽມ
- ຂັ້ນສຶກສາບົດບາດລະຄອນ ແລະ ເລືອກຜູ້ສະແດງ
- ຂັ້ນສຶກສາບົດບາດ ຊ້ອມການສະແດງ ກຽມວັດຖຸອຸປະກອນ ແລະ ຜູ້ຊົມການສະແດງ
- ຂັ້ນສະແດງ
- ຂັ້ນອະພິປາຍ ແລະ ສະຫຼຸບ

**ການປະເມີນ**

➢ ຮ່າງປະເມີນຕາມແຜນຈັດປະສົບການ

**ຕົວຢ່າງ 2: ການບັນທຶກການສັງເກດການສະແດງລະຄອນ.**

ຫົວຂໍ້:.........................ອາທິດທີ........ ວັນທີ່.......... ເດືອນ............ ປີ 20

| ລ/ດ | ຊື່ ແລະ ນາມສະກຸນ | ຫົວຂໍ້ຕິດຕາມ | | | | | | | | |
|---|---|---|---|---|---|---|---|---|---|---|
| | | ດ້ານທັດສະນະຄະຕິ | | | ດ້ານຄວາມຮູ້ | | | ດ້ານທັກສະ | | |
| | | ດີ | ກາງ | ປັບປຸງ | ດີ | ກາງ | ປັບປຸງ | ດີ | ກາງ | ປັບປຸງ |
| 1 | | | | | | | | | | |
| 2 | | | | | | | | | | |
| 3 | | | | | | | | | | |
| 4 | | | | | | | | | | |

ວັນທີ່.......................

ລາຍຊື່ຜູ້ປະເມີນ

2) ກຳນົດເກນຈັດລະດັບທັກສະ ຫຼື ພັດທະນາການເດັກເປັນລາຍບຸກຄົນ.

☐ ດີ: ເດັກສາມາດເຮັດຕາມຈຸດປະສົງທີ່ກຳນົດໄດ້.

☐ ກາງ: ເດັກສາມາດເຮັດຕາມຈຸດປະສົງທີ່ກຳນົດໄດ້ສ່ວນໃດສ່ວນໜຶ່ງ.

☐ ປັບປຸງ: ເດັກບໍ່ສາມາດເຮັດຕາມຈຸດປະສົງໄດ້.

7. **ສັງເກດການສອນລະຄອນໃນໂຮງຮຽນລ້ຽງເດັກ-ອະນຸບານ**

7.1. ລົງສັງເກດການສອນ

ຮ່າງບັນທຶກການສັງເກດພຶດຕິກຳ ແລະ ການສະແດງອອກຂອງເດັກໃນຄະນະທີ່ເຮັດກິດຈະກຳ

| ພຶດຕິກຳລວມຊ່ວງທີ່ສັງເກດ | ຄວາມຄິດເຫັນ |
|---|---|
| 1) ພຶດຕິກຳຊ່ວງທີ 1<br>..............................................<br>.............................................. | ..............................................................<br>.............................................................. |
| 2) ພຶດຕິກຳຊ່ວງທີ 2<br>.............................................<br>............................................. | ............................................................<br>............................................................ |
| 3) ພຶດຕິກຳຊ່ວງທີ 3<br>.............................................<br>............................................. | ............................................................<br>............................................................ |

**7.2. ບັນທຶກ, ສະຫຼຸບ ແລະ ລາຍງານ**

ຕ້ອງໄປຕາມຮ່າງທີ່ສ້າງຂຶ້ນບັນທຶກໝາຍເຖິງ ຂໍ້ຄວາມທີ່ຈົດໄວ້ເພື່ອຊ່ວຍຄວາມຊົງຈຳ ຫຼື ເພື່ອເປັນຫຼັກຖານຂໍ້ຄວາມທີ່ນຳມາຈົດຫຍໍ້ໆໄວ້ເພື່ອໃຫ້ຮູ້ເລື່ອງເດີມ

**ການສະຫຼຸບ**

ແມ່ນການຫຍໍ້ເອົາສະເພາະໃຈຄວາມທີ່ສຳຄັນຂອງເລື່ອງທີ່ເປັນປະເດັນເຊັ່ນ: ສະຫຼຸບເລື່ອງທີ່ເຮົາໄດ້ເຫັນໄດ້ສັງເກດ, ໄດ້ປະສົບພົບພໍ້ດ້ວຍຕົນເອງ, ໄດ້ປະຕິບັດ ແລ້ວມາລາຍງານໃຫ້ພາກສວນທີ່ກ່ຽວຂ້ອງຮັບຊາບ.

**ລາຍງານຜົນການສັງເກດ**

ການລາຍງານໝາຍເຖິງ ການນຳສະເໜີຂໍ້ມູນຈາກການສັງເກດ, ສຶກສາ, ຄົ້ນຄ້ວາ, ທົດລອງ ເຊິ່ງໄດ້ຮັບການມອບໝາຍໃຫ້ປະຕິບັດງານຕໍ່ຜູ້ທີ່ກ່ຽວຂ້ອງຢ່າງມີລະບົບ.



## 8. ວິທີການແຕ່ງບົດສອນ

### 8.1. ຮ່າງບົດສອນ

**ໂຄ່ງຮ່າງແຜນການສອນຮູບແບບຮຽງຄວາມ**

ໜ່ວຍ:...........................................................

ອາທິດທີ່:.........................................................

ຊື່ກິດຈະກຳ:.......................................................ເວລາ..................ນາທີ

ຫົວຂໍ້:................................................................

**I. ຈຸດປະສົງ:**

4. ............................................................
5. ............................................................
6. ............................................................

**II. ເນື້ອໃນຕົ້ນຕໍ:**

4. ..............................................................
5. ..............................................................
6. ...............................................................

**III. ສື່ການຮຽນ-ການສອນ:**

4. ...............................................................
5. ..................................................................
6. ...................................................................

**IV. ກິດຈະກຳການຮຽນ-ການສອນ:**

4. ......................................................................
5. .......................................................................
6. ......................................................................

**V. ການວັດ ແລະ ປະເມີນ:**

9 .......................................................................

10 ........................................................................

11 .........................................................................

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ ທີ່.................ວັນທີ...........ເດືອນ.......ປີ..........

................................................ ລາຍເຊັນຜູ້ແຕ່ງບົດສອນ

**8.2. ອົງປະກອບ ແລະ ຂັ້ນຕອນການແຕ່ງບົດສອນ**

- **ອົງປະກອບຂອງບົດສອນ**

- ຈຸດປະສົງ
- ເນື້ອໃນ
- ກິດຈະກໍາການຮຽນ - ການສອນ
- ເວລາກິດຈະກໍາ
- ອຸປະກອນ
- ປະເມີນ

- **ຂັ້ນຕອນການແຕ່ງບົດສອນ**

**1) ສໍາລັບອະນຸບານ 1**

**ຂັ້ນນໍາເຂົ້າສູ່ບົດຮຽນ**

ເປັນການກຽມເດັກໃຫ້ພ້ອມ ແລະ ກະຕຸ້ນໃຫ້ເດັກສົນໃຈ ທີ່ຈະຮ່ວມກິດຈະກໍາຕໍ່ໄປກິດຈະກໍາທີ່ໃຊ້ອາດຈະເປັນການຮ້ອງເພງ, ເລົ່າຄໍາຄ່ອງ, ສົນທະນາ ແລະ ເບິ່ງຮູບພາບເຊິ່ງຈະໃຊ້ໄລຍະເວລາສັ້ນ.

**ຂັ້ນຕອນສອນ**

ການຈັດກິດຈະກໍາຕ້ອງການໃຫ້ເດັກໄດ້ຮັບຄວາມຮູ້ ແລະ ປະສົບການດ້ວຍກິດຈະກໍາຫຼາຍຮູບແບບເຊັ່ນ:

- ການສົນທະນາຖາມ-ຕອບ, ອະທິບາຍເປັນການໂອ້ລົມ ລະຫວ່າງຄູກັບເດັກ ຫຼື ເດັກກັບເດັກ ເຊິ່ງສື່ທີ່ໃຊ້ອາດຈະເປັນວັດຖຸຈິງ ແລະ ຮູບພາບ.

- ການເລົ່າບົດເລື່ອງ ຫຼື ບົດລະຄອນຄູຈະເລົ່າເລື່ອງທີ່ກ່ຽວກັບເລື່ອງລາວທີ່ຄູຕ້ອງການໃຫ້ເດັກເຂົ້າໃຈ ຫຼື ປະຕິບັດຕາມສ່ວນຫຼາຍຈະເປັນການປູກຝັງ ຫຼື ການສອນທີ່ເປັນເລື່ອງນາມມະທໍາ ວິທີການນີ້ຈະຊ່ວຍໃຫ້ເດັກເຂົ້າໃຈໄດ້ດີຂຶ້ນເພາະເດັກໃນໄວນີ້ຈະມັກຟັງບົດເລື່ອງ ແລະ ຮຽນແບບຕົວລະຄອນໃນບົດດເລື່ອງ ໃນການເລົ່າເລື່ອງຄູອາດໃຊ້ຮູບພາບ, ຫຸ່ນ ຫຼື ສ່ວນຕ່າງໆຂອງຮ່າງກາຍປະກອບ.

- ການເຝິກຊ້ອມ ສາທິດປະຕິບັດການທົດລອງເປັນການສອນທີ່ເຮັດໃຫ້ເດັກໄດ້ຮັບປະສົບການທາງກົງເພາະໄດ້ທົດລອງປະຕິບັດດ້ວຍຕົນເອງໄດ້ສັງເກດເຫັນການປ່ຽນແປງໃນສິ່ງທີ່ຕົນເອງໄດ້ທົດລອງເປັນການເຝິກທັກສະການສັງເກດ, ການແກ້ບັນຫາ ແລະ ສົ່ງເສີມໃຫ້ເດັກມີຄວາມຍາກຮູ້ຍາກເຫັນ ແລະ ຄົ້ນພົບຄວາມຮູ້ດ້ວຍຕົນເອງ.

**ຂັ້ນຕອນສະຫຼຸບບົດຮຽນ**

ເປັນການສະຫຼຸບສິ່ງຕ່າງໆທີ່ໄດ້ສະແດງລະຄອນທີ່ໄດ້ຮຽນມາໃຫ້ເດັກໄດ້ເຂົ້າໃຈດີຂຶ້ນເຊິ່ງຄູອາດຈະໃຊ້ຖອດຖອນບົດຮຽນສະສະແດງມີຂໍ້ດີ ແລະ ຂໍ້ຄົງຄ້າງຢູ່ຈຸດໃດຕ້ອງແກ້ໄຂຢູຈຸດນັ້ນ.

- ການວັດ ແລະ ປະເມີນ

ເປັນການຕິດຕາມຜົນການຮຽນຮູ້ຂອງເດັກກ່ຽວກັບສິ່ງທີຮຽນມາຈາກການຈັດກິດຈະກໍາຕ່າງໆເຊັ່ນ: ກິດຈະກໍາສອນບົດເລື່ອງ ຫຼື ບົດລະຄອນທີ່ໄດ້ສະແດງຜ່ານມາສັງເກດດັ່ງນີ້:

1) ການກະກຽມການ ສະແດງຂໍ້ຄິດເຫັນ.
2) ການດໍາເນີນການສະແດງ
3) ຄວາມສົນໃຈໃນການເຂົ້າຮ່ວມກິດຈະກໍາ.

2) **ສໍາລັບອະນຸບານ 2**

**ຂັ້ນນໍາເຂົ້າສູ່ບົດຮຽນ**

ແມ່ນຂັ້ນຕອນຄວາມສົນໃຈຂອງເດັກເຂົ້າສູ່ການຮຽນ ເພື່ອໃຫ້ເດັກມີຄວາມພ້ອມຢາກຮຽນຮູ້ໃນການນໍາເຂົ້າສູ່ບົດຮຽນໂດຍຮ້ອງເພງ, ສະແດງບົດບາດສົມມຸດ, ສົນທະນາ, ເບິ່ງຮູບພາບ ແລະ ຫຼິ້ນເກມ ເຊິ່ງຈະໃຊ້ໄລຍະເວລາສັ້ນໆ 2-3 ນາທີ ຄູຄວນນໍາໃຊ້ໃຫ້ແທດເໝາະກັບສໍາອາຍຸຂອງເດັກ ແລະ ກ່ຽວຂ້ອງກັບກິດຈະກໍາທີ່ນໍາມາຮຽນ.

**ຂັ້ນດໍາເນີນການສອນ**

ແມ່ນຂັ້ນຕອນສິ່ງຄວາມຮູ້ທາງດ້ານເນື້ອໃນທີ່ຄູນໍາເອົາບັນດາຫົວຂໍ້ເນື້ອໃນຈາກແຜນການຈັດປະສົບການມາຈັດກິດຈະກໍາ ໂດຍນໍາໃຊ້ວິທີການສັງເກດຮູບພາບ, ນິທານ ແລະ ອື່ນໆ. ເພື່ອໃຫ້ເດັກໄດ້ຄົ້ນຄິດ ແລະ ມີສ່ວນຮ່ວມກັບຄູໃນເວລາປະຕິບັດກິດຈະກໍາ.

**ຂັ້ນຕອນສະຫຼຸບບົດຮຽນ**

ແມ່ນການສະຫຼຸບສິ່ງຕ່າງໆທີ່ໄດ້ຮຽນຜ່ານມາ ໂດຍການເອົາເນື້ອໃນຕົ້ນຕໍຂອງສິ່ງທີ່ຮຽນມາເວົ້າໂດຍຫຍໍ້ເຊິ່ງຄູອາດຈະໃຊ້ຄໍາຖາມ ກ່ຽວກັບນິທານ ຫຼື ໃຊ້ເກມໃນການສະຫຼຸບບົດຮຽນ.

3) **ສໍາລັບອະນຸບານ 3**

ການຈັດກິດຈະກໍາວົງມົນໃນຊັ້ນອະນຸບານ 3 ໃຊ້ເວລາປະມານ 30-35 ນາທີ ເຊິ່ງປະກອບດ້ວຍການສອນພາສາລາວ, ຄະນິດສາດ ແລະ ວິທະຍາສາດ. ຄູຄວນຈັດກິດຈະກໍາການຮຽນ-ການສອນເດັກໃນຮູບແບບບູລະນາການໂດຍຈັດການສອນຜ່ານນິທານ, ການສັງເກດຮູບພາບ ແລະ ບັດຄໍາ. ເພື່ອໃຫ້ເດັກນ້ອຍໄດ້ຮັບຄວາມຮູ້, ຄວາມສາມາດນໍາໄປໃຊ້ໃນຊີວິດປະຈໍາວັນ, ຄູຕ້ອງຄໍານຶງເຖິງລະດັບຄວາມຮູ້ຄວາມສາມາດຂອງເດັກນ້ອຍ. ໃນກໍລະນີເດັກນ້ອຍມີຄວາມຕ້ອງການພິເສດຄູຄວນພິຈາລະນາການນໍາໃຊ້ກິດຈະກໍາໃຫ້ເໝາະສົມ. ຕົວຢ່າງ ເດັກນ້ອຍທີ່ສາຍຕາສັ້ນຄວນໃຫ້ເດັກນ້ອຍຄົນອື່ນຊ່ວຍເຫຼືອ ຫຼື ວ່າໃຫ້ເດັກນ້ອຍຄົນນັ້ນມານັ່ງໃກ້ໆ, ອຸປະກອນທີ່ນໍາມາໃຊ້ຄວນໃຫ້ໃຫຍ່, ຊັດເຈນ ແລະ ໃຫ້ເດັກໄດ້ສໍາພັດຕົວຈິງ. ການສອນກິດຈະກໍາວົງມົນມີຂັ້ນຕອນປະຕິບັດດັ່ງນີ້:

**ຂັ້ນຕອນທີ 1 ການກະກຽມ**

- ກະກຽມບົດລະຄອນການໃຫ້ແທດເໝາະກັບຫົວຂໍ້ ແລະ ກິດຈະກໍາທີ່ຈະສອນ.
- ກະກຽມສະຖານທີ່ທີ່ຈະປະຕິບັດເຊັ່ນ: ຫ້ອງຮຽນ ຫຼື ສະຖານທີ່ຫ້ອງຮຽນ.
- ກະກຽມອຸປະກອນໃຫ້ພຽງພໍກັບຈໍານວນເດັກທີ່ມີໃນຫ້ອງຮຽນ.

**ຂັ້ນຕອນທີ່ 2 ດໍາເນີນການສອນ**

- ອະທິບາຍ, ແນະນໍາ ແລະ ສາທິດວິທີປະຕິບັດກິດຈະກໍາໃຫ້ເດັກເຂົ້າໃຈກ່ອນຈຶ່ງໃຫ້ເດັກລົງມືປະຕິບັດ.
- ນໍາໃຊ້ເຄື່ອງຕົວຈິງ, ເຄື່ອງຈໍາລອງ ຫຼື ຮູບພາບເພື່ອໃຫ້ເດັກນ້ອຍສັງເກດ.
- ໃຫ້ເດັກນ້ອຍໄດ້ສາທິດ ຫຼື ທົດລອງດ້ວຍຕົນເອງ ເພື່ອໃຫ້ເດັກນ້ອຍໄດ້ສັງເກດເຫັນການປ່ຽນແປງໃນສິ່ງທີ່ຕົນໄດ້ປະຕິບັດ.
- ບາງຄັ້ງອາດຈະພາເດັກນ້ອຍໄປຮຽນນອກຫ້ອງຮອບບໍລິເວນໂຮງຮຽນ ຫຼື ທັດສະນະສຶກສານອກສະຖານທີແຕ່ຄູຕ້ອງເບິ່ງແຍງເອົາໃຈໃສ່ຄວາມປອດໄພເປັນສິ່ງສໍາຄັນ.

- ສົນທະນາ, ຖາມ-ຕອບ ແລະ ອະທິບາຍລະຫວ່າງຄູກັບເດັກນ້ອຍ ຫຼື ເດັກນ້ອຍກັບເດັກນ້ອຍກ່ຽວກັບເນື້ອໃນຂອງບົດຮຽນທີ່ໄດ້ຮຽນ.

**ຂັ້ນຕອນທີ 3 ການສະຫຼຸບບົດສອນ**

- ເມື່ອສຳເລັດການຮຽນທຸກເທື່ອຄູຄວນສະຫຼຸບເນື້ອໃນບົດຮຽນໃຫ້ເດັກຟັງ.
- ຍ້ອງຍໍຊົມເຊີຍເດັກທີ່ປະຕິບັດກິດຈະກຳໄດ້ດີ ແລະ ແນະນຳເດັກທີ່ເຮັດບໍ່ທັນໄດ້ດີ.
- ສຶກສາອົບຮົມເດັກທຸກໆຄັ້ງຫຼັງຈາກປະຕິບັດກິດຈະກຳສຳເລັດແລ້ວ.

**8.3. ແຕ່ງບົດສອນຕາມແຜນຈັດປະສົບການ**

ບົດສອນແບບຢ່າງການສະແດງລະຄອນສຳລັບເດັກອະນຸບານ

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| | 1 ຮ້ອງເພງມາຊົມລະຄອນ | **1) ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຄູໃຊ້ຫຸ່ນມືນາງໄກ່ນ້ອຍຮ້ອງເພງມາຊົມລະຄອນ<br>- ຫຸ່ນໄກ່ນ້ອຍສະເໜີຊື່ບົດລະຄອນ ແລະ ເຊີນຜູ້ຊົມຕົບມືຊົມເຊີຍ ແລະ ກຽມພ້ອມຊົມລະຄອນ | ເພງ: ມາຊົມລະຄອນ | |
| 1 ເພື່ອໃຫ້ເດັກມີຄວາມເບີກບານມ່ວນຊື່ນໃນການຊົມລະຄອນ<br>2 ຜ່ານການຊົມລະຄອນເຮັດໃຫ້ເດັກຮູ້ຈັກຮັກສາຄວາມສະອາດບໍ່ຖິ້ມຂີ້ເຫຍື້ອຊະຊາຍບໍ່ດື່ມນ້ຳເປື້ອນ<br>3 ໃຫ້ເດັກມີສ່ວນຮ່ວມ ແລະ ມີຄວາມກ້າຫານໃນການຊົມລະຄອນ | 2 ການສະແດງລະຄອນຫຸ່ນມືເລື່ອງໝູນ້ອຍເຈັບທ້ອງ | **2) ຂັ້ນດຳເນີນການສອນ**<br>- ຄູໃຊ້ຫຸ່ນມືໂຕໝູ, ກະຕ່າຍ ແລະ ຊ້າງສະແດງລະຄອນທີ່ຊ້ອມໄວ້<br>- ໃນເວລາສະແດງຖ້າບ່ອນໃດມີການຮ້ອງເພງຫຸ່ນຕ້ອງຊັກຊວນຜູ້ຊົມມີສ່ວນຮ່ວມນຳ | ຫຸ່ນມືໄກ່ນ້ອຍ<br>ຫຸ່ນມືກະຕ່າຍ<br>ຫຸ່ນມືຊ້າງ<br>ໝູ | ສັງເກດການມີສ່ວນຮ່ວມຂອງເດັກ |
| | | **3) ຂັ້ນຕອນສະຫຼຸບການສະແດງ**<br>• ເມື່ອບົດລະຄອນຈົບລົງຫຸ່ນນາງໄກ່ນ້ອຍອອກມາສົນທະນາ ແລະ ຖາມກ່ຽວກັບເນື້ອໃນບົດລະຄອນ ເຊັ່ນ:<br>- ບົດລະຄອນເລື່ອງໝູນ້ອຍເຈັບທ້ອງເປັນແນວໃດ?<br>- ມີໃຜແນ່ສະແດງ?<br>- ເປັນຫຍັງໝູ່ນ້ອຍຈິ່ງເຈັບທ້ອງ<br>- ພວກເຮົາຄວນປ້ອງກັນແນວໃດເພື່ອບໍ່ໃຫ້ເຈັບທ້ອງຄືໝູນ້ອຍ<br>• ຖ້າໃຜຕອບໄດ້ຫຸ່ນໄກ່ນ້ອຍຊັກຊວນທຸກຄົນຕົບມືຊົມເຊີຍ<br>• ຄວນມີຂອງຂວັນເພື່ອມອບໃຫ້ຜູ້ທີ່ກ້າຫານລຸກຂຶ້ນຕອບ<br>• ໄກ່ນ້ອຍສະຫຼຸບບົດເລື່ອງພ້ອມທັງ | ໂຮງລະຄອນທີ່ຮັດດ້ວຍແກັດ ຫຼື ຜ້າສາກ<br>ກອງ ກະແຊກ ເຄື່ອງສຽງ<br>ລະຄອນເລື່ອງ ໝູນ້ອຍເຈັບທ້ອງ | ຄວາມເບີກບານມ່ວນຊື່ນໃນເວລາຊົມລະຄອນ<br>ຄວາມເຂົ້າໃຈຕໍ່ກັບບົດລະຄອນ |

| | | | | |
|---|---|---|---|---|
| | | ຂໍລາໄປພັກຜ່ອນ ໂອກາດໜ້າຈະນຳລະຄອນມາສະແດງໃຫ້ຊົມອີກ<br>• ຈົບລາຍການສະແດງ | ຄົນເຊີດຫຸ່ນ 4 ຄົນ<br><br>ບັດຄຳຖາມ | |

## 9. ແຕ່ງບົດສອນຕົວຈິງ

9.1. ແຕ່ງບົດສອນຊັ້ນລ້ຽງເດັກ

9.2. ແຕ່ງບົດສອນຊັ້ນອະນຸບານ 1

9.3. ແຕ່ງບົດສອນຊັ້ນອະນຸບານ 2

9.4. ແຕ່ງບົດສອນຊັ້ນອະນຸບານ 3

## 10. ການຜະລິດສື່ປະກອບການສະແດງ

ການຜະລິດອຸປະກອນ

ການຜະລິດຫຸ່ນ ແລະ ຜ້າສາກ

ອຸປະກອນ : ເຈ້ຍ, ຜ້າເສດສີຕ່າງໆ, ເຂັມຫຍິບ, ດ້າຍ, ມີດຕັດ, ມີດ, ເລື່ອຍ, ເຊືອກຟາງ, ກາວ

ວິທີດຳເນີນກິດຈະກຳ:

- ແບ່ງນັກຮຽນອອກເປັນກຸ່ມເພື່ອຜະລິດອຸປະກອນດັ່ງນີ້
  - ກຸ່ມຜະລິດຫຸ່ນດ້ວຍເຈ້ຍ
  - ກຸ່ມຜະລິດຫຸ່ນດ້ວຍຜ້າເສດ
  - ກຸ່ມຜະລິດຫຸ່ນດ້ວຍເສດວັດສະດຸ
  - ກຸ່ມຜະລິດຫຸ່ນດ້ວຍວັດຖຸຈາກທຳມະຊາດ
- ຄູນຳພານັກຮຽນຜະລິດຫຸ່ນຜ້າສາກ ເພື່ອສະແດງລະຄອນຕາມຄວາມເໝາະສົມ



## 11. ເຝິກຊ້ອມລະຄອນຕົວຈິງ

ການຊ້ອມລະຄອນຜ່ານກຸ່ມໃຫຍ່ໃນຫ້ອງ

ກິດຈະກຳ: ການເຝິກຊ້ອມລະຄອນ

ອຸປະກອນ: ຫຸ່ນປະເພດຕ່າງໆ, ບົດລະຄອນຄົນເຊີດຫຸ່ນ, ຜ້າສາກລະຄອນ, ເຄື່ອງກະຈາຍສຽງຖ້າມີ, ກອງ, ແຊ່ງ, ກະແຊັກ, ຫຸ່ນເຈ້ຍ, ຫຸ່ນຜ້າແພ, ຫຸ່ນດ້ວຍເສດວັດສະດຸ, ຫຸ່ນດ້ວຍວັດຖຸຈາກທຳມະຊາດ.

ວິທີດຳເນີນກິດຈະກຳ

- ຄູກຽມສະຫຼາກໝາຍເລກ 1,2,3,4
- ໃຫ້ຕາງໜ້າກຸ່ມຂຶ້ນມາຈົກເອົາສະຫຼາກເພື່ອເຝິກຊອບຕາມລຳດັບ
- ໃຫ້ນັກຮຍນຜັດປ່ຽນກັນສະແດງ ແລະ ເປັນຜູ້ຊົມ ພ້ອມທັງຈົດບັນທຶກ
- ເມື່ອສຳເລັດການສະແດງໃຫ້ແຕ່ລະກຸ່ມສົນທະນາ ແລະ ປະກອບຄຳຄິດເຫັນໃຫ້ກຸ່ມອື່ນ ເພື່ອປັບປຸງການສະແດງ
- ຄູສະຫຼຸບ ແລະ ແນະນຳເພີ່ມເຕີມ
- ຄັດເລືອກບົດລະຄອນ 1 – 2 ບົດເພື່ອໄປສະແດງຕົວຈິງໃນໂຮງຮຽນລ້ຽງເດັກ - ອະນຸບານ



12. **ເຝິກຊ້ອມລະຄອນຕົວຈິງກັບເດັກໃນໂຮງຮຽນລ້ຽງເດັກ- ອະນຸບານ ແລະ ປະເມີນ, ຖອດຖອນບົດຮຽນ**

ການສະແດງລະຄອນໃນໂຮງຮຽນອະນຸບານ

ກິດຈະກຳ: ການສະແດງລະຄອນຕົວຈິງ

ອຸປະກອນ: ປຶ້ມ, ບົກຂຽນ, ເຈ້ຍແຜ່ນໃຫຍ່, ບົກເຝີດ, ຜ້າສາກລະຄອນ, ຫຸ່ນສຳລັບສະແດງ, ເຄື່ອງກະຈາຍສຽງຖ້າມີ, ກອງ, ແຊ່ງ, ກະແຊັກ, ຂອງຂວັນ.

ວິທີດຳເນີນກິດຈະກຳ

- ກຳນົດລາຍການສະແດງ
- ຈັດຕັ້ງໂຄສົກ ແລະ ຜູ້ຮັບຜິດຊອບແຕ່ລະລາຍການ
- ກຳນົດໂມງເວລາສະແດງ
- ກຽມຂອງຂວັນເລັກນ້ອຍຕາມຄວາມເໝາະສົມ
- ກຽມອຸປະກອນສະແດງທັງໝົດ
- ດຳເນີນການສະແດງຕົວຈິງ
- ພາຍຫຼັງການສະແດງຈົບລົງນັກຮຽນຄູທຸກຄົນເກັບມ້ຽນອຸປະກອນ ແລະ ທຳຄວາມສະອາດສະຖານທີ່
- ກັບຄືນຫ້ອງຮຽນ ເພື່ອສົນທະນາ ແລະ ຖອດຖອນບົດຮຽນຮ່ວມກັນ

- ໃຫ້ນັກຮຽນຄູສະເໜີຜົນການສົນທະນາ ແລະ ຖາມຄຳຖາມທີ່ສົນໃຈ
- ຄູຕອບຄຳຖາມ, ສະຫຼຸບ ແລະ ແນະນຳເພີ່ມເຕີມ.



## ໃຈຄວາມ:

ໃນບົດຮຽນນີ້ນັກຮຽນຄູໄດ້ຮຽນຮູ້ກ່ຽວກັບວິທີຈັດຕັ້ງການລະຄອນສຳລັບເດັກ ແລະ ນຳໃຊ້ການສະແດງລະຄອນເຂົ້າໃນການສອນເດັກ ເພື່ອສ້າງໂອກາດ ແລະ ເງື່ອນໄຂໃຫ້ເດັກໄດ້ຫຼິ້ນ, ໄດ້ຊົມລະຄອນ ແມ່ນຊ່ວຍສົ່ງເສີມໃຫ້ເດັກໄດ້ຮັບປະສົບການ ແລະ ບົດຮຽນທີ່ຈາກບົດລະຄອນ ພ້ອມກັນນັ້ນເດັກຍັງໄດ້ຮັບຄວາມເບີກບານມ່ວນຊື່ນກັບໝູ່ເພື່ອນ ແລະ ໄດ້ສະແດງອອກຕາມແບບຢ່າງທີ່ດີຂອງຕົວລະຄອນໃນບົດເລື່ອງນັ້ນ.

## ວຽກມອບໝາຍ:

1. ແບ່ງນັກຮຽນອອກເປັນກຸ່ມ ແຕ່ລະກຸ່ມເຝິກແອບການແຕ່ງບົດສອນ, ການສະແດງລະຄອນສຳລັບເດັກໃນໂຮງຮຽນລ້ຽງເດັກ ແລະ ອະນຸບານ
2. ແຕ່ລະກຸ່ມນຳສະເໜີບົດສອນຜ່ານຫ້ອງ ແລະ ທົດລອງສະແດງຕາມບົດສອນທີ່ໄດ້ວາງແຜນໄວ້
3. ຄູ ແລະ ກຸ່ມອື່ນໆ ຮ່ວມກັນປະກອບຄຳເຫັນ ແລະ ແນະນຳເພີ່ມເຕີມ.

# ບົດທີ 6
# ການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວນັບແຕ່ອາຍຸ 3 ຫາ 6 ປີ

**ເວລາ 12 ຊົ່ວໂມງ**

| ຈຸດປະສົງໃຫ້ນັກສຶກສາສາມາດ:<br>1. ອະທິບາຍຄວາມໝາຍ ແລະ ຄວາມສຳຄັນຂອງການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວນັບແຕ່ອາຍຸ 3 ຫາ 6 ປີ<br>2. ບອກຄວາມຫຍຸ້ງຍາກໃນການຮຽນພາສາລາວ,ຈຸດປະສົງ, ຮູບແບບ, ວິທີການປະເມີນການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວ |
|---|

## 1. ຄວາມໝາຍ ແລະ ຄວາມສຳຄັນຂອງການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວນັບແຕ່ອາຍຸ 3 ຫາ 6 ປີ

### 1.1. ຄວາມໝາຍຂອງພາສາ

ພາສາແມ່ນພາຫະນະໃນການສື່ສານລະຫວ່າງຄົນກັບຄົນພວກເຮົາຢາກຮູ້ວ່າ ຄົນຜູ້ໜຶ່ງເປັນແນວໃດ ກໍ່ໄດ້ເບິ່ງການສະແດງອອກຂອງຄົນຜູ້ນັ້ນ ແລະ ການສະແດງອອກນັ້ນກໍ່ແມ່ນອາໄສພາສາເປັນຫຼັກພາສາກຳເນີດຂຶ້ນ ຍ້ອນຄວາມຕ້ອງການອັນຈຳເປັນຂອງມວນມະນຸດ ທີ່ຢາກສະແດງເຖິງຄວາມຮູ້ສຶກນຶກຄິດຂອງຕົນໃຫ້ຜູ້ອື່ນຮັບຮູ້ ແລະ ເຂົ້າໃຈ ເຊິ່ງເລີ່ມຈາກການເຄື່ອນໄຫວຕ່າງໆ ທີ່ສະແດງອອກທາງນອກເຊັ່ນ: ການຍົກມື, ການງຶກຫົວ, ການຕົບມື.. ເວົ້າລວມພາສາກຳເນີດຂຶ້ນບົນພື້ນຖານການອອກແຮງງານຂອງສັງຄົມມະນຸດ.

### 1.2. ຄວາມສຳຄັນຂອງກການສອນພາສາລາວໃຫ້ເດັກທີ່ບໍ່ເວົ້າພາສາລາວ

ພາສາ-ຕົວອັກກສອນລາວເປັນພາສາ ແລະ ອັກສອນທີ່ໃຊ້ທາງການ ແລະ ກໍ່ແແມ່ນພາສາປະຈຳຊາດລາວ ສະນັ້ນກການຮຽນ-ການສອນພາສາລາວ ຈຶ່ງມີຄວາມສຳຄັນ ແລະ ຈຳເປັນທີ່ສຸດຢູ່ໃນຊັ້ນອະນຸບານແລະຊັ້ນປະຖົມສຶກສາ.

ອີກດ້ານໜຶ່ງກໍ່ເພາະວ່າປະເທດລາວມີຈຸດພິເສດທາງດ້ານພົນລະເມືອງ,ມີຫຼາຍຊົນເຜົ່າທີ່ມີການດຳລົງຊີວິດ, ພາສາປາເວົ້າແແຕກກຕ່າງກັນໂໂດຍສະເພາະແມ່ນເຂດຫ່າງໄກກສອກຫຼີກ, ດັ່ງນັ້ນ ເພື່ອເຮັດໃຫ້ກການຮຽນ-ການສອນພາສາລາວ ເຊິ່ງເປັນພາສາທີ່ສອງສຳລັບຄູທີ່ຈະໄປສອນນັກຮຽນຊົນເຜົ່າໃຫ້ໄດ້ຮັບຜົນຕາມລະດັບຄາດໝາຍຂອງຫຼັກສູດນັ້ນ ຈຶ່ງຈຳເປັນນັກຮຽນຄູຈຳເປັນຕ້ອງມີພື້ນຖານຄວາມຮູ້ທາງດ້ານພາສາລາວພຽງພໍທີ່ຈະໄປສອນໃຫ້ເດັກຊົນເຜົ່າຕ່າງໆ ໃນຊັ້ນອະນຸບານໄດ້

**ກິດຈະກຳ:** ການສົນທະນາກ່ຽວກັບຄວາມໝາຍ-ຄວາມສຳຄັນຂອງການສອນພາສາລາວໃຫ້ເດັກຊົນເຜົ່າທີ່ບໍ່ເວົ້າພາສາລາວ

**ອຸປະກອນ**: ບັດຄຳຖາມ, ປຶ້ມຕຳລາສອນ

**ວິທີດຳເນີນກິດຈະກຳ:**

- ຄູທັກທາຍກັບນັກຮຽນຄູດ້ວຍຄຳ ( ສະບາຍດີ )
- ຄູໃຫ້ນັກຮຽນຜູ້ທີ່ຮູ້ພາສາເຜົ່າຕ່າງໆ 2-3 ຄົນ, ຂຶ້ນເວົ້າພາສາເຜົ່າທີ່ຕົນເອງຮູ້ແລ້ວແປຄວາມໝາຍເປັນພາສາລາງ
- ຄູຕັ້ງຄຳຖາມໃຫ້ນັກຮຽນຄົ້ນຄິດເປັນລາຍບຸກຄົນຕາມແຕ່ລະຄຳຖາມດັ່ງນີ້:

▪ ຄົນເຮົາມີຄວາມເຂົ້າໃຈ ແລະ ສາມາດພົວພັນເຊິ່ງກັນ ແລະ ກັນໄດ້ດ້ວຍວິທີໃດ ?

- ພາສາແມ່ນຫຍັງ ?
- ການສອນພາສາໃຫ້ເດັກຊົນເຜົ່າທີ່ບໍ່ເວົ້າພາສາລາວ ມີຄວາມສຳຄັນແນວໃດ ?
  - ຄູສັງລວມຄວາມຄິດເຫັນຂອງນັກຮຽນຄູ ແລະ ເພີ່ມເຕີມຄວາມຄິດເຫັນທີ່ບໍ່ຄົບຖ້ວນ.

## 2. ຄວາມຫຍຸ້ງຍາກໃນການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວ

ຄວາມຫຍຸ້ງຍາກໃນການຮຽນພາສາລາວໃຫ້ເດັກທີ່ບໍ່ເວົ້າພາສາລາວ

- ຄວາມຫຍຸ້ງຍາກໃນຕົວນັກຮຽນ
- ຄວາມຫຍຸ້ງຍາກຂອງຄູສອນ
- ຄວາມຫຍຸ້ງຍາກດ້ານອຸປະກອນ ແລະ ສະຖານທີ່.

### 2.1. ຄວາມຫຍຸ້ງຍາກໃນຕົວນັກຮຽນ

- ບັນຫາຄວາມເຂົ້າໃຈຄວາມໝາຍຂອງພາສາ
  - ການຟັງຄຳເວົ້າ, ປະໂຫຍກໃນພາສາລາວໃຫ້ເຂົ້າໃຈຄວາມໝາຍ
  - ຄວາມເຂົ້າໃຈຄວາມໝາຍຂອງສັບ, ສຳນວນຄຳເວົ້າ ແລະ ປະໂຫຍກທີ່ຄູນຳມາສົນທະນາ
- ບັນຫາການອອກສຽງ
  - ອອກສຽງບໍ່ຖືກຕ້ອງສຽງຂອງໝວດອັກສອນສູງ, ກາງ, ຕົວເຊັ່ນ: ຂ ກັບ ຄ, ສ ກັບ ຊ....
  - ການຜັນສຽງບໍ່ຊັດເຈນເຊັ່ນ: ຄຳວ່າ, ໂຮງຮຽນ, ພວກເຂົາເວົ້າ ໂຮງຮຽນແມ່ນແລ້ວເວລາເຂົາເຈົ້າເວົ້າ ແມ່ນແລ້ວ
  - ບັນຫາການເລືອກຄວາມໝາຍຂອງພາສາລາວມາໃຊ້ບໍ່ຖືກຕາມກະລະເທສະ ແລະ ບຸກຄົນ ໂດຍສະເພາະການເລືອກຄຳແທນນາມມາໃຊ້ຄື: ກູ, ມຶງ, ກັນ, ໂຕ, ສູ...

### 2.2. ຄວາມຫຍຸ້ງຍາກຂອງຄູ ໃນການສອນ

- ຄູຈຳນວນຫຼວງຫຼາຍບໍ່ສາມາດຮູ້ ແລະ ເຂົ້າໃຈພາສາຂອງບັນດາເຜົ່າຕ່າງໆ ສະນັ້ນຈຶ່ງເປັນການຫຍຸ້ງຍາກທີ່ຈະຕອບສະໜອງຄວາມຕ້ອງການຂອງນັກຮຽນໄດ້, ເພາະວ່ານັກຮຽນຊົນເຜົ່າຕ້ອງການຄວາມຊ່ວຍເຫຼືອຈາກຄູໃນການສົນທະນາສື່ຄວາມໝາຍຂອງພາສາກັບຕົວນັກຮຽນ.
- ການຈັດກິດຈະກຳການຮຽນ - ການສອນຂອງຄູບໍ່ເໝາະສົມກັບລະດັບຄວາມຮັບຮູ້ຂອງນັກຮຽນຊົນເຜົ່າ, ການໃຊ້ພາສາເພື່ອສື່ຄວາມໝາຍຂອງຄູບໍ່ອຸດົມສົມບູນ.
- ນັກຮຽນມີຫຼາຍເຜົ່າຢູ່ໃນຫ້ອງດຽວກັນ

### 2.3. ຄວາມຫຍຸ້ງຍາກດ້ານອຸປະກອນ ແລະ ສະຖານທີ່

- ອຸປະກອນການຮຽນ - ການສອນບໍ່ພຽງພໍຄວາມຕ້ອງການຂອງນັກຮຽນ
- ສະຖານທີ່ບໍ່ເໝາະສົມ ( ຄັບແຄບ, ແອອັດ, ພື້ນຫ້ອງມີຝຸ່ນ ....)
- ສະພາບແວດລ້ອມອ້ອມຂ້າງບໍ່ອຳນວຍຄວາມສະດວກ.

**ກິດຈະກຳ**: ການສົນທະນາກ່ຽວກັບຄວາມຫຍຸ້ງຍາກໃນການສອນພາສາລາວໃຫ້ເດັກທີ່ບໍ່ເວົ້າພາສາລາວ

**ອຸປະກອນ**: ເຈ້ຍບັດຄຳ, ຖົງບັດຄຳ

**ວິທີດຳເນີນກິດຈະກຳ**:

- ຈັດນັກຮຽນເປັນກຸ່ມຕາມຄວາມເໝາະສົມ
- ໃຫ້ແຕ່ລະກຸ່ມຊອກເອົາປະໂຫຍກທີ່ບໍ່ເຂົ້າໃຈຄວາມໝາຍ ແລະ ຜັນສຽງບໍ່ໄດ້ດີ ກຸ່ມລະ 5 ປະໂຫຍກ
- ແຕ່ລະກຸ່ມຄົ້ນຄວ້າ ແລະ ບັນທຶກໃສ່ບັດຄຳຂອງກຸ່ມຕົນເອງ
- ຕາງໜ້າກຸ່ມຂຶ້ນນຳສະເໜີຢູ່ກະດານ
- ຄູສັງລວມ ແລະ ສະຫຼຸບຄືນ

- ໃຫ້ນັກຮຽນແຕ່ລະກຸ່ມ ( ໃຊ້ກຸ່ມເກົ່າ ) ຄົ້ນຄວ້າຄຳຖາມດັ່ງນີ້:
1. ຄວາມຫຍຸ້ງຍາກໃນການຮຽນພາສາລາວຂອງເດັກທີ່ບໍ່ເວົ້າພາສາລາວ
- ແຕ່ລະກຸ່ມຄົ້ນຄວ້າສົນທະນາ ແລະ ຕາງໜ້າກຸ່ມຂຶ້ນລາວງານ
- ກຸ່ມອື່ນໆ ປະກອບຄຳຄິດເຫັນ
- ຄູສະຫຼຸບດ້ວຍການອະທິບາຍ ແລະ ຍົກຕົວຢ່າງປະກອບ.

**3. ຮູບແບບ ແລະ ຈຸດປະສົງຂອງການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວ**

- ນັກຮຽນຕ້ອງການສື່ການຮຽນ-ການສອນທີ່ເໝາະກັບວັດທະນະທຳຂອງເຂົາເຈົ້າ
- ຕ້ອງການສິ່ງທີ່ເຂົາຢາກຮູ້, ເຂົ້າໃຈ ແລະ ສາມາດນຳໄປໃຊ້ໄດ້
- ຕ້ອງການເນື້ອໃນ ແລະ ພາສາທີ່ເໝາະສົມກັບໄວອາຍຸຂອງເຂົາເຈົ້າ
- ຕ້ອງການຄູຊຸກຍູ້ ແລະ ໃຫ້ກຳລັງໃຈໃນເວລາຮຽນ
- ຕ້ອງການຢາກໃຫ້ຄູເຮັດກິດຈະກຳໃຫ້ສອດຄ່ອງກັບລະດັບຄວາມຮັບຮູ້ຂອງນັກຮຽນຊົນເຜົ່າ
- ຕ້ອງການຮຽນຮູ້ຈາກການຟັງ ເວົ້າ ຈັບບາຍ ປະຕິບັດຕົວຈິງໃຫ້ຫຼາຍໆເພື່ອໃຫ້ເຂົາເຈົ້ານຳໄປໃຊ້ໃນຊີວິດປະຈຳວັນໄດ້

**ຈຸດປະສົງຂອງການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວ**

- ເພື່ອແນ່ໃສ່ໃຫ້ເດັກສາມາດໃນການຟັງ
- ການເວົ້າຄຳສັບງ່າຍໆ
- ເປັນພາສາທີ່ໃຊ້ໃນຊີວິດປະຈຳວັນ
- ສາມາດ ແລະ ເລົ່າເລື່ອງສັ້ນໆທີ່ໄດ້ຟັງ
- ສາມາດຈື່ຈຳບາງຄຳງ່າຍໆຕາມຄວາມຄິດຂອງຕົນ

**4. ວິທີປະເມີນການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວ**

➢ ຮ່າງປະເມີນຕາມແຜນຈັດປະສົບການ

**ຕົວຢ່າງ: ການບັນທຶກການສັງເກດການສອນພາສາວ.**

ຫົວຂໍ້:..........................ອາທິດທີ........ ວັນທີ.......... ເດືອນ............. ປີ 20

| ລ/ດ | ຊື່ ແລະ ນາມສະກຸນ | ຫົວຂໍ້ຕິດຕາມ | | | | | | | | |
|---|---|---|---|---|---|---|---|---|---|---|
| | | ດ້ານທັດສະນະຄະຕິ | | | ດ້ານຄວາມຮູ້ | | | ດ້ານທັກສະ | | |
| | | ດີ | ກາງ | ປັບປຸງ | ດີ | ກາງ | ປັບປຸງ | ດີ | ກາງ | ປັບປຸງ |
| 1 | | | | | | | | | | |
| 2 | | | | | | | | | | |
| 3 | | | | | | | | | | |
| 4 | | | | | | | | | | |

ວັນທີ.......................

ລາຍຊື່ຜູ້ປະເມີນ

## 5. ວິທີການແຕ່ງບົດສອນ

### 5.1. ຮ່າງບົດສອນ

**ໂຄ່ງຮ່າງແຜນການສອນຮູບແບບຕາຕະລາງ**

ໜ່ວຍ...................................ອາທິດທີ................ມື້ທີ່.................

ຊື່ກິດຈະກໍາ:..............................................ເວລາ................ນາທີ

ຫົວຂໍ້:..................................................................................

| ຈຸດປະສົງ | ເນື້ອໃນຕົ້ນຕໍ | ກິດຈະກໍາການຮຽນ-ການສອນ | ສື່ການຮຽນ-ການສອນ | ການວັດ ແລະ ປະເມີນຜົນ |
|---|---|---|---|---|
| ເພື່ອໃຫ້ເດັກສາມາດ:<br>................<br>.................<br>................. | ..................<br>..................<br>..................<br>..................<br>.................. | 7. ຂັ້ນນໍາເຂົ້າສູ່ບົດຮຽນ<br>...................................<br>...................................<br>...................................<br>8. ຂັ້ນດໍາເນີນການສອນ<br>..................................<br>..................................<br>..................................<br>...................................<br>...................................<br>9. ຂັ້ນສະຫຼຸບບົດຮຽນ<br>..................................<br>...................................<br>...................................<br>– ສຶກສາອົບຮົມເດັກ<br>...................................<br>...................................<br>.................................. | .........................<br>.........................<br>......................... | ....................<br>...................<br>.................... |

ທີ່.................................................

ວັນທີ່.................ເດືອນ...............ປີ................

ຄໍາເຫັນ ແລະ ລາຍເຊັນວິຊາການໂຮງຮຽນ　　　　　　ລາຍເຊັນຜູ້ແຕ່ງບົດສອນ

## 5.2. ອົງປະກອບ ແລະ ຂັ້ນຕອນການແຕ່ງບົດສອນ

- **ອົງປະກອບຂອງບົດສອນ**

- ຈຸດປະສົງ
- ເນື້ອໃນ
- ກິດຈະກຳການຮຽນ - ການສອນ
- ເວລາກິດຈະກຳ
- ອຸປະກອນ
- ປະເມີນ

**ຂັ້ນຕອນການແຕ່ງບົດສອນ**

**1) ສຳລັບອະນຸບານ 1**

- **ຂັ້ນນຳເຂົ້າສູ່ບົດຮຽນ**

ເປັນການກຽມເດັກໃຫ້ພ້ອມ ແລະ ກະຕຸ້ນໃຫ້ເດັກສົນໃຈ ທີ່ຈະຮ່ວມກິດຈະກຳຕໍ່ໄປກິດຈະກຳທີ່ໃຊ້ອາດຈະເປັນການຮ້ອງເພງ, ເລົ່າຄຳຄ່ອງ, ສົນທະນາ ແລະ ເບິ່ງຮູບພາບເຊິ່ງຈະໃຊ້ໄລຍະເວລາສັ້ນ.

- **ຂັ້ນຕອນສອນ**

ການຈັດກິດຈະກຳຕ້ອງການໃຫ້ເດັກໄດ້ຮັບຄວາມຮູ້ ແລະ ປະສົບການດ້ວຍກິດຈະກຳຫຼາຍຮູບແບບເຊັ່ນ:

- ການສົນທະນາຖາມ-ຕອບ, ອະທິບາຍເປັນການໂອ້ລົມ ລະຫວ່າງຄູກັບເດັກ ຫຼື ເດັກກັບເດັກ ເຊິ່ງສື່ທີ່ໃຊ້ອາດຈະເປັນວັດຖຸຈິງ ແລະ ຮູບພາບ.

- ການເລົ່ານິທານຄູຈະເລົ່າເລື່ອງທີ່ກ່ຽວກັບເລື່ອງລາວທີ່ຄູຕ້ອງການໃຫ້ເດັກເຂົ້າໃຈ ຫຼື ປະຕິບັດຕາມສ່ວນຫຼາຍຈະເປັນການປູກຝັງ ຫຼື ການສອນທີ່ເປັນເລື່ອງນາມມະທຳ ວິທີການນີ້ຈະຊ່ວຍໃຫ້ເດັກເຂົ້າໃຈໄດ້ດີຂຶ້ນເພາະເດັກໃນໄວນີ້ຈະມັກຟັງນິທານ ແລະ ຮຽນແບບຕົວລະຄອນໃນນິທານ ໃນການເລົ່ານິທານຄູອາດໃຊ້ຮູບພາບ, ຫຸ່ນ ຫຼື ສ່ວນຕ່າງໆຂອງຮ່າງກາຍປະກອບ.

- ການສາທິດປະຕິບັດການທົດລອງເປັນການສອນທີ່ເຮັດໃຫ້ເດັກໄດ້ຮັບປະສົບການທາງກົງເພາະໄດ້ທົດລອງປະຕິບັດດ້ວຍຕົນເອງໄດ້ສັງເກດເຫັນການປ່ຽນແປງໃນສິ່ງທີ່ຕົນເອງໄດ້ທົດລອງເປັນການຝຶກທັກສະການສັງເກດ, ການແກ້ບັນຫາ ແລະ ສົ່ງເສີມໃຫ້ເດັກມີຄວາມຢາກຮູ້ຢາກເຫັນ ແລະ ຄົ້ນພົບຄວາມຮູ້ດ້ວຍຕົນເອງ.

- ການຈັດທັດສະນະສຶກສາເປັນການສອນທີ່ໃຫ້ເດັກໄດ້ຮັບປະສົບການໂດຍກົງອີກຮູບແບບໜຶ່ງອາດຈະເປັນການພາເດັກໄປຮຽນນອກຫ້ອງຮຽນຮອບບໍລິເວນໂຮງຮຽນນອກໂຮງຮຽນ ແຕ່ຄູຈະຕ້ອງເບິ່ງແຍງເອົາໃຈໃສ່ໃນເລື່ອງຄວາມປອດໄພ.

- ການສອນເພງ ແມ່ນສົ່ງເສີມໃຫ້ເດັກມີຄວາມເບີກບານມ່ວນຊື່ນຊ່ວຍພັດທະນາທາງດ້ານພາສາໃນການຈື່ຈຳ, ຄົ້ນຄິດພ້ອມທັງເຄື່ອນໄຫວຕາມຈັງຫວະເພງ ແລະ ຊ່ວຍໃຫ້ເດັກເຂົ້າໃຈເນື້ອໃນການຮຽນຮູ້ດີຂຶ້ນ.

- ການສອນຄຳຄ່ອງແມ່ນເພື່ອພັດທະນາທາງດ້ານພາສາ, ເດັກຈະມ່ວນຊື່ນກັບການຟັງ, ເວົ້າຄຳຄ່ອງ.

- ການປະກອບອາຫານໃນບາງໜ່ວຍທີ່ສອນກ່ຽວກັບຜັກ, ໝາກໄມ້, ຊີ້ນຕ່າງໆ ຄູອາດຈະໃຫ້ເດັກມີສ່ວນຮ່ວມໃນການປະກອບອາຫານ ຈະເຮັດໃຫ້ເດັກໄດ້ຮັບປະສົບການຈາກການສັງເກດ ການປ່ຽນແປງຂອງອາຫານດິບ, ສຸກ, ຮັບຮູ້ລົດຊາດ ແລະ ກິ່ນຂອງອາຫານ, ຮຽນຮູ້ດ້ວຍການໃຊ້ປະສາດສຳຜັດຕ່າງໆ ແລະ ຮຽນຮູ້ດ້ວຍການເຮັດວຽກກັບຄົນອື່ນ. ໃນຂະນະທີ່ເດັກເຮັດກິດຈະກຳ ຫຼື ຫຼັງຈາກເຮັດກິດຈະກຳສຳເລັດແລ້ວ ຄູຄວນໃຊ້ຄຳຖາມປາຍ

ເປີດໃນລັກສະນະຕ່າງໆທີ່ຊອນໃຫ້ເດັກຄິດບໍ່ຄວນໃຊ້ຄໍາຖາມປາຍປິດ ແມ່ນ, ບໍ່ແມ່ນ ຫຼື ມີຄໍາຕອບໃຫ້ເດັກເລືອກ, ຄູຄວນໃຫ້ເວລາເດັກໄດ້ຄິດໃນການຕອບ.

- **ຂັ້ນຕອນສະຫຼຸບບົດຮຽນ**

ເປັນການສະຫຼຸບສິ່ງຕ່າງໆທີ່ຮຽນມາໃຫ້ເດັກໄດ້ເຂົ້າໃຈດີຂຶ້ນເຊິ່ງຄູອາດຈະໃຊ້ຄໍາຖາມ, ເພງ, ຄໍາຄ່ອງ, ເກມໃນການສະຫຼຸບບົດຮຽນ.

ການວັດ ແລະ ປະເມີນ

ເປັນການຕິດຕາມຜົນການຮຽນຮູ້ຂອງເດັກກ່ຽວກັບສິ່ງທີ່ຮຽນມາຈາກການຈັດກິດຈະກໍາຕ່າງໆເຊັ່ນ: ກິດຈະກໍາສອນເພງ, ຄໍາຄ່ອງ, ບົດເລື່ອງ, ສັງເກດສົນທະນາ, ເກມ, ເວົ້າເປັນຄໍາສັບ ອ່ານອອກສຽງພະຍັນຊະນະເຊິ່ງຈະໄດ້ໃຊ້ວິທີສັງເກດດັ່ງນີ້:

1) ການຕອບຄໍາຖາມ, ສົນທະນາຖາມ-ຕອບ ແລະ ສະແດງຂໍ້ຄິດເຫັນ.
2) ການຟັງ, ການເວົ້າ, ການອ່ານ.
3) ຄວາມສົນໃຈໃນການເຂົ້າຮ່ວມກິດຈະກໍາ.

2) **ສໍາລັບອະນຸບານ 2**

**ຂັ້ນນໍາເຂົ້າສູ່ບົດຮຽນ**

ແມ່ນຂັ້ນຕອນຄວາມສົນໃຈຂອງເດັກເຂົ້າສູ່ການຮຽນ ເພື່ອໃຫ້ເດັກມີຄວາມພ້ອມຢາກຮຽນຮູ້ໃນການນໍາເຂົ້າສູ່ບົດຮຽນໂດຍຮ້ອງເພງ, ເລົ່າຄໍາຄ່ອງ, ສົນທະນາ, ເບິ່ງຮູບພາບ ແລະ ຫຼິ້ນເກມ ເຊິ່ງຈະໃຊ້ໄລຍະເວລາສັ້ນໆ 2-3 ນາທີ ຄູຄວນນໍາໃຊ້ໃຫ້ແທດເໝາະກັບສໍາອາຍຸຂອງເດັກ ແລະ ກ່ຽວຂ້ອ ງກັບກິດຈະກໍາທີ່ນໍາມາຮຽນ.

**ຂັ້ນດໍາເນີນການສອນ**

ແມ່ນຂັ້ນຕອນສິ່ງຄວາມຮູ້ທາງດ້ານເນື້ອໃນທີ່ຄູນໍາເອົາບັນດາຫົວຂໍ້ເນື້ອໃນຈາກແຜນການຈັດປະສົບການມາຈັດກິດຈະກໍາ ໂດຍນໍາໃຊ້ວິທີການສັງເກດຮູບພາບ, ຕົວອັກສອນ, ຕົວເລກ, ເຄື່ອງຈິງ ຫຼື ນໍາໃຊ້ເພງ, ຄໍາຄ່ອງ, ນິທານ ແລະ ອື່ນໆ. ເພື່ອໃຫ້ເດັກໄດ້ຄົ້ນຄິດ ແລະ ມີສ່ວນຮ່ວມກັບຄູໃນເວລາປະຕິບັດກິດຈະກໍາ.

**ຂັ້ນຕອນສະຫຼຸບບົດຮຽນ**

ແມ່ນການສະຫຼຸບສິ່ງຕ່າງໆທີ່ໄດ້ຮຽນຜ່ານມາ ໂດຍການເອົາເນື້ອໃນຕົ້ນຕໍຂອງສິ່ງທີ່ຮຽນມາເວົ້າໂດຍຫຍໍ້ເຊິ່ງຄູອາດຈະໃຊ້ຄໍາຖາມ, ເພງ, ຄໍາຄ່ອງ ແລະ ເກມໃນການສະຫຼຸບບົດຮຽນ.

➢ **ສິ່ງທີ່ຄວນເອົາໃຈໃສ່.**

ການຈັດກິດຈະກໍາການຮຽນ-ການສອນກິດຈະກໍາວົງມົນ ຄູຄວນຈັດການສອນແບບບູລະນາການໂດຍໃຫ້ເດັກຮຽນຮູ້ດ້ວຍຕົນເອງຕາມວິທີການສອນດັ່ງນີ້:

- ນໍາໃຊ້ຮູບພາບ, ເຄື່ອງຕົວຈິງ ແລະ ເຄື່ອງຈໍາລອງເພື່ອໃຫ້ເດັກສັງເກດ.
- ສົນທະນາ, ຖາມ-ຕອບ, ອະທິບາຍລະຫວ່າງຄູກັບເດັກ ຫຼື ເດັກກັບເດັກ.
- ທັດສະນະສຶກສານອກຫ້ອງຮຽນ: ບໍລິເວນເດີ່ນໂຮງຮຽນ, ນອກຫ້ອງຮຽນ: ສະຖານສໍາຄັນເຊັ່ນ: ວັດ, ສວນສາທາລະນະ...
- ການສາທິດ ຫຼື ການທົດລອງເດັກໄດ້ສັງເກດ, ສໍາຜັດ, ບອກສິ່ງຕ່າງໆທີ່ເກີດຂຶ້ນດ້ວຍຕົນເອງ.

**3) ສໍາລັບອະນຸບານ 3**

ການຈັດກິດຈະກໍາວິງມົນໃນຊັ້ນອະນຸບານ 3 ໃຊ້ເວລາປະມານ 30-35 ນາທີ ເຊິ່ງປະກອບດ້ວຍການສອນພາສາລາວ, ຄະນິດສາດ ແລະ ວິທະຍາສາດ. ຄູຄວນຈັດກິດຈະກໍາການຮຽນ-ການສອນເດັກໃນຮູບແບບບູລະນາການໂດຍຈັດການສອນຜ່ານບົດເພງ, ຄໍາຄ່ອງ, ນິທານ, ການສັງເກດຮູບພາບ ແລະ ບັດຄໍາ. ເພື່ອໃຫ້ເດັກນ້ອຍໄດ້ຮັບຄວາມຮູ້, ຄວາມສາມາດນໍາໄປໃຊ້ໃນຊີວິດປະຈໍາວັນ, ຄູຕ້ອງຄໍານຶງເຖິງລະດັບຄວາມຮູ້ຄວາມສາມາດຂອງເດັກນ້ອຍ. ໃນກໍລະນີເດັກນ້ອຍມີຄວາມຕ້ອງການພິເສດຄູຄວນພິຈາລະນາການນໍາໃຊ້ກິດຈະກໍາໃຫ້ເໝາະສົມ. ຕົວຢ່າງ ເດັກນ້ອຍທີ່ສາຍຕາສັ້ນຄວນໃຫ້ເດັກນ້ອຍຄົນອື່ນຊ່ວຍເຫຼືອ ຫຼື ວ່າໃຫ້ເດັກນ້ອຍຄົນນັ້ນມານັ່ງໃກ້ໆ, ອຸປະກອນທີ່ນໍາມາໃຊ້ຄວນໃຫ້ໃຫ່ຍ, ຊັດເຈນ ແລະ ໃຫ້ເດັກໄດ້ສໍາພັດຕົວຈິງ. ການສອນກິດຈະກໍາວິງມົນມີຂັ້ນຕອນປະຕິບັດດັ່ງນີ້:

**ຂັ້ນຕອນທີ 1 ການກະກຽມ**

- ກະກຽມບົດສອນ ຫຼື ແຜນປະສົບການໃຫ້ແທດເໝາະກັບຫົວຂໍ້ ແລະ ກິດຈະກໍາທີ່ຈະສອນ.
- ກະກຽມສະຖານທີ່ທີ່ຈະປະຕິບັດເຊັ່ນ: ຫ້ອງຮຽນ ຫຼື ສະຖານທີ່ຫ້ອງຮຽນ.
- ກະກຽມອຸປະກອນໃຫ້ພຽງພໍກັບຈໍານວນເດັກທີ່ມີໃນຫ້ອງຮຽນ.

**ຂັ້ນຕອນທີ່ 2 ດໍາເນີນການສອນ**

- ອະທິບາຍ, ແນະນໍາ ແລະ ສາທິດວິທີປະຕິບັດກິດຈະກໍາໃຫ້ເດັກເຂົ້າໃຈກ່ອນຈິ່ງໃຫ້ເດັກລົງມືປະຕິບັດ.
- ນໍາໃຊ້ເຄື່ອງຕົວຈິງ, ເຄື່ອງຈໍາລອງ ຫຼື ຮູບພາບເພື່ອໃຫ້ເດັກນ້ອຍສັງເກດ.
- ໃຫ້ເດັກນ້ອຍໄດ້ສາທິດ ຫຼື ທົດລອງດ້ວຍຕົນເອງ ເພື່ອໃຫ້ເດັກນ້ອຍໄດ້ສັງເກດເຫັນການປ່ຽນແປງໃນສິ່ງທີ່ຕົນໄດ້ປະຕິບັດ.
- ບາງຄັ້ງອາດຈະພາເດັກນ້ອຍໄປຮຽນນອກຫ້ອງຮອບບໍລິເວນໂຮງຮຽນ ຫຼື ທັດສະນະສຶກສານອກສະຖານທີແຕ່ຄູຕ້ອງເບິ່ງແຍງເອົາໃຈໃສ່ຄວາມປອດໄພເປັນສິ່ງສໍາຄັນ.
- ສົນທະນາ, ຖາມ-ຕອບ ແລະ ອະທິບາຍລະຫວ່າງຄູກັບເດັກນ້ອຍ ຫຼື ເດັກນ້ອຍກັບເດັກນ້ອຍກ່ຽວກັບເນື້ອໃນຂອງບົດຮຽນທີ່ໄດ້ຮຽນ.

**ຂັ້ນຕອນທີ 3 ການສະຫຼຸບບົດສອນ**

- ເມື່ອສໍາເລັດການຮຽນທຸກເທື່ອຄູຄວນສະຫຼຸບເນື້ອໃນບົດຮຽນໃຫ້ເດັກຟັງ.
- ຍ້ອງຍໍຊົມເຊີຍເດັກທີ່ປະຕິບັດກິດຈະກໍາໄດ້ດີ ແລະ ແນະນໍາເດັກທີ່ເຮັດບໍ່ທັນໄດ້ດີ.
- ສຶກສາອົບຮົມເດັກທຸກໆຄັ້ງຫຼັງຈາກປະຕິບັດກິດຈະກໍາສໍາເລັດແລ້ວ.

**5.3 ແຕ່ງບົດສອນຕາມແຜນຈັດປະສົບການ**

ການສອນພາສາລາວ ດ້ວຍການນຳໃຊ້ຮ່າງກາຍທັງໝົດ

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| 1 ໃຫ້ເດັກ ເວົ້າຄຳສັບ ຢ່າງຖືກຕ້ອງ ໃຫ້ນັກຮຽນ ສາມາດ ປະຕິບັດ ຕາມຄຳສັ່ງ ຂອງຄູໄດ້ຢ່າງ ຖືກຕ້ອງ | ການຮຽນຄຳສັບ: ຢືນ, ນັ່ງ, ຍ່າງ, ຢຸດ | **1) ຂັ້ນນຳເຂົ້າສູ່ບົດຮຽນ**<br>- ກວດກາຈຳນວນພົນ<br>- ທັກທາຍາະບາຍດີກັບນັກຮຽນ<br>- ຄູພາເດັກສ້າງບັນຍາກາດດ້ວຍການຮ້ອງເພງ ໂຮງຮຽນ<br>**2) ຂັ້ນດຳເນີນການສອນ**<br>- ຄູເວົ້າຄຳສັບ: ຢືນ, ນັ່ງ, ຍ່າງ, ຢຸດໃຫ້ນັກຮຽນຟັງ 1-2 ເທື່ອພ້ອມທັງສາທິດຕົວຈິງ<br>- ຄູໃຫ້ນັກຮຽນເວົ້າຄຳສັບ ແລະ ເຮັດຕົວຈິງພ້ອມກັນ<br>- ຄູໃຫ້ນັກຮຽນອາສາສະໝັກອອກມາເວົ້າຄຳສັບ ແລະ ປະຕິບັດຕົວຈິງໂດຍຜັດປ່ຽນກັນເປັນລາຍບຸກຄົນ<br>- ຄູພານັກຮຽນຫຼິ້ນເກມ<br>- ຄູອະທິບາຍວິທີຫຼິ້ນໃຫ້ນັກຮຽນຟັງ ຕົວຢ່າງ: ຄູເວົ້າຄຳສັບ ຢືນ ໃຫ້ນັກຮຽນຕົບມື 1 ບາດ ຄູເວົ້າຄຳສັບນັ່ງໃຫ້ນັກຮຽນຕົບມື 2 ບາດ ຄູເວົ້າຄຳສັບຍ່າງໃຫ້ນັກຮຽນຕົບມື 3 ບາດ ຄູເວົ້າຄຳສັບຢຸດ ໃຫ້ນັກຮຽນຕົບມື 4 ບາດ<br>- ຄູພານັກຮຽນຫຼິ້ນເກມ ຕາມມຸມທີ່ກຳນົດໄວ້: ມຸມຢືນ, ມຸມນັ່ງ, ມຸມຍ່າງ, ມຸມຢຸດ<br>- ຄູໃຫ້ນັກຮຽນຢືນເປັນຮູບວົງມົນ ຄູເລີ່ມເລົ່າເລື່ອງ ນາງນ້ອຍດຸໝັ່ນ ຕາມລຳລັບຂອງເລື່ອງ ຄູເລົ່າໄປຮອດຄຳສັບໃດ ໃຫ້ນັກຮຽນແລ່ນໄປຫາມຸມນັ້ນ ຖ້ານັກຮຽນຄົນໃດແລ່ນໄປບໍ່ຖືກມຸມນັ້ນ ແມ່ນໃຫ້ຜູ້ນັ້ນເຮັດກິດຈະກຳໃດໜຶ່ງເຊັ່ນ: ຮ້ອງເພງ ຟ້ອນ | ບົດເພງ: ໂຮງຮຽນ<br><br>ບັດຄຳສັບ 4 ບັດ<br><br>ບົດເລື່ອງ ນາງນ້ອຍດຸໝັ່ນ | ສັງເກດການເວົ້າຂອງເດັກ<br><br>ສັງເກດການຕົບມືຂອງເດັກ<br><br>ສັງເກດການຫຼິ້ນເກມຂອງເດກ |

| | | | | |
|---|---|---|---|---|
| | | **3) ສະຫຼຸບ**<br>- ຄູໃຫ້ນັກຮຽນເວົ້າຄຳສັບ ແລະ ປະຕິບັດຕົວຈິງພ້ອມກັນໝົດຫ້ອງ<br>- ໃຫ້ເດັກອະນຸຍາດພັກຜ່ອນ | | |

## 6. ສັງເກດການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວ 3 ຫາ 6 ປີ

### 6.1 ລົງສັງເກດການສອນ

ຮ່າງບັນທຶກການສັງເກດພຶດທິກຳການຮຽນຂອງເດັກໃນຄະນະທີ່ເຮັດກິດຈະກຳ

| ພຶດຕິກຳລວມຊ່ວງທີ່ສັງເກດ | ຄວາມຄິດເຫັນ |
|---|---|
| 1) ດ້ານຮ່າງກາຍ<br>..............................................<br>.............................................. | <br>..............................................................<br>.............................................................. |
| 2) ດ້ານອາລົມ-ຈິດໃຈ<br>............................................<br>............................................ | <br>............................................................<br>............................................................ |
| 3) ດ້ານສັງຄົມ<br>............................................<br>............................................ | <br>............................................................<br>............................................................ |
| 4) ດ້ານສະຕິປັນຍາ<br>...........................................<br>........................................... | <br>............................................................<br>............................................................ |
| 5) ດ້ານພາສາ<br>..........................................<br>.......................................... | <br>...........................................................<br>........................................................... |

### 6.2 ບັນທຶກ, ສະຫຼຸບ ແລະ ລາຍງານ

ຕ້ອງໄປຕາມຮ່າງທີ່ສ້າງຂຶ້ນບັນທຶກໝາຍເຖິງ ຂໍ້ຄວາມທີ່ຈົດໄວ້ເພື່ອຊ່ວຍຄວາມຊົງຈຳ ຫຼື ເພື່ອເປັນຫຼັກຖານ ຂໍ້ຄວາມທີ່ນຳມາຈົດຫຍໍ້ໆໄວ້ເພື່ອໃຫ້ຮູ້ເລື່ອງເດີມ

**ການສະຫຼຸບ**

ແມ່ນການຫຍໍ້ເອົາສະເພາະໃຈຄວາມທີ່ສຳຄັນຂອງເລື່ອງທີ່ເປັນປະເດັນເຊັ່ນ: ສະຫຼຸບເລື່ອງທີ່ເຮົາໄດ້ເຫັນໄດ້ ສັງເກດ, ໄດ້ປະສົບພົບພໍ້ດ້ວຍຕົນເອງ, ໄດ້ປະຕິບັດ ແລ້ວມາລາຍງານໃຫ້ພາກສວນທີ່ກ່ຽວຂ້ອງຮັບຊາບ.

**ລາຍງານຜົນການສັງເກດ**

ການລາຍງານໝາຍເຖິງ ການນຳສະເໜີຂໍ້ມູນຈາກການສັງເກດ, ສຶກສາ, ຄົ້ນຄ້ວາ, ທົດລອງ ເຊິ່ງໄດ້ຮັບ ການມອບໝາຍໃຫ້ປະຕິບັດງານຕໍ່ຜູ້ທີ່ກ່ຽວຂ້ອງຢ່າງມີລະບົບ.

## 7. ແຕ່ງບົດສອນຕົວຈິງ

ກິດຈະກຳ ເຝິກສອນຕົວຈິງໃນກຸ່ມນ້ອຍ

ອຸປະກອນ ບົດສອນ, ອຸປະກອນປະກອບບົດສອນ

**ວິທີດຳເນີນກິດຈະກຳ**

- ນັກຮຽນຄູທຸກຄົນໃນກຸ່ມຜັດປ່ຽນກັນສອນຕາມບົດສອນທີ່ໄດ້ກຽມມາ.
- ນັກຮຽນຄູສັງເກດການສອນຂອງໝູ່ ແລະ ຈົດບັນທຶກ.
- ຄູຕິດຕາມສັງເກດການສອນຂອງແຕ່ລະກຸ່ມ.
- ຖອດຖອນບົດຮຽນ ແລະ ປະກອບຄຳເຫັນກ່ຽວກັບການສອນຮ່ວມກັນ.
- ແຕ່ລະກຸ່ມລາຍງານຜົນການສອນຕົວຈິງ.
- ຄູສັງລວມ, ແນະນຳເພີ່ມເຕີມອີກ.

**ເຝິກການສອນຕົວຈິງຜ່ານກຸ່ມໃຫຍ່ໝົດຫ້ອງ**

ກິດຈະກຳ ການສອນຕົວຈິງຜ່ານຫ້ອງ

ອຸປະກອນ ບົດສອນ, ອຸປະກອນປະກອບບົດສອນ

ວິທີດຳເນີນກິດຈະກຳ

- ຄູໃຫ້ນັກຮຽນຄູຜັດປ່ຽນກັນສອນ.
- ນັກຮຽນຄູທີ່ຍັງບໍ່ໄດ້ສອນສັງເກດ ແລະ ຈົດບັນທຶກ.
- ຖອດຖອນບົດຮຽນຮ່ວມກັນ.
- ຄູສະຫຼຸບ ແລະ ແນະນຳເພີ່ມເຕີມ.
- ໃຫ້ແຕ່ລະກຸ່ມເລືອກຕົວແທນເພື່ອໄປສອນທົດລອງໃນໂຮງຮຽນລ້ຽງເດັກອະນຸບານ.

**ເຝິກສອນຕົວຈິງກັບເດັກໃນໂຮງຮຽນລ້ຽງເດັກ-ອະນຸບານ ແລະ ຖອດຖອນບົດຮຽນ**

ກິດຈະກຳ: ການສອນຕົວຈິງໃນໂຮງຮຽນ ລ້ຽງເດັກ - ອະນຸບານ.

ອຸປະກອນ: ບົດສອນ, ອຸປະກອນປະກອບການສອນຕົວຈິງ.

**ວິທີດຳເນີນກິດຈະກຳ:**

- ແບ່ງນັກຮຽນຄູເຂົ້າສອນຕົວຈິງໃນຫ້ອງຮຽນອະນຸບານຕາມແຕ່ລະຊັ້ນອາຍຸ.
- ຄູຕິດຕາມສັງເກດການສອນຂອງນັກຮຽນຄູ.
- ນັກຮຽນຄູທີ່ບໍ່ໄດ້ສອນຕິດຕາມ ແລະ ຈົດບັນທຶກການສອນ.
- ຖອດຖອນບົດຮຽນຮ່ວມກັນ.
- ຄູສະຫຼຸບແລະແນະນຳເພີ່ມເຕີມ.

### ໃຈຄວາມ:

ການສອນພາສາລາວໃຫ້ເດັກຊົນເຜົ່າ ແມ່ນມີຄວາມສຳຄັນ ໃນການກຽມຄວາມພ້ອມທາງດ້ານພາສາສຳລັບເດັກຊົນເຜົ່າ

### ວຽກທີ່ມອບໝາຍ

ໃຫ້ຄູນຳພານັກຮຽນປະຕິບັດກິດຈະກຳແຕ່ລະຂໍ້ ເພື່ອສ້າງຄວາມເຂົ້າໃຈໃຫ້ນັກຮຽນ

### ວຽກເພີ່ມທີ່ຈະນຳໄປປະຕິບັດ:

- ໃຫ້ນັກຮຽນເອົາກິດຈະກຳໃນບົດຮຽນນີ້ໄປຄົ້ນຄວ້າຄືນ
- ໃຫ້ຄົ້ນຄວ້າວິທີສອນແບບເນັ້ນປະສົບການພາສາ
- ໃຫ້ນັກຮຽນກຽມເລື່ອງຊີວິດຈິງທີ່ຕົນພົບພໍ້ຜ່ານມາຜູ້ລະບົດ

| ໂຄງຮ່າງລາຍວິຊາ<br>ຊື່ວິຊາ: ວິທີສອນພາສາລາວ-ວັນນະຄະດີສຳລັບເດັກກ່ອນໄວຮຽນ<br>ຫຼັກສູດສ້າງຄູອະນຸບານ ລະດັບປະລິນຍາຕີ<br>ລະຫັດລາຍວິຊາ: 0108601 | |
|---|---|
| ພາກຮຽນ ແລະ ປີຮຽນ<br>Semester and Year | ພາກຮຽນ 2 ປີທີ 3 |
| ຈຳນວນຊົ່ວໂມງ<br>Time | 96 ຊົ່ວໂມງ |
| ຈຳນວນໜ່ວຍກິດ<br>Credit | 4(2-4-2) |
| ອະທິບາຍຄ່າໜ່ວຍກິດ<br>Credit Explanation | ວິຊານີ້ມີ 4 ໜ່ວຍກິດ, ຮຽນ 6 ຊົ່ວໂມງຕໍ່ອາທິດ, ໃນນັ້ນຮຽນພາກທິດສະດີ 2 ຊົ່ວໂມງ, ເຝິກປະຕິບັດຕົວຈິງ 4 ຊົ່ວໂມງ ແລະ ວຽກມອບໝາຍ 2 ຊົ່ວໂມງ |
| ຈຸດປະສົງ<br>Objectives | ເພື່ອໃຫ້ນັກສຶກສາສາມາດ:<br>1. ອະທິບາຍຄວາມໝາຍ ຄວາມສຳຄັນຂອງການສອນພາສາລາວ-ວັນນະຄະດີໃຫ້ເດັກກ່ອນໄວຮຽນໄດ້<br>2. ອະທິບາຍຄວາມສຳຄັນຂອງການສອນສັງເກດ-ສົນທະນາ, ການສອນຄຳຄ່ອງ, ການສອນເລົ່ານິທານ, ການຈັດບົດລະຄອນສຳລັບເດັກກ່ອນໄວຮຽນ ແລະ ການສອນພາສາລາວໃຫ້ເດັກທີ່ບໍ່ເວົ້າພາສາລາວນັບແຕ່ອາຍຸ 3-6 ປີໄດ້<br>3. ນຳໃຊ້ຫຼັກການສອນ, ຂັ້ນຕອນ ແລະ ວິທີສອນຂອງແຕ່ລະເນື້ອໃນເຂົ້າໃນກິດຈະກຳການສອນໄດ້ຢ່າງຖືກຕ້ອງ<br>4. ແຕ່ງບົດສອນ ແລະ ສອນຕົວຈິງໃນແຕ່ລະເນື້ອໃນໄດ້<br>5. ວັດ ແລະ ປະເມີນຜົນ ຖອດຖອນບົດຮຽນໃນການສອນຕົວຈິງໄດ້ |
| ເນື້ອໃນຫຍໍ້<br>Course Descripton | ວິຊານີ້ຈະໄດ້ຮຽນກ່ຽວກັບການສອນພາສາລາວ-ວັນນະຄະດີໃຫ້ແກ່ເດັກກ່ອນໄວຮຽນ, ການສອນສັງເກດສົນທະນາ, ການສອນຄຳຄ່ອງ, ການສອນເລົ່ານິທານ, ການຈັດບົດລະຄອນສຳລັບເດັກກ່ອນໄວຮຽນ ແລະ ການສອນພາສາລາວໃຫ້ເດັກທີ່ບໍ່ເວົ້າພາສາລາວນັບແຕ່ອາຍຸ 3-6 ປີ, ວິທີວັດ ແລະ ປະເມີນຜົນ, ການແຕ່ງບົດສອນ, ການຜະລິດອຸປະກອນ, ການລົງສັງເກດການສອນ, ການສອນທົດລອງ, ການສອນຕົວຈິງ ແລະ ການຖອດຖອນບົດຮຽນ |
| ວິທີດຳເນີນການສອນ<br>Methodology | ຢູ່ 16 ອາທິດ, ດຳເນີນຈັດການຮຽນ-ການສອນດ້ວຍການອະທິບາຍ, ສົນທະນາ, ລະດົມສະໝອງ, ສາທິດ, ກິດຈະກຳກຸ່ມ, ກິດຈະກຳບຸກຄົນ, ລົງສັງເກດການສອນໃນໂຮງຮຽນລ້ຽງເດັກ-ອະນຸບານ, ຂຽນບົດລາຍງານ, ແຕ່ງບົດສອນ, ຜະລິດສື່ການສອນ, ເຝິກສອນຕົວຈິງແຕ່ລະສໍ່າອາຍຸ ແລະ ຖອດຖອນບົດຮຽນ |
| ສື່ການຮຽນ-ການສອນ<br>Teaching Aids | - ສື່ສິ່ງພິມເອກະສານປະກອບການສອນ, ປຶ້ມຄູ່ມືຄູການຈັດກິດຈະກຳ<br>- ສື່ອີເລັກໂທຣນິກ, ວິດີໂອ, ຄອມພິວເຕີ້<br>- ສື່ທີ່ເປັນຂອງຈິງ: ບັດຄຳ ຖົງບັດຄຳ ຮູບພາບ ປຶ້ມນິທານ ຕຸກກະຕາ ຜ້າສາກ |

| | |
|---|---|
| | ນິທານ ຫຸ່ນເຊີດ ວັດຖຸຈິງ |
| ອາທິດທີ 1<br>Week 1 | **ບົດທີ 1**<br>**ການສອນພາສາລາວ-ອັນນະຄະດີໃຫ້ແກ່ເດັກກ່ອນໄວຮຽນ**<br>6. ຄວາມໝາຍແລະຄວາມສຳຄັນຂອງການສອນພາສາລາວ-ອັນນະຄະດີໃຫ້ເດັກກ່ອນໄວຮຽນ<br>7. ຈຸດປະສົງຂອງການສອນພາສາລາວ-ອັນນະຄະດີໃຫ້ເດັກກ່ອນໄວຮຽນ<br>8. ທິດສະດີທີ່ກ່ຽວຂ້ອງກັບການສອນພາສາລາວ-ອັນນະຄະດີໃຫ້ເດັກກ່ອນໄວຮຽນ<br>9. ບົດບາດຂອງຄູ ແລະ ຜູ້ປົກຄອງໃນການສົ່ງເສີມພັດທະນາການທາງພາສາລາວ-ອັນນະຄະດີໃຫ້ແກ່ເດັກກ່ອນໄວຮຽນ<br>10. ການປະເມີນພັດທະນາການທາງພາສາລາວ-ອັນນະຄະດີໃຫ້ແກ່ເດັກກ່ອນໄວຮຽນ |
| ອາທິດທີ 2<br>Week 2 | **ບົດທີ 2**<br>**ການສອນສັງເກດສິນທະນາສຳລັບເດັກກ່ອນໄວຮຽນ**<br>13. ຄວາມໝາຍແລະຄວາມສຳຄັນຂອງການສອນສັງເກດສິນທະນາເດັກກ່ອນໄວຮຽນ<br>14. ຈຸດປະສົງຂອງການສອນສັງເກດສິນທະນາ<br>15. ເນື້ອໃນການສອນສັງເກດສິນທະນາ<br>16. ຂັ້ນຕອນການສອນສັງເກດສິນທະນາ<br>17. ວິທີສອນສັງເກດສິນທະນາໃຫ້ແກ່ເດັກກ່ອນໄວຮຽນ<br>18. ວິທີການປະເມີນການສອນສັງເກດສິນທະນາ<br>18.1 ຮ່າງປະເມີນຜົນ ຕາມແຜນຈັດປະສົບການ |
| ອາທິດທີ 3<br>Week 3 | **ບົດທີ 2 (ຕໍ່)**<br>**ການສອນສັງເກດສິນທະນາສຳລັບເດັກກ່ອນໄວຮຽນ**<br>19. ສັງເກດການສອນ ສັງເກດສິນທະນາໃນໂຮງຮຽນລ້ຽງເດັກອະນຸບານ<br>19.1 ລົງສັງເກດການສອນ<br>19.2ບັນທຶກ, ສະຫຼຸບ, ລາຍງານ<br>20. ວິທີການແຕ່ງບົດສອນ<br>20.1ຮ່າງບົດສອນ<br>20.2 ອົງປະກອບ ແລະ ຂັ້ນຕອນການແຕ່ງບົດສອນ<br>20.3 ແຕ່ງບົດສອນຕາມແຜນຈັດປະສົບການ<br>21. ແຕ່ງບົດສອນຕົວຈິງ<br>21.1 ແຕ່ງບົດສອນຊັ້ນລ້ຽງເດັກ |

| | |
|---|---|
| | 21.2ແຕ່ງບົດສອນຊັ້ນອະນຸບານ 1<br>21.3ແຕ່ງບົດສອນຊັ້ນອະນຸບານ 2<br>21.4ແຕ່ງບົດສອນຊັ້ນອະນຸບານ 3 |
| ອາທິດ 4<br>Week 4 | **ບົດທີ 2 (ຕໍ່)**<br>**ການສອນສັງເກດສິນທະນາສໍາລັບເດັກກ່ອນໄວຮຽນ**<br>22. ການຜະລິດສື່ການສອນ<br>23. ເຝິກສອນຕົວຈິງໃນຫ້ອງຮຽນ ແລະ ຖອດຖອນບົດຮຽນ<br>24. ເຝິກສອນຕົວຈິງກັບເດັກໃນໂຮງຮຽນລ້ຽງເດັກອະນຸບານ ແລະ ຖອດຖອນບົດຮຽນ |
| ອາທິດ 5<br>Week 5 | **ບົດທີ 3**<br>**ການສອນຄໍາຄ່ອງສໍາລັບເດັກກ່ອນໄວຮຽນ**<br>13. ຄວາມໝາຍ ແລະ ຄວາມສໍາຄັນຂອງການສອນຄໍາຄ່ອງສໍາລັບເດັກກ່ອນໄວຮຽນ<br>14. ຈຸດປະສົງຂອງການສອນຄໍາຄ່ອງ<br>15. ເນື້ອໃນຂອງການສອນຄໍາຄ່ອງ<br>16. ຂັ້ນຕອນຂອງການສອນຄໍາຄ່ອງ<br>17. ວິທີສອນຄໍາຄ່ອງໃຫ້ເດັກກ່ອນໄວຮຽນ<br>18. ວິທີການປະເມີນການສອນຄໍາຄ່ອງ<br>18.1 ຮ່າງປະເມີນຕາມແຜນຈັດປະສົບການ. |
| ອາທິດ 6<br>Week 6 | **ບົດທີ 3 (ຕໍ່)**<br>**ການສອນຄໍາຄ່ອງສໍາລັບເດັກກ່ອນໄວຮຽນ**<br>19. ສັງເກດການສອນຄໍາຄ່ອງໃນໂຮງຮຽນລ້ຽງເດັກ-ອະນຸບານ<br>19.1 ລົງສັງເກດການສອນ.<br>19.2ບັນທຶກ, ສະຫຼຸບ, ຖອດຖອນບົດຮຽນ<br>20. ວິທີການແຕ່ງບົດສອນ.<br>20.1ຮ່າງບົດສອນ<br>20.2 ອົງປະກອບ ແລະ ຂັ້ນຕອນຂອງການແຕ່ງບົດສອນ<br>20.3 ແຕ່ງບົດສອນຕາມແຜນຈັດປະສົບການ<br>21. ແຕ່ງບົດສອນຕົວຈິງ<br>21.1 ແຕ່ງບົດສອນຊັ້ນລ້ຽງເດັກ<br>21.2ແຕ່ງບົດສອນຂັ້ນອະນຸບານ 1<br>21.3ແຕ່ງບົດສອນຂັ້ນອະນຸບານ 2<br>21.4ແຕ່ງບົດສອນຂັ້ນອະນຸບານ 3 |
| | |

| | |
|---|---|
| ອາທິດ 7<br>Week 7 | **ບົດທີ 3 (ຕໍ່)**<br>**ການສອນຄໍາຄ່ອງສໍາລັບເດັກກ່ອນໄວຮຽນ**<br>22. ການຜະລິດສື່ການສອນ<br>23. ເຝິກສອນຕົວຈິງໃນຫ້ອງຮຽນ ແລະ ຖອດຖອນບົດຮຽນ<br>24. ເຝິກສອນຕົວຈິງກັບເດັກໃນໂຮງຮຽນລ້ຽງເດັກ-ອະນຸບານ ແລະ ປະເມີນ, ຖອດຖອນບົດຮຽນ |
| ອາທິດ 8<br>Week 8 | **ບົດທີ 4**<br>**ການສອນເລົ່ານິທານສໍາລັບເດັກກ່ອນໄວຮຽນ**<br>13. ຄວາມໝາຍ ແລະ ຄວາມສໍາຄັນຂອງການສອນເລົ່ານິທານສໍາລັບເດັກກ່ອນໄວຮຽນ.<br>14. ຈຸດປະສົງຂອງການສອນເລົ່ານິທານ.<br>15. ເນື້ອໃນຂອງການສອນເລົ່ານິທານ<br>16. ຂັ້ນຕອນຂອງການສອນເລົ່ານິທານ<br>17. ວິທີສອນເລົ່ານິທານໃຫ້ເດັກກ່ອນໄວຮຽນ<br>18. ເທັກນິກການເລົ່ານິທານ ແລະ ການປະເມີນຜົນ |
| ອາທິດ 9<br>Week 9 | **ບົດທີ 4 (ຕໍ່)**<br>**ການສອນເລົ່ານິທານສໍາລັບເດັກກ່ອນໄວຮຽນ**<br>19. ສັງເກດການສອນເລົ່ານິທານໃນໂຮງຮຽນລ້ຽງເດັກ-ອະນຸບານ<br>19.1 ລົງສັງເກດການສອນ<br>19.2 ບັນທຶກ, ສະຫຼຸບ, ຖອດຖອນບົດຮຽນ.<br>20. ວິທີການແຕ່ງບົດສອນ<br>20.1 ຮ່າງບົດສອນ<br>20.2 ອົງປະກອບ ແລະ ຂັ້ນຕອນຂອງການແຕ່ງບົດສອນ<br>20.3 ແຕ່ງບົດສອນຕາມແຜນຈັດປະສົບການ<br>21. ແຕ່ງບົດສອນຕົວຈິງ<br>21.1 ແຕ່ງບົດສອນຊັ້ນລ້ຽງເດັກ<br>21.2 ແຕ່ງບົດສອນຊັ້ນອະນຸບານ 1<br>21.3 ແຕ່ງບົດສອນຊັ້ນອະນຸບານ 2<br>21.4 ແຕ່ງບົດສອນຊັ້ນອະນຸບານ 3 |
| ອາທິດ 10<br>Week 10 | **ບົດທີ 4 (ຕໍ່)**<br>**ການສອນເລົ່ານິທານສໍາລັບເດັກກ່ອນໄວຮຽນ**<br>22. ການຜະລິດສື່ການສອນ<br>23. ເຝິກສອນຕົວຈິງໃນຫ້ອງຮຽນ ແລະ ຖອດຖອນບົດຮຽນ<br>24. ເຝິກສອນຕົວຈິງກັບເດັກໃນໂຮງຮຽນລ້ຽງເດັກ-ອະນຸບານ ແລະ ປະ |

| | |
|---|---|
| | ເມີນ, ຖອດຖອນບົດຮຽນ |
| ອາທິດ 11<br>Week 11 | **ບົດທີ 5**<br>**ການສອນລະຄອນສຳລັບເດັກກ່ອນໄວຮຽນ**<br>15. ຄວາມໝາຍ ແລະ ຄວາມສຳຄັນຂອງການສອນລະຄອນສຳລັບເດັກກ່ອນໄວຮຽນ<br>16. ຈຸດປະສົງຂອງການສອນລະຄອນ<br>17. ເນື້ອໃນຂອງການສອນລະຄອນ<br>18. ຂັ້ນຕອນຂອງການສອນລະຄອນ<br>19. ວິທີສອນລະຄອນໃຫ້ເດັກກ່ອນໄວຮຽນ<br>20. ເທັກນິກການສອນລະຄອນ ແລະ ການປະເມີນຜົນ |
| ອາທິດ 12<br>Week 12 | **ບົດທີ 5 (ຕໍ່)**<br>**ການສອນລະຄອນສຳລັບເດັກກ່ອນໄວຮຽນ**<br>21. ສັງເກດການສອນລະຄອນໃນໂຮງຮຽນລ້ຽງເດັກ-ອະນຸບານ.<br>21.1 ລົງສັງເກດການສອນ<br>21.2ບັນທຶກ, ສະຫຼຸບ, ລາຍງານ..<br>22. ວິທີການແຕ່ງບົດສອນ.<br>22.1ຮ່າງບົດສອນ<br>22.2 ອົງປະກອບ ແລະ ຂັ້ນຕອນຂອງການແຕ່ງບົດສອນ<br>22.3 ແຕ່ງບົດສອນຕາມແຜນຈັດປະສົບການ<br>23. ແຕ່ງບົດສອນຕົວຈິງ<br>23.1ແຕ່ງບົດສອນຊັ້ນລ້ຽງເດັກ<br>23.2 ແຕ່ງບົດສອນຂັ້ນອະນຸບານ 1<br>23.3 ແຕ່ງບົດສອນຂັ້ນອະນຸບານ 2<br>23.4 ແຕ່ງບົດສອນຂັ້ນອະນຸບານ 3 |
| ອາທິດ 13<br>Week 13 | **ບົດທີ 5 (ຕໍ່)**<br>**ການສອນລະຄອນສຳລັບເດັກກ່ອນໄວຮຽນ**<br>24. ການຜະລິດສື່ປະກອບການສະແດງລະຄອນ<br>25. ເຝິກຊ້ອມລະຄອນຕົວຈິງ<br>26. ເຝິກສອນຕົວຈິງກັບເດັກໃນໂຮງຮຽນລ້ຽງເດັກ-ອະນຸບານ ແລະ ປະເມີນ, ຖອດຖອນບົດຮຽນ |

| | |
|---|---|
| ອາທິດ 14<br>Week 14 | **ບົດທີ 5 (ຕໍ່)**<br>**ການສອນລະຄອນສຳລັບເດັກກ່ອນໄວຮຽນ**<br>27. ເຝິກສອນຕົວຈິງໃນຫ້ອງໂຮງຮຽນລ້ຽງເດັກ-ອະນຸບານ ແລະ ປະເມີນ, ຖອນຖອນບົດຮຽນ<br>28. ເຝິກສອນຕົວຈິງໃນໂຮງຮຽນລ້ຽງເດັກ-ອະນຸບານ ແລະ ປະເມີນ, ຖອດຖອນບົດຮຽນ |
| ອາທິດ 15<br>Week 15 | **ບົດທີ 6**<br>**ການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວນັບແຕ່ອາຍຸ 3-6 ປີ**<br>8. ຄວາມໝາຍ ແລະ ຄວາມສຳຄັນຂອງການສອນພາສາລາວໃຫ້ແກ່ເດັກທີ່ເວົ້າພາສາລາວນັບແຕ່ອາຍຸ 3-6 ປີ<br>9. ຄວາມຫຍຸ້ງຍາກໃນການຮຽນພາສາລາວຂອງເດັກທີ່ບໍ່ດວົ້າພາສາລາວ<br>10. ຮູບແບບ ແລະ ຈຸດປະສົງຂອງການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວ<br>11. ວິທີການປະເມີນການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວ<br>12. ວິທີການແຕ່ງບົດສອນ<br>12.1 ຮ່າງບົດສອນ<br>12.2 ອົງປະກອບ ແລະ ຂັ້ນຕອນຂອງການແຕ່ງບົດສອນ<br>12.3 ແຕ່ງບົດສອນຕາມແຜນຈັດປະສົບການ |
| ອາທິດ 16<br>Week 16 | **ບົດທີ 6 (ຕໍ່)**<br>**ການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວນັບແຕ່ອາຍຸ 3-6 ປີ**<br>1. ສັງເກດການສອນພາສາລາວໃຫ້ແກ່ເດັກທີ່ບໍ່ເວົ້າພາສາລາວນັບແຕ່ອາຍຸ 3-6 ປີ<br>1.1 ລົງສັງເກດການສອນ<br>1.2 ບັນທຶກ, ສະຫຼຸບ, ລາຍງານ<br>2. ແຕ່ງບົດສອນຕົວຈິງ<br>2.1 ແຕ່ງບົດສອນຂັ້ນອະນຸບານ 1<br>2.2 ແຕ່ງບົດສອນຂັ້ນອະນຸບານ 2<br>2.3 ແຕ່ງບົດສອນຂັ້ນອະນຸບານ 3<br>2.4 ເຝິກສອນຕົວຈິງໃນຫ້ອງຮຽນ ແລະ ຖອດຖອນບົດຮຽນ |
| ການປະເມີນຜົນການຮຽນ<br>Evalution | 1. ການເຂົ້າຮ່ວມຮຽນ 10%<br>2. ກິດຈະກຳບຸກຄົນ 30%<br>3. ກິດຈະກຳກຸ່ມ 20% |

| | |
|---|---|
| | 4. ສອບເສັງກາງພາກ 20%<br>5. ສອບເສັງທ້າຍພາກ 20%<br>6. ລວມ 100% |
| ເອກະສານອ້າງອີງ<br>References | 1. ກະຊວງສຶກສາທິການ ແລະ ກິລາ, ກົມສ້າງຄູ, ວິທະຍາໄລຄູດົງຄຳຊ້າງ (2008) ວິທີສອນພາສາລາວ-ວັນນະຄະດີ 1, ນະຄອນຫຼວງວຽງຈັນ, ໂຮງພິມແຫ່ງລັດ<br>2. ກະຊວງສຶກສາທິການ, ກົມສ້າງຄູ, ວິທະຍາໄລຄູດົງຄຳຊ້າງ (2008) ວິທີສອນພາສາລາວ-ວັນນະຄະດີ 2, ນະຄອນຫຼວງວຽງຈັນ, ໂຮງພິມແຫ່ງລັດ<br>3. ຄະນະນັກສຶກສາສາດ ມະຫາວິທະຍາໄລບູລະພາ, ພາກວິຊາຫຼັກສູດ ແລະ ການສອນວິຊາ, ການສຶກສາສຳລັບຜູເປັກຄອງ(ໜ້າ133)ປະເທດໄທ<br>4. ມະຫາວິທະຍາໄລສຸໂຂໄທທຳມະທິລາດ ສາຂາວິຊາສຶກສາທິການ 21313.(1994). ເອກະສານການສອນຊຸດວິຊາໜ່ວຍທີ 1-7 ວັນນະກຳທິລາດດີ ລະດັບປະຖົມໄວສຶກສາ ສະບັບປັບປຸງຄັ້ງທີ 1 ປະເທດໄທ. |
| ຜູ້ຮຽບຮຽງ<br>Prepared by | 1. ອຈ ປທ ທ່ານ ນາງຈັນແກ້ວ ດາລາສຸກ ວິທະຍາໄລຄູດົງຄຳຊ້າງ<br>ໂທ: 020 55559813 |
| ຜູ້ຮຽບຮຽງ<br>Prepared by | 1. ປທ ທ່ານ ນາງໄກພອນ ໜູແຈ່ມໃສ ວິທະຍາໄລຄູສະຫວັນນະເຂດ<br>ໂທ: 020 97288399, 02098885221 |